# ປຶ້ມຄູ່ມື

## ໂຄງການ ພັດທະນາກະສິກຳແບບມີສ່ວນຮ່ວມ

(ສະບັບ ແກ້ໄຂ)

ເດືອນ ມິຖຸນາ 2020

Savan PAD

## ສາລະບານ

**I ພາບລວມຂອງໂຄງການ PAD**
1 ຮູບແບບທົ່ວໄປຂອງໂຄງການ PAD ---------------------------------------- 1
2 ການສຳຫຼວດຂັ້ນພື້ນຖານ ---------------------------------------- 3

**II ການຜະລິດ ທີ່ມຸ້ງເນັ້ນໃສ່ ຄວາມຕ້ອງການຂອງຕະຫຼາດ**
1 ການສ້າງຄວາມເປັນເຈົ້າການ ແລະ ເພື່ອກະຕຸ້ນແຮງຈູງໃຈ -------------- 17
(1) ຈຸດເລີ່ມຕົ້ນ: ຮູ້ຈັກຕົວເຂົາເອງ ----------------------- 17
(2) ຈິນຕະນາການພາບ ໃນສິ່ງທີ່ຕ້ອງການ ຢາກຈະເປັນ ----------------------- 23

2 ຝຶກອົບຮົມ ທາງດ້ານເຕັກນິກ ------------------------------------------------ 27
(1) ຄວາມສຳຄັນໃນການປັບປຸງດິນ ແລະ ການເຮັດຝຸ່ນໝັກ -------------- 27
(2) ການສຳຫຼວດຕະຫຼາດ ແລະ ການເລືອກພືດປູກ ----------------------- 32
(3) ສ້າງແຜນປູກ ----------------------- 40

3 ແລກປ່ຽນປະສົບການ ແລະ ການສ້າງເຄືອຂ່າຍ ----------------------- 45
(1) ຈັດກອງປະຊຸມ ເພື່ອທົບທວນ ກິດຈະກຳຄືນ ພາຍໃນບ້ານ ---------------------- 45
(2) [ຊາວນາພົບປະຊາວນາ] ດຳເນີນການແລກປ່ຽນໃນລະດັບຂັ້ນແຂວງ (1-2 ວັນ)----- 48

**III ການເພີ່ມສະມັດຕະພາບເຂົ້າ**
1 ສ້າງຄວາມເຂັ້ມແຂງດ້ານເຕັກນິກການປູກເຂົ້າຜ່ານ ນະໂຍບາຍກູ້ຢືມເມັດພັນ ແລະ ປຸ໋ຍ ----------------------- 55
(1) ພາບລວມ ------------------------------------------------ 55
(2) ຈັດກອງປະຊຸມຮ່ວມກັບຊາວນາ------------------------------------------------ 56
(3) ການຝຶກອົບຮົມ
1) ຈັດຝຶກອົບຮົມຄັ້ງທີ 1 ພ້ອມແຈກຢາຍເມັດພັນ ແລະ ປຸ໋ຍຮອງພື້ນ ------ 60
2) ຈັດຝຶກອົບຮົມຄັ້ງທີ 2 ພ້ອມແຈກຢາຍປຸ໋ຍສຳລັບການເລັ່ງຄັ້ງທີ 1 ------ 64
3) ການຝຶກອົບຮົມຄັ້ງທີ 3 ແລະ ການແຈກຢາຍປຸ໋ຍຢູເຣຍ ສຳລັບການເລັ່ງຄັ້ງທີ 2--- 66
4) ການຝຶກອົບຮົມເສີມ (ຝຶກອົບຮົມຄັ້ງທີ 4) ----------------------- 67
(4) ການຕິດຕາມ ແລະ ປະເມີນຄັ້ງທີ 1 ----------------------- 69
(5) ການເກັບເງິນຄ່າກູ້ຢືມຄືນ ----------------------- 73

2 ທົ່ງນາເອົາໃຈໃສ່ເປັນພິເສດ ----------------------- 75

3 ການສຳຫຼວດສະມັດຕະພາບ ----------------------- 76

**IV ການສົ່ງເສີມການຂາຍ**
1 ແນະນຳພືດຜັກ ທີ່ມີຄວາມຕ້ອງການສູງ ສຳລັບຕະຫຼາດ ໃຫ້ກັບຊາວນາ ໄດ້ຮັບຮູ້ ------ 77
(1) ສຳຫຼວດຕະຫຼາດ ແລະ ແນະນຳໃຫ້ຊາວນາ ໄດ້ເລືອກພືດປູກ ------ 77
(2) ຈັດຝຶກອົບຮົມ ກ່ຽວກັບການປູກ ແລະ ຕອບສະໜອງແນວພັນເພື່ອທົດລອງປູກ ---- 83

2 ການໂຄສະນາ ແລະ ສົ່ງເສີມການຂາຍ ----------------------- 85
(1) ຊ່ວຍເຫຼືອໃນເວລາ ເກັບຜົນຜະລິດເພື່ອຂາຍ ----------------------- 85

**V ການປັບປຸງ ການບໍລິຫານ ຈັດການສວນປູກ**
1 ສ້າງຄວາມອາດສາມາດ ໃນການສ້າງຜົນກຳໄລຢ່າງຕໍ່ເນື່ອງ ------------------------ 95
(1) ບັນທຶກການຂາຍ ------------------------------------------ 95
(2) ວາງແຜນປູກ ເພື່ອຕອບສະໜອງ ພືດຜັກໄດ້ຢ່າງຕໍ່ເນື່ອງ ------------------------ 99
(3) ການບໍລິຫານຈັດການດ້ານຄຸນນະພາບຂອງກຸ່ມ ------------------------ 101

**VI ປັບປຸງການໃຊ້ນໍ້າ ໃຫ້ມີປະສິດທິຜົນ**
1 ການສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ ------------------------ 106
(1) ການສ້ອມແປງຄອງເໝືອງທີ່ມີງົບປະມານຈຳກັດ ------------------------ 106
(2) ຄ່າໃຊ້ຈ່າຍ ແລະ ຂັ້ນຕອນໃນການຄຽນ ມໍເຕີ້ --------------- 110
(3) ການກວດກາ ປະຈຳວັນ ແລະ ການບຳລຸງຮັກສາ ມໍເຕີ້ --------------- 112

2 ການຈັດການນໍ້າ --------------------------------- 138
(1) ການວັດແທກຄວາມໄວຂອງນໍ້າ --------------------------------- 138
(2) ບັນທຶກຊົ່ວໂມງ ການເຮັດວຽກຂອງປໍ້າ --------------- 142
(3) ວິເຄາະຂໍ້ມູນປະລິມານນໍ້າ ແລະ ເຜີຍແຜ່ ໃຫ້ກັບສະມາຄົມນຳໃຊ້ນໍ້າ ------ 144

3 ການປັບປຸງທາງດ້ານ ບັນຊີ-ການເງິນ ຂອງສະມາຄົມ ------------------------ 145
(1) ດຳເນີນຕິດຕາມ ການບັນທຶກ ບັນຊີ-ການເງິນຂອງກຸ່ມ --------------- 145
(2) ການເກັບຄ່າທຳນຽມການໃຊ້ນໍ້າ ຊົນລະປະທານ -------------------------------- 151

4 ປັງປຸງ ການບໍລິຫານ ຂອງສະມາຄົມ ------------------------ 153
(1) ການຈັດກອງປະຊຸມ ແລະ ສ້າງແຜນກິດຈະກຳ ------------------------ 153
(2) ການເລືອກຕັ້ງປະທານ ແລະ ສະມາຊິກຂອງ ສະມາຄົມ ------------------------ 154
(3) ການແລກປ່ຽນລະຫວ່າງຊາວນາ ກັບຊາວນາ ເພື່ອກະຕຸ້ນແຮງຈູງໃຈຂອງກຸ່ມ ------ 155

**VII ການຄັດເລືອກໂຄງການໃໝ່**
1 ຂະບວນການ ໃນການຄັດເລືອກໂຄງການໃໝ່ ------------------------ 159

2 ລາຍລະອຽດຂອງກິດຈະກຳ ໃນແຕ່ລະຂະບວນການ ------------------------ 161
(1) ຈັດກອງປະຊຸມເພື່ອກະກຽມການລົງສຳຫຼວດຄັ້ງທີ 1st ------------------------ 161
(2) ການລົງສຳຫຼວດ ຄັ້ງທີ 1st ------------------------ 164
(3) ຈັດກອງປະຊຸມເພື່ອຄັດເລືອກໂຄງການທີ່ໄດ້ເຂົ້າຮອບຫຼັງຈາກການລົງສຳຫຼວດ------ 167
(4) ການສຳຫຼວດຄັ້ງທີ 2nd ------------------------ 172
(5) ຈັດກອງປະຊຸມ ເພື່ອສະຫຼຸບຜົນ ແລະ ຄັດເລືອກເອົາເປັນໂຄງການໃໝ່ ແລະ ລາຍງານໃຫ້ກອງປະຊຸມ PMU ------------------------ 176
(6) ຈັດກອງປະຊຸມເພື່ອແນະນຳ ໂຄງການໃໝ່ ------------------------ 181

**VIII ການຕິດຕາມ ແລະ ປະເມີນຜົນ**
1 ຈຸດປະສົງ ແລະ ພາບລວມ ຂອງກິດຈະກຳ ------------------------ 183

2 ຮູບແບບການຕິດຕາມ ແລະ ປະເມີນຜົນ ------------------------ 185

3 ປະຊຸມ ແລະ ສຳພາດ ພະນັກງານເມືອງ, ຊາວກະສິກອນ ລວມທັງການລົງສຳຫຼວດ ພາກສະໜາມ ------------------------ 188

4 ສະຫຼຸບຜົນການຕິດຕາມ ແລະ ປະເມີນຜົນ ------------------------ 192

5 ການພິຈາລະນາ ແລະ ການຢຸດຕິການສົ່ງເສີມກິດຈະກຳທີ່ສຳເລັດ --------------- 196

# ຜູ້ຕິດຕໍ່

**I. ພາບລວມຂອງໂຄງການ PAD**

ທ່ານ. ແກ້ວອຸດອນ ສຸລິຍະ (ຫົວໜ້າຂະແໜງ ແຜນການ ແລະ ການເງິນ ແຂວງ)

**II. ການຜະລິດ ທີ່ມຸ້ງເນັ້ນໃສ່ ຄວາມຕ້ອງການຂອງຕະຫຼາດ**

ທ່ານ. ນາງ ຈະເລີນພອນ (ຮອງຫົວໜ້າ ພະແນກ ສົ່ງເສີມ ຜະລິດຕະພັນ ແລະ ການຄ້າ)

ທ່ານ. ນາງ ພອນແກ້ວ ວົງນາ (ວິຊາການສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກ ກປຂ,)

**III. ການເພີ່ມຜົນຜະລິດ (ເຂົ້າ)**

ທ່ານ. ຈັນລະຄອນ ໄຊຍະລາດ (ວິຊາການສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກ ກປຂ,)

ທ່ານ. ພອນສັກ ວິໄລຄຳ (ວິຊາການ ຈາກຂະແໜງ ປູກຝັງ ແຂວງ)

**IV. ການສົ່ງເສີມການຂາຍ**

ທ່ານ. ນາງ ຈະເລີນພອນ (ຮອງຫົວໜ້າ ພະແນກ ສົ່ງເສີມ ຜະລິດຕະພັນ ແລະ ການຄ້າ)

ທ່ານ. ນາງ ພອນແກ້ວ ວົງນາ (ວິຊາການສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກ ກປຂ,)

**V. ການປັບປຸງ ການບໍລິຫານ ຈັດການສວນປູກ**

ທ່ານ. ນາງ ຈະເລີນພອນ (ຮອງຫົວໜ້າ ພະແນກ ສົ່ງເສີມ ຜະລິດຕະພັນ ແລະ ການຄ້າ)

ທ່ານ. ນາງ ພອນແກ້ວ ວົງນາ (ວິຊາການສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກ ກປຂ,)

**VI. ປັບປຸງການໃຊ້ນໍ້າ ໃຫ້ມີປະສິດທິຜົນ**

ທ່ານ. ວັນລະຄອນ ຜາງທະວົງ (ຫົວໜ້າ ໜ່ວຍງານ ຄຸ້ມຄອງນຳໃຊ້ ແຂວງ)

**VII. ການຄັດເລືອກໂຄງການໃໝ່**

ທ່ານ. ນາງ ພອນທິບ ໄຊຍະຈັກ (ວິຊາການຂະແໜງແຜນການ ແລະ ການເງິນ, ພະແນກ ກປຂ,)

ທ່ານ ນ. ເລດີ້ ໄຊຍະເສນ (ວິຊາການຂະແໜງຮ່ວມມືສາກົນ, ພະແນກແຜນການ ແລະ ການລົງທຶນແຂວງ)

**VIII. ການຕິດຕາມ ແລະ ປະເມີນຜົນ**

ທ່ານ ທອມມາລາ ພົມມະແສງທອງ (ຫົວໜ້າທີມ, ຂະແໜງຊົນລະປະທານ, ພະແນກ ກປຂ,)

ທ່ານ. ລັດດາ ຣາດສະພົນ (ວິຊາການຂະແໜງຮ່ວມມືສາກົນ, ພະແນກແຜນການ ແລະ ການລົງທຶນແຂວງ)

# I ພາບລວມຂອງໂຄງການ PAD

## 1 ຮູບແບບທົ່ວໄປຂອງໂຄງການ PAD

1) ຮູບແບບ ຂອງໂຄງການ ການພັດທະນາ ກະສິກຳ ແບບມີສ່ວນຮ່ວມ (PAD)
   - ເພີ່ມລາຍຮັບໃຫ້ຊາວກະສິກອນໂດຍຜ່ານ 5 ວິທີການດັ່ງນີ້: ການຜະລິດ ທີ່ມຸ້ງເນັ້ນໃສ່ ຄວາມຕ້ອງການຂອງຕະຫຼາດ, ຍົກສະມັດຕະພາບການຜະລິດ, ການສົ່ງເສີມການຂາຍຜົນຜະລິດ, ປັບປຸງ ການຄຸ້ມຄອງບໍລິຫານ ການປູກຝັງ ແລະ ປັບປຸງການໃຊ້ນ້ຳ ໃຫ້ມີປະສິດທິຜົນ
   - ພະນັກງານລັດໄດ້ສົ່ງເສີມກິດຈະກຳ ເຫຼົ່ານີ້ດ້ວຍການຝຶກອົບຮົມເຕັກນິກໃຫ້ຊາວກະສິກອນ, ການລົງສັງເກດການພາກສະໜາມ ແລະ ອື່ນໆ.
2) ຄວາມໝາຍຂອງ ການມີສ່ວນຮ່ວມ
   - ຊາວນາສາມາດ ມີສ່ວນຮ່ວມໃນການຕັດສິນໃຈ (ຕົວຢ່າງ: ການເຂົ້າຮ່ວມກອງປະຊຸມຂອງໂຄງການ) ພວກເຂົາສາມາດເລືອກໄດ້ວ່າ ຕ້ອງການເຂົ້າຮ່ວມຫຼື ບໍ່.
   - ພະນັກງານລັດ ມີສ່ວນຮ່ວມໃນການສົ່ງເສີມກິດຈະກາ ຂອງຊາວກະສິກອນ.

(ອະທິບາຍ)

1) ຮູບແບບ ຂອງໂຄງການ ການພັດທະນາ ກະສິກຳ ແບບມີສ່ວນຮ່ວມ (PAD), ໄດ້ສັງລວມເອົາກິດຈະກຳ ທີ່ພະນັກງານລັດ ໄດ້ຈັດຕັ້ງປະຕິບັດ ເພື່ອເພີ່ມລາຍຮັບໃຫ້ແກ່ຊາວກະສິກອນ, ຊຶ່ງ ປະກອບດ້ວຍ 5 ວິທີການດັ່ງນີ້:




ຮູບແບບ ຂອງໂຄງການ



- ການຜະລິດທີ່ມຸ້ງເນັ້ນໃສ່ຄວາມຕ້ອງການຂອງຕະຫຼາດ
  ເມື່ອກ່ອນຊາວກະສິກອນປູກພືກຜັກ ໂດຍບໍ່ຄຳນຶງເຖິງຄວາມຕ້ອງການຂອງຕະຫຼາດ. ຮູບແບບຂອງໂຄງການ PAD ໄດ້ປ່ຽນທັດສະນະຄະຕິຂອງຊາວກະສິກອນ ຈາກ "ປູກ ແລະ ຂາຍ" ມາເປັນ "ປູກເພື່ອຂາຍ" ນອກຈາກນັ້ນຍັງ ໄດ້ສົ່ງເສີມຊາວກະສິກອນ ເລືອກປູກພືດຕາມຄວາມຕ້ອງການຂອງຕະຫຼາດ ເພື່ອເພີ່ມຜົນກຳໄລ



- ຍົກສະມັດຕະພາບການຜະລິດ
  ໂຄງການ PAD ໄດ້ຂະຫຍາຍເຕັກນິກການປູກເຂົ້າໃຫ້ຊາວກະສິກອນ ເພື່ອຍົກສະມັດຕະພາບ ການຜະລິດໃຫ້ສູງຂຶ້ນ



- ການສົ່ງເສີມການຂາຍ
  ພະນັກງານລັດ ຊອກຫາຕະຫຼາດ ທີ່ຫຼາກຫຼາຍເຊັ່ນ: ຮ້ານອາຫານ, ຮ້ານຄ້າ ຕ່າງໆ ເພື່ອສົ່ງເສີມການຂາຍຜັກທີ່ປູກຕາມຄວາມຕ້ອງການຂອງຕະຫຼາດ



- ການປັບປຸງ ການບໍລິຫານ ຈັດການສວນປູກ
  3 ວິທີການທີ່ກ່າວມາຂ້າງເທິງ ແມ່ນ ເຮັດໃຫ້ຍອດຂາຍເພີ່ມຂຶ້ນຫຼາຍ. ໃນການເພີ່ມຜົນກຳໄລ ກໍ່ເປັນສິ່ງຈຳເປັນ ທີ່ຊາວກະສິກອນທີ່ຕ້ອງພິຈາລະນາກ່ຽວກັບ (ກຳໄລ ແລະ ຂາດທຶນ). ຮູບແບບ ຂອງໂຄງການ PAD ມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນໃຫ້ມີຄວາມສາມາດໃນການຄຸ້ມຄອງກະສິກຳ (ເຊັ່ນ: ການເຮັດບັນຊີ, ການວາງແຜນການປູກຝັງ...)



- ປັບປຸງການໃຊ້ນ້ຳ ໃຫ້ມີປະສິດທິຜົນ
  ໃນການຜະລິດລະດູແລ້ງ, ຊາວກະສິກອນໃຊ້ນ້ຳ ຊົນລະປະທານ ສຳລັບການປູກເຂົ້າ ແລະ ພືດຜັກ. ຊາວກະສິກອນຫຼາຍຄົນຕ້ອງການຂະຫຍາຍເນື້ອທີ່ປູກຝັງໃຫ້ຫຼາຍຂຶ້ນໃນລະດູແລ້ງ ແລະ ຫຼຸດຜ່ອນຄ່າທຳນຽມຊົນລະປະທານ. ຮູບແບບ ຂອງໂຄງການ PAD ແມ່ນແນໃສ່ໃຫ້ພະນັກງານລັດ ສົ່ງເສີມ ສະມາຄົມນຳໃຊ້ນ້ຳ ທາງດ້ານເຕັກນິກ ການຈັດການນ້ຳ ເພື່ອການຂະຫຍາຍເນື້ອທີ່ຊົນລະປະທານ ແລະ ການຫຼຸດຜ່ອນຄ່າທຳນຽມຊົນລະປະທານ.

2) ຄຳວ່າ ການມີສ່ວນຮ່ວມ" ແມ່ນສາມາດຕີຄວາມໝາຍໄດ້ຫຼາຍຢ່າງ. ຮູບແບບ ຂອງໂຄງການ PAD ຈຶ່ງກຳນົດ "ການມີສ່ວນຮ່ວມ" ໄວ້ດັ່ງລຸ່ມນີ້:

- ຊາວນາສາມາດ ມີສ່ວນຮ່ວມໃນການຕັດສິນໃຈ (ຕົວຢ່າງ: ການເຂົ້າຮ່ວມກອງປະຊຸມຂອງໂຄງການ) ພວກເຂົາສາມາດເລືອກໄດ້ວ່າ ຕ້ອງການເຂົ້າຮ່ວມຫຼື ບໍ. ຮູບແບບ ຂອງໂຄງການ PAD ແມ່ນບໍ່ໄດ້ບັງຄັບໃຫ້ຊາວກະສິກອນປະຕິບັດຕາມກິດຈະກຳ ຂອງພະນັກງານລັດ. ເພາະວ່າ ຮູບແບບຂອງໂຄງການ ແມ່ນສຸມໃສ່ການເພີ່ມລາຍຮັບຂອງຊາວກະສິກອນ. ສະນັ້ນ, ຊາວກະສິກອນ ມີສິດ ເລືອກດ້ວຍຕົວເອງ ວ່າຈະເຂົ້າຮ່ວມກິດຈະກຳ ຫຼື ບໍ່ກໍ່ຕາມ. ພະນັກງານລັດ ຄວນເຄົາລົບຄວາມຄິດເຫັນ ແລະ ການຕັດສິນໃຈ ຂອງເຂົາເຈົ້າ.
- ພະນັກງານລັດເຂົ້າຮ່ວມກິດຈະກຳ ຂອງຊາວກະສິກອນ ເພື່ອສະໜັບສະໜູນ ການປະຕິບັດກິດຈະກຳຂອງພວກເຂົາ, ເພື່ອໃຫ້ຄຳແນະນຳ ທີ່ເປັນປະໂຫຍດ ແລະ ສະໜອງ ງົບປະມານທີ່ຈຳເປັນ.

*ຜູ້ຈັດຕັ້ງປະຕິບັດ (ພະນັກງານລັດ ແລະ ຊາວກະສິກອນ)*

## 2 ການສຳຫຼວດຂັ້ນພື້ນຖານ

1) ພະນັກງານເມືອງ ຈັດຕັ້ງປະຕິບັດການ ສຳຫຼວດຂັ້ນພື້ນຖານ ເພື່ອເຂົ້າໃຈ ເຖິງສະພາບຕົວຈິງຂອງໂຄງການ.
2) ການສຳຫຼວດຂັ້ນພື້ນຖານ ແມ່ນພະນັກງານເມືອງ ລົງໄປເຂດໂຄງການ ເພື່ອສຳພາດຊາວກະສິກອນ ຕາມແບບສອບຖາມ ລວມທັງ ວັດແທກເນື້ອທີ່ຊົນລະປະທານ

(ອະທິບາຍ)

ພະນັກງານເມືອງ ຈັດຕັ້ງປະຕິບັດການ ສຳຫຼວດຂັ້ນພື້ນຖານ ເພື່ອເຂົ້າໃຈ ເຖິງສະພາບຕົວຈິງຂອງໂຄງການ ແລະ ເພື່ອທຳຄວາມສະນິດແໜ້ນກັບຊາວກະສິກອນ. ສະນັ້ນ ພວກເຂົາຈຶ່ງປະຕິບັດການສຳຫຼວດ ຂັ້ນພື້ນຖານ ດັ່ງລຸ່ມນີ້:

<ຮູບແບບການສຳຫຼວດ>

1) ຈຸດປະສົງ: - ເພື່ອເຂົ້າໃຈ ເຖິງສະພາບຕົວຈິງຂອງໂຄງການ (ຕົວຢ່າງ: ເນື້ອທີ່ຜະລິດ, ປະເພດພືດປູກ, ສະພາບທາງເສດຖະກິດ, ສະມາຄົມນຳໃຊ້ນ້ຳ ແລະ ອື່ນໆ).
   - ເພື່ອກະຕຸ້ນໃຫ້ພະນັກງານເມືອງ ສ້າງຄວາມສຳພັນ ອັນສະນິດແໜ້ນກັບຊາວກະສິກອນ.
2) ຈຸດສຳຄັນໃນການສຳຫຼວດ: ແມ່ນແນໃສ່ ການເກັບກຳ ສະພາບໃນປະຈຸບັນ ຂອງຂົງເຂດດັ່ງກ່າວເຊັ່ນ:
   - ເງື່ອນໄຂ ແລະ ສະພາບ ການປູກຝັງ
   - ການຂາຍຜົນຜະລິດ
   - ຄວາມອາດສາມາດ ຂອງ ສະມາຄົມນຳໃຊ້ນ້ຳ
   - ລະບົບຊົນລະປະທານ ແລະ ການຈັດການນ້ຳ
3) ເປົ້າໝາຍການສຳຫຼວດ:
   (a) ການສຳຫຼວດຕົວຢ່າງ: 30% ຂອງຈຳນວນ ປະຊາກອນບ້ານ* ໃນໂຄງການ
   * ເລືອກຄອບຄົວ ທີ່ເຮັດການຜະລິດ ຫຼື ອື່ນໆ ທີ່ແຕກຕ່າງກັນ
   - ປະທານ ສະມາຄົມ
   - ຊາວກະສິກອນ ຜູ້ທີ່ຫ້າວຫັນ ໃນການເຂົ້າຮ່ວມກິດຈະກຳ ຂອງສະມາຄົມ, ການຝຶກອົບຮົມຈາກພະນັກງານ ແຂວງ, ເມືອງ ແລະ ໂຄງການຊ່ວຍເຫຼືອລ້າ ຕ່າງໆ.
   - ຊາວກະສິກອນ ຄົນອື່ນໆ ທີ່ມີເນື້ອທີ່ປູກ (0.5 ເຮັກຕາ ຫຼື ຫຼາຍກວ່າ 2.0 ເຮັກຕາ)
4) ຜູ້ສຳຫຼວດ:
   (a) ການສຳຫຼວດຕົວຢ່າງ: ພະນັກງານເມືອງ ຝ່າຍ (ກະສິກຳ, ການຕະຫຼາດ ແລະ ຊົນລະປະທານ)
   (b) ວັດແທກຊົນລະປະທານ: ພະນັກງານເມືອງ ຝ່າຍ (ຊົນລະປະທານ)
5) ໄລຍະເວລາ ໃນການສຳຫຼວດ:
   (a) ການສຳຫຼວດຕົວຢ່າງ (ສຳພາດຊາວກະສິກອນ): 10-20 ວັນ ໃນເວລາ 2 ເດືອນ
   (b) ການວັດແທກຊົນລະປະທານ: ຕົ້ນການຜະລິດ ລະດູແລ້ງ (ເດືອນ ທັນວາ ຫາ ເດືອນ ມີນາ)
6) ວິທີການສຳຫຼວດ:
   ວິທີການສຳຫຼວດແມ່ນມີ 2 ວິທີການທີ່ແຕກຕ່າງກັນດັ່ງລຸ່ມນີ້:
   (a) ການຖາມສຳພາດ ກຸ່ມຕົວຢ່າງ ໂດຍ ພະນັກງານເມືອງ
   (ເນື້ອໃນການສຳຫຼວດ)
   - ເງື່ອນໄຂ ແລະ ສະພາບ ການປູກຝັງ



(ຕົວຢ່າງ: ເນື້ອທີ່ການປູກ, ຜົນຜະລິດ, ສະນິດພືດທີ່ປູກ, ປັດໄຈນຳເຂົ້າ, ແລະ ອື່ນໆ)

- ການຂາຍ

(ຕົວຢ່າງ: ຈຳນວນທີ່ຂາຍ, ຕະຫຼາດ, ການຕັ້ງລາຄາ, ການຂົນສົ່ງ, ແລະ ອື່ນໆ)

- ການສຳຫຼວດຄົວເຮືອນທົ່ວໄປ (ສະມາຊິກໃນຄອບຄົວ, ແຮງງານ, ຊັບສິນ, ແລະ ອື່ນໆ)
- ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ (ການເຜີຍແຜ່ຂໍ້ມູນ, ການຕັດສິນໃຈ, ແລະ ອື່ນໆ)
- ບົດບາດຍິງ-ຊາຍ (ການມີສ່ວນຮ່ວມ ແລະ ການຕັດສິນໃຈໃນຄອບຄົວ)

(b) ການວັດແທກຊົນລະປະທານ ເຊັ່ນ: (ການວັດແທກຄວາມໄວ ແລະ ຄວາມເລິກ ຂອງນ້ຳ, ຊົ່ວໂມງການເຮັດວຽກຂອງປໍ້າ, ຈຳນວນການໃຊ້ໄຟຟ້າ ແລະ ເຂດຊົນລະປະທານ)



a) ການວັດແທກຄວາມໄວ ແລະ ຄວາມເລິກ ຂອງນ້ຳ:

ແທກຕາມເຂດຊົນລະປະທານ, ຈຸດເລີ່ມຕົ້ນປະຕູນ້ຳຄອງເໝືອງແມ່ (ວັດແທກມື້ 1 ຄັ້ງ)

b) ຊົ່ວໂມງການເຮັດວຽກຂອງປໍ້າ ແລະ ຈຳນວນການໃຊ້ໄຟຟ້າ

ບັນທຶກຊົ່ວໂມງການເຮັດວຽກຂອງປໍ້າ ແລະ ຈຳນວນການນຳໃຊ້ໄຟຟ້າໃນແຕ່ລະມື້ ໂດຍ (ຕົວແທນກຸ່ມ)

c) ເຂດຊົນລະປະທານ

ຫຼັງຈາກການເລີ່ມໃຊ້ນ້ຳຊົນລະປະທານ ກຸ່ມຜູ້ໃຊ້ນ້ຳຕ້ອງໄດ້ວັດແທກທຸກໆ ເຂດພື້ນທີ່.

ພະນັກງານແຂວງ ຈັດກອງປະຊຸມ ເຜີຍແຜ່ ການສຳຫຼວດ ໃຫ້ແກ່ ພະນັກງານເມືອງ ເພື່ອສ້າງຄວາມເຂັ້ມແຂງທາງດ້ານທັກສະ ການສຳພາດ

<ລາຍລະອຽດຂອງກອງປະຊຸມ>

1) ຈຸດປະສົງ: ເພື່ອອະທິບາຍກ່ຽວກັບ ການສຳຫຼວດຂັ້ນພື້ນຖານ ແລະ ຊ້ອມການ ຖາມສຳພາດ
2) ສະຖານທີ່: ຫ້ອງການກະສິກຳ ແລະ ປ່າໄມ້ ແຂວງ
3) ໄລຍະເວລາ: 1 ມື້
4) ເປົ້າໝາຍ:

ພະນັກງານເມືອງ ຝ່າຍ (ກະສິກຳ, ການຕະຫຼາດ ແລະ ຊົນລະປະທານ)

5) ຜູ້ສອນ: ພະນັກງານແຂວງ
6) ເນື້ອໃນການປະຊຸມ:
    - ແຜນການສຳຫຼວດຂັ້ນພື້ນຖານ
    - ທຳຄວາມເຂົ້າໃຈ ແບບສອບຖາມ
    - ຝຶກຊ້ອມ ຖາມ ຕາມແບບຟອມ
    - ທົບທວນຄືນ ການຖາມ-ຕອບ



ຊ້ອມການ ຖາມສຳພາດ

*ຜູ້ຈັດຕັ້ງປະຕິບັດ (ພະນັກງານເມືອງ/ແຂວງ)*

(ຮູບແບບການສອບຖາມ)

# ໂຄງການ ພັດທະນາ ກະສິກໍາ ແບບມີສ່ວນຮ່ວມ

# ແຂວງ ສະຫວັນນະເຂດ

**ແບບສອບຖາມ ໃນການສໍາຫຼວດ**

ຂໍ້ມູນຂອງຜູ້ຕອບ:

| | |
|---|---|
| ຊື່: | |
| ບ້ານ: | |
| ເມືອງ: | |
| ເພດ: | |
| ອາຍຸ: | |
| ສະຖານະ: | |
| ເບີໂທຕິດຕໍ່: | |

ຊື່ຂອງຜູ້ສໍາພາດ:_______________________________________

ມື້ສໍາພາດ:_________________________________________

(ຮູບແບບການສອບຖາມ)

# <u>ການແນະນຳຕົວ/ການສຳຫຼວດ ແລະ ການຖາມຄວາມເຫັນດີຍິນຍອມ</u>

<u>ກະລຸນາອ່ານຂໍ້ຄວາມນີ້ໃຫ້ຜູ້ທີ່ຈະຖືກສຳພາດຟັງພ້ອມທັງແນະນຳຕົວຂອງທ່ານ ແລະ ອະທິບາຍກ່ຽວກັບການສຳຫຼວດ;</u>

*ຂ້າພະເຈົ້າຊື່.................. ແລະ ຂ້າພະເຈົ້າມາຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ພະລານໄຊ/ຊົນນະບູລີ/ທ່າປາງທອງ. ຂ້ອຍເຮັດວຽກກັບໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ ເຊິ່ງປະຕິບັດຮ່ວມກັນກັບພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການ ໄຈກາ (JICA). ຈຸດປະສົງຂອງການລົງມາສຳຫຼວດໃນຄັ້ງນີ້ແມ່ນເພື່ອຮັບຮູ້ສະພາບກິດຈະກຳການຜະລິດໃນປະຈຸບັນຂອງຊາວກະສິກອນໃນເຂດບ້ານທີ່ໂຄງການກຳນົດໄວ້, ເຊິ່ງຂໍ້ມູນທີ່ເກັບກຳໄດ້ແມ່ນຈະໄດ້ນຳໃຊ້ເພື່ອຈັດຕັ້ງປະຕິບັດໂຄງການໃຫ້ມີປະສິດທິພາບ. ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງສຳລັບຄວາມຮ່ວມມືຂອງທ່ານໃນການສຳຫຼວດຂໍ້ມູນຄັ້ງນີ້. ຜົນໄດ້ຮັບຈາກການສຳຫຼວດຄັ້ງນີ້ຈະຊ່ວຍປັບປຸງການພັດທະນາດ້ານກະສິກຳໃນແຂວງຂອງພວກເຮົາ ກໍ່ຄືປະເທດຂອງເຮົາ.*

**<u>ການຖາມຄວາມເຫັນດີຍິນຍອມ</u>**

*ສຳລັບເລື່ອງຄວາມຮ່ວມມືແມ່ນພວກເຮົາຈະບໍ່ໄດ້ບັງຄັບ ແລະ ຂໍ້ມູນຕ່າງໆທີ່ທ່ານບອກຈະຖືກເກັບເປັນຄວາມລັບສູງສຸດ ແລະ ຈະບໍ່ນຳໄປເຜີຍແຜ່ໃຫ້ໃຜຮູ້ນອກຈາກທີມງານສຳຫຼວດຂອງພວກເຮົານີ້. ຂ້າພະເຈົ້າຫວັງຢາ່ງຍິ່ງວ່າທ່ານຈະໃຫ້ຄວາມຮ່ວມມືເປັນຢ່າງດີເນື່ອງຈາກວ່າຂໍ້ມູນຈາກທ່ານແມ່ນສຳຄັນຫຼາຍສຳລັບໂຄງການຂອງພວກເຮົາ. ການສຳພາດແມ່ນຈະໃຊ້ເວລາປະມານ 30-40 ນາທີ.*

*ມາຮອດນີ້ ຂ້າພະເຈົ້າຢາກຖາມເລີຍວ່າ ທ່ານຈະໃຫ້ຄວາມຮ່ວມມືບໍ*

*ໝາຍວົງມົນເອົາຂໍ້ທີ່ຕ້ອງການ*

| | |
|---|---|
| **ເຫັນດີໃຫ້ສຳພາດ** | 1 |
| **ບໍ່ເຫັນດີໃຫ້ສຳພາດ** | 2 |

(ຮູບແບບການສອບຖາມ)

## ແບບຟອມເກັບກຳຂໍ້ມູນທຽບຖານຂອງໂຄງການພັດທະນາກະສິກຳແບບການເກັບກຳຂໍ້ມູນແບບຄົບຊຸດ

| No. | ຂໍ້ຄຳຖາມ | | ຄຳຕອບ | | | | |
|---|---|---|---|---|---|---|---|
| ກ. ການປູກຝັງ | | | | | | | |
| 1 | ເນື້ອທີ່ທັງໝົດຂອງທ່ານມີທໍ່ໃດ ? | | ເຮັກຕາ | | | | |
| | | | | | | | |
| 2 | ເນື້ອທີ່ກະສິກຳ | | ເປັນຂອງຕົນເອງ | | | ເຊົ່າຂອງຄົນອື່ນ | |
| | | ເນື້ອທີ່ນາ | ມ$^{2}$ | | | ມ$^{2}$ | |
| | | Upland cultivation area | ມ$^{2}$ | | | ມ$^{2}$ | |
| | | ເຂດເນື້ອທີ່ທົ່ງຫຍ້າລ້ຽງສັດ | ມ$^{2}$ | | | ມ$^{2}$ | |
| | | ເນື້ອທີ່ໜອງປາ | ມ$^{2}$ | | | ມ$^{2}$ | |
| | | ອື່ນໆ | ມ$^{2}$ | | | ມ$^{2}$ | |
| | | | | | | | |
| 3-1 | What did you grow and sell? | | * Please use attached sheet | | | | |
| | | | | | | | |
| | | | | | | | |
| 3-2 | ເຈົ້າໄດ້ປຶກສາຫາລືກັບຄົນອື່ນບໍ ກ່ອນທີ່ຈະຕັດສິນໃຈ ເລືອກເອົາພືດທີ່ເຈົ້າໄດ້ປູກ? | | 1 | ໄດ້ປຶກສາ | 2 | ບໍ່ | |
| | | ຖ້າວ່າໄດ້ປຶກສາ, ເຈົ້າປຶກສານຳໃຜ? | 1 ຄົນເຮືອນໃກ້ | 2 ຫ້ອງການກະສິກຳ ແລະ ປ່າໄມ້ | 3 ການຝຶກອົບຮົມ | 4 ອຳນາດປົກຄອງບ້ານ | 5 ອື່ນໆ |
| | | | | | | | |
| 3-3 | ໃນການຄັດເລືອກຊະນິດພືດ ແລະ ແນວພັນເຈົ້າອີງໃສ່ຫຍັງແດ່?<br>(ເລືອກຄຳຕອບໄດ້ຫຼາຍກ່ວາ 1) | | 1 | ບໍ່ຄິດຫຍັງຫລາຍ | | | |
| | | | 2 | ໃຊ້ແຮງງານໜ້ອຍ(ໃນການປູກ) | | | |
| | | | 3 | ງ່າຍໃນການບົວລະບັດ/ ຕ້ານທານສັດຕູພືດໄດ້ດີ | | | |
| | | | 4 | ລາຄາເມັດພືດ | | | |
| | | | 5 | ລາຄາຂາຍ ຫລັງຈາກເກັບກ່ຽວ | | | |
| | | | 6 | ຄົນອື່ນເອົາແນວພັນໃຫ້ຂ້ອຍ | | | |
| | | | 7 | ມີຄົນບອກຂ້ອຍ | | | |
| | | | 8 | ປູກຕາມເຄີຍປູກ | | | |
| | | | 9 | ຕະຫລາດຕ້ອງການຫລາຍ | | | |
| | | | 10 | ອື່ນໆ(ຈົ່ງອະທິບາຍ) | | | |
| | | | | | | | |
| 3-4 | How many people are engaged in farming? | | 1 | 2 | 3 | 4 | 5 |
| | | | more than 5 | | | | |
| | | | | | | | |

(ຮູບແບບການສອບຖາມ)

| | | | | | | | | |
|---|---|---|---|---|---|---|---|---|
| 3-5 | ເຈົ້າໄດ້ຈ້າງແຮງງານຄົນອື່ນບໍ? (Dry seasons/2017/18, Rice) | | 1 | ໄດ້ຈ້າງ | 2 | ບໍ່ | |
| | | ຖ້າວ່າໄດ້ຈ້າງ, ຈ້າງຈັກຄົນ? | | | ແຮງງານ | | |
| | | ຈ້າງແຮງງານຈັກມື້? | | | ມື້ | | |
| | | ຈ້າງໃຫ້ເຮັດວຽກຫຍັງແດ່? | ດຳນາ | ເສຍຫຍ້າ | ເກັບກ່ຽວ | ອື່ນໆ | |
| | | ຄ່າແຮງງານຫລາຍປານໃດຕໍ່ຄົນຕໍ່ມື້? | | | ກີບ | | |
| | | ເຈົ້າຈ່າຍຄ່າແຮງງານທັງໝົດຫລາຍປານໃດ? | | | ກີບ | | |
| | ເຈົ້າໄດ້ຈ້າງແຮງງານຄົນອື່ນບໍ? (Rainy seasons/2018, Rice) | | 1 | ໄດ້ຈ້າງ | 2 | ບໍ່ | |
| | | ຖ້າວ່າໄດ້ຈ້າງ, ຈ້າງຈັກຄົນ? | | | ແຮງງານ | | |
| | | ຈ້າງແຮງງານຈັກມື້? | | | ມື້ | | |
| | | ຈ້າງໃຫ້ເຮັດວຽກຫຍັງແດ່? | ດຳນາ | ເສຍຫຍ້າ | ເກັບກ່ຽວ | ອື່ນໆ | |
| | | ຄ່າແຮງງານຫລາຍປານໃດຕໍ່ຄົນຕໍ່ມື້? | | | ກີບ | | |
| | | ເຈົ້າຈ່າຍຄ່າແຮງງານທັງໝົດຫລາຍປານໃດ? | | | ກີບ | | |

| | | | | | | |
|---|---|---|---|---|---|---|
| 3-6 | ເຈົ້າໄດ້ຊື້ປັດໄຈຫຼາຍປານໃດສຳລັບການຜະລິດເຂົ້າ 2017/18DS? | | | | | |
| | | Dry season Rice from production to harvest | ມູນຄ່າ | | ເຈົ້າເອົາມາແຕ່ໃສ? | |
| | | ແນວພັນ | | ກີບ | | |
| | | ຝຸ່ນ ແລະ ປຸ໋ຍ | | ກີບ | | |
| | | ນ້ຳມັນ | | ກີບ | | |
| | | ແຮງງານ | | ກີບ | | |
| | | ອື່ນໆ(ຈົ່ງອະທິບາຍ) | | ກີບ | | |
| | | **ມູນຄ່າທັງໝົດ** | | ກີບ | | |
| | | ເຈົ້າໄດ້ຈົດບັນທຶກບໍ? (ຂໍເບິ່ງປື້ມ) | 1. ບັນທຶກ (ເຫັນປຶ້ມ) | 2. ບັນທຶກ (ບໍ່ເຫັນປຶ້ມ) | 3. ບໍ່ໄດ້ບັນທຶກ | |
| | ເຈົ້າໄດ້ຊື້ປັດໄຈຫຼາຍປານໃດສຳລັບການຜະລິດເຂົ້າ 2018RS? | | | | | |
| | | Rainy season Rice from production to harvest | ມູນຄ່າ | | ເຈົ້າເອົາມາແຕ່ໃສ? | |
| | | ແນວພັນ | | ກີບ | | |
| | | ຝຸ່ນ ແລະ ປຸ໋ຍ | | ກີບ | | |
| | | ນ້ຳມັນ | | ກີບ | | |
| | | ແຮງງານ | | ກີບ | | |
| | | ອື່ນໆ(ຈົ່ງອະທິບາຍ) | | ກີບ | | |
| | | **ມູນຄ່າທັງໝົດ** | | ກີບ | | |
| | | ເຈົ້າໄດ້ຈົດບັນທຶກບໍ? (ຂໍເບິ່ງປື້ມ) | 1. ບັນທຶກ (ເຫັນປຶ້ມ) | 2. ບັນທຶກ (ບໍ່ເຫັນປຶ້ມ) | 3. ບໍ່ໄດ້ບັນທຶກ | |

| | | | | | | | |
|---|---|---|---|---|---|---|---|
| 3-7 | How much did you spend for inputs for other crops production in 2017/18DS - 2018RS | | | | | | |
| | | Vegatbles from production to harvest | Name of crops | | | | |
| | | ແນວພັນ | | | ກີບ | | |
| | | ຝຸ່ນ | | | ກີບ | | |
| | | ນ້ຳມັນ | | | ກີບ | | |
| | | ແຮງງານ | | | ກີບ | | |
| | | ອື່ນໆ (ຈົ່ງອະທິບາຍ) | | | ກີບ | | |
| | | ມູນຄ່າລວມທັງໝົດ | | | ກີບ | | |
| | | ເຈົ້າໄດ້ຈົດບັນທຶກໄວ້ບໍ? | 1. ບັນທຶກໃສ່ປຶ້ມ | | 2. ໄດ້ບັນທຶກ, ແຕ່ບໍ່ໄດ້ໃຊ້ປຶ້ມ | | 3. ບໍ່ໄດ້ບັນທຶກ |
| | | | | | | | |
| 3-8 | How much sales did you make from farming in 2017/18DS - 2018RS | | | | | | |
| | | ຂາຍໄດ້ທັງໝົດເທົ່າໃດ ? | | | | | ກີບ |
| | | ເຈົ້າໄດ້ຈົດບັນທຶກໄວ້ບໍ? (ຂໍເບິ່ງປຶ້ມບັນທຶກ) | 1.ບັນທຶກ (ເຫັນປຶ້ມ) | | 2. ບັນທຶກ (ແຕ່ປຶ້ມເສຍ) | | 3. ບໍ່ໄດ້ບັນທຶກ |
| | | | | | | | |
| 4 | ເຈົ້າເຄີຍຊອກຫາວິທີອື່ນບໍ ເພື່ອທີ່ຈະຂາຍຜົນຜະລິດຂອງເຈົ້າໃນລາຄາສູງກວ່າເກົ່າ? | | 1 | | ເຄີຍ | 2 | ບໍ່ |
| | | ຖ້າວ່າເຄີຍ, ເຈົ້າເຮັດແນວໃດ? | | | | | |
| | | ຖ້າເຄີຍ, ເຈົ້າເອົາຄວາມຮູ້ມາຈາກໃສ? | 1 ຄົນເຮືອນໃກ້ | 2 ຫ້ອງການກະສິກຳ & ປ່າໄມ້ | 3 ການຝຶກອົບຮົມ | 4 ອຳນາດການປົກຄອງບ້ານ | 5 ອື່ນໆ |
| | | | | | | | |
| **ຂ. ການຕະຫລາດ** | | | | | | | |
| 1 | Do you grow any crops in the dry season? | | 1 | YES | 2 | NO | |
| | Where do you get water from? | | 1. irrigation | 2. river | 3. well | 4. pond | 5.others |
| | | | | | | | |
| 2 | ເຈົ້າຮູ້ຈັກພໍ່ຄ້າ(ຜູ້ຊື້) ຫລື ຕະຫລາດ (ບ່ອນຂາຍ) ໄດ້ແນວໃດ? | | | | | | |
| | (ເລືອກໄດ້ຫຼາຍກວ່າ 1 ຄຳຕອບ) | | 1 | ພໍ່ຄ້າຄົນກາງ ເຂົ້າມາບ້ານ | | | |
| | | | 2 | ຂ້ອຍໄປຊອກຫາຕະຫລາດດ້ວຍຕົນເອງ | | | |
| | | | 3 | ພະນັກງານລັດແນະນຳ | | | |
| | | | 4 | ອື່ນໆ | | | |

## (ຮູບແບບການສອບຖາມ)

| | | | | | | | |
|---|---|---|---|---|---|---|---|
| 3 | ເຈົ້າຂາຍຜົນຜະລິດຂອງເຈົ້າຢູ່ໃສ ? (ເລືອກໄດ້ຫຼາຍກວ່າ 1 ຄຳຕອບ) | | | | | | |
| | | | 1 | ຕະຫຼາດຢູ່ໃນບ້ານ | | | |
| | | | 2 | ພໍ່ຄ້າຄົນກາງມາຊື້ຢູ່ບ້ານ | | | |
| | | | 3 | ຕະຫຼາດຊຸມຊົນ (ຕະຫຼາດນັດ) | | | |
| | | | 4 | ຕະຫຼາດເມືອງ | | | |
| | | | 5 | ຕະຫລາດເຊໂນ | | | |
| | | | 6 | ຕະຫຼາດສະຫວັນນະເຂດ | | | |
| | | ກະລຸນາບອກຊື່ | 7 | ແຂວງອື່ນ ບໍ່ແມ່ນສະຫວັນນະເຂດ (ໃນປະເທດ) | | | |
| | | ກະລຸນາບອກຊື່ | 8 | ບ່ອນອື່ນ ບໍ່ແມ່ນສະຫວັນນະເຂດ (ຕ່າງປະເທດ) | | | |
| | | ໃຊ້ເວລາດົນປານໃດຈິ່ງໄປຮອດ? | 1)ຂາຍຄາ ສວນ | 2) 30ນາທີ | 3) 1 ຊົ່ວໂມງ | 4) 2 ຊົ່ວໂມງ | 5) 3ຊົ່ວໂມງຂຶ້ນ ໄປ |
| | | ເດີນທາງໄປແນວໃດ(ເດີນທາງດ້ວຍຫຍັງ)? | 1) ຂາຍຄາ ສວນ | 2) ລົດຈັກ | 3) ລົດ ບັນທຸກ / ລົດໄຖນາ | 4) ລົດເມ | 5) ຍ່າງໄປ |
| | | ຄ່າຂົນສົ່ງໜຶ່ງຖົງວຫລາຍປານໃດ? | | | ກີບ | | |
| | | | | | | | |
| 4 | ແມ່ນໃຜເປັນຜູ້ກຳນົດລາຄາຜົນຜະລິດຂອງເຈົ້າ? | (ສາມາດເລືອກໄດ້ຫຼາຍກ່ວາ 1) | 1 | ຂ້ອຍກຳນົດລາຄາດ້ວຍຕົວເອງ | | | |
| | | | 2 | ພໍ່ຄ້າກຳນົດລາຄາ, ພໍ່ຄ້າເປັນຜູ້ບອກລາຄາ | | | |
| | | | 3 | ຂ້ອຍຕໍ່ລອງລາຄາດ້ວຍຕົວເອງ | | | |
| | | | 4 | ກຸ່ມໄດ້ຕົກລົງກັນ ແລະ ກຳນົດລາຄາ ໃນເຂດພື້ນທີ່ດັ່ງກ່າວ. | | | |
| | | | 5 | ໃຊ້ອັດຕາ(ລາຄາ)ຂອງລັດຖະບານກຳນົດ | | | |
| | | | 6 | ອື່ນໆ | | | |
| | | | | | | | |
| 5 | ເຈົ້າໄດ້ຖາມຄົນອື່ນ ຫລື ໄດ້ຂໍ້ມູນບ່ອນອື່ນບໍ ໃນການຕັ້ງລາຄາສິນຄ້າຂອງເຈົ້າ? | | 1 | ໃຊ້ລາຄາຂາຍໃນປີຜ່ານມາ | | | |
| | (ເລືອກໄດ້ຫຼາຍກວ່າ 1 ຄຳຕອບ) | | 2 | ຖາມລາຄາ ຈາກພໍ່ຄ້າ | | | |
| | | | 3 | ຖາມລາຄາໃນຕະຫລາດ | | | |
| | | | 4 | ອື່ນໆ | | | |
| | | | | | | | |
| 6 | ເຈົ້າໃຊ້ເງິນທີ່ໄດ້ຈາກການຂາຍຜົນຜະລິດເພື່ອເຮັດຫຍັງແດ່? | | | | | | |
| | (ສາມາດເລືອກໄດ້ຫຼາຍກ່ວາ 1 ຄຳຕອບ) | | 1 | ຊື້ປັດໃຈນຳເຂົ້າສຳລັບການປູກຝັງໃນລະດູການຜະລິດປີຕໍ່ | | | |
| | | | 2 | ຈ່າຍຄ່າໂຮງຮຽນລູກ | | | |
| | | | 3 | ຄ່າສ້ອມແປງເຮືອນ | | | |
| | | | 4 | ອາຫານປະຈຳວັນ(ການບໍລິໂພກ) | | | |
| | | | 5 | ເງິນອອມ(ທ້ອນໂຮມໄວ້) | | | |
| | | | 6 | ອື່ນໆ | | | |
| | | | | | | | |
| 7 | ເຈົ້າຄິດວ່າຈະປູກພືດຜັກຊະນິດເກົ່າ ທີ່ເຈົ້າເຄີຍປູກໃນປີຜ່ານມາບໍ? | | 1 | ແມ່ນ | 2 | ບໍ່ | |
| | | ຖ້າວ່າ, ຈະປູກພືດຊະນິດເກົ່າ, ພືດຊະນິດໃດ, ມີຫຍັງແດ່? | | | | | |
| | | | | | | | |
| 8 | ມີບໍພືດທີ່ເຈົ້າສົນໃຈຈະປູກໃນປີນີ້ ? | | 1 | ມີ | 2 | ບໍ່ມີ | |
| | | ຖ້າວ່າມີ, ພືດຊະນິດໃດແດ່? | | | | | |
| | | | | | | | |
| **ຄ. ການເກັບກຳຂໍ້ມູນຄົວເຮືອນ** | | | | | | | |
| 1 | ເຈົ້າເຮັດນາເປັນອາຊີບຫຼັກບໍ ຫລື ເປັນອາຊີບເສີມ? | | 1 ເຮັດນາອາຊີບຫຼັກ | | 2 ເຮັດນາອາຊີບເສີມ | | |
| | | ຖ້າວ່າ ເຮັດນາເປັນອາຊີບເສີມ, ເຈົ້າເຮັດຫຍັງແດ່ນອກຈາກເຮັດນາ? | | | | | |
| | | | | | | | |

(ຮູບແບບການສອບຖາມ)

| | | | | | | | | |
|---|---|---|---|---|---|---|---|---|
| 2 | ສະມາຊິກໃນຄອບຄົວ ຂອງເຈົ້າມີຈັກຄົນ ? | ລວມ: ຄົນ | ຍິງ: ຄົນ | | ຊາຍ: ຄົນ | | | |
| | | | | ຍິງ | ຊາຍ | ລວມ | | |
| | | ຜູ້ໃຫຍ່ (ອາຍຸ16 ຂຶ້ນໄປ) | | | | | | |
| | | ເດັກນ້ອຍ (ຕ່ຳກວ່າ 15 ປີ) | | | | | | |
| | | ລູກຂອງເຈົ້າເຂົ້າໂຮງຮຽນຈັກຄົນ | | ຍິງ | ຊາຍ | ລວມ | | |
| | | ໂຮງຮຽນປະຖົມ | | | | | | |
| | | ມັດທະຍົມ | | | | | | |
| | | ວິທະຍາໄລ ແລະ ສູງກວ່ານັ້ນ | | | | | | |
| | | ໄປຮຽນຢູ່ຕ່າງແຂວງ(ຮຽນຢູ່ແຂວງອື່ນ) | | | | | | |
| | | | | | | | | |
| 3 | ເຈົ້າໃຊ້ໄຟຟ້າຈາກໃສ? | | | | | | | |
| | | | | 1 | ໄຟຟ້າຕິດຕັ້ງໃນເຮືອນ | | | |
| | | | | 2 | ໄຟຟ້າແສງຕາເວັນ | | | |
| | | | | 3 | ໃຊ້ຈັກໄຟຟ້າ | | | |
| | | | | 4 | ບໍ່ມີໄຟຟ້າ | | | |
| | | | | | | | | |
| 4 | ໃນຄອບຄົວຂອງເຈົ້າມີຈັກຄົນເຮັດວຽກມີເງິນເດືອນ? | | | | ຄົນ | | | |
| | | ເຂົາເຈົ້າເຮັດວຽກຫຍັງແດ່? | | 1 | ພະນັກງານລັດ | | | |
| | | | | 2 | ເຮັດທຸລະກິດຂອງຕົນເອງ | | | |
| | | | | 3 | ເຮັດວຽກກັບບໍລິສັດຂຸດຄົ້ນບໍ່ແຮ່ | | | |
| | | | | 4 | ວຽກອື່ນໆ(ອະທິບາຍ) | | | |
| 5 | ໃນຄອບຄົວຂອງເຈົ້າມີຄົນໄປເຮັດວຽກຕ່າງປະເທດບໍ? | | | | 1 | ມີ | 2 | ບໍ່ມີ |
| | | | | | ຈຳນວນຄົນ | | | |
| | ຖ້າມີ, ພວກເຂົາເຮັດວຽກຢູ່ປະເທດໃດ? (ໃສ່ຈຳນວນ) | | | 1 | ປະເທດໄທ | | | |
| | | | | 2 | ຫວຽດນາມ | | | |
| | | | | 3 | ຈີນ | | | |
| | | | | 4 | ປະເທດອື່ນໆ | | | |
| | | | | | | | | |
| 6 | ກະລຸນາໃຫ້ບອກ ຈຳນວນ ຊັບສິນຄົວເຮືອນຖ້າວ່າມີ | | | ຈຳນວນ | | | | |
| | | ຄວາຍ | | | | | | |
| | | ງົວ | | | | | | |
| | | ໝູ | | | | | | |
| | | ແບ້ | | | | | | |
| | | ໄກ່ | | | | | | |
| | | ໂທລະທັດ | | | | | | |
| | | ວິທະຍຸ | | | | | | |
| | | ໂທລະສັບມືຖື | | | | | | |
| | | ເຄື່ອງຄອມພິວເຕີ | | | | | | |
| | | ລົດຈັກ | | | | | | |
| | | ລົດໃຫຍ່ | | | | | | |
| | | ອື່ນໆ | | | | | | |
| | | | | | | | | |
| 7 | ສະມາຊິກໃນຄອບຄົວຂອງເຈົ້າມີປຶ້ມບັນຊີທະນາຄານບໍ? | | | 1 | ມີ | 2 | ບໍ່ມີ | |

(ຮູບແບບການສອບຖາມ)

| | | | | | | | |
|---|---|---|---|---|---|---|---|
| 8 | Do you have a loan for farming? | | 1 | ໄດ້ຢືມ | 2 | ບໍ່ໄດ້ຢືມ | |
| | | ເຈົ້າກູ້ຢືມເມື່ອໃດ? | | | | | |
| | | ຢືມຈາກໃສ? | | | | | |
| | | ຢືມເພື່ອໃຊ້ເຮັດຫຍັງແດ່? | | | | | |
| | | | | | | | |
| 9 | ລາຍຮັບຫຼັກຂອງຄອບຄົວຂອງເຈົ້າມາຈາກໃສ? | | | | | | |
| | | | 1 | ການປູກຝັງ | | | |
| | | | 2 | ເຮັດວຽກຢູ່ຕ່າງປະເທດ | | | |
| | | | 3 | ເຮັດທຸລະກິດຄົນເອງ | | | |
| | | | 4 | ອື່ນໆ | | | |
| | | | | | | | |
| **ງ. ການຈັດຕັ້ງກຸ່ມຊາວນາ ແລະ ການຄຸ້ມຄອງບໍລິຫານຊົນລະປະທານ** | | | | | | | |
| 1 | ຄ່ານໍ້າຊົນລະປະທານຂອງເຈົ້າຫລາຍປານໃດໃນລະດູແລ້ງປີ 2016/2017? | | | | | | ກີບ |
| | | ເຈົ້າໄດ້ຈ່າຍໝົດແລ້ວບໍ? | 1 | ຈ່າຍຄົບຈໍານວນແລ້ວ | 2 | ຈ່າຍບາງສ່ວນ | 3 ບໍ່ທັນໄດ້ຈ່າຍ |
| | | | | | | | |
| 2 | ເຈົ້າໄດ້ໃຊ້ນໍ້າຊົນລະປະທານບໍ ໃນລະດູແລ້ງປີ 2016-2017 ? | | 1 | ໃຊ້ | 2 | ບໍ່ໄດ້ໃຊ້ | |
| | ຖ້າໃຊ້, ຄະນະກຸ່ມໄດ້ແຈກຢາຍນໍ້າໃຫ້ເຈົ້າຕາມຈໍານວນທີ່ຕ້ອງການບໍ ? | | 1 | ພຽງພໍ | 2 | ບໍ່ພຽງພໍ | |
| | ຖ້າບໍ່, ເຈົ້າໄດ້ສະເໜີນໍາໃຊ້ນໍ້າຊົນລະປະທານນໍາຄະນະກຸ່ມບໍ ? | | 1 | ຮ້ອງຂໍ | 2 | ບໍ່ໄດ້ຮ້ອງຂໍ | |
| | | | | | | | |
| 3 | ເຈົ້າຮູ້ບໍວ່າຄະນະກໍາມະການກຸ່ມໄດ້ຮັບການເລືອກຕັ້ງແບບໃດ ? | | 1 | ຮູ້ | 2 | ບໍ່ຮູ້ | |
| | | | | | | | |
| 4 | ເຈົ້າຮູ້ບໍວ່າ ກຸ່ມໃຊ້ນໍ້າຈັດຕັ້ງກອງປະຊຸມຫຍັງແດ່ໃນໜຶ່ງປີຜ່ານມາ? | | 1 | ຮູ້ | 2 | ບໍ່ຮູ້ | |
| | ເຈົ້າໄດ້ເຂົ້າຮ່ວມກອງປະຊຸມທີ່ກຸ່ມໃຊ້ນໍ້າໄດ້ຈັດຂຶ້ນບໍ? | | 1 | ໄດ້ເຂົ້າຮ່ວມ | 2 | ບໍ່ໄດ້ເຂົ້າຮ່ວມ | |
| | | ຖ້າວ່າໄດ້ເຂົ້າຮ່ວມ, ກອງປະຊຸມເວົ້າກ່ຽວກັບຫຍັງ? | | | | | |
| | ເຈົ້າຮູ້ໄດ້ແນວໃດ ວ່າຈະມີການຈັດກອງປະຊຸມ? | | 1) ທາງຈົດໝາຍ | 2) ໂທລະສັບ | 3) ບອກຈາກຄົນອື່ນໂດຍກົງ | 4) ບໍ່ຮູ້ | 5) ອື່ນໆ |
| | ແມ່ນໃຜມາບອກເຈົ້າ? | | 1) ຄະນະກໍາມະການກຸ່ມໃຊ້ນໍ້າ | 2) ຫົວໜ້າກຸ່ມຄອງເໝືອງ | 3) ຄົນເຮືອນໃກ້ | 4) ຄົນອື່ນບອກໂດຍບັງເອີນ | 5) ບໍ່ມີໃຜບອກ |
| | | | | | | | |
| 3 | ເຈົ້າຮູ້ບໍວ່າ ກຸ່ມໃຊ້ນໍ້າໄດ້ປ່ຽນແປງຫຍັງແດ່ໃນກົດລະບຽບຄຸ້ມຄອງໃນໄລຍະຜ່ານມາ? | | 1 | ຮູ້ | 2 | ບໍ່ຮູ້ | |
| | | | | | | | |
| 4 | ເຈົ້າຮູ້ບໍວ່າ ຄະນະກໍາມະການຂອງກຸ່ມຜູ້ນໍາໃຊ້ນໍ້າໄດ້ເຮັດຫຍັງແດ່ໃນໄລຍະ ການໃຊ້ນໍ້າຊົນລະປະທານ? | | 1 | ຮູ້ | 2 | ບໍ່ຮູ້ | |
| | | ຖ້າວ່າຮູ້ຈັກ, ພວກເຂົາເຮັດຫຍັງແດ່? | | | | | |
| | | | | | | | |

(ຮູບແບບການສອບຖາມ)

| | | | | | | | |
|---|---|---|---|---|---|---|---|
| 5 | ການເປັນສະມາຊິກຂອງກຸ່ມໃຊ້ນ້ຳ ເຈົ້າໄດ້ຮັບຜົນປະໂຫຍດ(ນະໂຍບາຍດ້ານຜົນປະໂຫຍດ)ຫຍັງແດ່? | | | | | | |
| | | | | | | | |
| 6 | ກຸ່ມໃຊ້ນ້ຳຊົນລະປະທານ ໄດ້ປະຕິບັດຕາມສິ່ງທີ່ພວກເຂົາຕົກລົງກັນໃນກອງປະຊຸມບໍ? | | 1 | ໄດ້ປະຕິບັດ | 2 | ບໍ່ | |
| | | ຖ້າວ່າໄດ້ປະຕິບັດ, ກຸ່ມໃຊ້ນ້ຳໄດ້ເຮັດຫຍັງແດ່? | | | | | |
| | | | | | | | |
| <ການສ້ອມແປງບຳລຸງຮັກສາ ຊົນລະປະທານ> | | | | | | | |
| 7 | ເຈົ້າໄດ້ເຫັນແຜນການຄຸ້ມຄອງນຳໃຊ້ນ້ຳຊົນລະປະທານບໍ ? | | 1 ຂ້ອຍເຄີຍເຫັນມາກ່ອນ | | | | |
| | | | 2 ຂ້ອຍຮູ້ວ່າມີ, ແຕ່ບໍ່ເຄີຍເຫັນ | | | | |
| | | | 3 ບໍ່ | | | | |
| | | | | | | | |
| 8 | ເຈົ້າເຄີຍປຶກສາຫາລືບັນຫາດ້ານລະບົບຊົນລະປະທານຂອງເຈົ້າ ກັບກຸ່ມຜູ້ນຳໃຊ້ນ້ຳບໍ? | | 1 | ເຄີຍ | 2 | ບໍ່ | |
| | | ຖ້າວ່າເຄີຍ, ກຸ່ມໃຊ້ນ້ຳຊົນລະປະທານໄດ້ແກ້ໄຂບັນຫາຂອງເຈົ້າບໍ? | 1 | ໄດ້ແກ້ໄຂ | 2 | ບໍ່ | |
| | | | | | | | |
| 9 | ເຈົ້າເຂົ້າໃຈ ແລະ ເຫັນດີ ກ່ຽວກັບ ວິທີການກຳນົດອັດຕາເສຍຄ່ານ້ຳບໍ? | | 1 | ເຂົ້າໃຈ & ເຫັນດີ | 2 | ເຂົ້າໃຈບໍ່ເຫັນດີ | |
| | | | 3 | ບໍ່ເຂົ້າໃຈ | | | |
| 10 | ເຈົ້າໄດ້ຮັບແຈ້ງກ່ຽວກັບຄ່ານ້ຳ ຊປທ ບໍ ? | | 1 | ໄດ້ຮັບແຈ້ງ | 2 | ບໍ່ | |
| | | ເດືອນໃດ? | | | | | |
| | | ເຈົ້າຮູ້ຈັກໄດ້ແນວໃດ? | 1) ທາງຈົດໝາຍ | 2) ໂທລະສັບ | 3) ບອກໂດຍກົງ | 4) ບໍ່ຮູ້ຈັກ | 5) ອື່ນໆ |
| | | ແມ່ນໃຜບອກເຈົ້າ? | 1) ຄະນະກຸ່ມນຳໃຊ້ນ້ຳ | 2) ຫົວໜ້າຄອງເໝືອງ | 3) ຄົນເຮືອນໃກ້ | 4) ຄົນບອກໂດຍບັງເອີນ | 5) ບໍ່ມີໃຜບອກ |
| | | | | | | | |
| <ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ> | | | | | | | |
| 11 | ເຈົ້າເຂົ້າໃຈ ແລະ ເຫັນດີ ກ່ຽວກັບ ວິທີການນຳໃຊ້ເງິນຂອງກຸ່ມບໍ? | | 1 | ເຂົ້າໃຈ&ເຫັນດີ | 2 | ເຫັນດີ, ບໍ່ເຂົ້າໃຈ | |
| | | | 3 | ບໍ່ເຂົ້າໃຈ | | | |
| 12 | ເຈົ້າຮູ້ບໍວ່າ ພາຍໃນກຸ່ມມີເງິນຫລາຍປານໃດ? | | 1 | ຮູ້ຈັກ | 2 | ບໍ່ຮູ້ | |
| | | ເຈົ້າຮູ້ຈັກໄດ້ແນວໃດ? | 1) ທາງຈົດໝາຍ | 2) ໂທລະສັບ | 3) ບອກໂດຍກົງ | 4) ບໍ່ຮູ້ຈັກ | 5) ອື່ນໆ |
| | | ແມ່ນໃຜບອກເຈົ້າ? | 1) ຄະນະກຸ່ມໃຊ້ນ້ຳ | 2) ຫົວໜ້າຄອງເໝືອງ | 3) ຄົນເຮືອນໃກ້ | 4) ຄົນບອກໂດຍບັງເອີນ | 5) ບໍ່ມີໃຜບອກ |
| | | | | | | | |
| 13 | ເຈົ້າຮູ້ບໍວ່າ ກຸ່ມນຳໃຊ້ນ້ຳ ມີລະບົບບັນຊີ ໃນການຈົດບັນທຶກ? | | 1 | ຮູ້ຈັກ | 2 | ບໍ່ | |
| | | ເຈົ້າເຄີຍເຫັນບໍ? | 1 | ເຄີຍ | 2 | ບໍ່ | |
| | | | | | | | |

## (ຮູບແບບການສອບຖາມ)

| | | | | | | | | |
|---|---|---|---|---|---|---|---|---|
| 14 | ເຈົ້າໄດ້ເຂົ້າຮ່ວມກອງປະຊຸມໃນການປຶກສາຫາລື ກ່ຽວກັບ ງົບປະມານຂອງສະມາຄົມຜູ້ນໍາໃຊ້ນໍ້າບໍ? | | | 1 | ໄດ້ເຂົ້າ | 2 | ບໍ່ | |
| | | ຖ້າວ່າໄດ້ເຂົ້າຮ່ວມ, ເມື່ອໃດ? | | ວັນທີ | | | | |
| | | | | | | | | |
| **E. Fertilizer application** | | | | | | | | |
| 1 | ການໃຊ້ຝຸ່ນ(ປຸ໋ຍ) ໃນການປູກເຂົ້າ (2017/18DS) | | | | | | | |
| | | ຊ່ວງໄລຍະເວລາໃສ່ຝຸ່ນ | | | | | | |
| | | ກິດຈະກໍາ / ຊື່ຝຸ່ນ(ຊື່ປຸ໋ຍ) | | ເດືອນ | ຕົ້ນເດືອນ | ກາງເດືອນ | ທ້າຍເດືອນ | ປະລິມານທີ່ໃຊ້ |
| | 1 | ຊ່ວງຫວ່ານກ້າ | | | | | | |
| | 2 | ຕອນປັກດໍາ | | | | | | |
| | 3 | ຫຼັງດໍາ ມື້ | | | | | | |
| | 4 | | | | | | | |
| | 5 | | | | | | | |
| | 6 | ເກັບກ່ຽວ | | | | | | |
| | | ປະເພດຝຸ່ນ(ປຸ໋ຍ) | | ຈໍານວນທີ່ຊື້ | | ລາຄາ | ປະລິມານທີ່ໃຊ້ | |
| | | | | ເປົ໋າ | ກິໂລ | ກີບ | ເປົ໋າ | ກິໂລ |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນຄອກ | | | | | | |
| | | ອື່ນໆ(ຈົ່ງອະທິບາຍ) | | | | | | |
| | ການໃຊ້ຝຸ່ນ(ປຸ໋ຍ) ໃນການປູກເຂົ້າ (2018RS) | | | | | | | |
| | | ຊ່ວງໄລຍະເວລາໃສ່ຝຸ່ນ | | | | | | |
| | | ກິດຈະກໍາ / ຊື່ຝຸ່ນ(ຊື່ປຸ໋ຍ) | | ເດືອນ | ຕົ້ນເດືອນ | ກາງເດືອນ | ທ້າຍເດືອນ | ປະລິມານທີ່ໃຊ້ |
| | 1 | ຊ່ວງຫວ່ານກ້າ | | | | | | |
| | 2 | ຕອນປັກດໍາ | | | | | | |
| | 3 | ຫຼັງດໍາ ມື້ | | | | | | |
| | 4 | | | | | | | |
| | 5 | | | | | | | |
| | 6 | ເກັບກ່ຽວ | | | | | | |
| | | ປະເພດຝຸ່ນ(ປຸ໋ຍ) | | ຈໍານວນທີ່ຊື້ | | ລາຄາ | ປະລິມານທີ່ໃຊ້ | |
| | | | | ເປົ໋າ | ກິໂລ | ກີບ | ເປົ໋າ | ກິໂລ |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນເຄມີສູດ: | | | | | | |
| | | ຝຸ່ນຄອກ | | | | | | |
| | | ອື່ນໆ(ຈົ່ງອະທິບາຍ) | | | | | | |

(ຮູບແບບການສອບຖາມ)

ແບບຟອມຄຳຖາມ ສຳລັບການເກັບຂໍ້ມູນທຽບຖານ ໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ ສະຫວັນນະເຂດ ການປູກຝັງ - ການຜະລິດ ແລະ ການຂາຍ

*** For vegetables: Harvest period between Dry season(Nov 2017 and Apr 2018).**

| No. | ຊື່ພືດ | ເນື້ອທີ່ປູກ ($ມ^2$) (ເຮັກຕາ) | ຜົນຜະລິດ / ປະລິມານ* | ຈຳນວນຂາຍ | ລາຄາຫົວໜ່ວຍ / ກິໂລ | **Total sales** | ພໍ່ຄ້າ/ບ່ອນຂາຍ | **Expenditure (Kips)** | ປະເພດແນວພັນ | ລຸ້ນຂອງເມັດພັນ | ແຫລ່ງແນວພັນ |
|---|---|---|---|---|---|---|---|---|---|---|---|
| 1 | ເຂົ້າກິນ | | | | | | | | | | |
| 2 | ເຂົ້າແນວພັນ | | | | | | | | | | |
| 3 | | | | | | | | | | | |
| 4 | | | | | | | | | | | |
| 5 | | | | | | | | | | | |
| 6 | | | | | | | | | | | |
| 7 | | | | | | | | | | | |
| 8 | | | | | | | | | | | |
| 9 | | | | | | | | | | | |
| 10 | | | | | | | | | | | |

*1 ໃນກໍລະນີ ມັນຍາກ ທີ່ຈະຊັ່ງນໍ້າໜັກ ຂອງພືດຜັກ (ຕົວຢ່າງ) ພືດໃຫ້ໃບ, ພວກເຮົາສາມາດ ຈົດບັນທຶກພືດຜັກຕາມປະເພດຂອງການບັນຈຸ, ຕົວຢ່າງ: ຄວາມຍາວ, ຈຳນວນໃບ, ປະລິມານ ອື່ນໆ

* ການເກັບກຳຂໍ້ມູນ ໃນເດືອນ ພະຈິກ 2017 = ຖາມກ່ຽວກັບ ການປູກພືດຜັກໃນລະດູຝົນ ລະຫວ່າງ ເດືອນ ພຶດສະພາ-ຕຸລາ 2017

* ການເກັບກຳຂໍ້ມູນ ໃນເດືອນ ພຶດສະພາ 2018 = ຖາມກ່ຽວກັບ ການປູກເຂົ້າໃນຍາມລະດູຝົນ ແລະ ພືດຜັກໃນຍາມລະດູແລ້ງ ລະຫວ່າງ ເດືອນ ພະຈິກ /17-Apr 2018

* ການເກັບກຳຂໍ້ມູນ ໃນເດືອນ ພະຈິກ 2018 = ຖາມ ກ່ຽວກັບ ການປູກເຂົ້າໃນລະດູແລ້ງ

(ຮູບແບບການສອບຖາມ)

ແບບຟອມຄຳຖາມ ສຳລັບການເກັບຂໍ້ມູນທຽບຖານ ໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ ສະຫວັນນະເຂດ ການປູກຝັງ - ການຜະລິດ ແລະ ການຂາຍ

*** For vegetables: Harvest period between Rainy season(btw May 2018 and Oct 2018).**

| No. | ຊື່ພືດ | ເນື້ອທີ່ປູກ ($ມ^2$) (ເຮັກຕາ) | ຜົນຜະລິດ / ປະລິມານ* | ຈຳນວນຂາຍ | ລາຄາຫົວໜ່ວຍ / ກິໂລ | **Total sales** | ພໍ່ຄ້າ/ບ່ອນຂາຍ | **Expenditure (Kips)** | ປະເພດແນວພັນ | ລຸ້ນຂອງເມັດພັນ | ແຫລ່ງແນວພັນ |
|---|---|---|---|---|---|---|---|---|---|---|---|
| 1 | ເຂົ້າກິນ | | | | | | | | | | |
| 2 | ເຂົ້າແນວພັນ | | | | | | | | | | |
| 3 | | | | | | | | | | | |
| 4 | | | | | | | | | | | |
| 5 | | | | | | | | | | | |
| 6 | | | | | | | | | | | |
| 7 | | | | | | | | | | | |

*1 ໃນກໍລະນີ ມັນຍາກ ທີ່ຈະຊັ່ງນໍ້າໜັກ ຂອງພືດຜັກ (ຕົວຢ່າງ) ພືດໃຫ້ໃບ, ພວກເຮົາສາມາດ ຈົດບັນທຶກພືດຜັກຕາມປະເພດຂອງການບັນຈຸ, ຕົວຢ່າງ: ຄວາມຍາວ, ຈຳນວນໃບ, ປະລິມານ ອື່ນໆ

* ການເກັບກຳຂໍ້ມູນ ໃນເດືອນ ພະຈິກ 2017 = ຖາມກ່ຽວກັບ ການປູກພືດຜັກໃນລະດູຝົນ ລະຫວ່າງ ເດືອນ ພຶດສະພາ-ຕຸລາ 2017

* ການເກັບກຳຂໍ້ມູນ ໃນເດືອນ ພຶດສະພາ 2018 = ຖາມກ່ຽວກັບ ການປູກເຂົ້າໃນຍາມລະດູຝົນ ແລະ ພືດຜັກໃນຍາມລະດູແລ້ງ ລະຫວ່າງ ເດືອນ ພະຈິກ /17-Apr 2018

* ການເກັບກຳຂໍ້ມູນ ໃນເດືອນ ພະຈິກ 2018 = ຖາມ ກ່ຽວກັບ ການປູກເຂົ້າໃນລະດູແລ້ງ

## II ການຜະລິດ ທີ່ມຸ້ງເນັ້ນໃສ່ ຄວາມຕ້ອງການຂອງຕະຫຼາດ

### 1 ການສ້າງຄວາມເປັນເຈົ້າການ ແລະ ເພື່ອກະຕຸ້ນແຮງຈູງໃຈ

#### (1) ຈຸດເລີ່ມຕົ້ນ: ຮູ້ຈັກຕົວເຂົາເອງ

1) ພະນັກງານ ກປຂ ແລະ ກປມ ຮ່ວມປຶກສາຫາລື ກັບຊາວນາ ກ່ຽວກັບກິດຈະກຳກະສິກຳ.
2) ພະນັກງານ ກປຂ ແລະ ກປມ ຊ່ວຍຊາວນາຄິດໄລ່ ລາຍຮັບ ແລະ ຕົ້ນທຶນການຜະລິດ ເພື່ອຊອກຫາກຳໄລໃນປະຈຸບັນທີ່ໄດ້ຈາກການຜະລິດກະສິກຳ.

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ຄຳອະທິບາຍ)

1) ປຶກສາຫາລື ນຳຊາວນາກ່ຽວກັບກິດຈະກຳຂອງເຂົາ ແລະ ຊີວິດການເປັນຢູ່ຂອງຊາວນາ.

1-1) ພະນັກງານ ກປຂ ແລະ ກປມ ໄດ້ເປີດກອງປະຊຸມຮ່ວມກັບຊາວນາ ໂດຍເຊີນຊາວນາພາຍໃນບ້ານເຂົ້າຮ່ວມນຳ, ບໍ່ແມ່ນເຊີນພຽງແຕ່ຄະນະບ້ານ ແລະ ກຸ່ມນຳໃຊ້ນ້ຳເທົ່ານັ້ນ.

1-2) ກ່ອນອື່ນໝົດແມ່ນໃຫ້ທຸກຄົນແນະນຳຕົວ, ພ້ອມທັງແນະນຳຕົນເອງ

1-3) ຖາມຊາວນາກ່ຽວກັບກິດຈະກຳການປູກຝັງ ແລະ ຊີວິດການເປັນຢູ່ຂອງຊາວນາ, ປ່ອຍໂອກາດໃຫ້ຊາວນາໄດ້ເວົ້າ.

1-4) ຖາມຊາວນາວ່າເຂົາໃຊ້ເງິນຫຼາຍປານໃດໃນການດຳລົງຊີວິດ ແລະ ໃຊ້ໃນກິດຈະກຳການປູກຝັງ ໃນຊ່ວງເວລາ 3 ເດືອນ ຫຼື 6 ເດືອນ ແລະ ເຂົາໃຊ້ຄ່າໃຊ້ຈ່າຍຕ່າງໆແນວໃດ. ລາຍໄດ້ຈາກການການຜະລິດກະສິກຳແມ່ນປະກອບສ່ວນເຂົ້າໃນຄ່າໃຊ້ຈ່າຍໃນການດຳລົງຊີວິດ ຂອງພວກເຂົາເທົ່າໃດ.

✧ ກະກຽມຄຳຖາມກ່ອນການປະຊຸມ.
ລາຍການຄຳຖາມໃນເບື້ອງຕົ້ນ

ໃຊ້ເງິນໃນການດຳລົງຊີວິດຊ່ວງ 3 – 6 ເດືອນ
1. ເຈົ້າໄດ້ຊື້ຫຍັງບໍໃນມື້ວານນີ້ ຫຼື ມື້ນີ້?
2: ເຈົ້າໄດ້ຊື້ຫຍັງ? ຊື້ໃນລາຄາເທົ່າໃດ?
3: ເຈົ້າຈື່ບໍວ່າເຈົ້າໄດ້ຊື້ຫຍັງໃນຊ່ວງ 7 ວັນທີ່ຜ່ານມາ ແລະ ເຈົ້າໄດ້ຊື້ໃນຈານວນເງິນເທົ່າໃດ?
4: ການໃຊ້ຈ່າຍຫຼາຍທີ່ສຸດໃນໄລຍະ 03ເດືອນຜ່ານມາແມ່ນໃຊ້ຈ່າຍຫຍັງ? ເຈົ້າໄດ້ຊື້ຫຍັງ ແລະ ຊື້ໃນຈຳນວນເທົ່າໃດ?
5: ເຈົ້າໄດ້ເງິນມາຈາກໃສເພື່ອຈ່າຍຄ່າໃຊ້ຈ່າຍເຫຼົ່ານີ້? ຜູ້ໃດຫາເງິນເພື່ອໃຊ້ຈ່າຍໃນຄອບຄົວ?
6: ທ່ານໄດ້ຮັບລາຍໄດ້ຫຼາຍປານໃດຈາກການເຮັດກະສິກຳ ເຊັ່ນ:ການປູກເຂົ້າ?
7: ປຽບທຽບລາຍຮັບທີ່ໄດ້ຈາກການປູກຝັງ ແລະ ລາຍຈ່າຍ. ສິ່ງໃດຫຼາຍກ່ວາກັນ?

1-5) ອະທິບາຍກ່ຽວກັບໂຄງການ, ຫຼັງຈາກຖາມຄຳຖາມຂ້າງເທິງແລ້ວ, ພວກເຮົາສາມາດອະທິບາຍລາຍລະອຽດກ່ຽວກັບໂຄງການຕື່ມ.

ສິ່ງສຳຄັນ:“ ໂຄງການນີ້ມີຈຸດປະສົງ ເພື່ອທີ່ຈະເຮັດໃຫ້ການປູກຝັງກາຍເປັນທຸລະກິດ. ພວກເຮົາສາມາດເພີ່ມລາຍຮັບຈາກການປູກຝັງຂອງພວກເຮົາໄດ້ແນວໃດ? ມີໃຜບໍທີ່ຕ້ອງການຢາກເພີ່ມລາຍຮັບທ່ານ ຈາກການເຮັດກະສິກຳ?

ທ່ານສາມາດອະທິບາຍຈຸດປະສົງຂອງໂຄງການວ່າມີນະໂຍບາຍເຮັດຫຍັງ ແລະ ບໍ່ມີນະໂຍບາຍຫຍັງ ຍົກຕົວຢ່າງ: ໂຄງການແມ່ນບໍ່ໄດ້ໃຫ້ທຶນ, ໂຄງການແມ່ນເຂົ້າມາຊ່ວຍເຫຼືອທາງດ້ານແນວຄວາມຄິດ ແລະ ສອນທັກສະການໃຊ້ເຕັກນິກ “ເຮົາຈະບໍ່ເອົາປາມາໃຫ້ ແຕ່ເຮົາຈະມາຄິດນຳກັນເຖິງວິທີການຫາປາ.”

2) ການຄິດໄລ່ຫາຕົ້ນທຶນ ແລະ ຜົນກຳໄລ.

2-1) ຖາມຊາວນາກ່ຽວກັບລາຍຮັບ ແລະ ຜົນກຳໄລວ່າໄດ້ເທົ່າໃດຈາກການຜະລິດກະສິກຳ, ຖ້າຊາວນາຮູ້, ຖາມເຂົາວ່າ: ໄດ້ກຳໄລເທົ່າໃດ.ອີງຕາມບາງຄຳຕອບຈາກຊາວກະສິກອນ ຕາມຄຳຖາມທີ່ໄດ້ຖາມຂ້າງເທິງ, ທ່ານສາມາດລົມກັບຊາວກະສິກອນໄດ້ຕາມນີ້;

" ຖ້າເຈົ້າຕ້ອງການເພີ່ມລາຍຮັບຈາກການເຮັດກະສິກຳ, ເຈົ້າຮູ້ບໍ່ວ່າເຈົ້າມີລາຍຮັບຫຼາຍປານໃດ?ເຈົ້າໄດ້ກຳໄລ ຫລື ຂາດທຶນບໍ? ຖ້າເຈົ້າບໍ່ຮູ້ວ່າເຈົ້າມີລາຍຮັບຫຼາຍເທົ່າໃດ, ເຈົ້າຈະຮູ້ໄດ້ແນວໃດວ່າລາຍຮັບຂອງເຈົ້າເພີ່ມຂຶ້ນ ຫລື ຫລຸດລົງ?"

- ອະທິບາຍຄຳວ່າຜົນກຳໄລໃຫ້ລະອຽດໂດຍການນຳໃຊ້ຂໍ້ມູນຕົວຢ່າງຈາກກຸ່ມຊາວນາຕົວແບບ.

2-2) ໃຫ້ຊາວນາຊອກຫາຜົນກຳໄລຂອງເຂົາເຈົ້າໄປພ້ອມໆກັນ.

- ແນະນຳ "ຕາຕາລາງການຄິດໄລ່ຜົນກຳໄລ ແລະ ຕົ້ນທຶນ" ແລະ ຊ່ວຍຊາວນາຄິດໄລ່ຜົນກຳໄລ ຈາກລະດູແລ້ງ ແລະ ລະດູຝົນປີທີ່ຜ່ານມາ.
- ຍົກຕົວຢ່າງໃຫ້ຊາວນາເຫັນວິທີການຄິດໄລ່, ໂດຍການໃຊ້ຂໍ້ມູນຕົວຢ່າງ: ຂອງຊາວນາໃນບ້ານ.
- ຫຼັງຈາກນັ້ນ, ພະນັກງານແຂວງ ແລະ ເມືອງໄດ້ແບ່ງຊາວນາ ອອກເປັນກຸ່ມ, ແລ້ວນຳພາຄິດໄລ່ ແລະ ຂຽນລົງໃສ່ ຕາຕາລາງລາຍຮັບ-ລາຍຈ່າຍ.

✧ **<u>ນຳໃຊ້ຕາຕະລາງ ຄິດໄລ່ ລາຍຮັບ-ລາຍຈ່າຍ (ເອກະສານຄັດຕິດ II-1).</u>**

✧ **<u>ເບິ່ງຕົວຢ່າງເອກະສານ ຕາຕະລາງຄິດໄລ່ ລາຍຮັບ-ລາຍຈ່າຍ (ເອກະສານຄັດຕິດ II-2)</u>**

ຕົວຢ່າງຄຳຖາມໃນການຄິດໄລ່ຜົນກຳໄລ

1. ເຈົ້າປູກພືດຫຍັງໃນລະດູແລ້ງແລະລະດູຝົນທີ່ຜ່ານມາ?
2: ເຈົ້າໄດ້ຊື້ຫຍັງແນ່ໃນການປູກພືດເຫຼົ່ານີ້? ເຈົ້າໄດ້ໃຊ້ຈ່າຍເງິນເທົ່າໃດ? (ສອບຖາມລາຍລະອຽດເພີ່ມຕື່ມເຊັ່ນ: ແນວພັນ, ນ້ຳມັນ, ຄ່າແຮງງານ, ຄ່ານ້ຳ ແລະ ຄ່າໄຟຟ້າ ແລະອື່ນໆ)
3. ເຈົ້າເກັບຜົນຜະລິດໄດ້ຈັກກິໂລ / ໄດ້ຈັກສອບ?
4. ຫຼັງຈາກທີ່ເຈົ້າເກັບກ່ຽວຜົນຜະລິດແລ້ວໄດ້ຂາຍບໍ? ຖ້າເປັນດັ່ງນັ້ນ, ເຈົ້າໄດ້ຂາຍຈັກສອບ? ເຈົ້າໄດ້ເງິນຫຼາຍປານໃດ?

2-3) ແລກປ່ຽນຜົນລັບຂອງການຄິດໄລ່ຫາຕົ້ນທຶນ ແລະ ຜົນກຳໄລ່ໃຫ້ແກ່ຊາວນາໄດ້ຮັບຮູ້, ແລະ ສັງເກດວ່າເຂົາເວົ້າຫຍັງແດ່ ຖ້າຊາວນາເວົ້າວ່າເຂົາຕ້ອງການຢາກໄດ້ເງິນຫຼາຍ, ຈາກນັ້ນສືບຕໍ່ຖາມວ່າ: ຢາກໄດ້ຫຼາຍປານໃດ?

- ຖາມຊາວນາວ່າເຂົາຕ້ອງການຢາກຈະແລກປ່ຽນຂໍ້ມູນນີ້ນຳໃຜ?
- ສະຫຼຸບຕອນທ້າຍຂອງກອງປະຊຸມໂດຍໃຫ້ຊາວນານຳເອົາຂໍ້ມູນນີ້ໄປແລກປ່ຽນກັບຄອບຄົວ ແລະ ປຶກສາຫາລືວ່າຢາກໄດ້ຫຼາຍປານໃດ.

ກອງປະຊຸມຄັ້ງຕໍ່ໄປ, ຊາວນາຈະມາແລກປ່ຽນເປົ້າໝາຍ ແລະ ຄິດຊ່ວຍກັນວ່າເຮົາຈະໄປເຖິງເປົ້າໄດ້ແນວໃດ.

✧ **<u>ຝາກເປັນວຽກບ້ານໃຫ້ຊາວນາເອົາຂໍ້ມູນນີ້ໄປປຶກສາກັບຄອບຄົວ ແລະ ເວົ້າກ່ຽວກັບເປົ້າໝາຍວ່າຕ້ອງການຢາກຂາຍໃຫ້ໄດ້ຕາມເປົ້າໝາຍເທົ່າໃດ.</u>**



ຊາວກະສິກອນຄິດໄລ່ຜົນກຳໄລ ແລະ ຕົ້ນທຶນ



ອະທິບາຍວິທີການຄິດໄລ່

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ເອກະສານແບບຕິດ II-1: ຕົວຢ່າງຕາຕະລາງຄິດໄລ ຜົນກຳໄລ/ຂາດທຶນ)

ຕົ້ນທຶນການຜະລິດ: ຕົ້ນທຶນການຜະລິດທັງໝົດ: ກຳໄລ:

**ປະຕິທິນການເຊື່:**

**ລາຍຈ່າຍ**

| | ຊື່ພືດ | ເດືອນ10 | ເດືອນ11 | ເດືອນ12 | ເດືອນ1 | ເດືອນ2 | ເດືອນ3 | ເດືອນ4 | ເດືອນ5 | ເດືອນ6 | ເດືອນ7 | ເດືອນ8 | ເດືອນ9 |
|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |

ລາຍຮັບ: ຍອດຂາຍທັງໝົດ:

(ເອກະສານແນບຕິດ II-2: ຕົວຢ່າງຕາຕະລາງຄິດໄລ ຜົນກຳໄລ/ຂາດທຶນ)





ຊາວກະສິກອນຄິດໄລ່ຜົນກຳໄລ ແລະ ຕົ້ນທຶນ



ຜົນລັບຂອງຄິດໄລ່ຜົນກຳໄລ ແລະ ຕົ້ນທຶນ



ຜົນລັບຂອງຄິດໄລ່ຜົນກຳໄລ ແລະ ຕົ້ນທຶນ

**<u>ສິ່ງທີ່ສຳຄັນ</u>**

- ພະນັກງານແຂວງ ແລະ ເມືອງ, ບໍ່ຄວນຈະບອກໃຫ້ຊາວນາວ່າເຂົາຕ້ອງໄດ້ເຂົ້າຮ່ວມກອງປະຊຸມນຳໂຄງການໃນທຸກໆຄັ້ງ.
- ພະນັກງານແຂວງ ແລະ ເມືອງ, ບໍ່ຄວນຈະຄິດໄລ່ໃຫ້ຊາວນາທັງໝົດ ຖ້າວ່າພະນັກງານລັດຊ່ວຍຄິດໄລ່ທຸກຢ່າງ, ຊາວນາຈະບໍ່ຄິດວ່າກິດຈະກຳນີ້ແມ່ນກິດຈະກຳສຳລັບເຂົາ ພະນັກງານລັດຕ້ອງໄດ້ແນະນຳວິທີການຄິດໄລ່ນີ້ແມ່ນຂັ້ນຕອນການຮຽນຮູ້ຂອງຊາວນາ.
- ພະນັກງານແຂວງຕ້ອງໄດ້ອະທິບາຍໃຫ້ພະນັກງານເມືອງເຂົ້າໃຈກ່ຽວກັບຫົວຂໍ້ການປະຊຸມ ແລະ ພາລະບົດບາດໜ້າທີ່ຮັບຜິດຊອບ.

  ຍົກຕົວຢ່າງ ພະນັກງານລັດ ສາມາດເວົ້ານຳ ຊາວກະສິກອນດັ່ງນີ້: ໂຄງການແມ່ນຈະບໍ່ໄດ້ໃຫ້ເງິນ ຫຼື ເຄື່ອງຈັກຕ່າງໆ ໂຄງການນີ້, ແມ່ນເຮົາຈະໄດ້ມາຄິດນຳກັນວ່າເຮົາຈະເຮັດຫຍັງເພື່ອປັບປຸງທັກສະ ແລະ ເພີ່ມລາຍຮັບ. ກ່ອນທີ່ຈະເລີ່ມຈາກຈຸດນີ້, ພວກເຮົາຕ້ອງການຮູ້ກ່ຽວກັບ ການເຮັດກະສິກຳຂອງຊາວກະສິກອນ ໃນໄລຍະຜ່ານມາ

## (2) ຈິນຕະນາການພາບ ໃນສິ່ງທີ່ຕ້ອງການ ຢາກຈະເປັນ

| |
|---|
| 1) ຊາວນາຜູ້ທີ່ສົນໃຈໃນການສ້າງລາຍຮັບຈາກການປູກພືດຜັກ ເຂົາຈະມີການຕັ້ງເປົ້າໝາຍ ແລະ ຊອກຄິດຫາວິທີເພື່ອໃຫ້ສຳເລັດຕາມເປົ້າໝາຍທີ່ວາງໄວ້.<br>2) ໄປຢ້ຽມຢາມຊາວກະສິກອນຜູ້ທີ່ມີປະສົບການ ເພື່ອຮຽນຮູ້ວິການປູກ ແລະ ການຂາຍຂອງເຂົາ<br>3) ພະນັກງານແຂວງ ແລະ ເມືອງ ຕ້ອງໄດ້ອຳນວຍຄວາມສະດວກໃຫ້ກັບຊາວນາໃນການເຊື່ອມໂຍງ "ການເພີ່ມລາຍຮັບ" ກັບ "ການປັບປຸງດິນ" ໄປພ້ອມໆກັນ. |

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ຄຳອະທິບາຍ)

1) ກຳນົດເປົ້າໝາຍຂອງລາຍຮັບເບື້ອງຕົ້ນ

1-1) ພະນັກງານແຂວງ ແລະ ເມືອງ, ຈັດກອງປະຊຸມຮ່ວມກັບຊາວນາ <u>ຜູ້ທີ່ເຂົ້າຮ່ວມປະຊຸມໃນຄັ້ງທຳອິດ.</u>

1-2) ຖາມຊາວນາວ່າ ເຂົາໄດ້ລົມກັບຄອບຄົວແລ້ວບໍກ່ຽວກັບຜົນລັບຂອງການປະຊຸມໃນຄັ້ງທຳອິດ (ລາຍຮັບ ແລະ ລາຍຈ່າຍ ຈາກການຜະລິດກະສິກຳ) ແລ້ວທາງຄອບຄົວໄດ້ເວົ້າວ່າແນວໃດແດ່?

1-3) ມາແລກປ່ຽນການຕັ້ງເປົ້າໝາຍຂອງພວກເຂົາ ແລະ ປຶກສາຫາລືກ່ຽວກັບວິທີທີ່ຈະເຮັດໃຫ້ປະສົບຜົນສຳເລັດຕາມເປົ້າໝາຍໂດຍການຄິດວ່າຈະປູກຫຍັງ, ເນື້ອທີ່ເທົ່າໃດ, ຈຳນວນແຮງງານ <u>ຂຶ້ນຢູ່ກັບປະສົບການ ແລະ ສະພາບການຂອງຊາວນາໃນປະຈຸບັນ.</u>

✧ **<u>ໃຫ້ຊາວນາໄດ້ເວົ້າກ່ຽວກັບລາຍຮັຍໃນປະຈຸບັນ ແລະ ໄລຍະຜ່ານມາ; ຕົວຢ່າງ ຖ້າເຂົາຄິດວ່າ ຖ້າເຂົາຄິດວ່າລາຍຮັບໜ້ອຍ, ແມ່ນຫຍັງຈຶ່ງເຮັດໃຫ້ລາຍຮັບໜ້ອຍ? ຍ້ອນພະຍາດ, ແມງໄມ້, ຕະຫຼາດ, ເຕັກນິກການປູກ ຫຼື ດິນ?</u>**

✧ **<u>ຖ້າເວລາ ແລະ ງົບປະມານມີພຽງພໍ, ໃຫ້ນຳພາຊາວກະສິກອນຜູ້ທີ່ສົນໃຈກ່ຽວກັບການເຮັດທຸລະກິດກະສິກຳ ໄປຫາກຸ່ມປູກຜັກອິນຊີ ບ້ານໂພນສິມ ຫຼື ຊາວກະສິກອນຜູ້ທີ່ມີປະສົບການ ທີ່ຢູ່ໃກ້ຄຽງ.</u>**

2) ໄປທັດສະນະສຶກສາ ທີ່ກຸ່ມປູກຜັກອິນຊີ ບ້ານໂພນສິມ (1 ຫາ 2 ວັນ)

ເປົ້າໝາຍຂອງການໄປທັດສະນະສຶກສາໃນຄັ້ງນີ້ແມ່ນເພື່ອອຳນວຍຄວາມສະດວກໃຫ້ຊາວກະສິກອນສາມາດເຫັນໄດ້ໃນສິ່ງທີ່ພວກເຂົາຢາກຈະເປັນ, ປະເພດຂອງການເຮັດທຸລະກິດກະສິກຳ ທີ່ພວກເຂົາຕ້ອງການຢາກຈະເຮັດ.

2-1) ກະກຽມໄປທັດສະນະສຶກສາ

ພະນັກງານແຂວງ ແລະ ເມືອງ ປຶກສາຫາລືຮ່ວມກັບຊາວນາວ່າພວກເຂົາຕ້ອງໄດ້ຮຽນຮູ້ຫຍັງແດ່ຈາກກຸ່ມໂພນສິມແລ້ວເຮັດເປັນລາຍການອອກມາ. [ເອກະສານຄັດຕິດ II-4 ເບິ່ງລາຍການຕົວຢ່າງ]



(ຈຸດທີ່ຕ້ອງພິຈາລະນາ)

**ການຂາຍຜົນຜະລິດຂອງກຸ່ມ:**

- ຊະນິດຜັກທີ່ນຳມາຂາຍ
- ລາຄາພືດຜັກຕໍ່ມັດ/ຕໍ່ກິໂລ
- ຈຳນວນຜັກທີ່ນຳມາຂາຍໃນແຕ່ລະວັນ
- ລາຍຮັບຕໍ່ວັນໄດ້ເທົ່າໃດ
- ການຕິດຕໍ່ສື່ສານກັບລູກຄ້າ

**ດ້ານເຕັກນິກການເພາະປູກ:**

- ວິທີການກະກຽມ ການກ້າເບ້ຍ
- ວິທີການກະກຽມດິນ ແລະ ການເຮັດໜານຜັກ(ຂະໜາດ, ຄວາມສູງ)
- ວິທີການປ້ອງກັນແມງໄມ້
- ວິທີການຄວບຄຸມ ຄວາມຮ້ອນ (ຕົວຢ່າງ: ການປູກຜັກສະຫຼັດ ຫຼື ການບັງຜັກ)

2-2) ການຈັດທັດສະນະສຶກສາ.

ໃນຕອນທ້າຍ ຂອງການທັດສະນະສຶກສາ, ພະນັກງານແຂວງ ແລະ ເມືອງ ໄດ້ປຶກສາຫາລືຮ່ວມກັນກັບຊາວນາເພື່ອກຳນົດ ວັນທີຂອງການປະຊຸມເພື່ອທົບທວນຄືນ ແນະນຳໃຫ້ຈັດຂຶ້ນພາຍໃນໜຶ່ງອາທິດ.

2-3) ສະຫຼຸບສັງລວມການຮຽນຮູ້ຈາກການໄປທັດສະນະສຶກສາ ແລະ ປຽບທຽບ.

ຫລັງຈາກກັບມາຈາກທັດສະນະສຶກສາແລ້ວ, ກປຂ ແລະ ກປມ ຊ່ວຍຊາວກະສິກອນຈັດກອງປະຊຸມເພື່ອສະຫຼຸບ ໃນສິ່ງທີ່ຊາວກະສິກອນໄດ້ສັງເກດ ແລະ ຮຽນຮູ້ຈາກການໄປທັດສະນະສຶກສາ, ແລະ ປຽບທຽບກັບ ສິ່ງທີ່ເຂົາປະຕິບັດຢູ່ ແລະ ສະພາບການຂອງພວກເຂົາໃນປະຈຸບັນ. ຂຽນລົງໃສ່ເຈ້ຍ Ao ເພື່ອໃຫ້ການປຽບທຽບງ່າຍຂຶ້ນ.

✧ຖ້າບໍ່ໄດ້ປະຕິບັດ, ກປຂ ແລະ ກປມ ສາມາດຂ້າມໄປສູ່ຂັ້ນຕອນຕໍ່ໄປຂອງ "ການເຊື່ອມໂຍງການເພີ່ມລາຍຮັບກັບການປັບປຸງດິນ" ແລະ ດຳເນີນການຝຶກອົບຮົມເຕັກນິກການປູກພື້ນຖານ.

✧ ກປຂ ຍັງສາມາດແນະນຳການປູກພືດທີ່ມີຄວາມຕ້ອງການສູງໃນການຕະຫຼາດ. [ເບິ່ງພາກທີ IV ການສົ່ງເສີມການຂາຍ]

3) ເຊື່ອມໂຍງ ຄຳວ່າ "ການເພີ່ມລາຍຮັບ" ກັບ "ການປັບປຸງດິນ"

3-1) ຫຼັງຈາກເຫັນຜົນລັບ ຂອງການປຽບທຽບລະຫວ່າງກຸ່ມປູກຜັກອິນຊີບ້ານໂພນສິມ ແລະ ພວກເຂົາເອງ, ໃຫ້ຊາວກະສິກອນຄິດວ່າ ພວກເຂົາສາມາດເລີ່ມຕົ້ນເຮັດຫຍັງໄດ້ໃນຕອນນີ້ເພື່ອເພີ່ມລາຍຮັບ.

✧ <u>ນີ້ແມ່ນຈຸດທີ່ເຮົາຈະເຊື່ອມຕໍ່ໄປຍັງ ຂັ້ນຕອນການຝຶກອົບຮົມທາງດ້ານເຕັກນິກ.</u>




3-2) ເວລາຊາວນາເວົ້າວ່າ: ເຂົາຕ້ອງການທີ່ຈະປັບປຸງເຕັກນິກຂອງເຂົາ, ເຮົາຕ້ອງໄດ້ຖາມຕື່ມວ່າເຕັກນິກປະເພດໃດ? ພະຍາຍາມເກັບກຳລາຍລະອຽດຂອງເຕັກນິກແລ້ວບັນທຶກລົງໃສ່ເຈ້ຍ. ແລ້ວຈັດລະບຽບຕາມຂັ້ນຕອນການປູກ.

✧ **<u>ການກະກຽມດິນຕ້ອງມາກ່ອນ ຫຼັງຈາກນັ້ນ, ເຮົາຕ້ອງໄດ້ຖາມຊາວນາວ່າຕ້ອງການຢາກຮຽນຮູ້ວິທີການປັບປຸງດິນໃນຄັ້ງຕໍ່ໄປບໍ?</u>**

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ເອກະສານຄັດຕິດ II-4 ຕໍ່ຢ່າງ)

<u>ເປົ້າໝາຍ: ເພື່ອໃຫ້ຊາວນາເຂດໂຄງການເປົ້າໝາຍໃໝ່ມີແຮງຈູງໃຈໃນການປູກຜັກເປັນສິນຄ້າ.</u>

<u>ຈຸດປະສົງ</u>:

ເພື່ອໃຫ້ຊາວນາໄດ້ຮຽນຮູ້ ເຕັກນິກການປູກ ແລະ ການຂາຍ .

<u>ສະຖານທີ່</u> :

1.ຫ້ອງປະຊຸມພະແນກ ກະສິກຳ ແລະ ປ່າໄມ້ ແຂວງ.

2.ສ່ວນບ້ານໂພນສິມ.

ວັນທີ: 25/02/2020 – 26/02/2020

ຜູ້ເຂົ້າຮ່ວມ: ທັງໝົດມີ ຊາວນາ 40 ທ່ານ + ພະນັກງານ ກະສິກຳເມືອງ 06 ທ່ານ

- ຊາວນາເມືອງພີນ 20 ທ່ານ + ພະນັກງານ ກະສິກຳເມືອງ 02 ທ່ານ
- ຊາວນາເມືອງໄຊພູທອງ 03ທ່ານ + ພະນັກງານ ກະສິກຳເມືອງ 02 ທ່ານ
- ຊາວນາເມືອງສອງຄອນ 10 ທ່ານ + ພະນັກງານ ກະສິກຳເມືອງ 02 ທ່ານ
- ຫົວໜ້າກຸ່ມບ້ານໂພນສິມ 01 ທ່ານ

ຕາຕະລາງກິດຈະກຳນຳພາຊາວນາເຂດໂຄງການເປົ້າໝາຍໃໝ່ມາທັດສະນະ ນຳກຸ່ມປູກຜັກອິນຊີ ບ້ານໂພນສິມ.

| ເວລາ | ກິດຈະກຳ | ໝາຍເຫດ |
|---|---|---|
| ມື້ທີ1: 25/02/2020 | | |
| 13:00 – 13:05 | ລວມປະຊຸມຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງ ກ່ອນ ຈຶ່ງໄປຕະຫຼາດ. | ທ່ານ ແສງຈັນ ບຸດລາສີ |
| 13:05 – 13:20 | ແນະນຳຕົວ.<br>ຜູ້ເຂົ້າຮ່ວມແນະນຳຕົວ | ທ່ານ ແສງຈັນ ບຸດລາສີ |
| 13:20 – 13:50 | ຫົວໜ້າກຸ່ມໂພນສິມເລົ່າປະຫວັດກຸ່ມ ໂດຍຫຍໍ້.ສ້າງຕັ້ງຂຶ້ນໃນປີໃດ. ສະມາຊິກຈັກຄົນ,ໃຜສະໜັບສະໜູນ. | ທ່ານ ແສງຈັນ ບຸດລາສີ |
| 13:50 – 14:30 | ໄປເບິ່ງການຂາຍຜັກອິນຊີຂອງກຸ່ມ ບ້ານໂພນສິມ ຢູ່ຕະຫຼາດ ເຄືອັນໄນ | ທ່ານ ນາງຈະເລີນພອນ |
| 14:30 – 15:30 | ມາຫ້ອງປະຊຸມພະແນກກະສິກຳ ແລະປ່າໄມ້ແຂວງ,ເພື່ອສັງລວມຂໍ້ມູນ ແລະ ແລກປ່ຽນການຂາຍ.ການຈັດ ຂາຍໃຫ້ເປັນລະບຽບແລະພິດຜັກທີ່ ຂາຍດີ. | ທ່ານ ນາງຈະເລີນພອນ |

| | | |
|---|---|---|
| 15:30 – 16:00 | ໃຫ້ຊາວນາກະກຽມຄໍາຖາມມື້ຕໍ່ໄປທີ່ຈະໄປຢ້ຽມຢາມສ່ວນຂອງຜັກອິນຊີ ກຸ່ມບ້ານໂພນສີມ.ພວກຊາວນາຢາກຮຽນຮູ້ຫຍັງ. | ທ່ານ ແສງຈັນ ບຸດລາສີ |
| 16:00 – 17:00 | ກິນເຂົ້າແລງຮ່ວມກັນ | |
| ມື້ທີ2 26/02/2020 | ເດີນທາງໄປ ບ້ານໂພນສີມ | |
| 8:30 – 9:00 | ໃຫ້ແຕ່ລະກຸ່ມສະເໜີຄໍາຖາມໃຫ້ກຸ່ມບ້ານໂພນສີມ,ທີ່ພວກທ່ານຢາກຮຽນຮູ້ນໍາກຸ່ມບ້ານໂພນສີມ. | ທ່ານ ແສງຈັນ ບຸດລາສີ |
| 9:00 – 10:00 | ອາທິບາຍເຕັກນິກການປູກ.<br>- ການກ້າ,ແກນແລະການປູກແລະການກຽມດິນ,ການບົວລະບັດຮັກສາປ້ອງກັນພະຍາດແລະແມງໄມ້.<br>ການເຕັກນິກເຮັດຝຸ່ນບົ່ມ,ແລະນໍ້າໝັກຊີວະພາບ. | ທ່ານ ນາງພອນແກ້ວ |
| 10:00 – 10:30 | ກຸ່ມບ້ານໂພນສີມອາທິບາຍລາຍຮັບຂອງເຮືອນຮົ່ມ 01 ຫຼັງ | ທ່ານ ແສງຈັນ ບຸດລາສີ |
| 10:30 – 10:45 | ກຸ່ມບ້ານໂພນສີມ ຈະບອກວິທີຄິດໄລ່ການສ້າງເຮືອນຮົ່ມໄມ້ 01 ຫຼັງ. | ທ່ານ ແສງຈັນ ບຸດລາສີ |
| 10:45-11:30 | ນໍາພາຊາວນາສັງເກດດ້ວຍຕົວເອົາເອງໃນສວນ.ແລະໃຫ້ຊາວນາຖາມດ້ວຍຕົວເອົາເອງ.( ເລາະສວນ ) | ກຸ່ມບ້ານໂພນສີມ |
| 11:30 -12: 30 | ສະຫຼຸບສັງລວມໂດຍຫຍໍ້ | ທ່ານ ນາງຈະເລີນພອນ |
| 12:30 – 13:30 | ກິນເຂົ້າທ່ຽງ | ຮ້ານອາຫານພູນສຸກ |

## 2 ຝຶກອົບຮົມ ທາງດ້ານເຕັກນິກ

### (1) ຄວາມສຳຄັນໃນການປັບປຸງດິນ ແລະ ການເຮັດຝຸ່ນໝັກ

| |
|---|
| 1) ພະນັກງານແຂວງ ແລະ ເມືອງ ຊ່ວຍອະທິບາຍໃຫ້ຊາວນາເຂົ້າໃຈກ່ຽວກັບຄວາມສຳຄັນຂອງດິນ.<br>2) ຝຶກອົບຮົມການເຮັດຝຸ່ນບົ່ມ. |

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ຄຳອະທິບາຍ)

1) ຈັດຝຶກອົບຮົມ ເພື່ອໃຫ້ຊາວນາໄດ້ຮຽນຮູ້ ແລະ ເຂົ້າໃຈກ່ຽວກັບດິນ

1-1) ຖາມຊາວນາວ່າ ດິນດີ ແລະ ດິນບໍ່ດີ ເປັນດິນແນວໃດ? ດິນຂອງເຂົາເຈົ້າເປັນດິນປະເພດໃດ? ຂຽນບັນທຶກລົງຕາມການບອກເລົ່າຂອງຊາວນາ.

| ເງື່ອນໄຂ | ດິນທີ່ດີ | ດິນບໍ່ດີ |
|---|---|---|
| – ໂຄງສ້າງ<br>– ສີ<br>– ຄວາມຊຸ່ມ<br>– ສານອາຫານ | - | - |

ຫຼັງຈາກນັ້ນ, ຖາມຊາວນາຕໍ່ກ່ຽວກັບຄຳຖາມດັ່ງລຸ່ມນີ້;

- **ເຈົ້າສາມາດຫາດິນທີ່ດີເຫຼົ່ານີ້ໄດ້ຢູ່ໃສ?**
  ຕົວຢ່າງຂອງຄຳຕອບ: ຕາມປ່າດົງ,
- **ເຈົ້າຮູ້ບໍ່ວ່າດິນປະກອບມີຫຍັງແດ່?**
  ຕົວຢ່າງຂອງຄຳຕອບ: ອະນຸພາກຂອງດິນ, ພືດ, ອາກາດ, ນ້ຳ, ຈຸລິນຊີ

1-2) ແຕ້ມຮູບປະກອບ ເພື່ອອະທິບາຍໂຄງສ້າງໂດຍລວມຂອງດິນ.







**ດິນດີ = ປະກອບມີ ຈຸລິນຊີ ຫຼາຍຊະນິດ**

1-3) <u>ຖາມຊາວນາວ່າ: ເຮັດແນວໃດເຮົາຈຶ່ງຈະສາມາດເພີ່ມຈຳນວນຂອງຈຸລິນຊີໃນດິນຂອງເຂົາເຈົ້າໄດ້?</u>

ອະທິບາຍວ່າ: ຈຸລິນຊີແມ່ນສິ່ງທີ່ມີຊີວິດ ເພື່ອດຳລົງຊີວິດ, ຈຸລິນຊີຕ້ອງການຫຍັງ? ກິນຫຍັງ!

> ຈຸລິນຊີ ກິນແຕ່ວັດຖຸອິນຊີເທົ່ານັ້ນ. ຈຸລິນຊີບໍ່ໄດ້ກິນສານເຄມີ ລວມທັງ <u>ປຸ໋ຍເຄມີນຳ</u>






> ພວກເຮົາຕ້ອງໄດ້ໃຊ້ຝຸ່ນໝັກ

1-4) ທົບທວນຄືນສິ່ງທີ່ໄດ້ຮຽນ ແລະ ກວດເບິ່ງວ່າຊາວນາເຂົ້າໃຈແທ້ບໍ.

| ເງື່ອນໄຂ | ດິນທີ່ດີ | ປັດໃຈສຳຄັນ |
|---|---|---|
| - ໂຄງສ້າງ | - ຜຸຜຸ່ຍ.<br>- ເກັບອາກາດໄດ້ພຽງພໍ.<br>- ຮາກສາມາດຢັ່ງລົງເລິກໄດ້. | - ຕ້ອງການຈຸລິນຊີ ທີ່ຫຼາກຫຼາຍ<br>- ຈຸລິນຊີກິນພຽງແຕ່ວັດຖຸອິນຊີເທົ່ານັ້ນ<br>- ຕ້ອງການຝຸ່ນບົ່ມເພື່ອລ້ຽງຈຸລິນຊີ.<br>- ປຸ໋ຍແມ່ນໃຫ້ສານອາຫານແກ່ພືດ ແຕ່ບໍ່ໄດ້ປັບປຸງດິນ.<br>- ປຸ໋ຍບໍ່ແມ່ນອາຫານຂອງຈຸລິນຊີ. |
| - ຄວາມຊຸ່ມ | ມີຈຸລິນຊີຫຼາຍ. | |
| - ສານອາຫານ | - ເກັບກັກນ້ຳໄດ້ດີ.<br>- ອຸດົມໄປດ້ວຍສານອາຫານ.<br>- ມີຄວາມສົມດຸນ ຂອງທາດອາຫານຕ່າງໆ ທີ່ຫຼາກຫຼາຍ.<br>- ບໍ່ມີແມງໄມ້ ແລະ ພະຍາດ. | |

2) ຈັດຝຶກອົບຮົມການເຮັດຝຸ່ນບົ່ມ.

ສາທິດການເຮັດຝຸ່ນບົ່ມ ໂດຍການນຳໃຊ້ວັດຖຸດິບ ນຳພາຊາວນາເຮັດຝຸ່ນບົ່ມໄປພ້ອມໆກັນເພື່ອເປັນແບບຢ່າງ.

✧ (ເອກະສານຄັດຕິດII-3) ວິທີເຮັດຝຸ່ນບົ່ມ.



ພະນັກງານແຂວງ ສະຫຼຸບການປະຊຸມຕາມຄຳຖາມດັ່ງລຸ່ມນີ້:

- ➢ ເຈົ້າຈະເຮັດຝຸ່ນບົ່ມຈັກກິໂລ?.
- ➢ ຂະໜາດຂອງເນື້ອທີ່ປູກກ້ວາງສ່ຳໃດ?.
- ➢ ເຈົ້າໄດ້ຕັດສິນໃຈວ່າຈະປູກພືດຫຍັງແລ້ວບໍ?.

ລໍຖ້າໃຫ້ຊາວກະສິກອນຖາມພະນັກງານແຂວງ ແລະ ເມືອງ ວ່າເຂົາຄວນຈະປູກພືດຫຍັງ?

ຫຼັງຈາກນັ້ນ, “ມາຊອກຫາວິທີປູກພືດຮ່ວມກັນ ເມື່ອໃດທີ່ເຈົ້າມີເວລາເຮັດສຳຫຼວດຕະຫຼາດ?”

ກຳນົດມື້ ແລະ ເວລາ ສຳລັບການຈັດຝຶກອົບຮົມ ສຳຫຼວດຕະຫຼາດ ແລ້ວປິດກອງປະຊຸມ.

(ເອກະສານແນບຕິດ II-3: ວິທີເຮັດຝຸ່ນໝັກ)

**<u>ສູດການເຮັດຝຸ່ນໝັກ 1</u>**

**1. ສ່ວນປະກອບມີ:**

- ເຟືອງ 1 ລົດໄຖ/ຖ້າເປັນຂີ້ແກບແມ່ນ 6 ສອບ
- ຂີ້ເລື່ອຍ 2 ສອບ
- ຂີ້ງົວ (ບໍ່ປະສົມດິນ) 8 ສອບ
- ນ້ຳ 100 ລິດ(ທ່າບໍ່ພໍສາມາດເພີ່ມໄດ້)

**2. ວິທີການເຮັດ**

- ເອົາຂີ້ແກບລົງ(ຊັ້ນ1) 2ສອບ
- ເອີນຂີ້ງົວລົງ(ຊັ້ນ2)2,5ສອບ
- ເອົາຂີ້ເລື່ອຍລົງ(ຊັ້ນ3) ເຄິ່ງສອບ
- <u>ໝາຍເຫດ:</u> ແຕ່ລະຊັ້ນ ແມ່ນໃຫ້ຫົດນ້ຳປຽກ ພໍສົມຄວນ, ຫຼັງຈາກນັ້ນເອົາຜ້າຢາງປົກຄຸມໄວ້. ທຸກ 1 ຄອນກວດເບິ່ງ 2 ຄັ້ງ, ຖ້າເຫັນວ່າມັນແຫ້ງຄອນໃຫ້ນ້ຳແລ້ວປົກຄຸມດ້ວຍຜ້າຢາງ.
- ໄລຍະເວລາແມ່ນ 3 ເດືອນ ຈຶ່ງສາມາດນຳໃຊ້ໄດ້.

**<u>ສູດການເຮັດຝຸ່ນໝັກ 2</u>**

**1.ສ່ວນປະກອບມີ:**

- ຝຸ່ນທີ່ໝັກແລ້ວ
- ໃບໄມ້ຂຽວທີ່ຍ່ອຍງ່າຍ
- ນ້ຳ
- ຂີ້ງົວ
- ຊາມ ຫຼື ອ່າງຊີມັງ
- ຂີ້ກະເດືອນ

**2. ວິທີການເຮັດຝຸ່ນໝັກ**

- ເອົາຝຸ່ນລົງໃສ່ຊາມ ຫຼື ອ່າງຊີມັງ ສູງ 30 ຊັງຕີແມັດ.
- ເອົາໃບໄມ້ຂຽວທີ່ກຽມໄວ້ໃສ່ລົງສູງປະມານ 30 ຊັງຕີແມັດ.
- ຫົດນ້ຳໃຫ້ປຽກ ສາມາດເຮັດໄດ້ຫຼາຍໆຊັ້ນ
- ນຳຂີ້ກະເດືອນທີ່ກຽມໄວ້ລົງ ແລ້ວ ປົກຄຸມດ້ວຍຂີ້ງົວ ແລ້ວ ຫົດດ້ວຍນ້ຳ.
- 40 ວັນ ສາມາດນຳໃຊ້ໄດ້. ແລະ ສາມາດນຳຝຸ່ນໝັກນີ້ໄປຂະຫຍາຍໃຫ້ຫຼາຍຂຶ້ນ ໃຊ້ເວລາອີກພຽງ 02 ອາທິດ.
- ອັດຕາການໃຊ້ 3 ກິໂລ/1 ຕາແມັດ.

**<u>ສູດການເຮັດຝຸ່ນໝັກ 3</u>**

**1. ສ່ວນປະກອບມີ:**

- ຂີ້ງົວ 1 ສອບ
- ຣຳອ່ອນ 1-2 ກິໂລ
- ແກບ 3 ສອບ
- ນ້ຳອີເອັມ 2 ບ່ວງ/ນ້ຳ 1 ບົວ
- ການນ້ຳຕານ 2 ບ່ວງ/ນ້ຳ 1 ບົວ

2. ວິທີການເຮັດ

- ນຳສ່ວນປະສົມທັງໝົດມາປະສົມກັນ ຄົນໃຫ້ເຂົ້າກັນແລ້ວບັນຈຸໄວ້ໃນກະສອບ ປະໄວ້ປະມານ 10-15 ວັນ ສາມາດນຳໃຊ້ໄດ້, ສັງເກດເບິ່ງຝຸ່ນຈະມີໃຍຂາວໆ ສະແດງວ່າສາມາດນຳໃຊ້ໄດ້

<u>ວິທີການໃຊ້ຝຸ່ນໝັກ</u>

1) ໄຖດິນແລ້ວປະໄວ້ປະມານ 7 - 10 ວັນ, ຈາກນັ້ນສີດຢາໄລ່ແມງໄມ້ຊີວະພາບ ແລະ ປະສົມໃບກະເດົາລົງໃສ່ໃນດິນເພື່ອປ້ອງກັນຫຍ້າ, ແມງໄມ້ ແລະ ພະຍາດຕ່າງໆທີ່ຢູ່ໃນພື້ນດິນ.

2) ປະສົມຝຸ່ນໝັກ 1 - 2 ກິໂລ ຕໍ່ດິນ 1 ຕາແມັດ ແລະ ປະໄວ້ 3 - 5 ວັນກ່ອນທີ່ຈະຫວ່ານ ຫຼື ປູກແນວພັນ.

**ສິ່ງສຳຄັນ**



1: ຕິດຕາມຊາວກະສິກອນ (ສິ່ງເສີມ ແລະ ສ້າງຄວາມສຳພັນ)
ມັນເປັນສິ່ງສຳຄັນທີ່ຈະລົງໄປຢ້ຽມຢາມຊາວກະສິກອນເພື່ອເບິ່ງວ່າພວກເຂົາປະຕິບັດຕາມວິທີ ທີ່ທ່ານໄດ້ສອນພວກເຂົາບໍ. ໂດຍຫລັກການແລ້ວ, ກປມ ຕ້ອງໄດ້ໄປຢ້ຽມຢາມຊາວກະສິກອນໃນທຸກໆອາທິດ ໃນຕອນເລີ່ມຕົ້ນຂອງກິດຈະກຳ ແລະ ແລກປ່ຽນຂໍ້ມູນກັບ ກປຂ. ຖ້າເປັນໄປໄດ້, ກປຂ ຕ້ອງໄດ້ລົງໄປຢ້ຽມຢາມ 2 – 3 ຄັ້ງຕໍ່ເດືອນ ເພື່ອຊຸກຍູ້ສົ່ງເສີມການປູກຝັງຂອງຊາວກະສິກອນ.

2: ຢ່າຟ້າວຫຼາຍ
ກປຂ ແລະ ກປມ ຄວນໃຊ້ເວລາເພື່ອເຮັດໃຫ້ຊາວກະສິກອນເຂົ້າໃຈວ່າເປັນຫຍັງພວກເຂົາຈຶ່ງຕ້ອງຮຽນຮູ້ການເຮັດຝຸ່ນບົ່ມ ແລ້ວຫຼັງຈາກນັ້ນຈຶ່ງເລີ່ມຕົ້ນການສາທິດ ວິທີການເຮັດຝຸ່ນບົ່ມ.

3: ການສາທິດ
ກປຂ ແລະ ກປມ ຄວນສະແດງວິທີການເຮັດຝຸ່ນ ແລ້ວຫຼັງຈາກນັ້ນໃຫ້ຊາວກະສິກອນມີສ່ວນຮ່ວມເຮັດນຳກັນ.

4: ບໍ່ມີອີກແລ້ວທີ່ຈະຖາມວ່າ "ເຈົ້າເຂົ້າໃຈບໍ?" ຄຳຖາມ!
ຢ່າຖາມພວກເຂົາວ່າພວກເຂົາເຂົ້າໃຈຫລືບໍ່. ຖາມພວກເຂົາວ່າພວກເຂົາໄດ້ຮຽນຮູ້ຫຍັງແທນ.

5: ກະກຽມໄວ້ລ່ວງໜ້າ
ກປຂ ຄວນໃຊ້ເວລາໃຫ້ພຽງພໍສຳລັບການກະກຽມອຸປະກອນ ແບບມີຮູບພາບປະກອບໃຫ້ຄົບ ກ່ອນການຝຶກອົບຮົມ.

ຊາວກະສິກອນຮູ້ສຶກມີກຳລັງໃຈ ແລະ ແຮງຈູງໃຈຢາກຈະທົດລອງປູກໃນເວລາທີ່ພະນັກງານລົງເຮັດວຽກໃກ້ຊິດ ຮ່ວມກັບຊາວກະສິກອນໂດຍສະເພາະໃນເບື້ອງຕົ້ນກ່ອນການສ້າງລາຍຮັບ ມັນແມ່ນສິ່ງທີ່ສຳຄັນສຳລັບພະນັກງານແຂວງ ແລະ ເມືອງ <u>ໃນການເຮັດວຽກຮ່ວມກັນບໍ່ແມ່ນພຽງແຕ່ເວົ້າກັບຊາວນາເທົ່ານັ້ນ</u>

## (2) ການສຳຫຼວດຕະຫຼາດ ແລະ ການເລືອກພືດປູກ.

1) ກະກຽມເພື່ອການສຳຫຼວດຕະຫຼາດ.
2) ດຳເນີນການສຳຫຼວດຕະຫຼາດ.
3) ສະຫຼຸບຜົນລັບຂອງການສຳຫຼວດ ແລະ ການເລືອກພືດປູກ.

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ຄຳອະທິບາຍ)

1) ການກະກຽມການສຳຫຼວດຕະຫຼາດ (1 ວັນ ເຄິ່ງ)

1-1) ພະນັກງານແຂວງ ແລະ ເມືອງ ຈັດປະຊຸມຮ່ວມກັບຊາວນາ ກ່ຽວກັບການສຳຫຼວດຕະຫຼາດ ທົບທວນກິດຈະກຳທີ່ໄດ້ເຮັດໄປຈົນຮອດການປະຊຸມຄັ້ງລ່າສຸດ ແລະ ອະທິບາຍໃຫ້ຊາວນາເຂົ້າໃຈວ່າເປັນຫຍັງເຮົາຈຶ່ງມີການສຳຫຼວດຕະຫຼາດ.

ຊອກຫາລາຍຮັບຈາກການເຮັດກະສິກຳໃນປະຈຸບັນ



ຕ້ອງການເງິນຫຼາຍ!

ແຕ່ວ່າ, ເຮັດແນວໃດ ຈະ ສາມາດ ເພີ່ມລາຍຮັບ?

ປັບປຸງດິນ ແລະ ເຕັກນິກການປູກ

ເຮັດຝຸ່ນໝັກ ແລະ ກະກຽມດິນ

ຕອນນີ້ຈະປູກຫຍັງ?

ພວກເຮົາຕ້ອງການທີ່ຈະປູກບາງສິ່ງບາງຢ່າງທີ່ຂາຍຍາກ ຫຼື ລາຄາຖືກບໍເພື່ອຮັບປະກັນ ເຖິງຜົນກຳໄລທີ່ພຽງພໍ ຫຼື ມີຄູ່ແຂ່ງຫຼາຍເກີນໄປ?????

ການຜະລິດທີ່ມຸ້ງເນັ້ນໃສ່ ຄວາມຕ້ອງການຕະຫຼາດ

<u>ປູກ ແລະ ຂາຍ:</u>
ເບື້ອງຕົ້ນ, ປູກພືດ ຫຼັງຈາກນັ້ນ, ຊອກຫາຕະຫຼາດເພື່ອຂາຍ

ປ່ຽນມາເປັນ

<u>ປູກ ເພື່ອ ຂາຍ</u>: ເບື້ອງຕົ້ນ, ຊອກຫາຄວາມຕ້ອງການຂອງຕະຫຼາດ ຫຼັງຈາກນັ້ນ, ປູກເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ.

<u>*ຊາວນາປູກພືດ ໂດຍທີ່ບໍ່ໄດ້ຄຳນຶງເຖິງວ່າຈະຂາຍຢູ່ໃສ ແລະ ຂາຍໃຫ້ໃຜ, ຊາວນາມັກຈະຖາມຫາຕະຫຼາດຫຼັງຈາກເກັບຜົນຜະລິດ ໃນກໍລະນີນີ້, ແມ່ນມີຂໍ້ຫຍຸ້ງຍາກຫຼາຍທີ່ຈະຊ່ວຍເຂົາຖ້າວ່າພືດນັ້ນບໍມີຄວາມຕ້ອງການສູງ.</u>

1-2) ພະນັກງານແຂວງ ແລະ ເມືອງ ຊ່ວຍຊາວນາສ້າງຄຳຖາມເພື່ອສຳຫຼວດ ກວດກາໃຫ້ລະອຽດວ່າຊາວນາໄດ້ຂຽນຄຳຖາມເຫຼົ່ານັ້ນດ້ວຍຕົວຂອງເຂົາເອງ.

[ຄຳຖາມທີ່ອາດເປັນໄປໄດ້]

- ລາຄາ (ລາຄາຂາຍ ແລະ ລາຄາຊື້).
- ສະຖານທີ່ຜະລິດ.
- ຈຳນວນປະລິມານ ທີ່ແມ່ຄ້າຊື້ໃນທຸກໆມື້ ຫຼື ທຸກໆອາທິດ.
- ຄຸນນະພາບທີ່ຕ້ອງການສຳລັບ ລາຄາທີ່ສູງຂຶ້ນ (ຂະໜາດ, ສີ, ລົດຊາດ, ລັກສະນະ ແລະ ອື່ນໆ).
- ຄວາມຕ້ອງການ ແລະ ລາຄາ ປ່ຽນແປງຕາມລະດູການ.
- ຊື່ ແລະ ເບີໂທຕິດຕໍ່.
- ພືດອັນໃດທີ່ເຂົາສາມາດຂາຍໄດ້ໄວແມ່ນຈະມີຄວາມຕ້ອງການຫຼາຍ.

1-3) ໃຫ້ຊາວນາຕັດສິນໃຈວ່າໃຜຈະເປັນຄົນໄປຕະຫຼາດ ເພື່ອດຳເນີນການສຳຫຼວດ ຊາວນາທັງໝົດ ຫຼື ເຂົາອາດຈະເລືອກຕົວແທນ.

ຖ້າວ່າຊາວນາທັງໝົດໄປ, ຕ້ອງໄດ້ແບ່ງເປັນກຸ່ມ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄົນ.

* ເບິ່ງ [ເອກະສານແນບຕິດII-6] ຕົວຢ່າງແບບຄຳຖາມສຳຫຼວດ.



2) ດຳເນີນການສຳຫຼວດຕະຫຼາດ (ມື້ທີ2)

ພະນັກງານແຂວງ ຫຼື ພະນັກງານເມືອງ ນຳພາຊາວນາລົງ ສຳຫຼວດຕະຫຼາດ ປ່ອຍໃຫ້ຊາວນາຖາມຄຳຖາມກັບແມ່ຄ້າ ເພື່ອໃຫ້ເກີດຄວາມເຄີຍຊິນ ດັ່ງນັ້ນ, ຊາວນາສາມາດຕິດຕໍ່ພົວພັນໂດຍກົງກັບແມ່ຄ້າໃນຕະຫຼາດໃນຄັ້ງຕໍ່ໄປ.

3) ສະຫຼຸບຂໍ້ມູນ ແລະ ການເລືອກພືດປູກ (ມື້ທີ 3 ກັບເຄິ່ງມື້).

ນຳໃຊ້ແບບຟອມການເລືອກພືດ ເພື່ອລວບລວມຂໍ້ມູນ (ນີ້ແມ່ນຕົວຢ່າງ).

| ພືດ | ລາຄາ (ກິໂລ) | ຜົນຜະລິດ (ກິໂລ) | ລາຍຮັບ | ຕົ້ນທຶນການຜະລິດ | ກຳໄລ | ໄລຍະການປູກ | ຄວາມຕ້ອງການ ແລະ ຜູ້ຊື້ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |

*ຜົນຜະລິດ ແລະ ຕົ້ນທຶນການຜະລິດແມ່ນປະເມີນຈາກປະສົບການຂອງຊາວນາ ຖ້າວ່າຊາວນາບໍ່ເຄີຍປູກມາກ່ອນ, ພະນັກງານແຂວງ ແລະ ເມືອງ ຕ້ອງໄດ້ຊ່ວຍຕອບສະໜອງໃນການຊອກຫາຂໍ້ມູນໃຫ້ກັບຊາວນາ.

*ມັນກໍ່ເປັນເລື່ອງຍາກຫຼາຍທີ່ຈະປະເມີນຜົນຜະລິດທີ່ຊາວນາບໍ່ເຄີຍໄດ້ລອງປູກສຳລັບພືດຜັກທີ່ເຂົາໄດ້ເຮັດການສຳຫຼວດ ໃນກໍລະນີນີ້, ແມ່ນປຽບທຽບລາຄາ ແລະ ໄລຍະການປູກໃຫ້ຊາວນາໄດ້ຄິດວ່າເຂົາຕ້ອງການທີ່ຈະປູກພືດໃນຂະໜາດນ້ອຍ ຫຼື ບໍ່.

*ບໍ່ຕ້ອງກັງວົນຫຼາຍໃນການ ຕື່ມຂໍ້ມູນທັງໝົດ ສິ່ງທີ່ສຳຄັນຄື: ພະຍາຍາມແລກປ່ຽນຂໍ້ມູນທີ່ໄດ້ມາຈາກການສຳຫຼວດຕະຫຼາດ ແລະ ປຶກສາຫາລືໃນກຸ່ມຊາວນາ.

ໃຫ້ຊາວນາປຶກສາຫາລືວ່າພືດໃດທີ່ມີຄວາມຕ້ອງການສູງເຊິ່ງສາມາດຂາຍໄດ້ ແລະ ຂ້ອນຂ້າງມີຜົນກຳໄລສູງ ພະນັກງານແຂວງ ສາມາດແນະນຳພືດເພື່ອທົດລອງ.

ຊາວກະສິກອນໄດ້ສັງລວມຂໍ້ມູນທັງຈາກການສຳຫຼວດ









ໃນຕອນທ້າຍ, ຖາມຊາວນາ "ເຈົ້າໄດ້ຕັ້ງເປົ້າໝາຍໄວ້ເທົ່າໃດ?" "ຈະເລີ່ມຍາມໃດ?" "ໃຫ້ຊາວນາ ປຶກສາຫາລື ກັບຄອບຄົວເຂົາກ່ອນ, ແລ້ວເຮົາຈະນຳພາ ສ້າງແຜນ ໃນຂັ້ນຕໍ່ໄປ"

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ເອກະສານແນບຕິດ II-4: ຕົວຢ່າງແບບສອບຖາມ ໃນການສຳຫຼວດຕະຫຼາດ)

## 1: ການກະກຽມສຳລັບການສຳຫຼວດຕະຫຼາດ

1: ເລືອກພືດ – 5 ເຖິງ 6 ຊະນິດ

2: ເລືອກຕະຫຼາດ

3: ຄິດຄຳຖາມທີ່ເຮົາຈະຖາມໃນຕະຫຼາດ

| **ພືດ** | **ຕະຫຼາດ** | **ຜູ້ທີ່ຈະສຳພາດ** |
|---|---|---|
| ສາລີ | | ແມ່ຄ້າ, ພໍ່ຄ້າຄົນກາງ |
| ໝາກເລັ່ນ | | ແມ່ຄ້າ, ຜູ້ຊື້, ແມ່ຄ້າຄົນກາງ |
| ຜັກບົ້ງ | | ແມ່ຄ້າ, ຜູ້ຊື້ |
| ໝາກເຜັດ | | ແມ່ຄ້າ, ຜູ້ຊື້ |
| ໝາກໂມ | | ແມ່ຄ້າ, ຜູ້ຊື້ |
| ຜັກສະລັດ | | ແມ່ຄ້າ, ຜູ້ຊື້ |

4: ຄິດຫາຄຳຖາມທີ່ຈະຖາມ

- ຂຽນລາຍຊື່ສິ່ງທີ່ຢາກຮູ້ອອກມາ
- ສ້າງຄຳຖາມ

  ເຊັ່ນ:

  ຊະນິດພືດ ຫຼື ແນວພັນທີ່ເປັນທີ່ນິຍົມທີ່ສຸດ

  ຄຸນນະພາບທີ່ຈະສາມາດຂາຍໃນລາຄາສູງ

  ລະດູທີ່ລາຄາດີ

  ຂອບເຂດລາຄາ

  ປະລິມານການຊື້ໃນຄັ້ງໜຶ່ງ

5: ຈັດເປັນກຸ່ມໆລະ 3 ຄົນ

6: ຂຽນຄຳຖາມລົງໃສ່ເຈ້ຍ A4

7: ແບ່ງໜ້າທີ່ຮັບຜິດຊອບພາຍໃນກຸ່ມ

ຜູ້ທີ 1: ເປັນຜູ້ຖາມຄຳຖາມ ທີ່ຂຽນໃນເຈ້ຍ

ຜູ້ທີ 2: ຂຽນຄຳຕອບໃສ່ເຈ້ຍ

ຜູ້ທີ 3: ເບິ່ງເວລາ ແລະ ເບິ່ງລູກຄ້າ (ອາດມີລູກຄ້າເຂົ້າມາຊື້ເຄື່ອງໃນເວລາທີ່ຖາມ)

(ເອກະສານແນບຕິດ II-4: ຕົວຢ່າງແບບຟອມຄຳຖາມການສຳຫຼວດຕະຫຼາດ)

* ຕົວຢ່າງຄຳຖາມສຳລັບການສຳຫຼວດຕະຫຼາດ

1. ເຈົ້າຊື່ຫຍັງນໍ? ຂໍເບີຕິດຕໍ່ແດ່ໄດ້ບໍ?

2. ຂໍຖາມແດ່ວ່າລາຄາຂອງ ___________ ດຽວນີ້ມັນຂຶ້ນຫຼືມັນລົງ ?

3. ລາຄາປ່ຽນໄປຕາມລະດູແບບໃດແດ່?

ລາຄາໃນລະດູທີ່ແພງສຸດ:__________________ ເມື່ອໃດ:______________________

ລາຄາໃນລະດູທີ່ຖືກສຸດ:__________________ ເມື່ອໃດ:______________________

4. ຂະໜາດຂອງຜົນຜະລິດມີຜົນກະທົບຕໍ່ລາຄາບໍ ?

ຖ້າມີຜົນກະທົບ, ຂະໜາດແບບໃດທີ່ເໝາະສົມ?

5. ຜະລິດຕະພັນ ທີ່ເປັນທາງເລືອກ ໃນຍາມທີ່ _________ບໍ່ມີ ?

6. ເຈົ້າຊື້ __________ ມາຈາກໃສ?

ຖ້າຊື້ຈາກພໍ່ຄ້າຄົນກາງ, ລາວຊື່ຫຍັງ ລາວມາຈາກໃສ ? ເຈົ້າມີເບີຕິດຕໍ່ເພິ່ນບໍ ?

7. ເຈົ້າຊື້ເທື່ອໜຶ່ງຫຼາຍປານໃດ ? __________ ສອບ / ກິໂລ ແລະ ຊື້ໃນຄວາມຖີ່ສໍ່າໃດ?

A: ທຸກມື້, B: ທິດລະຄັ້ງ, C: ທິດລະ 2 ຄັ້ງ, D: ອື່ນໆ_____________

8. ເຈົ້າຮູ້ບໍວ່າມີແມ່ຄ້າທີ່ຂາຍແບບເຈົ້າຈັກຄົນໃນຕະຫຼາດນີ້ ?

9. ເຈົ້າຮູ້ບໍວ່າໃຜເປັນແມ່ຄ້າໃຫຍ່ສຸດສຳລັບພືດຜັກຊະນິດນີ້ໃນຕະຫຼາດນີ້?

10. ເຈົ້າມີເງື່ອນໄຂໃນການຈ່າຍແບບໃດ?

11. ຖ້າຂ້ອຍປູກພືດຊະນິດນີ້ເຈົ້າສົນໃຈຈະຊື້ນຳຂ້ອຍບໍ ?

12. ເວົ້າເລື່ອງຄຸນນະພາບເຈົ້າມັກແບບໃດ ?

ແລະ ຄຳຖາມອື່ນໆທີ່ກ່ຽວຂ້ອງກັບ ປະເພດຂອງຜົນຜະລິດ

(ເອກະສານແນບຕິດ II-6: ຕົວຢ່າງແບບຟອມຄຳຖາມການສຳຫຼວດຕະຫຼາດ)

## 2. ການເລືອກພືດ

1: ແຈກຢາຍແບບຟອມການເລືອກພືດໃຫ້ຊາວນາທຸກຄົນ ຫຼື ຂຽນໃສ່ເຈ້ຍ A0 ເພື່ອໃຫ້ທຸກຄົນໄດເຫັນ

2: ຊາວນາທຸກຄົນຕື່ມແບບຟອມໂດຍອີງໃສ່ຂໍ້ມູນຈາກການສຳຫຼວດ ພ້ອມທັງຂໍ້ມູນອື່ນໆກ່ຽວກັບຕົ້ນທຶນການຜະລິດທີ່ແນະນຳໂດຍພະນັກງານ ເມືອງ ແລະ ແຂວງ.

3: ຈັດລຽງລຳດັບ

* ຕົວຢ່າງແບບຟອມການເລືອກພືດມີດັ່ງຕໍ່ໄປນີ້;

(ເອກະສານແນບຕິດ II-6: ແບບຟອມຕົວຢ່າງການສຳຫຼວດຕະຫຼາດ)

| ພືດ | ເດືອນປູກ | ໄລຍະສຳລັບການຜະລິດ | ບັນຫາທີ່ພົບສຳລັບການຜະລິດ | ຜົນຜະລິດສະເລ່ຍຕໍ່ 1 ຕາແມັດ (Kg) | ລາຄາສະເລ່ຍ (ກີບ/kg) | ລາຍຮັບລວມຕໍ່ 1ຕາແມັດ | ຕົ້ນທຶນການຜະລິດຕໍ່ 1 ຕາແມັດ | ປະເມີນກຳໄລ | ຕະຫຼາດ / ຜູ້ຊື້ຫຼັກ | ເງື່ອນໄຂຕະຫຼາດ | ຈັດລຽງລຳດັບ |
|---|---|---|---|---|---|---|---|---|---|---|---|
| ສາລີ | | | | | | | | | | | |
| ໝາກເລັ່ນ | | | | | | | | | | | |
| ຜັກບົ້ງ | | | | | | | | | | | |
| ໝາກເຜັດ | | | | | | | | | | | |
| ໝາກໂມ | | | | | | | | | | | |
| ຜັກສະລັດ | | | | | | | | | | | |

(ຕົວຢ່າງແບບຟອມການຄັດເລືອກພືດ)



### (3) ສ້າງແຜນປູກ

| |
|---|
| 1) ສ້າງແຜນປູກ. |
| 2) ກວດສອບຄວາມຄືບໜ້າຂອງການກະກຽມດິນ. |

(ຄຳອະທິບາຍ)

1) ສ້າງແຜນປູກ ສຳລັບການຜະລິດລະດູດຽວ (ລະດູແລ້ງ ຫຼື ລະດູຝົນ).

1-1) ພະນັກງານແຂວງ ແລະ ເມືອງ ໄດ້ຈັດປະຊຸມຮ່ວມກັບຊາວນາເພື່ອສ້າງແຜນປູກ.

1-2) ຖາມຊາວນາຄືນກ່ຽວກັບຫົວຂໍ້ໃນເມື່ອກ່ອນ "ພືດຊະນິດໃດ ທີ່ເຈົ້າໄດ້ເລືອກ?" "ເຈົ້າໄດ້ລົມຫຍັງແດ່ ກັບຄອບຄົວຂອງເຈົ້າ?"

1-3) ອະທິບາຍ ວິທີການສ້າງແຜນປູກ ໂດຍການເຮັດໃຫ້ເບິ່ງເປັນຕົວຢ່າງກ່ອນ. [ເອກະສານຄັດຕິດ 5]

- ພືດ.
- ເນື້ອທີ່.
- ຕົ້ນທຶນການຜະລິດ.
- ປະເມີນການຂາຍ.
- ປະເມີນຜົນກຳໄລທັງໝົດ.



1-4) ຫຼັງຈາກທີ່ ຊາວນາໄດ້ສ້າງແຜນ, ຖາມຊາວນາ ອີງຕາມຄຳຖາມດັ່ງຕໍ່ໄປນີ້;

- "ເຈົ້າຈະເລີ່ມປູກເມື່ອໃດ?"
- "ເຈົ້າຈື່ຢູ່ບໍ? ວ່າຄວນຈະໃສ່ຝຸ່ນໝັກ ປະສົມລົງໃນດິນເມື່ອໃດ?"
- "ເຈົ້າຮູ້ຢູ່ບໍ? ວ່າຕ້ອງການໃສ່ຝຸ່ນໝັກຫຼາຍປານໃດ? ອີງຕາມແຜນປູກຂອງເຈົ້າ?"
- "ເຈົ້າມີຝຸ່ນໝັກພຽງພໍແລ້ວບໍ?"
- "ຖ້າບໍ່, ເຈົ້າຕ້ອງການເຮັດຝຸ່ນໝັກອີກຫຼາຍປານໃດ? ແລະ ເມື່ອໃດ?"

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(ເອກະສານແນບຕິດ II-5: ຕົວຢ່າງແຜນປູກ)



(ເອກະສານແນບຕິດ II-5: ຕົວຢ່າງແຜນປູກ)



(ເອກະສານແນບຕິດ II-5: ຮູບຕົວຢ່າງການວາງແຜນປູກ)



2) ການກວດສອບຄວາມຄືບໜ້າຂອງການກະກຽມດິນ(ການກວດກາ).

2-1) ພະນັກງານແຂວງ ແລະ ເມືອງລົງຢ້ຽມຢາມຊາວນາແຕ່ລະຄົນເພື່ອກວດສອບຄວາມຄືບໜ້າຂອງການກະກຽມ ດິນ ແລະ ການເຮັດຝຸ່ນໝັກ ຂອງພວກເຂົາ.

ຄຳຖາມຕໍ່ໄປນີ້: ສາມາດຊ່ວຍໄດ້;

- "ເຈົ້າໃສ່ຫຍັງແນ່ໃນຝຸ່ນໝັກ?"
- "ເມື່ອໃດຈຶ່ງຈະສາມາດໃຊ້ ຝຸ່ນໝັກໄດ້? ເລີ່ມເຮັດຍາມໃດ?"
- "ເຈົ້າຕ້ອງການເຮັດຝຸ່ນໝັກຫຼາຍປານໃດ?"
- "ເຈົ້າໄດ້ໄຖດິນຢູ່ບໍ? ຖ້າບໍ່, ເມື່ອໃດຈະໄດ້ໄຖ?
- ກວດເບິ່ງຄວາມຮ້ອນ ຂອງຝຸ່ນໝັກນຳກັນ.



ໃນລະຫວ່າງການລົງຕິດຕາມ,ແມ່ນມີຄວາມສຳຄັນຫຼາຍໃນການທົບທວນຄືນວ່າ ຊາວນາໄດ້ຮຽນຮູ້ຫຍັງແດ່ເພື່ອກະຕຸ້ນໃຫ້ເຂົາໄດ້ນຳສິ່ງທີ່ຮຽນຮູ້ໄປນຳໃຊ້ໂດຍການ ຖາມຄຳຖາມ ຫ້າມບອກເຂົາວ່າຕ້ອງເຮັດແນວໃດ? ແຕ່ວ່າໃຫ້ພວກເຂົາໄດ້ຄິດດ້ວຍຕົວ ຂອງເຂົາເອງວ່າເຂົາຕ້ອງການຈະເຮັດຫຍັງ ແລະ ເມື່ອໃດ ຊ່ວຍເຫຼືອຊາວນາໃນການຈົດ ບັນທຶກ.



✧ **ໃນເວລານີ້, ເຮົາຈະຮູ້ວ່າ: ຊາວນາຄົນໃດສົນໃຈປູກຜັກຢ່າງຈິງຈັງ ເຊື່ອໃນສິ່ງທີ່ ພວກເຂົາເຮັດ ແຕ່ບໍ່ແມ່ນໃນສິ່ງທີ່ພວກເຂົາເວົ້າ.**

## ເວລາກວດຝຸ່ນໝັກ ເຮົາຕ້ອງໄດ້ກວດຫຍັງແດ່?

| ລາຍການ | ລາຍລະອຽດ |
|---|---|
| ພື້ນຜິວ | ແຫ້ງ, ອ່ອນ ແລະ ເບົາ |
| ສີ | ສີດຳ |
| ເຊື້ອລາ | ເປັນເສັ້ນໃຍສີຂາວພາຍໃນກະສອບ |
| ອຸນະພູມ | ອຸນະພູມຕໍ່າກວ່າ 60 ອົງສາ |
| ກິ່ນ | ມີກິ່ນຫອມ |

## 3 ແລກປ່ຽນປະສົບການ ແລະ ການສ້າງເຄືອຂ່າຍ

### (1) ຈັດກອງປະຊຸມ ເພື່ອທົບທວນ ກິດຈະກຳຄືນ ພາຍໃນບ້ານ

| |
|---|
| 1) ຈັດກອງປະຊຸມເພື່ອທົບທວນເຄິ່ງລະດູການຜະລິດພາຍໃນບ້ານ<br>2) ຈັດກອງປະຊຸມເພື່ອທົບທວນທ້າຍລະດູການຜະລິດພາຍໃນບ້ານ |

(ຄຳອະທິບາຍ)

1) ຈັດກອງປະຊຸມເພື່ອທົບທວນເຄິ່ງລະດູການຜະລິດພາຍໃນບ້ານ

ໃນເວລາ2ເດືອນຜ່ານໄປຫຼັງຈາກເລີ່ມປູກ, ພະນັກງານຂັ້ນແຂວງ ແລະ ເມືອງຕ້ອງໄດ້ຈັດກອງປະຊຸມຮ່ວມກັບຊາວນາເພື່ອແລກປ່ຽນປະສົບການຂອງການປູກພືດຜັກ ແລະ ຂາຍພາຍໃນບ້ານ.



- ➢ພວກເຂົາໄດ້ປູກຫຍັງແດ່, ພືດຜັກຊະນິດໃດທີ່ປູກງ່າຍ ແລະ ຍາກ?
- ➢ພືດຜັກຊະນິດໃດທີ່ ຂາຍໄດ້ດີ ແລະ ຂາຍຢູ່ໃສ?
- ➢ລາຄາ ແລະ ຂະໜາດຂອງມັດຜັກ.
- ➢ບັນຫາ ແລະ ວິທີທາງແກ້ໄຂສໍາລັບການເພາະປູກ?
- ➢ບັນຫາ ແລະ ວິທີທາງແກ້ໄຂສໍາລັບການຂາຍ?
- ➢ໃຜກໍາລັງປູກ / ຂາຍດີ? ລາວເຮັດແນວໃດ?

| |
|---|
| ກອງປະຊຸມຕ້ອງໄດ້ຈົບດ້ວຍບົດສະຫຼຸບຂອງການສົນທະນາ ແລະ ແຜນໃນຕໍ່ໜ້າ.<br>ເຮົາຈະປັບປຸງ ແນວໃດຕໍ່ໄປ? ພືດຊະນິດໃດທີ່ພວກເຮົາສາມາດ ທົດລອງ? |

**ກໍລະນີສຶກສາ**

ກອງປະຊຸມສະຫຼຸບເຄິ່ງລະດູການຈະຊ່ວຍຊາວນາປັບປຸງທຸລະກິດຂອງເຂົາໄດ້

ມັນແມ່ນເປັນສິ່ງທີ່ສໍາຄັນຫຼາຍໃນການຈັດກອງປະຊຸມສະຫຼຸບເຄິ່ງລະດູການເພື່ອທີ່ຈະໃຊ້ມາດຕະການໃນການແກ້ໄຂກ່ຽວກັບບັນຫາທີ່ເກີດຂຶ້ນໃຫ້ທ່ວງທັນ ນີ້ແມ່ນຕົວຢ່າງ.

ຊາວບ້ານພະນົມໄຊຂາຍຜັກເປັນສ່ວນບຸກຄົນ ແລະ ບໍ່ໄດ້ມີການຕິດຕໍ່ສື່ສານກັນກ່ຽວກັບກິດຈະກໍາການຂາຍຂອງພວກເຂົາເບິ່ງຄືວ່າຊາວນາທຸກຄົນຂາຍດີໃນຂະນະທີ່ຊາວນາຄົນໜຶ່ງຂາຍບໍ່ໄດ້ດີປານໃດ ພະນັກງານເມືອງໄດ້ຈັດກອງປະຊຸມເພື່ອຮ້ອງຊາວນາທຸກຄົນມາຮ່ວມ ແລະ ແລກປ່ຽນປະສົບການຂາຍຂອງແຕ່ລະຄົນ ຫຼັງຈາກນັ້ນພວກເຮົາກໍ່ໄດ້ເຫັນວ່າຊາວນາແຕ່ລະຄົນຂາຍຜັກໃນລາຄາ ແລະ ຂະໜາດຂອງມັດຜັກ ທີ່ແຕກຕ່າງກັນເປັນສອງເທົ່າ ໃນກຸ່ມຊາວນາ.

ໂດຍການແລກປ່ຽນຂໍ້ມູນຂ່າວສານ,ຊາວນາບາງຄົນເຫັນໄດ້ວ່າລາຄາຜັກທີ່ເຂົາຂາຍນັ້ນແມ່ນຖືກເກີນໄປພວກເຂົາຍັງໄດ້ແລກປ່ຽນຂໍ້ມູນຂອງແມ່ຄ້າ ແລະ ໄປຕະຫຼາດພ້ອມກັນກັບຊາວນາເພື່ອສົ່ງເສີມ ແລະ ໂຄສະນາກ່ຽວກັບຜັກສົດ ແລະ ປອດໄພ ຕັ້ງແຕ່ນັ້ນມາ, ກຸ່ມຊາວນາກໍ່ໄດ້ຮັບລາຍການສັ່ງຊື້ຜັກຈາກແມ່ຄ້າຫຼາຍຂຶ້ນ ແລະ ຂາຍໃນລາຄາທີ່ເຂົາໄດ້ຕັ້ງໄວ້.

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

2) ຈັດກອງປະຊຸມ ເພື່ອທົບທວນ ທ້າຍລະດູການຜະລິດ ພາຍໃນບ້ານ

2-1) ໃນເວລາທ້າຍລະດູການຜະລິດ(ທັງລະດູແລ້ງ ແລະ ລະດູຝົນ), ພະນັກງານແຂວງ ແລະ ເມືອງໄດ້ຈັດກອງປະຊຸມຮ່ວມກັບຊາວນາເພື່ອແລກປ່ຽນປະສົບການ ຂອງການປູກຜັກ ແລະ ຂາຍພາຍໃນບ້ານ.



ຫົວຂໍ້ທົບທວນຄືນສາມາດເຮັດຄ້າຍຄືກັບການສະຫຼຸບເຄິ່ງລະດູການຜະລິດ;

- ➢ ພືດຜັກຊະນິດໃດທີ່ປູກງ່າຍ ແລະ ຍາກ?
- ➢ ພືດຜັກຊະນິດໃດທີ່ຂາຍໄດ້ດີ, ຂາຍຢູ່ໃສ ແລະ ລາຄາເທົ່າໃດ?
- ➢ ບັນຫາ ແລະ ວິທີທາງແກ້ໄຂສຳລັບການເພາະປູກ?
- ➢ ບັນຫາ ແລະ ວິທີທາງແກ້ໄຂສຳລັບການຂາຍ?

ຊ່ວຍຊາວນາຕື່ມໃນການຄິດໄລ່

- ➢ ຍອດຂາຍລວມ, ຕົ້ນທຶນການຜະລິດ
- ➢ ກຳໄລໂດຍລວມ



ຊາວນາແມ່ນໄດ້ບັນທຶກການຂາຍ,ແຕ່ວ່າຊາວນາບໍ່ໄດ້ສະຫຼຸບຈຳນວນຂາຍທັງໝົດພາຍໃນເດືອນພະນັກງານແຂວງ ແລະ ເມືອງໄດ້ຊ່ວຍຊາວນາຄິດໄລ່ຍອດລວມທັງໝົດ.

2-2) ປຶກສາຫາລື ສຳລັບລະດູການຕໍ່ໄປ

ຫຼັງຈາກທົບທວນຄືນແລ້ວ, ພະນັກງານແຂວງ ແລະ ເມືອງ, ຈະໄດ້ຖາມຊາວນາສຳລັບການປູກໃນລະດູການຕໍ່ໄປ.

- ➢ ຕ້ອງການຢາກສືບຕໍ່ບໍ? ຖ້າຕ້ອງການ, ພວກເຂົາຈະປູກຫຍັງ ແລະ ຈະເລີ່ມຍາມໃດ?
- ➢ ຕ້ອງການຢາກ ສຳຫຼວດຕະຫຼາດອີກບໍ?
- ➢ ພະນັກງານກະສິກຳແຂວງ ແລະ ອຸດສະຫະກຳ ການຄ້າແຂວງ. ສາມາດແນະນຳການທົດລອງປູກພືດຜັກແບບມີສັນຍາ ຫຼື ພືດທີ່ມີທ່າແຮງສູງ ທາງດ້ານຕະຫຼາດໃຫ້ກັບຊາວນາ.

**ປຶກສາຫາລື ຮ່ວມກັບຊາວນາ ກ່ຽວກັບ ຂັ້ນຕອນຕໍ່ໄປ ອີງຕາມສະພາບການ ແລະ ຄວາມຄິດເຫັນຂອງເຂົາ**

➡ ເຮັດການສຳຫຼວດຕະຫຼາດອີກຄັ້ງ? [ສຳຫຼວດຕະຫຼາດ ແລະ ການເລືອກພືດ ໜ້າທີ:32]

➡ ສ້າງແຜນປູກ ແລະ ຕັ້ງເປົ້າໝາຍ? [ການສ້າງແຜນປູກ ໜ້າທີ:40 ]

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

ກໍລະນີສຶກສາ

## ແນະນຳຜ້າຢາງສຳລັບເຮືອນຮົ່ມໃນການປູກພືດໃນລະດູຝົນ

ຫຼັງຈາກການທົດລອງປູກພືດໃນລະດູແລ້ງ, ໂຄງການໄດ້ຖາມຊາວນາວ່າພວກເຂົາຕ້ອງການຈະສືບຕໍ່ປູກພືດໃນລະດູຝົນບໍ ຊາວນາໃຫ້ຄວາມສົນໃຈໃນການປູກພືດໃນລະດູຝົນໂດຍການນຳໃຊ້ຜ້າຢາງສຳລັບເຮືອນຮົ່ມ ໂຄງການໄດ້ຊ່ວຍ ກ່ຽວກັບການຕອບສະໜອງຜ້າຢາງແບບກູ້ຢືມ ຂັ້ນຕອນລາຍລະອຽດມີດັ່ງນີ້.

ພະນັກງານແຂວງໄດ້ສະເໜີ ກ່ຽວກັບການກູ້ຢືມຜ້າຢາງ 500.000 ກີບຕໍ່20ແມັດ ເຊິ່ງຈະໄດ້ຈ່າຍ ຫຼັງຈາກສິ້ນສຸດລະດູຝົນ.



⇩

ຊາວນາໄດ້ສ້າງແຜນປູກ ສຳລັບລະດູຝົນ 1 ຫຼັງ= 20ແມັດ x 4 ໝານ ແລ້ວຄິດໄລ່ກຳໄລລວມທັງໝົດ.

⇩

ພະນັກງານແຂວງ ໄດ້ກວດກາແຜນ ເພື່ອເບິ່ງວ່າ ຊາວນາສາມາດສ້າງຜົນກຳໄລ ພຽງພໍທີ່ຈະຈ່າຍຄືນໄດ້ ຫຼື ບໍ່



⇩

ຈັດຝຶກອົບຮົມ ການເຮັດເຮືອນຮົ່ມ ໂດຍການສ້າງຕົວຢ່າງໃຫ້ເບິ່ງບ້ານລະຫຼັງ

⇩

ຊາວນາສ້າງໂຄງສ້າງ ຂອງເຮືອນຮົ່ມ ຫຼັງຈາກນັ້ນ ສະເໜີຂໍຜ້າຢາງ



⇩

ພະນັກງານແຂວງ ກວດສອບໂຄງສ້າງ ແລ້ວຈັດສັນ ຜ້າຢາງໃຫ້.

⇩

ການເກັບເງິນ ແລະ ປຶກສາຫາລື ໃນກຸ່ມຊາວນາ ວ່າຈະນຳໃຊ້ ເງິນຈຳນວນນີ້ ເພື່ອຫຍັງ

**ນີ້ບໍ່ແມ່ນກອງທຶນໝູນວຽນ ຈຸດປະສົງຂອງການກູ້ຢືມແມ່ນເພື່ອຕ້ອງການ ຢາກເຫັນວ່າ ຊາວນາຄົນໃດຈິງຈັງຫ້າວຫັນໃນການປູກພືດ ໃນເຮືອນຮົ່ມ .**

## (2) [ຊາວນາພົບປະຊາວນາ] ດຳເນີນການແລກປ່ຽນໃນລະດັບຂັ້ນແຂວງ (1-2 ວັນ)

| |
|---|
| 1) ດຳເນີນການແລກປ່ຽນ ເພື່ອໃຫ້ຊາວນາໄດ້ແລກປ່ຽນປະສົບການຂອງພວກເຂົາ. |
| 2) ນຳພາຊາວນາໄປພົບກຸ່ມຊາວນາຜູ້ທີ່ມີປະສົບການ, ເພື່ອຮຽນຮູ້ເຕັກນິກການປູກ. |

(ຄຳອະທິບາຍ)

1) ດຳເນີນການແລກປ່ຽນເພື່ອໃຫ້ຊາວນາໄດ້ແລກປ່ຽນປະສົບການຂອງພວກເຂົາເຄິ່ງວັນ.

[ເບິ່ງລາຍການ ຂອງຕົວຢ່າງ ຄັດຕິດມາພ້ອມ 6]

1-1) ປຽບທຽບຜົນຜະລິດ.

<u>ໃຫ້ຊາວນາ ຖືຜັກຂອງເຂົາມາພ້ອມ ເພື່ອນຳສະເໜີ.</u>

ໃນລະຫວ່າງການປະຊຸມ, ຊາວນາໄດ້ສະແດງເຖິງວິທີເຮັດມັດຜັກ ແລະ ປຽບທຽບຂະໜາດ ຂອງມັດຜັກ, ລາຄາ ແລະ ຄຸນະພາບ ປ່ອຍໃຫ້ຊາວນາໄດ້ສັງເກດ ແລະ ໂອ້ລົມກັນໃນຊ່ວງການປຽບທຽບພະນັກງານກະສິກຳ ແລະ ປ່າໄມ້ແຂວງ ແລະ ອຸດສາຫະກຳການຄ້າແຂວງ ໄດ້ຂຽນຂໍ້ມູນລົງໃນຕາຕະລາງປຽບທຽບເພື່ອຈັດລະບຽບຂໍ້ມູນ.



ຫຼື

ພວກເຮົາສາມາດແບ່ງຊາວນາອອກເປັນກຸ່ມ ແລ້ວປ່ອຍໃຫ້ພວກເຂົາແລກປ່ຽນກັນພາຍໃນກຸ່ມ ພະນັກງານເມືອງ ເປັນຜູ້ອຳນວຍຄວາມສະດວກ ໃນການຈັດລຽງຂໍ້ມູນລົງໃສ່ໃນແຜ່ນເຈ້ຍ.

| ບ້ານ | ລາຄາ | ນ້ຳໜັກ | ຂະໜາດ | ຄຸນນະພາບ |
|---|---|---|---|---|
| ທ່າປາງທອງ | | | | |
| ໜອງບົວຫຼວງ | | | | |
| ພະນົມໄຊ | | | | |
| ໂພນສີມ | | | | |
| ຕົ້ນແຫນ | | | | |

1-2) ປຽບທຽບ ລາຍໄດ້ຈາກການຂາຍ

ໃຫ້ຊາວນາຂຽນຍອດຂາຍຂອງເດືອນລ່າສຸດລົງໃສ່ໃນເຈ້ຍແລ້ວຕິດໃສ່ກະດານ ເພື່ອປຽບທຽບວ່າ ໃຜມີລາຍຮັບສູງທີ່ສຸດ. ເລືອກຊາວນາ ຜູ້ທີ່ມີລາຍຮັບສູງສຸດ, ຫຼັງຈາກນັ້ນ ຖາມຄຳຖາມດັ່ງຕໍ່ໄປນີ້ ໃນເວລາດຽວກັນ, ປ່ອຍໃຫ້ຊາວນາທັງໝົດປຽບທຽບຕົວເອງ ແລະ ຜູ້ທີ່ມີລາຍຮັບສູງສຸດຈະນຳໃຊ້ຂໍ້ມູນໃສ່ຕາຕະລາງດັ່ງລຸ່ມນີ້.



*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

ລາຍການທີ່ຈະປຽບທຽບ;

| | |
|---|---|
| ຊະນິດພືດຜັກ | |
| ຂາຍຈັກຄັ້ງຕໍ່ອາທິດ | |
| ແຕ່ລະຄັ້ງ ຂາຍເປີດບໍ? | |
| ໄດ້ເຮັດແຜນປູກບໍ? | |
| ວິທີການເລືອກພືດ? | |
| ຂາຍຢູ່ໃສ? | |
| ເນື້ອທີ່ດິນ | |
| ຈຳນວນແຮງງານ | |
| ໃຊ້ເວລາຈັກຊົ່ວໂມງຕໍ່ມື້ | |
| ຕົ້ນທຶນການຜະລິດ | |
| ສິ່ງທີ່ຕ້ອງກະກຽມ ໃນກຸ່ມສະມາຊິກ | |





ປ່ອຍໃຫ້ຊາວນາຊອກຫາການປຽບທຽບລະຫວ່າງຕົວເຂົາເອງ ແລະ ຊາວນາຜູ້ທີ່ມີລາຍຮັບສູງ. ກິດຈະກຳນີ້ ເພື່ອກະຕຸ້ນໃຫ້ຊາວນາ ມີຄວາມພະຍາຍາມຫຼາຍຂຶ້ນ.

✧ ພະນັກງານເມືອງຕ້ອງໄດ້ເຂົ້າຮ່ວມກອງປະຊຸມຮ່ວມກັນກັບຊາວນາ ພະລະບົດບາດຂອງເຂົາ ແມ່ນເພື່ອສະໜັບສະໜູນໃຫ້ຊາວນາໄດ້ຮຽນຮູ້ ແລະ ເຂົ້າຮ່ວມກອງປະຊຸມ ພະນັກງານເມືອງ ແຕ່ລະເມືອງ ຕ້ອງໄດ້ນັ່ງຮ່ວມໂຕະດຽວກັນ ກັບຊາວນາຂອງພວກເຂົາ.

2) ນຳພາຊາວນາໄປພົບກຸ່ມຊາວນາ ຜູ້ທີ່ມີປະສົບການເພື່ອຮຽນຮູ້ເຕັກນິກການປູກເຄື່ອງວັນ).



ນຳພາຊາວນາໄປຢ້ຽມຢາມສວນຜັກຂອງກຸ່ມຜັກອິນຊີບ້ານໂພນສີມ (ຫຼືກຸ່ມຊາວນາຕົວຢ່າງ: ກໍ່ສາມາດພິຈາລະນາໄດ້) ເພື່ອໄປເບິ່ງວິທີການປູກຂອງພວກເຂົາ ແລະ ເງື່ອນໄຂຂອງດິນ ສິ່ງເສີມການຮຽນຮູ້ລະຫວ່າງຊາວນາ.

ເບື້ອງຕົ້ນ, ກຸ່ມປູກຜັກໂພນສີມນຳສະເໜີສວນປູກຜັກໃຫ້ແກ່ຊາວນາຄົນອື່ນ ແລະ ວິທີການປູກຖ້າມີເວລາພຽງພໍ, ພວກເຮົາສາມາດໃຫ້ເວລາຊາວນາໄດ້ເລາະສັງເກດພາຍໃນສວນ.

ຫຼັງຈາກສັງເກດ ສວນຜັກແລ້ວ, ພະນັກງານແຂວງຕ້ອງໄດ້ອຳນວຍຄວາມສະດວກໃຫ້ຊາວນາໄດ້ປຶກສາຫາລືໃນສິ່ງທີ່ເຂົາຄົ້ນພົບ ແລະ ສະຫຼຸບສັງລວມໃນສິ່ງທີ່ເຂົາໄດ້ຮຽນຮູ້.

ຕົວຢ່າງລາຍການສອບຖາມ;

- ການກະກຽມດິນ
- ດິນມີຄວາມແຕກຕ່າງຈາກດິນຂອງເຈົ້າຄືແນວໃດ
- ການເພີ່ມສານອາຫານ, ສານອາຫານ ປະເພດໃດ ທີ່ຕ້ອງການເພີ່ມ
- ວິທີການປ້ອງກັນແມງໄມ້
- ພວກເຂົາເບິ່ງແຍງພືດຜັກແນວໃດ
- ພວກເຂົາຫົດນ້ຳແນວໃດ(ເວລາ, ຈຳນວນ, ອື່ນໆ)
- ແນວພັນຊະນິດໃດທີ່ພວກເຂົານຳໃຊ້
- ເຂົາມີການວາງແຜນໃນການປູກ ແນວໃດ
- ມີເຕັກນິກໃນການປູກພືດໂດຍສະເພາະບໍ





**ຂໍ້ດີ**

ຫຼັງຈາກການແລກປ່ຽນ ລະຫວ່າງຊາວນາ ກັບຊາວນາ ສາມາດເຫັນໄດ້ ວ່າຊາວນາເລີ່ມ ມີການປ່ຽນແປງ

ຊາວນາບ້ານໜອງບົວຫຼວງ ໄດ້ຈັດກອງປະຊຸມຮ່ວມກັບສະມາຊິກພາຍໃນກຸ່ມຫຼັງຈາກມີການແລກປ່ຽນ ກັບຊາວນາກຸ່ມອື່ນ ແລະ ໄດ້ແຕ່ງຕັ້ງ ທີມງານການຕະຫຼາດເພື່ອລວບລວມພືດຜັກຈາກສະມາຊິກພາຍໃນກຸ່ມ ແລະ ເອົາໄປຂາຍ ຢູ່ຕະຫຼາດ.

ຊາວນາຫຼາຍຄົນ ຢາກໄດ້ຜ້າຢາງຕື່ມ ເພື່ອຂະຫຍາຍເນື້ອທີ່ປູກ.

ຊາວນາເມືອງທ່າປາງທອງ ເລີ່ມຂາຍຜັກ ຂອງພວກເຂົາ ຫຼາຍກ່ວາໜຶ່ງຄັ້ງຕໍ່ອາທິດ.

*ຜູ້ຈັດຕັ້ງປະຕິບັດ (ກປຂ, ກປມ,ອຄ)*

(**ເອກະສານແນບຕິດ** II-6: ຕົວຢ່າງລາຍການກິດຈະກຳ)

**ຊາວນາພົບປະຊາວນາ - ປະຊຸມເພື່ອທົບທວນຄືນ ກິດຈະກຳເຄິ່ງລະດູການ**

ຈຸດປະສົງ:

ເພື່ອຮຽນຮູ້ນຳຊາວນາກຸ່ມອື່ນ ທີ່ມີສະພາບການທີ່ຄ້າຍຄືກັນ ແລະ ເພື່ອປັບປຸງເຕັກນິກການປູກ, ທັກສະໃນການເລືອກພືດ ເຊັ່ນດຽວກັນກັບ ການສ້າງເຄືອຂ່າຍໃນການຂາຍ.

ຄວາມເປັນມາ:

ຊາວນາໃນເຂດໂຄງການເປົ້າໝາຍ ໄດ້ເລີ່ມປູກໃນຊ່ວງລະດູຝົນ ແລະ ເລີ່ມໄດ້ເກືອບ 2 ເດືອນແລ້ວ. ຊາວນາຈຳນວນໜຶ່ງ ສາມາດປູກ ແລະ ຂາຍໄດ້ ແຕ່ຊາວນາຈຳນວນໜຶ່ງທີ່ຍັງປະສົບບັນຫາ ແລະ ຢາກຮູ້ວ່າ ຊາວນາກຸ່ມອື່ນ ເຂົາມີວິທີການແນວໃດ. ໃນໂອກາດນີ້ ໂຄງການຈຶ່ງໄດ້ຈັດໃຫ້ມີການ ພົບປະແລກປ່ຽນປະສົບການ ກ່ຽວກັບການປູກພືດໃນລະດູຝົນ ພ້ອມທັງຮຽນຮູ້ ການຂາຍອີກດ້ວຍ.

ວັນທີ: 01/08/2019 – 02/08/2019

ຜູ້ເຂົ້າຮ່ວມ: ທັງໝົດມີ ຊາວນາ 32 ທ່ານ + ພະນັກງານ ກະສິກຳເມືອງ 5 ທ່ານ

- ຊາວນາເມືອງພະລານໄຊ 6 ທ່ານ + ພະນັກງານ ກະສິກຳເມືອງ
- ຊາວນາເມືອງຊົນນະບູລີ 7 ທ່ານ + ພະນັກງານ ກະສິກຳເມືອງ 2 ທ່ານ
- ຊາວນາເມືອງທ່າປາງທອງ 9 ທ່ານ + ພະນັກງານ ກະສິກຳເມືອງ
- ຊາວນາກຸ່ມບ້ານໂພນສິມ 10 ທ່ານ
- ຊາວນາບ້ານຕົ້ນແຫນ 2 ທ່ານ + ພະນັກງານ ກະສິກຳເມືອງ

ຕາຕະລາງກິດຈະກຳ

| ເວລາ | ກິດຈະກຳ | ໝາຍເຫດ |
|---|---|---|
| ມື້ທີ1: 01/08/2019 | | |
| 12:00 – 13:00 | ຮັບປະທານອາຫານທ່ຽງ | |
| 13:00 – 13:00 | ກ່າວເປີດກອງປະຊຸມ /ແນະນຳແຂກ | ຫ້ອງປະຊຸມ ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| 13:30 – 14:00 | ຢ້ຽມຢາມຕະຫຼາດກຸ່ມໂພນສິມ | |
| 14:15 – 16:30 | ແລກປ່ຽນປະສົບການ ແລະ ປຶກສາຫາລື | ຫ້ອງປະຊຸມ ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| 17:00 | ຮັບປະທານອາຫານຄ່ຳ | |
| ມື້ທີ2: 02/08/2019 | | |
| 08:00 – 08:30 | ເດີນທາງໄປສວນປູກຜັກບ້ານໂພນສິມ | |
| 08:30 – 09:30 | ໃຫ້ຄຳແນະນຳກ່ຽວກັບການປູກຜັກ | |
| 09:30 – 10:15 | ເລາະເບິ່ງສວນປູກຜັກ | |
| 10:30 – 11:30 | ສະຫຼຸບຄືນກ່ຽວກັບສິ່ງທີ່ໄດ້ຮຽນຮູ້ | |
| 11:30 – 12:00 | ກັບສະຫວັນນະເຂດ | |
| 12:00 – 13:00 | ຮັບປະທານອາຫານທ່ຽງ | |

(**ເອກະສານແນບຕິດ** II-6: ຕົວຢ່າງລາຍການກິດຈະກຳ)

ມື້ທີ1 ການຕະຫຼາດ ແລະ ການຂາຍ:

ຫົວຂໍ້ທີ1: ແລກປ່ຽນປະສົບການກ່ຽວກັບການຂາຍຜັກ(1ຊົ່ວໂມງ)

ຈຸດປະສົງ: ເພື່ອຊ່ວຍໃຫ້ຊາວນາໄດ້ຮັບຮູ້ ຄຸນຄ່າຂອງຜະລິດຕະພັນ ຂອງພວກເຂົາ ແລະ ເພີ່ມຄວາມໝັ້ນໃຈ ໃນການຂາຍຜັກຂອງພວກເຂົາ.

- ສິ່ງນີ້ສາມາດຊ່ວຍໃຫ້ຊາວນາ ສາມາດຕໍ່ລອງລາຄາກັບຜູ້ຊື້ໄດ້
- ສິ່ງນີ້ສາມາດຊ່ວຍໃຫ້ຊາວນາ ໄດ້ຄິດວ່າ ຈະຂາຍຫຍັງ, ຂາຍແບບໃດ ແລະ ຂາຍຢູ່ໃສ.

ກິດຈະກຳ:

ໃຫ້ຊາວນາໄດ້ຊອກຫາ ຄວາມແຕກຕ່າງທາງດ້ານຄຸນຄ່າ ຂອງພືດຜັກທີ່ຂາຍໃນຕະຫຼາດ ໂດຍປຽບທຽບກັບ ພືດຜັກທີ່ຊາວນານຳໄປຂາຍ.

(1) ໃຫ້ຊາວນານຳພືດຜັກມາ ຕາມລາຍການດັ່ງລຸ່ມນີ້:

- ຜັກບົ້ງ
- ຜັກບົ່ວ
- ຫອມປ້ອມ
- ສະຫຼັດ
- ກະລຽບ, ຊູກີນີ, ໝາກເຜັດ, ໝາກເຂືອ ແລະ ອື່ນໆ.

(2) ໃຫ້ຊາວນາໄດ້ປຽບທຽບຜັກຂອງແຕ່ລະເມືອງ

ຕົວຢ່າງການປຽບທຽບ

| ຜັກບົ້ງ | ນ້ຳໜັກຂອງມັດຜັກ | ຂະໜາດມັດຜັກ | ລາຄາ | ຄຸນນະພາບ | ອື່ນໆ |
|---|---|---|---|---|---|
| ບ້ານໂພນສິມ | | | | | |
| ທ່າປາງທອງ | | | | | |
| ພະລານໄຊ | | | | | |
| ຕົ້ນແຫນ | | | | | |
| ຊົນນະບູລີ | | | | | |

(3) ຫຼັງຈາກທີ່ຊາວນາໄດ້ປຽບທຽບ, ຖາມຄຳຖາມ ແລະ ຄຳເຫັນຈາກຊາວນາ.

ຄຳຖາມຕົວຢ່າງ:

- ລາຄາຜັກຂອງກຸ່ມບ້ານໂພນສິມ ແລະ ເມືອງອື່ນ ມີຄວາມແຕກຕ່າງກັນຫຼາຍປານໃດ?
- ຄວາມແຕກຕ່າງລະຫວ່າງ ຂະໜາດຂອງມັດຜັກ?
- ວິທີຕໍ່ລອງເລື່ອງລາຄາ?

(**ເອກະສານແນບຕິດ** II-6: ຕົວຢ່າງລາຍການກິດຈະກຳ)

ຫົວຂໍ້ທີ 2: ການປຽບທຽບ ລາຍໄດ້ຈາກການຂາຍ(1 ຊົ່ວໂມງ)

- ໃຫ້ຊາວນາຖືປື້ມບັນທຶກການຂາຍມານຳ

(1) ໃຫ້ຊາວນາ ຂຽນຍອດຂາຍ ຂອງເດືອນລ່າສຸດ, ຍົກຕົວຢ່າງ ຍອດຂາຍຂອງເດືອນ6 ໂດຍບໍ່ຈຳເປັນຕ້ອງຂຽນຊື່ລົງ

ແລ້ວຂຽນໃສ່ເຈ້ຍAo ເພື່ອປຽບທຽບ.

(2) ມີຫຍັງແຕກຕ່າງລະຫວ່າງຊາວນາ ຜູ້ທີ່ມີລາຍຮັບສູງ ແລະ ຊາວນາຄົນອື່ນ.

ຊາວນາບ້ານໂພນສີມ

| | |
|---|---|
| ຊະນິດພືດຜັກ | |
| ຂາຍຈັກຄັ້ງຕໍ່ອາທິດ | |
| ແຕ່ລະຄັ້ງ ຂາຍເທົ່າໃດ? | |
| ໄດ້ເຮັດແຜນປູກບໍ? | |
| ວິທີການເລືອກພືດ? | |
| ຂາຍຢູ່ໃສ? | |
| ເນື້ອທີ່ດິນ | |
| ຈຳນວນແຮງງານ | |
| ໃຊ້ເວລາຈັກຊົ່ວໂມງຕໍ່ມື້ | |
| ຕົ້ນທຶນການຜະລິດ | |
| ສິ່ງທີ່ຕ້ອງກະກຽມ ໃນກຸ່ມສະມາຊິກ | |

ຫົວຂໍ້ທີ3: ແຜນຕໍ່ໜ້າ(30 ນາທີ)

(1) ໃຫ້ຊາວນາໄດ້ຄິດວ່າ ເຂົາສາມາດປັບປຸງໃນການເພີ່ມລາຍຮັບຂອງເຂົາ ອີງຕາມສິ່ງທີ່ຊາວນາໄດ້ຮຽນຮູ້ໃນຫົວຂໍ້ 1 & 2.

(2) ສ້າງແຜນຈັດຕັ້ງປະຕິບັດໂດຍຫຍໍ້

- ການເລືອກພືດ?
- ແຜນປູກ?
- ຂາຍຢູ່ໃສ / ຂາຍແບບໃດ?
- ເຂົາຈະເລີ່ມເຮັດຫຍັງເລີ່ມຈາກມື້ອື່ນເປັນຕົ້ນໄປ?

ຫົວຂໍ້ທີ 3 ເອົາໃຫ້ເປັນອຽກບ້ານ, ທີມງານການຕະຫຼາດ ຈະໄດ້ລົງຕິດຕາມ ໂດຍການລົງຢ້ຽມຢາມຊາວນາ

(**ເອກະສານແນບຕິດ** II-6: ຕົວຢ່າງລາຍການກິດຈະກໍາ)

**<u>ມື້ທີ2 ເຕັກນິກກະສິກໍາ:</u>**

(1) ນໍາພາເບິ່ງສວນປູກຜັກກຸ່ມບ້ານໂພນສີມ(45 ນາທີ)

➢ ກຸ່ມບ້ານໂພນສີມໄດ້ແນະນໍາກ່ຽວກັບ

- ການເຮັດຝຸ່ນໝັກ
- ໝານຜັກ( ສະຫຼັດ, ຊູກີນີ, ຫົວລາດິດ, ຖົ່ວຝັກຍາວ ແລະ ອື່ນໆ
- ນໍ້າໝັກຊີວະພາບ

(2) ຊາວນາເລາະເບິ່ງສວນປູກຜັກອິນຊີຂອງກຸ່ມບ້ານໂພນສີມ(45 ນາທີ)

ກ່ອນເລາະເບິ່ງສວນປູກ, ຖາມຊາວນາກ່ອນວ່າ ແມ່ນຫຍັງທີ່ຈະຊ່ວຍເພີ່ມລາຍຮັບຂອງທ່ານໄດ້.

(3) ສະຫຼຸບສິ່ງທີ່ໄດ້ຮຽນຮູ້(1 ຊົ່ວໂມງ)

| | |
|---|---|
| ການກະກຽມດິນ | |
| ການໃຫ້ສານອາຫານແກ່ພືດຜັກ | |
| ວິທີປ້ອງກັນແມງໄມ້ | |
| ວິທີຮັກສາ | |
| ວິທີໃຫ້ນໍ້າ | |
| ແນວພັນ | |
| ແຜນປູກ | |

## III ການເພີ່ມສະມັດຕະພາບເຂົ້າ

### 1 ສ້າງຄວາມເຂັ້ມແຂງດ້ານເຕັກນິກການປູກເຂົ້າຜ່ານ ນະໂຍບາຍກູ້ຢືມເມັດພັນ ແລະ ປຸ໋ຍ

### (1) ພາບລວມ

| |
|---|
| (1) ກປຂ ໃຫ້ຊາວນາເປັນກູ້ຢືມເມັດພັນ ແລະ ປຸ໋ຍ.<br>(2) ຊາວນາຜູ້ທີ່ສະໝັກຂໍກູ້ຢືມເມັດພັນ ແລະ ປຸ໋ຍ ຕ້ອງໄດ້ຮັບການຝຶກອົບຮົມ 4 ຄັ້ງ. |

(ອະທິບາຍ)

(1) ຂັ້ນຕອນການຈັດຕັ້ງປະຕິບັດ:

"ນະໂຍບາຍການກູ້ຢືມເມັດພັນ ແລະ ປຸ໋ຍ" ແມ່ນລະບົບການສະໜອງເມັດພັນເຂົ້າ ແລະ ປຸ໋ຍໃຫ້ຊາວນາພາຍໃນໂຄງການເປົ້າໝາຍ ເພື່ອປັບປຸງເຕັກນິກການຜະລິດ ແລະ ເພີ່ມຜົນຜະລິດເຂົ້າ.

<ລະບົບຂອງນະໂຍບາຍການກູ້ຢືມ>

ຈັດກອງປະຊຸມຂັ້ນບ້ານເພື່ອປະກາດ ແລະ ອະທິບາຍນະໂຍບາຍໃຫ້ປະຊາຊົນ ( ກັນຍາ-ຕຸລາ)
ຈັດຝຶກອົບຮົມຄັ້ງທີ 1 ພ້ອມແຈກຢາຍເມັດພັນ ແລະ ປຸ໋ຍຮອງພື້ນ (ພະຈິກ)
ຈັດຝຶກອົບຮົມຄັ້ງທີ 2 ພ້ອມແຈກຢາຍປຸ໋ຍເລັ່ງ (ທັນວາ-ມັງກອນ)
ຈັດຝຶກອົບຮົມຄັ້ງທີ 3 ພ້ອມແຈກຢາຍປຸ໋ຍເລັ່ງ (ມັງກອນ-ກຸມພາ)
ຈັດຝຶກອົບຮົມຄັ້ງທີ 4 ວິທີການຫຼັງການເກັບກ່ຽວ (ມີນາ)
ຫຼັງຈາກສິ້ນສຸດການຜະລິດຊາວນາໃຊ້ຄ່າກູ້ຢືມຄືນເປັນເງິນສົດ (ພຶດສະພາ-ມິຖຸນາ)





< ຈຸດສຳຄັນ >

ເພື່ອເຜີຍແຜ່ໃຫ້ຊາວນາກ່ຽວກັບເຕັກນິກການປູກເຂົ້າຕ້ອງຈັດຝຶກອົບຮົມໃຫ້ຊາວນາ, ພະນັກງານ ກປມ ຕ້ອງໄດ້ແຈກຢາຍເມັດພັນ ແລະ ປຸ໋ຍໃນການຝຶກແຕ່ລະຄັ້ງຄື: ຄັ້ງທີ 1, ຄັ້ງທີ 2 ແລະ ຄັ້ງທີ 3

*ຜູ້ປະຕິບັດ: ກປຂ (ພງ ສົ່ງເສີມ), ກປມ (ພງ ສົ່ງເສີມ)*

## (2) ຈັດກອງປະຊຸມຮ່ວມກັບຊາວນາ

| |
|---|
| (1) ກອງປະຊຸມເພື່ອອະທິບາຍກ່ຽວກັບເງື່ອນໄຂ ແລະ ວິທີການສະໝັກນະໂຍບາຍນີ້<br>(2) ຕ້ອງມອບແບບຟອມສະໝັກນະໂຍບາຍໃຫ້ຄະນະບ້ານຫຼືກຸ່ມຊາວນາເປັນຜູ້ຮັບຜິດຊອບ |

(ອະທິບາຍ)

**1) ຈຸດປະສົງ**

a. ເພື່ອປະກາດ "ນະໂຍບາຍກູ້ຢືມເມັດພັນ ແລະ ປຸ໋ຍ ໃນລະດູຝົນ 2020" ໃຫ້ຄະນະບ້ານ ແລະ ຄະນະກຸ່ມນຳໃຊ້ນ້ຳ. ການປະກາດນະໂຍບາຍດັ່ງກ່າວລວມມີລາຄາແນວພັນເຂົ້າ,ປຸ໋ຍເພື່ອໃຫ້ຊາວນາຮັບຮູ້ຂໍກູ້ຢືມ.

b. ເພື່ອສະເໜີໃຫ້ຄະນະດັ່ງກ່າວເຜີຍແຜ່ການສະໝັກ (ເອກະສານຄັດຕິດ) ໃຫ້ຊາວນາພາຍໃນໂຄງການເປົ້າໝາຍ.

c. ເພື່ອສະເໜີໃຫ້ຄະນະດັ່ງກ່າວຈັດ "ກອງປະຊຸມຂັ້ນບ້ານ" ເພື່ອເຜີຍແຜ່ ແລະ ຊ່ວຍຊາວນາໃນການຕື່ມແບບຟອມການສະມັກ ພ້ອມທັງເກັບແບບຟອມຈາກຊາວນາແຕ່ລະຄົນຄືນເພື່ອສັງລວມ.

**2) ວິທີຈັດ**

a. ກອງປະຊຸມອະທິບາຍໃຫ້ຄະນະບ້ານ/ກຸ່ມຜູ້ນຳໃຊ້ນ້ຳ: ກປຂ ແລະ ກປມ ລົງລວມກັບຄະນະບ້ານເພື່ອອະທິບາຍເນື້ອໃນຂອງຍະໂຍບາຍດັ່ງ.

b. ກອງປະຊຸມຂັ້ນບ້ານ ຈັດໂດຍບ້ານເອງ: ຄະນະບ້ານຮຽກຊາວບ້ານທັງໝົດມາປະຊຸມ ແລະ ອະທິບາຍນະໂຍບາຍໃຫ້ລູກບ້ານ ໂດຍມີ ພງ ກປມ ເປັນຜູ້ສັງເກດການ

c. ໄລຍະເວລາໃນການເປີດຮັບສະມັກແມ່ນປະມານ 3 ອາທິດ ຫຼັງຈາກຄະນະບ້ານປະຊຸມກັບຊາວບ້ານ

**3) ສິ່ງທີ່ຕ້ອງໄດ້ຄຳນຶງສຳລັບທັງສອງກອງປະຊຸມ**

a. ພວກເຮົານັບຖືໃນແນວທາງການມີສ່ວນຮ່ວມຂອງຊາວນາເປົ້າໝາຍ

b. ພວກເຮົານຳໃຊ້ປະສົບການຂອງການປະຕິບັດການເຮັດນະໂຍບາຍດັ່ງກ່າວໃນລະດູແລ້ງປີ 2018/19

c. ຜູ້ສະໝັກຂໍກູ້ຢືມຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມໃນແຕ່ລະຄັ້ງທີ່ໂຄງການຈັດຂຶ້ນ

< ຈຸດສຳຄັນ >

- ການຈັດກອງປະຊຸມກັບຊາວນາຄວນຈັດໃນມື້ທີ່ສະດວກສະບາຍ ຈັດໃນບ້ານ ແລະ ບ້ານຕ້ອງຜູ້ຕົກລົງເຫັນດີ.
- ໃຫ້ຊາວນາຜູ້ທີ່ກູ້ຢືມໃນລະດູກ່ອນ ສະເໜີຜົນໄດ້ຮັບທີ່ດີໃຫ້ຊາວນາຄົນອື່ນ.

*ຜູ້ປະຕິບັດ: ກປຂ (ພງ ສົ່ງເສີມ), ກປມ (ພງ ສົ່ງເສີມ)*

(ເອກະສານຄັດຕິດທີ III-1: ແບບຟອມສະມັກ)

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**໚໚໚໚໚**

**ເມືອງ........................**

**ບ້ານ........................**

**<u>ສັນຍາການກູ້ຢືມ (ເມັດພັນເຂົ້າ ແລະ ປຸ໋ຍ)</u>**

ວັນທີ:…………

**1. ຜູ້ໃຫ້ກູ້ຢືມ ແລະ ຜູ້ກູ້ຢືມ**

ຜູ້ໃຫ້ກູ້ຢືມ

| ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ.......................... | | ໂຄງການພັດທະນາກະສິກຳ ແບບມີສ່ວນຮ່ວມ |
|---|---|---|
| ຜູ້ຮັບຜິດຊອບ | | |
| ທີ່ຢູ່ | | |
| ເບີໂທລະສັບ | | |

ຜູ້ກູ້ຢືມ (ຊາວນາ)

| | |
|---|---|
| ຊື່ | |
| ບ້ານ | |
| ເບີໂທລະສັບ | |

2 ປັດໄຈການຜະລິດ

(1) ແນວພັນເຂົ້າ

| ແນວພັນເຂົ້າ | ຈຳນວນ(ກິໂລ) | ລາຄາ (ກີບ/ກິໂລ) | ລວມເປັນເງິນ (ກີບ) | ເນື້ອທີ່(ຮຕ) |
|---|---|---|---|---|
| | | | | |
| | | | | |
| | | | | |
| | | | (ລວມເປັນເງິນທັງໝົດ) | |

(2) ປຸ໋ຍ

| ຊື່ປຸ໋ຍ | ຈຳນວນ (ກິໂລ) | ລາຄາ (ກີບ/ກິໂລ) | ລວມເປັນເງິນ (ກີບ) |
|---|---|---|---|
| | | | |
| | | | |
| | | | |
| | | | (ລວມເປັນເງິນທັງໝົດ) |

3 ເງື່ອນໄຂການກູ້ຢືມ

(1) ຊາວກະສິກອນທຸກຄົນທີ່ຢືມແນວພັນເຂົ້າ ແລະ ປຸ໋ຍ, ຕ້ອງໄດ້ **ເຂົ້າຮ່ວມການຝຶກອົບຮົມ** ຂອງທີມງານສົ່ງເສີມການປູກຝັງ ທີ່ຈັດຂຶ້ນໂດຍ ໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ ແລະ ປະຕິບັດຕາມຄຳແນະນຳຂອງທີມງານດັ່ງກ່າວ.

(2) ຄະນະກຸ່ມ ເປັນຜູ້ຮັບຜິດຊອບ **ໃນການເກັບເງິນ** ແລ້ວສົ່ງໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

(3) ຊາວກະສິກອນທີ່ຢືມແນວພັນພັນເຂົ້າ ແລະ ປຸ໋ຍ ຕ້ອງຄືນຄ່າກູ້ຢືມໃຫ້ **ຄະນະກຸ່ມ** ຫຼັງຈາກເກັບກ່ຽວຜົນຜະລິດແລ້ວ ພາຍໃນໄລຍະ 2 ອາທິດ.

(4) ຫຼັງຈາກການເກັບກ່ຽວແລ້ວ, ຖ້າຊາວນາ **ບໍ່ຄືນຄ່າກູ້ຢືມ** ແນວພັນເຂົ້າ ແລະ ປຸ໋ຍ ໃຫ້ ພະແນກກະສິກຳ ແລະ ປາໄມ້ແຂວງ ຕາມກຳນົດເວລາ(ພາຍໃນໄລຍະ 2 ອາທິດ), ຊາວນາຕ້ອງຈ່າຍເປັນເຂົ້າຈຳນວນ 840 ກລ.ຕາມລາຍທີ່ໄດ້ກູ້ຢືມໄປ

(6) ເມື່ອຮັບເມັດພັນເຂົ້າ ແລະ ປຸ໋ຍ ໄປແລ້ວ **ຫ້າມຂາຍ** ແນວພັນເຂົ້າ ແລະ ປຸ໋ຍ ໃຫ້ບຸກຄົນອື່ນເດັດຂາດ.

ຜູ້ໃຫ້ກູ້ ຜູ້ກູ້ຢືມ

ພະຍານ (ນາຍບ້ານ) ຜູ້ລວບລວມເງິນຈາກຊາວນາ (ຄະນະກຸ່ມ)

❖ ເກັບກຳແບບຟອມສະໝັກ ແລະ ເລີ່ມຂັ້ນຕອນການຈັດຊື້-ຈັດຈ້າງ

- ລາຄາການກູ້ຢືມແມ່ນອີງໃສ່ລາຄາຕະຫຼາດ
- ກປຂ ເປັນຜູ້ຈ່າຍຄ່າຂົນສົ່ງປຸ໋ຍ ແລະ ແນວພັນເຂົ້າ

(ອະທິບາຍ)

1) ລາຄາກູ້ຢືມ (ສຳລັບລະດູແລ້ງ 2018-2019 - ລະດູຝົນ 2019 ແລະ ລະດູແລ້ງ 2019-2020

ໃນ 2 ລະດູທີ່ຜ່ານມາລາຄາຂອງເມັດພັນ, ປຸ໋ຍສູດ (N:P:K=15-15-15) ແລະ ປຸ໋ຍຢູເຣຍ (46-0-0) ແມ່ນເທົ່າກັນກັບລາຄາຫ້ອງຕະຫຼາດ ຫຼື ຫຼຸດລາຄາຫ້ອງຕະຫຼາດ 10,000 ກີບຕໍ່ສອບ. ໃນລະດູຝົນ 2020. ກປຂ ໄດ້ໃຫ້ລາຄາຕາມລາຍລະອຽດຄື:

(ເມັດພັນ)

| ລາຄາທີ່ໃຫ້ຊາວນາກູ້ຢືມ | ລາຄາທີ່ຊື້ຈາກສູນ |
|---|---|
| 7,000 kip/kg | 7,000 kip/kg |

ທາງໂຄງການແນະນຳ: ເມັດພັນ R3, 60kg / ha

(ປຸ໋ຍ)

| ຊະນິດປຸ໋ຍ | ລາຄາໃຫ້ຊາວນາກູ້ຢືມ | ລາຄາທີ່ຊື້ມາ |
|---|---|---|
| ປຸ໋ຍສູດ (15-15-15) | 5,000 kip/kg | 5,000 kip/kg |
| ປຸ໋ຍຢູເຣຍ (46-0-0) | 3,800kip/kg | 3,800kip/kg |

ໂຄງການແນະນຳ: ຮອງພື້ນ 150kg /ha, ປຸ໋ຍເລັ່ງ (ຢູເຣຍ) 60kg /ha

2) ຄ່າຂົນສົ່ງ: ແມ່ນທາງໂຄງການຮັບຜິດຊອບ

ກປຂ ຈ່າຍຄ່າຂົນສົ່ງ ແລະ ກປຂ ເປັນຜູ້ນຳສົ່ງເມັດພັນ ແລະ ປຸ໋ຍລົງໃຫ້ບ້ານ.

< ຈຸດສຳຄັນ >

- ລາຄາໃຫ້ກູ້ຢືມແມ່ນເທົ່າລາຄາຕະຫຼາດ ເພື່ອເຜີຍແຜ່ເຕັກນິກການປູກເຂົ້າ ແລະສ້າງຄວາມຄວາມຍືນຍົງ.
- ຊາວນາບາງຈຳນວນທີ່ຂໍກູ້ຢືມສະເພາະປຸ໋ຍເລັ່ງ (46-0-0) ແມ່ນບໍ່ໄດ້ຮັບການອະນຸມັດ ເນື່ອງຈາກວ່າບໍ່ຖືກຕ້ອງຕາມເຕັກນິກທີ່ທາງໂຄງການແນະນຳ.




ການຈັດສົ່ງແນວພັນຢູ່ເມືອງໄຊບຸລີ

*ຜູ້ປະຕິບັດ: ກປຂ (ພງ ສົ່ງເສີມ, ແຜນການ)*

## (3) ການຝຶກອົບຮົມ

### 1) ຈັດຝຶກອົບຮົມຄັ້ງທີ 1 ພ້ອມແຈກຢາຍເມັດພັນ ແລະ ປຸ໋ຍຮອງພື້ນ

| |
|---|
| 1) ຫົວຂໍ້ການຝຶກອົບຮົມແມ່ນ ເຕັກນິກໂດຍລວມກ່ຽວກັບການປູກເຂົ້າ ນັບແຕ່ການກະກຽມດິນ ເຖິງການປັກດຳ.<br>2) ການແຈກຢາຍແມ່ນສະເພາະແນວພັນ ແລະ ປຸ໋ຍຮອງພື້ນເທົ່ານັ້ນ. |

(ອະທິບາຍ)

1) ການຝຶກອົບຮົມຄັ້ງທີ 1

ໂຄງການຈັດຝຶກອົບຮົມ 4 ຄັ້ງໃຫ້ຊາວນາທີ່ເຂົ້າຮ່ວມນະໂຍບາຍ ເພື່ອໃຫ້ມີການຜະລິດເຂົ້າຢ່າງມີສະຖຽນລະພາບ ແລະ ໄດ້ຮັບຜົນຜະລິດສູງ. ສຳລັບນາປີ, ການຝຶກອົບຮົມຄັ້ງທີ 1 ແມ່ນຈັດໃນເດືອນມີຖຸນາ (ໃນກໍລະນີນາແຊງແມ່ນເດືອນ: ພະຈິກ)

**ເນື້ອໃນການຝຶກອົບຮົມ**

a) ທວນຄືນລະດູແລ້ງປີ  2018/19

b) ອະທິບາຍໂດຍລວມກ່ຽວກັບປະຕິທິນການປູກເຂົ້າ (ເບິ່ງ ເອກະສານຊ້ອນທ້າຍ III-2)

c) ການຄັດເລືອກເມັດພັນ: ຄັດດ້ວຍນ້ຳເກືອ (ຄວາມໜາແໜ້ນຂອງນ້ຳ 1.06), ເມັດພັນທີ່ນຳມາໃຊ້ຕ້ອງໄດ້ພັກຕົວໜຶ່ງເດືອນຫຼັງເກັບກ່ຽວ.

d) ການແຊ່ ແລະ ການອົບເມັດພັນ: ແຊ່ 24 ຊມ ແລະ ອົບ 36 ຊມ.

e) ການຕົກກ້າ ແລະ ການເບິ່ງແຍງກ້າ: 20cm ×20cm, 3-4 ຕົ້ນ/ສຸມ

f) ການຄິດໄລ່ປຸ໋ຍຮອງພື້ນ: 150kg / ha ໃສ່ກ່ອນດຳ

g) ບົດບາດຂອງ NPK

h) ຊ່ວງເວລາ ແລະ ຈຳນວນການໃສ່ປຸ໋ຍ: ປຸ໋ຍຮອງພື້ນ ໃສ່ກ່ອນດຳ; ປຸ໋ຍເລັ່ງ 1, ໃສ່ 20-25 ວັນຫຼັງຈາກດຳ; ປຸ໋ຍເລັ່ງ 2, ໃສ່ 55 – 60 ວັນຫຼັງຈາກປັກດຳ.






ຂັ້ນຕອນການຄັດເລືອກເມັດພັນ

*ຜູ້ປະຕິບັດ: ກປມ (ພງ ສິ່ງເສີມ)*

(ເອກະສານຄັດຕິດ III-2: ປະຕິທິນການປູກເຂົ້ານາດຳ)
*ຟາຍຕົ້ນສະບັບມີຢູ່ໃນຫ້ອງການຂອງໂຄງການ PAD




**ຄຳແນະນຳ: ການຜະລິດອີງຕາມປະຕິທິນລະດູການ**

- ຄັດເລືອກແນວພັນເຂົ້າທີ່ເຫັນວ່າມີຄວາມແທດເໝາະກັບສະພາບດິນນາຂອງຕົນເອງ
- ແນະນຳໃຫ້ຄັດເລືອກແນວພັນໂດຍການນຳໃຊ້ນ້ຳເກືອທຸກເທື່ອເພື່ອໃຫ້ໄດ້ແນວພັນທີ່ສົມບູນ
- ເນື້ອທີ່ຕາກ້າປະມານ 600 $ມ^2$ ຫຼື ປະມານ (20ມx30ມ) ໃຊ້ແນວພັນເຂົ້າ 1 ເຮັກຕາ: 60 ກລ ,ສຳລັບນາດຳທົ່ວໄປ
- ຕ້ອງໄຖດິນຕາກແດດປະໄວ້ປະມານ 1 ຫາ 2 ອາທິດ ເພື່ອຄວບຄຸມວັດສະພືດ
- ເມື່ອອາຍຸກ້າໄດ້ 20ຫາ25ວັນສາມາດປັກດຳໄດ້ເລີຍ
- ກ່ອນກຽມດິນປັກດຳຄວນໃສ່ຝຸ່ນຄອກໃນອັດຕາ0,5ຫາ1ກລຕໍ່ຕາແມັດຖ້າມີ,ຖ້າບໍ່ມີໃຫ້ໃສ່ຝຸ່ນເຄມີສູດ 16-20-00(ສຳລັບນາດິນຕົມ) ສູດ 15-15-15,16-8-8 (ນາດິນຊາຍ) ຕາມອັດຕາ 150ກລ/ຮຕ)
- ກ່ອນການໃສ່ຝຸ່ນເລັ່ງແຕ່ລະຄັ້ງຄວນກຳຈັດຫຍ້າໃຫ້ໝົດເສຍກ່ອນ
- ເມື່ອເຂົ້າມີອາຍຸໄດ້ 50 ວັນ ຫຼືພາຍຫລັງປັກດຳໄດ້ 20-25 ວັນ,ໃສ່ຝຸ່ນເລັ່ງຄັ້ງທີ 1 ຕາມອັດຕາ 30ກລ/ຮຕ ສູດ 46-00-00
- ເມື່ອເຂົ້າມີອາຍຸໄດ້ 70 ວັນ ຫຼືພາຍຫຼັງໃສ່ປຸ່ຍເລັ່ງຄັ້ງທີ1 20-25 ວັນ,ໃສ່ຝຸ່ນເລັ່ງຄັ້ງທີ 2ຕາມອັດຕາ 30ກລ/ຮຕ ສູດ 46-00-00
  ໝາຍເຫດ: ອາຍຸເຂົ້າໄດ້ 85 ວັນຂຶ້ນເມື່ອຫ້າມໃສ່ປຸ່ຍເລັ່ງເພາະຈະເຮັດໃຫ້ຕົ້ນເຂົ້າໄດ້ຮັບໃບໂຕເຈນຫລາຍແລະສາມາດຍືດອາຍຸຂອງເຂົ້າອອກໄປອີກ.
- ການເກັບກ່ຽວເມື່ອເຂົ້າສຸກປະມານ 80%ສາມາດເກັບໄດ້.

**ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈຳພອນ**

1. ທ່ານ ວຽງສະຫວັນ ທາດາສະຫວັນ 020 56610956
2. ທ່ານ ຄອນໄລ ສຸວັນນະສີ 030 9984441
3. ທ່ານ ນາງ ຄອນສະຫວັນ ສຸລິຍະວົງສາ 02096293272

**ພະແນກກະສິກຳ ແລະ ປ່າໄມ້ແຂວງ**

1. ທ່ານ ທອມມາລາ ພິມມະແສງທອງ 020 55645466
2. ທ່ານ ຈັນລະຄອນ ໄຊຍະລາດ 020 56745462
3. ທ່ານ ພອນສັກ ວິໄລຄຳ 020 91171114

**ໂຄງການ Savan PAD Project**

1. ດຣ ຄັດຕະຍະມາ 020 56145150
2. ທ່ານ ສຸລິຍົງ 020 95003777
3. ທ່ານ ຕົ້ນຕະການ 020 91215123

ປະຕິທິນຈາກເດືອນພຶດສະພາ 2019 ເຖິງເດືອນ ຕຸລາ 2019

ພຶດສະພາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | 31 | |

ມິຖຸນາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | | | | 1 |
| 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 |
| 16 | 17 | 18 | 19 | 20 | 21 | 22 |
| 23 | 24 | 25 | 26 | 27 | 28 | 29 |
| 30 | | | | | | |

ກໍລະກົດ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | 31 | | | |

ສິງຫາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

ກັນຍາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | | | | | |

ຕຸລາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 22 | 23 | 24 | 25 | 26 |
| 27 | 28 | 29 | 30 | 31 | | |

(ເອກະສານຄັດຕິດ III-2: ປະຕິທິນການປູກເຂົ້ານາດຳ)

*ຟາຍຕົ້ນສະບັບມີຢູ່ໃນຫ້ອງການຂອງໂຄງການ PAD




**ຄຳແນະນຳ: ການຜະລິດອີງຕາມປະຕິທິນລະດູການ**

- ຄັດເລືອກແນວພັນເຂົ້າທີ່ເຫັນວ່າມີຄວາມແທດເໝາະກັບສະພາບດິນນາຂອງຕົນເອງ
- ຜ່ານຂັ້ນຕອນການຄັດເລືອກແນວພັນໂດຍການນຳໃຊ້ນ້ຳເກືອທຸກເທື່ອເພື່ອໃຫ້ໄດ້ແນວພັນທີ່ສົມບູນ
- ເນື້ອທີ່ຕາກ້າປະມານ 600 ມ² ຫຼື ປະມານ (20ມx30ມ) ໃຊ້ແນວພັນເຂົ້າ 1 ເຮັກຕາ: 60 ກລ ,ສຳລັບນາດຳທົ່ວໄປ
- ຕ້ອງໄຖດິນຕາກແດດປະໄວ້ປະມານ 1 ຫາ 2 ອາທິດ ເພື່ອຄວບຄຸມວັດສະພືດ
- ເມື່ອອາຍຸກ້າໄດ້ 20ຫາ25ວັນສາມາດປັກດຳໄດ້ເລີຍ
- ກ່ອນກຽມດິນປັກດຳຄວນໃສ່ຝຸ່ນຄອກໃນອັດຕາ0,5ຫາ1ກລຕໍ່ຕາແມັດຖ້າມີ,ຖ້າບໍ່ມີໃຫ້ໃສ່ຝຸ່ນເຄມີສູດ 16-20-00(ສຳລັບນາດິນຕົມ) ສູດ 15-15-15,16-8-8 (ນາດິນຊາຍ) ຕາມອັດຕາ 150ກລ/ຮຕ)
- ກ່ອນການໃສ່ຝຸ່ນເລັ່ງແຕ່ລະຄັ້ງຄວນກຳຈັດຫຍ້າໃຫ້ໝົດເສຍກ່ອນ
- ເມື່ອເຂົ້າມີອາຍຸໄດ້ 50 ວັນ ຫຼືພາຍຫລັງປັກດຳໄດ້ 20-25 ວັນ,ໃສ່ຝຸ່ນເລັ່ງຄັ້ງທີ່ 1 ຕາມອັດຕາ 30ກລ/ຮຕ ສູດ 46-00-00
- ເມື່ອເຂົ້າມີອາຍຸໄດ້ 70 ວັນ ຫຼືພາຍຫຼັງປັກດຳໄດ້ 40-45 ວັນ,ໃສ່ຝຸ່ນເລັ່ງຄັ້ງທີ່ 2ຕາມອັດຕາ 30ກລ/ຮຕ ສູດ 46-00-00

  ໝາຍເຫດ: ອາຍຸເຂົ້າໄດ້ 85 ວັນຂຶ້ນເມື່ອຫ້າມໃສ່ປຸ່ຍເລັ່ງເພາະຈະເຮັດໃຫ້ຕົ້ນເຂົ້າໄດ້ຮັບໃນໂຕເຈນຫລາຍແລະສາມາດຍືດອາຍຸຂອງເຂົ້າອອກໄປອີກ.
- ການເກັບກ່ຽວເມື່ອເຂົ້າສຸກປະມານ 80%ສາມາດເກັບໄດ້.

**ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໄຊບູລີ**

ທ່ານ ຊຸນທະລາ ສີຫາລາດ 020 55746033

ທ່ານ ທອງສິດ 020 91913366

**ພະແນກກະສິກຳ ແລະ ປ່າໄມ້ແຂວງ**

ທ່ານ ຫອມມາລາ ພົມມະແສງທອງ 020 55645466

ທ່ານ ຈັນລະຄອນ ໄຊຍະລາດ 020 56745462

ທ່ານ ພອນສັກ ວິໄລຄຳ 020 91171114

**ໂຄງການ Savan PAD Project**

ດຣ ຄັດຕະຍະມາ 020 56145150

ທ່ານ ສຸລິຍົງ 020 95003777

ທ່ານ ຕົ້ນຕະການ 020 91215123

ປະຕິທິນຈາກເດືອນພຶດສະພາ 2019 ເຖິງເດືອນ ຕຸລາ 2019

ພຶດສະພາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | 1 | 2 | 3 | 4 |
| 5 | 6 | 7 | 8 | 9 | 10 | 11 |
| 12 | 13 | 14 | 15 | 16 | 17 | 18 |
| 19 | 20 | 21 | 22 | 23 | 24 | 25 |
| 26 | 27 | 28 | 29 | 30 | 31 | |

ມິຖຸນາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | | | | 1 |
| 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 |
| 16 | 17 | 18 | 19 | 20 | 21 | 22 |
| 23 | 24 | 25 | 26 | 27 | 28 | 29 |
| 30 | | | | | | |

ກໍລະກົດ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 | 13 |
| 14 | 15 | 16 | 17 | 18 | 19 | 20 |
| 21 | 22 | 23 | 24 | 25 | 26 | 27 |
| 28 | 29 | 30 | 31 | | | |

ສິງຫາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | | | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

ກັນຍາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | 14 |
| 15 | 16 | 17 | 18 | 19 | 20 | 21 |
| 22 | 23 | 24 | 25 | 26 | 27 | 28 |
| 29 | 30 | | | | | |

ຕຸລາ 2019

| ທິດ | ຈັນ | ຄານ | ພຸດ | ພະຫັດ | ສຸກ | ເສົາ |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 | 11 | 12 |
| 13 | 14 | 15 | 16 | 17 | 18 | 19 |
| 20 | 21 | 23 | 24 | 25 | 26 | 27 |
| 28 | 29 | 30 | 31 | | | |

## ການແຈກຢາຍເມັດພັນ ແລະ ປຸ໋ຍຮອງພື້ນ

| |
|---|
| 1) ການແຈກຢາຍເມັດພັນເຂົ້າ<br>2) ການແຈກຢາຍປຸ໋ຍຮອງພື້ນ |

(ການອະທິບາຍ)

1) ການແຈກຢາຍເມັດພັນແມ່ນປະຕິບັດໃນຊ່ວງຈັດຝຶກອົບຮົມຄັ້ງທີ 1 ແລະ ແຈກຢາຍຕາມໃບສະໝັກ ແຈກຢາຍໃນມື້ດຽວກັນກັບມື້ຝຶກອົບຮົມ.

2) ຊ່ວງເວລາໃນການແຈກຢາຍເມັດພັນ ແລະ ປຸ໋ຍ

| ການຝຶກອົບຮົມ | ເດືອນ | ການແຈກຢາຍ |
|---|---|---|
| ຄັ້ງ1 | ມິຖຸນາ : ກ່ອນຕົກກ້າ/ການກຽມດິນ | ເມັດພັນເຂົ້າ ແລະ ປຸ໋ຍສູດ (15-15-15) ສໍາລັບການຮອງພື້ນ |
| ຄັ້ງ2 | ມິຖຸນາ : ກ່ອນໃສ່ປຸ໋ຍເລັ່ງຄັ້ງທີ I | ປຸ໋ຍສູດ (46-0-0) ສໍາລັບການເລັ່ງຄັ້ງທີ I |
| ຄັ້ງ3 | ກໍລະກົດ : ກ່ອນໃສ່ປຸ໋ຍເລັ່ງຄັ້ງທີ II | ປຸ໋ຍສູດ (46-0-0) ສໍາລັບການເລັ່ງຄັ້ງທີ II |

3) ການຄິດໄລ່ຈໍານວນປຸ໋ຍສໍາລັບ 1 ໄຮ່

**ການຄິດໄລ່ຈໍານວນການໃສ່ປຸ໋ຍຕໍ່ໄຮ່ນາ 1 ໄຮ່**

| **ຫ້ອງທີ** | **1** | **2** | **3** | **4** | **5** | **6** | **7** | **8** | **ໝາຍເຫດ** |
|---|---|---|---|---|---|---|---|---|---|
| **ເນື້ອທີ່ໄຮ່ນາ ($m^2$)** | **50** | **100** | **200** | **300** | **400** | **500** | **1,000** | **5,000** | |
| **ປຸ໋ຍຮອງພື້ນ (kg)** | 7,5 (ຂີດ) | 1.5 | 3 | 4.5 | 6 | 7.5 | 15 | 75 | ອັດຕາ 150kg/ha |
| **ປຸ໋ຍເລັ່ງຄັ້ງທີ 1 (kg)** | 1.5 ຂີດ | 3 ຂີດ | 6 ຂີດ | 9 ຂີດ | 1.2 | 1.5 | 3 | 15 | ອັດຕາ 30kg/ha |
| **ປຸ໋ຍເລັ່ງຄັ້ງທີ 2 (kg)** | 1.5 ຂີດ | 3 ຂີດ | 6 ຂີດ | 9 ຂີດ | 1.2 | 1.5 | 3 | 15 | ອັດຕາ 30kg/ha |

< ຈຸດສໍາຄັນ >

- ມີຄົນຮັບຜິດຊອບພິເສດ, ນາຍບ້ານ ແລະ ກຸ່ມນໍາໃຊ້ນໍ້າ, ບໍ່ໃຫ້ຈ່າຍໃຫ້ຊາວນາກ່ອນຝຶກອົບຮົມ.
- ຊາວນາຄວນຮູ້ ຫຼື ກະຕວງໄດ້ ສໍາລັບເນື້ອທີ່ຂອງໄຮ່ນາທຸກໆໄຮ່.




ການແຈກຢາຍແນວພັນແລະປຸ໋ຍຢູ່ເມືອງທ່າປາງທອງ ແລະ ຊົນນະບຸລີ

*ຜູ້ປະຕິບັດ: ກປນ (ພງ ສິ່ງເສີມ)*

## 2) ຈັດຝຶກອົບຮົມຄັ້ງທີ 2 ພ້ອມແຈກຢາຍປຸ໋ຍສໍາລັບການເລັ່ງຄັ້ງທີ 1

| |
|---|
| 1) ການຝຶກອົບຮົມໃນຄັ້ງນີ້ແມ່ນການຝຶກອົບຮົມວິທີການໃສ່ປຸ໋ຍເລັ່ງຄັ້ງທີ 1 ແລະ ການຄວບຄຸມພະຍາດ-ແມງໄມ້ ໃນນາເຂົ້າ. |

(ອະທິບາຍ)

1) ສໍາລັບນາແຊງການຝຶກອົບຮົມຄັ້ງທີ 2 ແມ່ນຈັດຂຶ້ນໃນຕົ້ນເດືອນມັງກອນ. ຈຸດປະສົງຕົ້ນຕໍແມ່ນເພື່ອອະທິບາຍວິທີການໃສ່ປຸ໋ຍເລັ່ງຄັ້ງທີ 1 ແລະ ການແຈກຢາຍປຸ໋ຍເລັ່ງ (ປຸ໋ຍຢູເຣຍ).

**ເນື້ອໃນການຝຶກອົບຮົມ**

a) ທວນຄືນກ່ຽວກັບການຝຶກອົບຮົມໃນຄັ້ງກ່ອນວ່າຊາວນາໄດ້ປະຕິບັດແນວໃດ

b) ຊ່ວງເວລາ ແລະ ຈໍານວນໃນການໃສ່ປຸ໋ຍເລັ່ງຄັ້ງທີ 1

ປຸ໋ຍຢູເຣຍສູດ (46:0:0) 30 ກລ/1ha, ໃສ່ໃນ 20-25 ວັນຫຼັງຈາກປັກດໍາ

c) ການຄິດໄລ່ປຸ໋ຍ

ຄວາມອຸດົມສົມບູນຂອງດິນ, ວິທີໃສ່ປຸ໋ຍເລັ່ງ (ເບິ່ງໃນກິດຈະກໍາ 2-4)

d) ການສັງເກດການພະຍາດ ແລະ ສັດຕູພືດໃນນາເຂົ້າແມ່ນສັງເກດເຫັນ ພະຍາດໃບແຫ້ງ, ພະຍາດຄໍໃບເໜົ່າ ແລະ ເພ້ຍຈັກກະຈັ່ນຫຼັງຂາວ, ເພ້ຍຈັກກະຈັ່ນສີນໍ້າຕານ, ບົ່ວ, ເພ້ຍໄຟ, ແລະ ເຂົ້າຜູ້ເປັນຈໍາຫຼາຍ.



ຮູບພາບຝຶກອົບຮົມປຸ໋ຍເລັ່ງຄັ້ງທີ 1



ຮູບພາບພະຍາດຄໍໃບເໜົ່າ



ຮູບພາບ ເພ້ຍຈັກຈັນສີນໍ້າຕານ

*ຜູ້ປະຕິບັດ: ກປມ (ພງ ສິ່ງເສີມ)*

❖ ການຝຶກອົບຮົມເສີມ: ສະໝູນໄພປາບສັດຕູພືດ

| |
|---|
| 1) ວິທີຄວບຄຸມພະຍາດ ແລະ ແມງໄມ້ໂດຍໃຊ້ສູດສະໝູນໄພ |
| 2) ອະທິບາຍວົງຈອນຊີວິດຂອງແມງໄມ້ທີ່ຈະຄວບຄຸມ |

(ອະທິບາຍ)

1) ໃນການຝຶກອົບຮົມ, ກ່ອນອື່ນແມ່ນພວກເຮົາຕ້ອງໄດ້ອະທິບາຍໃຫ້ຊາວນາຮູ້ວົງຈອນຊີວິດຂອງແມງໄມ້ ຫຼື ພະຍາດທີ່ຈະຄວບຄຸມນັ້ນ.
2) ສອນວິທີເຮັດ ແລະ ນຳໃຊ້ຢາປາບສັດຕູພືດສະໝູນໄພ
   (ຕົວຢ່າງ: ສະໝູນໄພຄວບຄຸມເພັ້ຍຈັກຈັ່ນ)
   - ສ່ວນປະສົມ ແລະ ວິທີເຮັດ:
   1) ແຄຝລັ່ງ ( ດອກ - ໃບ ) = 1 ກລ
   2) ກະເດົາ = 1 ກລ
   3) ຫົວສີໄຄເຄື່ອງ = 1 ກລ
   4) ໝາກເຜັດສຸກປຽກ = 1 ກລ
   5) ກາກນ້ຳຕານ = 0,5 ລິດ
   6) EM ( ອີເອັມ ) = 0,5 ລິດ
   7) ນ້ຳທຳມະດາ = 7 ລິດ
   8) ກະຖັງ 12 ລິດ
   ນຳເອົາ ຕຳ ຫຼື ບົດ ແຄຝັ່ງ, ກະເດົາ, ຫົວສີໄຄເຄື່ອງ, ໝາກເຜັດສຸກ ແລ້ວປະສົມກັບສ່ວນປະສົມອື່ນ ແລ້ວໝັກໃສ່ຖັງໄວ້ເປັນເວລາ 1 ວັນ.
3) ວິທີນຳໃຊ້:
   ນຳເອົານ້ຳຫົວເຊື້ອທີ່ໝັກໄວ້ໃນກະຖັງແລ້ວມາປະສົມກັບນ້ຳ 1 ຕໍ່ 1; ນ້ຳຫົວເຊື້ອ 7 ລິດ ນ້ຳທຳມະດາ 7 ລິດ ຈະໄດ້ນ້ຳ 14 ລິດ ແລ້ວນຳໄປສີດໃນເນື້ອທີ່ 1 ໄຮ່ (40 ມ x 40 ມ), ຊີດຕອນປະມານ 4 - 5 ໂມງແລງ.

< ຈຸດສຳຄັນ >

- ນຳໃຊ້ສ່ວນປະກອບຂອງການເຮັດສະໝູນໄພທີ່ຫາໄດ້ງ່າຍ ຫຼື ຫາຊື້ໄດ້ງ່າຍ
- ອະທິບາຍຜົນຮ້າຍຖ້າຊາວນານຳໃຊ້ສານເຄມີໃນການຄວບຄຸມແມງໄມ້ ແລະ ສັດຕູພືດ





ສາທິດການເຮັດນ້ຳໝັກສະໝູນໄພຂັບໄລ່ແມງໄມ້

*ຜູ້ຈັດຕັ້ງປະຕິບັດ: ກປມ ( ພງ ສິ່ງເສີມ )*

### 3) ການຝຶກອົບຮົມຄັ້ງທີ 3 ແລະ ການແຈກຢາຍປຸ໋ຍຢູເຣຍ ສໍາລັບການເລັ່ງຄັ້ງທີ 2

| |
|---|
| 1) ການໃສ່ປຸ໋ຍເລັ່ງຄັ້ງທີ 2 |
| 2) ການຄວບຄຸມພະຍາດ ແລະ ສັດຕູພືດ |

(ອະທິບາຍ)

ສໍາລັບນາແຊງ ການຝຶກອົບຮົມແມ່ນຈັດຂຶ້ນໃນຕົ້ນເດືອນກຸມພາ. ຈຸດປະສົງຕົ້ນຕໍແມ່ນເວົ້າເລື່ອງວິທີການໃສ່ປຸ໋ຍເລັ່ງຄັ້ງທີ 2 ແລະ ການແຈກຢາຍປຸ໋ຍເລັ່ງ (ປຸ໋ຍຢູເຣຍ).

ເນື້ອໃນການຝຶກອົບຮົມ

a) ທວນຄືນກ່ຽວກັບການຝຶກອົບຮົມໃນຄັ້ງກ່ອນວ່າຊາວນາໄດ້ປະຕິບັດແນວໃດ

b) ອະທິບາຍຊ່ວງເວລາ ແລະ ຈໍານວນໃນການໃສ່ປຸ໋ຍເລັ່ງຄັ້ງທີ 2 ເຊັ່ນ:
ປຸ໋ຍຢູເຣຍສູດ (46:0:0) 30 ກລ/1ha, ໃສ່ໃນ 40-45 ວັນຫຼັງຈາກປັກດໍາ

c) ການຄິດໄລ່ຈໍານວນປຸ໋ຍ
ວິທີຄິດໄລ່ປຸ໋ຍເລັ່ງ (ເບິ່ງໃນ ກິດຈະກໍາ 2-2)

d) ການຄວບຄຸມພະຍາດ ແລະ ສັດຕູພືດ
ສອບຖາມ ແລະ ສົນທະນາກັບຊາວນາກ່ຽວກັບພະຍາດ/ແມງໄມ້ທີ່ທໍາລາຍເຂົ້າໃນຊ່ວງນັ້ນ ພ້ອມທັງລົງສັງເກດພາກສະໜາມ ແລະ ໃຫ້ຄໍາແນະນໍາ. ຖ້າຈໍາເປັນຕ້ອງໄດ້ກັບລົງມາຈັດຝຶກອົບຮົມໂດຍສະເພາະອີກເທື່ອນຶ່ງ.



ຝຶກອົບຮົມໃສ່ປຸ໋ຍເລັ່ງຄັ້ງທີ2



ຝຶກອົບຮົມວິທີເຮັດສະໝຸນໄພ



ການສີດຢາສະໝຸນໄພ

*ຜູ້ປະຕິບັດ: ກປມ (ພງ ສິ່ງເສີມ)*

## 4) ການຝຶກອົບຮົມເສີມ (ຝຶກອົບຮົມຄັ້ງທີ 4)

| |
|---|
| 1) ຝຶກອົບຮົມສິ່ງທີ່ຄວາມຮູ້ໃນຫົວຂໍ້ໃດກໍ່ໄດ້ທີ່ເປັນປະໂຫຍດຕໍ່ການເພີ່ມສະມັດຕະພາບຂອງເຂົ້າ<br>2) ຝຶກອົບຮົມການປ້ອງກັນການສູນເສຍກ່ອນ ແລະ ຫຼັງການເກັບກ່ຽວ (ສໍາລັບລະດູທີ່ຜ່ານມາ) |

(ອະທິບາຍ)

1) ສໍາລັບນາແຊງປີ 2018-2019: ການຝຶກອົບຮົມຄັ້ງທີ 4 ແມ່ນຈັດຂຶ້ນໃນກາງເດືອນ ມີນາ. ຈຸດປະສົງຕົ້ນຕໍແມ່ນເພື່ອເພີ່ມປະລິມານ ແລະ ຄຸນນະພາບຂອງເຂົ້າທີ່ກ່ຽວມາແລ້ວ ເຊິ່ງເຊື່ອມໂຍງກັບວິທີການປ່ຽນເມັດພັນ ແລະ ການນໍາໃຊ້ປຸ໋ຍໃນຈໍານວນທີ່ຖືກຕ້ອງ ແລະ ຖືກເວລາ.

ເນື້ອໃນການຝຶກອົບຮົມ: ຄວາມເສຍຫາຍກ່ອນ ແລະ ຫຼັງການເກັບກ່ຽວ

a) ການຈັດການນໍ້າໃນຊ່ວງເຂົ້າກໍາລັງຈະສຸກ
b) ການກໍານົດການສຸກຂອງເຂົ້າ
c) ການກ່ຽວ ແລະ ວິທີການຕາກເຂົ້າຫຼັງກ່ຽວແລ້ວ
d) ການຟາດ ແລະ ການຕາກຫຼັງຈາກຟາດແລ້ວ
e) ການເກັບມ້ຽນ ແລະ ການລະມັດລະວັງການສູນເສຍຫຼັງການເກັບກ່ຽວ



ເຂົ້າສຸກພໍດີກ່ຽວ



ການຕາກເຂົ້າທີ່ດີ

*ຜູ້ປະຕິບັດ: ກປມ (ພງ ສິ່ງເສີມ)*

**ຕົວຢ່າງ:** ການຝຶກອົບຮົມເສີມດ້ານການນຳໃຊ້ສະໝູນໄພເພື່ອຄວບຄຸມສັດຕູພືດ.

| |
|---|
| 1) ວິທີຄວບຄຸມພະຍາດ ແລະ ແມງໄມ້ໂດຍໃຊ້ສູດສະໝູນໄພ. |
| 2) ອະທິບາຍວົງຈອນຊີວິດຂອງແມງໄມ້ທີ່ຈະຄວບຄຸມ. |

(ອະທິບາຍ)

1) ໃນການຝຶກອົບຮົມ, ກ່ອນອື່ນແມ່ນພວກເຮົາຕ້ອງໄດ້ອະທິບາຍໃຫ້ຊາວນາຮູ້ວົງຈອນຊີວິດຂອງແມງໄມ້ ຫຼື ພະຍາດທີ່ຈະຄວບຄຸມນັ້ນ.

2) ສອນວິທີ່ເຮັດນ້ຳຫົວເຊື້ອ

(ຕົວຢ່າງ: ສະໝຸນໄພຄວບຄຸມເພ້ຍຈັກຈັ່ນ)

- ສ່ວນປະສົມ ແລະ ວິທີເຮັດ:

| | | |
|---|---|---|
| 1) ແຄຝລັ່ງ ( ດອກ - ໃບ ) | = | 1 ລ |
| 2) ກະເດົາ (ໃບ) | = | 1 ລ |
| 3) ຫົວສີໄຄເຄື່ອງ | = | 1 ລ |
| 4) ໝາກເຜັດສຸກປຽກ | = | 1 ລ |
| 5) ກາກນ້ຳຕານ | = | 0,5 ດ |
| 6) EM ( ອີເອັມ ) | = | 0,5 ດ |
| 7) ນ້ຳທຳມະດາ | = | 7 ດ |
| 8) ກະຖັງ 12 ລິດ | | |

ນຳເອົາສ່ວນປະກອບຕ່າງໆເຊັ່ນ: ແຄຟັ່ງ, ກະເດົາ, ຫົວສີໄຄເຄື່ອງ, ໝາກເຜັດສຸກ ມາບົດ ຫຼື ຕຳ ແລ້ວປະສົມກັບສ່ວນປະສົມອື່ນ ແລ້ວໝັກໃສ່ຖັງໄວ້ເປັນເວລາ 1 ວັນ.

ວິທີນຳໃຊ້:

ນຳເອົານ້ຳຫົວເຊື້ອທີ່ໝັກໄວ້ໃນກະຖັງແລ້ວມາປະສົມກັບນ້ຳ 1 ຕໍ່ 1; ນ້ຳຫົວເຊື້ອ 7 ລິດ ນ້ຳທຳມະດາ 7 ລິດ ຈະໄດ້ນ້ຳ 14 ລິດ ແລ້ວນຳໄປສີດໃນເນື້ອທີ່ 1 ໄຮ່ (40 ມ x 40 ມ), ຊີດຕອນປະມານ 4 - 5ໂມງແລງ.

< ຈຸດສຳຄັນ >

- ນຳໃຊ້ສ່ວນປະກອບຂອງການເຮັດສະໝູນໄພທີ່ຫາໄດ້ງ່າຍ ຫຼື ຫາຊື້ໄດ້ງ່າຍ.
- ອະທິບາຍຜົນຮ້າຍຖ້າຊາວນານຳໃຊ້ສານເຄມີໃນການຄວບຄຸມແມງໄມ້ ແລະ ສັດຕູພືດ.

## (4) ການຕິດຕາມ ແລະ ປະເມີນຄັ້ງທີ 1

1) ຄັດເລືອກຊາວນາທີ່ຈະຕິດຕາມ ແລະ ປະເມີນ
2) ເກັບກຳຂໍ້ມູນໂດຍການສັງເກດການ ແລະ ໃຊ້ແບບຟອມສຳພາດຊາວນາ

(ອະທິບາຍ)

1) ມັນເປັນສິ່ງທີ່ຈຳເປັນທີ່ຈະຕ້ອງຕິດຕາມ-ປະເມີນຊາວນາ ເພື່ອປະເມີນຜົນຂອງນະໂຍບາຍກູ້ຢືມ ແລະ ເພື່ອປັບປຸງການຝຶກອົບຮົມ. ອີກຢ່າງນຶ່ງ, ມັນຈຳເປັນຢ່າງຍິ່ງທີ່ຈະຕ້ອງໃຫ້ຄຳປຶກສາ ແລະ ແນະນຳທາງເຕັກນິກໃຫ້ແກ່ຊາວນາເປົ້າໝາຍໃນໄລຍະເວລາທຳການຜະລິດ.

2) ວິທີຕິດຕາມ-ປະເມີນ

ກ) ຫຼັງຈາກຈັດຝຶກອົບຮົມສຳເລັດທຸກຄັ້ງຍແລ້ວແມ່ນເລີ່ມການຕິດຕາມ-ປະເມີນ

ຂ) ຈຳນວນຊາວນາເປົ້າໝາຍ: 20% ຫຼື ຫຼາຍກວ່າ ຂອງຈຳນວນຊາວນາທັງໝົດ.

ຄ) ກປຂ ແລະ ກປມ (ກປມ ເປັນຫຼັກແຫຼ່ງ) ຮ່ວມກັນລົງຢ້ຽມຢາມເຮືອນ ແລະ ສັງເກດການທົ່ງນາຂອງຊາວນາ ພ້ອມທັງໃຫ້ຄຳແນະນຳ; ສຳພາດໂດຍການໃຊ້ແບບຟອມ.

3) ໃບບັນທຶກການຕິດຕາມ-ປະເມີນ ແລະ ໃຫ້ຄຳແນະນຳ (ເບິ່ງໃນເອກະສານຊ້ອນທ້າຍ III-3)







ສຳພາດ, ສັງເກດການ ແລະ ໃຫ້ຄຳແນະນຳ

< ຈຸດສຳຄັນ >

- ການຕິດຕາມ-ປະເມີນປະກອບດ້ວຍການສຳພາດຊາວນາ ແລະ ໃຫ້ຄຳແນະນຳຊາວນາໃນທົ່ງນາ.

*ຜູ້ປະຕິບັດ: ກປມ (ພງ ສິ່ງເສີມ)*

ບັນທຶກການຕິດຕາມ ແລະ ໃຫ້ຄຳແນະນຳ
ນະໂຍບາຍກູ້ຢືມແນວພັນແລະປຸ໋ຍ

ຊາວນາເລກທີ.: ຊື່ຊາວນາ: ເບີໂທ: ຊື່ບ້ານ: ຊື່ເມືອງ:

ວັນທີຢັ້ງມຢາມ: ສະຖານທີ່ຢັ້ງມຢາມ: ເຮືອນ, ນາ, ທັງສອງບ່ອນ, ແລະ ອື່ນໆ ( ) ຊື່ຜູ້ສຳພາດ:

ສ່ວນທີ I ແບບສອບຖາມ

| ລຳດັບ. | ຄຳຖາມ | ລະດູແລ້ງ2018/2019 | ລະດູແລ້ງ2017/2018 |
|---|---|---|---|
| 1 | ວິທີການປູກ | ດຳ ( ວັນທີ: ) ຫວ່ານ (ວັນທີ: ) | ດຳ ຫວ່ານ |
| 2-1 | ການຄັດເລືອກແນວພັນ | ນ້ຳເກືອ ນ້ຳ ບໍ່ໄດ້ຄັດ | ນ້ຳເກືອ ນ້ຳ ບໍ່ໄດ້ຄັດ |
| 2-2 | ຈຳນວນທີ່ຫວ່ານ ກິໂລ/ ເຮັກຕາ | 60 70 80 ຫຼາຍກວ່າ | 60 70 80 ຫຼາຍກວ່າ |
| 3-1 | ຈຳນວນປຸ໋ຍຮອງພື້ນ (ກິໂລ/ ເຮັກຕາ) | 150 ກິໂລ ຫຼາຍກວ່າ( ກິໂລ) ໜ້ອຍກວ່າ( ກິໂລ) | 150 ກິໂລ ຫຼາຍກວ່າ( ກິໂລ) ໜ້ອຍກວ່າ( ກິໂລ) |
| 3-2 | ໄດ້ປະສົມປຸ໋ຍຮອງພື້ນໃນດິນຫຼືບໍ່ | ແມ່ນ (ວັນທີ ) ບໍ່ | ແມ່ນ ບໍ່ |
| 4-1 | ປຸ໋ຍເລັ່ງ I: ຈຳນວນ (ກິໂລ/ ເຮັກຕາ) | 30 ກິໂລ ຫຼາຍກວ່າ( ກິໂລ) ໜ້ອຍກວ່າ( ກິໂລ) | 30 ກິໂລ ຫຼາຍກວ່າ( ກິໂລ) ໜ້ອຍກວ່າ( ກິໂລ) |
| 4-2 | ປຸ໋ຍເລັ່ງ I: ຈັກມື້ຫຼັງຈາກ ປັກດຳ/ ຫວ່ານ | ___________ ມື້ຫຼັງຈາກ ປັກດຳ/ ຫວ່ານ (ວັນທີ: ) | __________ ມື້ຫຼັງຈາກ ປັກດຳ/ ຫວ່ານ |
| 5-1 | ປຸ໋ຍເລັ່ງ II: ຈຳນວນ (ກິໂລ/ ເຮັກຕາ) | 30ກິໂລ ຫຼາຍກວ່າ( ກິໂລ) ໜ້ອຍກວ່າ( ກິໂລ) | 30 ກິໂລ ຫຼາຍກວ່າ ( ກິໂລ) ໜ້ອຍກວ່າ ( ກິໂລ) |
| 5-2 | ປຸ໋ຍເລັ່ງ II: ຈັກມື້ຫຼັງຈາກໃສ່ປຸ໋ຍເລັ່ງ I | ___________ ຈັກມື້ຫຼັງຈາກໃສ່ປຸ໋ຍເລັ່ງ I (ວັນທີ: ) | ____________ ຈັກມື້ຫຼັງຈາກໃສ່ປຸ໋ຍເລັ່ງ I |
| 6 | ໃສ່ນ້ຳພຽງພໍບໍ? | ພຽງພໍ ບໍ່ພຽງພໍ ຫຼາຍໂພດ | ພຽງພໍ ບໍ່ພຽງພໍ ຫຼາຍໂພດ |
| 7 | ພະຍາດ ແລະ ແມງໄມ້ | ຊື່ຂອງປັນຫາຫຼືຄວາມເສຍຫາຍທີ່ພົບ ( ), ( ), ( ) | ຊື່ຂອງປັນຫາຫຼືຄວາມເສຍຫາຍທີ່ພົບ ( ), ( ), ( ) |

ສ່ວນທີ II

ຜົນການສັງເກດ

| ລຳດັບ. | ຫົວຂໍ້ສັງເກດການ | ຜົນການສັງເກດ |
|---|---|---|
| 8 | ສະໜ່ຳສະເໝີ, ແນວພັນອື່ນປົນ | |
| 9 | ໄລຍະຫ່າງ, ຈຳນວນຕົ້ນ/ ສຸມ | |
| 10 | ການຈະເລີນເຕີບໂຕແລະຄວາມຂຽວ | |
| 11 | ຫຍ້າ | |
| 12 | ສັດຕູພືດແລະພະຍາດ | |

ສ່ວນທີ III ລາຍລະອຽດຂອງຄໍາແນະນໍາທີ່ໃຫ້ຊາວນາ

ສ່ວນທີ IV ປັນຫາທີ່ຕ້ອງແກ້ໄຂ (ດ່ວນ ບໍ່ດ່ວນ)

ສ່ວນທີ V ຄໍາແນະນໍາ, ຄໍາຖາມ, ຊາວນາຮ້ອງຂໍ

ຄໍາເຫັນຈາກຜູ້ສໍາຫຼວດ:

## (5) ການເກັບເງິນຄ່າກູ້ຢືມຄືນ

| |
|---|
| 1) ກປມ, ຄະນະບ້ານ ຫຼື ກຸ່ມນຳໃຊ້ນໍ້າເກັບຄ່າກູ້ຢືມໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້ ຫຼັງຈາກທີ່ຊາວນາເກັບກ່ຽວເຂົ້າແລ້ວ.<br>2) ກປມ ໂອນເງິນເຂົ້າບັນຊີ ຂອງ ກປຂ ໃນທຸກໆ 1-2 ອາທິດ. |

(ອະທິບາຍ)

1) ອີງຕາມສັນຍາການກູ້ຢືມ:

ກ. ຊາວນາທັງໝົດທີ່ກູ້ຢືມເມັດພັນ ແລະ ປຸ໋ຍຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມການຝຶກອົບຮົມຂອງທີມງານສົ່ງເສີມເຕັກນິກການປູກເຂົ້າ ຂອງໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ ພ້ອມທັງປະຕິບັດຕາມເຕັກນິກທີ່ອະທິບາຍໃນການຝຶກອົບຮົມ.

ຂ. ກຸ່ມນຳໃຊ້ນໍ້າ/ອຳນາດການປົກຄອງບ້ານແມ່ນຮັບຜິດຊອບສຳລັບການເກັບເງິນຈາກຊາວນາ ແລະ ມອບໃຫ້ພະນັກງານ ກປມ ຕາມແຕ່ລະໄລຍະ.

ຄ. ຊາວນາທັງໝົດທີ່ກູ້ຢືມຕ້ອງໄດ້ຈ່າຍຄ່າກູ້ຢືມໃຫ້ກຸ່ມນຳໃຊ້ນໍ້າ/ອຳນາດການປົກຄອງບ້ານເປັນເງິນສົດຫຼັງຈາກທີ່ເກັບກ່ຽວເຂົ້າແລ້ວ, ຊ້າສຸດພາຍໃນ 1 ເດືອນ.

ງ. ຫຼັງຈາກທີ່ຊາວນາເກັບກ່ຽວແລ້ວບໍ່ຈ່າຍຄ່າກູ້ຢືມຄືນພາຍໃນ 1 ເດືອນ, ຊາວນາຈະຖືກປັບໄໝໂດຍການຈ່າຍຄືນເປັນຈຳນວນ **3 ເທົ່າ** ທີ່ໄດ້ກູ້ຢືມໄປ.

2) ວິທີການເກັບຄ່າກູ້ຢືມຄືນ

ກ) ກປຂ ກຽມເອກະສານໃນການເກັບເງິນ ແລ້ວນຳເອກະສານລົງມອບໃຫ້ເມືອງເພື່ອສົ່ງໃຫ້ບ້ານ:

- ລາຍຊື່ຜູ້ກູ້ຢືມທີ່ມີຈຳນວນການກູ້ຢືມ ແລະ ຈຳນວນເງິນ
- ໃບແຈ້ງໜີ້ (ສົ່ງກ່ອນກຳນົດຈ່າຍ 1 ເດືອນ)
- ໃບຮັບເງິນ
- ໃບມອບ-ຮັບເງິນ ລະຫວ່າງບ້ານ ແລະ ເມືອງ
- ໃບສຳຫຼວດຍອດລວມຜົນຜະລິດຂອງຊາວນາ

ຂ) ບ້ານເກັບເງິນຈາກຊາວນາແຕ່ລະຄົນ ແລ້ວທຶດ1ໃຫ້ມອບເງິນຕໍ່ ພງ ກປມ ເທື່ອ 1 (ການເກັບເງິນອາດໃຊ້ເວລາ 5-6 ອາທິດ); ເມື່ອ ກປມ ຮັບເງິນຈາກບ້ານແລ້ວໃຫ້ໂອນເງິນເຂົ້າຄັງເງິນຂອງ ກປຂ/ແຂວງ

| |
|---|
| < ຈຸດສຳຄັນ ><br>- ບໍ່ໃຫ້ຄະນະກຸ່ມ ຫຼື ຄະນະບ້ານ ແລະ ພງ ກປມ ຖືເງິນໄວ້ດົນເກີນໄປ, ຖ້າໃຫ້ດີບໍ່ຄວນຖືກາຍຂ້າມເສົາ-ທິດ<br>- ທຸກຄັ້ງທີ່ມີການຈ່າຍ ຫຼື ມອບເງິນຕ້ອງມີລາຍເຊັນ ແລະ ບິນ |

*ຜູ້ປະຕິບັດ: ກປຂ (ແຜນການ), ກປມ (ພງ ສົ່ງເສີມ)*

❖ ການຕິດຕາມ-ປະເມີນຄັ້ງທີ 2

| 1) ຄະນະກຸ່ມນຳໃຊ້ນ້ຳ/ບ້ານ ສອບຖາມຜົນຜະລິດທັງໝົດຂອງຊາວນາແຕ່ລະຄົນ |
|---|

(ອະທິບາຍ)

ການຕິດຕາມ-ປະເມີນຄັ້ງທີ 2 ນີ້ ແມ່ນປະເມີນສະເພາະຜົນຜະລິດຂອງຊາວນາ

1) ຈຸດປະສົງ

ເພື່ອປະເມີນຜົນຜະລິດຂອງຊາວນາກ່ອນ ແລະ ຫຼັງໂຄງການເຂົ້າໄປ, ເພື່ອສົມທຽບຜົນຜະລິດແຕ່ລະປີຂອງຊາວນາ

2) ວິທີການສຳຫຼວດ

ເມື່ອຊາວນາມາຈ່າຍເງິນຄ່າກູ້ຢືມໃຫ້ຄະນະກຸ່ມ ຫຼື ບ້ານ ໃຫ້ຜູ້ຮັບຜິດຊອບເກັບເງິນສອບຖາມຊາວນາເລີຍ ວ່າຊາວນາຄົນດັ່ງກ່າວໄດ້ຮັບຜົນຜະລິດເຂົ້າຈັກສອບ ສຳລັບປີນີ້ ແລະ ປີກາຍ.

3) ແບບຟອມການສອບຖາມຍອດລວມຂອງຜົນຜະລິດ (ເບິ່ງ ເອກະສານຊ້ອນທ້າຍ)

ຮູບຕົວຢ່າງ: ແບບຟອມສຳຫຼວດຍອດລວມຜົນຜະລິດ



| [illegible] | [illegible] | ລະດູປີ2019 | ລະດູປີ2018 |
|---|---|---|---|
| 1 | [illegible] | 2,5 | 2,5 |
| 1-1 | [illegible] | [illegible] | [illegible] |
| 2-1 | [illegible] | [illegible] | [illegible] |
| 2-2 | [illegible] | 60 70 80 [illegible] | 60 70 80 [illegible] |
| 3-1 | [illegible] | 150 ກິໂລ [illegible] | 150 ກິໂລ [illegible] |
| 3-2 | [illegible] | [illegible] 2.6.2019 | [illegible] |
| 4-1 | [illegible] | 30 ກິໂລ [illegible] | 30 ກິໂລ [illegible] |
| 4-2 | [illegible] | [illegible] 4.7.2019 | [illegible] |
| 5-1 | [illegible] | 30ກິໂລ [illegible] | 30 ກິໂລ [illegible] |
| 5-2 | [illegible] | 25 [illegible] 4.8.2019 | [illegible] |
| 6 | [illegible] | [illegible] | [illegible] |
| 7 | [illegible] | [illegible] | [illegible] |





ການຕິດຕາມແລະໃຫ້ຄຳແນະນຳຊາວນາ

*ຜູ້ປະຕິບັດ: ກປຂ (ພງ ສົ່ງເສີມ), ກປມ (ພງ ສົ່ງເສີມ), ບ້ານ*

## 2 ທົ່ງນາເອົາໃຈໃສ່ເປັນພິເສດ

> 1) ທົ່ງນາເອົາໃຈໃສ່ເປັນພິເສດແມ່ນເພື່ອສະແດງຜົນຂອງການນຳໃຊ້ເຕັກນິກຈາກການຝຶກອົບຮົມ ໂດຍການນຳໃຊ້ທົ່ງນາຂອງຜູ້ເຂົ້າຮ່ວມນະໂຍບາຍ ເພື່ອເປັນທົ່ງນາສາທິດ.
> 2) ການເລືອກທົ່ງນາເອົາໃຈໃສ່ເປັນພິເສດແມ່ນພິຈາລະນາເລື່ອງສະພາບຂອງທົ່ງນາ ແລະ ຄວາມກະຕືລືລົ້ນຂອງເຈົ້າຂອງນາ.

(ອະທິບາຍ)

1) ກ່ຽວກັບ "ນະໂຍບາຍກູ້ຢືມເມັດພັນ ແລະ ປຸ໋ຍ", ທາງໂຄງການໄດ້ສ້າງ "ທົ່ງນາເອົາໃຈໃສ່ເປັນພິເສດ" ໃນແຕ່ລະໂຄງການເປົ້າໝາຍ ເພື່ອປັບປຸງກ່ຽວກັບການປ່ຽນແນວພັນປັບປຸງ ແລະ ການນຳໃຊ້ປຸ໋ຍ.

① ແນະນຳການໃສ່ປຸ໋ຍຮອງພື້ນ ແລະ ໄລຍະຫ່າງໃນການປັກດຳ

(a) ອະທິບາຍລວມກ່ຽວກັບປະຕິທິນການປູກເຂົ້າ.

(b) ການໄຖ, ການຄາດ, ໄລຍະຫ່າງການປັກດຳ, ເນື້ອທີ່ໄຮ່ນາ ແລະ ຈຳນວນປຸ໋ຍທີ່ຕ້ອງໃສ່.

(c) ການຄິດໄລ່ປຸ໋ຍ

(d) ການຄັດເລືອກເມັດພັນດ້ວຍນ້ຳເກືອ

(e) ການແຊ່ ແລະ ການອົບ

(f) ການຕົກກ້າ ແລະ ການເບິ່ງແຍງດູແລ

② ການແນະນຳຊຸດທີ 1

(a) ຊ່ວງເວລາ ແລະ ຈຳນວນໃນການນຳໃຊ້ປຸ໋ຍເລັ່ງຄັ້ງທີ 1

(b) ການສັງເກດການສັດຕູພືດ ແລະ ແມງໄມ້

③ ແນະນຳຊຸດທີ 2

(a) ຊ່ວງເວລາ ແລະ ຈຳນວນໃນການນຳໃຊ້ປຸ໋ຍເລັ່ງຄັ້ງທີ 2

(b) ການສັງເກດການສັດຕູພືດ ແລະ ແມງໄມ້

④ ການແນະນຳຊຸດທີ 3

ການເກັບກ່ຽວ, ຫຼັງການເກັບກ່ຽວ, ການຈັດການນ້ຳ, ການກຳນົດຄວາມສຸກຂອງເຂົ້າ ແລະ ການຕາກເຂົ້າໃນທົ່ງນາ, ການຟາດ, ການຕາກຫຼັງການຟາດ, ການເກັບມ້ຽນ ລວມທັງການສູນເສຍຫຼັງການເກັບກ່ຽວ.





*ຜູ້ປະຕິບັດ: ກປມ (ພງ ສິງເສີມ)*

## 3 ການສຳຫຼວດສະມັດຕະພາບ

1) ເມື່ອພະນັກງານລັດຕ້ອງການຂໍ້ມູນການສຳສະມັດຕະພາບເຂົ້າທີ່ຖືກຕ້ອງເພື່ອກວດສອບຜົນຂອງໂຄງການ, ພວກເຂົາໄດ້ຈັດຕັ້ງປະຕິບັດການສຳຫຼວດດ້ວຍຕົວເອງ.
2) ການສຳຫຼວດສະມັດຕະພາບເຂົ້າຄືພະນັກງານລັດໄດ້ເກັບກ່ຽວເອົາບາງສ່ວນໃນໄຮ່ນາມາຕິດນ້ຳໜັກ.

(ອະທິບາຍ)

1) ວິທີການເກັບຕົວຢ່າງ

a) ເກັບເອົາ 3 ຈຸດຕົວຢ່າງ 1 m X 1 m ໂດຍພື້ນຖານ

b) ຟາດດ້ວຍມື.

c) ຕົວຢ່າງຈະຫ້ອຍ ແລະ ຕາກໄວ້, ທຳຄວາມສະອາດ ແລະ ຕິດນ້ຳໜັກ. ເກັບໄວ້ໃນທີ່ສູງເພື່ອປ້ອງກັນສັດ

d) ຕິດນ້ຳໜັກ ແລະ ຄວາມຊຸ່ມ

A= ຕິດຫຼັງທຳຄວາມສະອາດ(g), B= ຕິດນ້ຳໜັກແຍ່ງ (g),
C= ຄວາມຊຸ່ມ (%), D= ນ້ຳໜັກປ່ຽນດ້ວຍຄວາມຊຸ່ມ (g/3m2)

ສູດຄິດໄລ່;

D = (A – B) X (1 – C X 0.01) / (1 – 0.14)

e) ຜົນເກັບກ່ຽວທີ່ຄາດໄວ້/ເຮັກຕາ ຈະໄດ້ໄລ່ໃນສູດນີ້.

ຜົນຜະລິດ (ໂຕນ/ເຮັກຕາ) = (D /1000) kg/3 m2 X (10,000 m2 /3 m2) / 1,000

ສາມຈຸດຕົວຢ່າງ



ກອບຕົວຢ່າງ: ດ້ານໃນ 1m X 1m, ເຮັດຈາກທໍ່



ເຮັດດ້ວຍທໍ່



ຂົນມາຈາກໄຮ່ນາ



ຕາກໄວ້ດ້ວຍແຍ່ງ

*ຜູ້ປະຕິບັດ:ກປຂ, ກປມ (ພງ ສິ່ງເສີມ)*

## IV ການສົ່ງເສີມການຂາຍ

### 1 ແນະນຳພືດຜັກ ທີ່ມີຄວາມຕ້ອງການສູງ ສຳລັບຕະຫຼາດ ໃຫ້ກັບຊາວນາ ໄດ້ຮັບຮູ້

#### (1) ສຳຫຼວດຕະຫຼາດ ແລະ ແນະນຳໃຫ້ຊາວນາ ໄດ້ເລືອກພືດປູກ

1) ເຮັດການສຳຫຼວດຕະຫຼາດເປັນປະຈຳ.
2) ຢ້ຽມຢາມລູກຄ້າທີ່ມີສັກກະຍະພາບສູງ.
3) ເລືອກພືດທີ່ມີທ່າແຮງສູງ ແລ້ວແນະນຳໃຫ້ຊາວນາ.

*ຜູ້ຈັດຕັ້ງປະຕິບັດ (ກປຂ , ກຄຂ)*

(ຄຳອະທິບາຍ)

1) ເຮັດການສຳຫຼວດຕະຫຼາດເປັນປະຈຳ.

ກະສິກຳ ແລະ ປ່າໄມ້ແຂວງ ຫຼື ອຸດສະຫະກຳ ແລະ ການຄ້າແຂວງ ແຕ່ງຕັ້ງມອບໝາຍພະນັກງານເພື່ອຢ້ຽມຢາມຕະຫຼາດສະຫວັນໄຊ ໃນທຸກໆເດືອນເພື່ອກວດກາລາຄາຂອງພືດຜັກ, ຊະນິດພືດຜັກ ແລະ ພວກເຂົາປູກຢູ່ໃສບັນທຶກລົງໃນລາຍການ ແລະ ວິເຄາະການປ່ຽນແປງທາງດ້ານລາຄາ ແລະ ຄວາມເປັນໄປໄດ້ທີ່ຈະຜະລິດພາຍໃນທ້ອງຖິ່ນ. [*ເບິ່ງຕົວຢ່າງຂອງລາຍການລາຄາຂອງພືດຜັກ.




| | | 12-Aug-19 | | | | 5-Sep-19 | | | | 11-Oct-19 | | | | 12-Nov-19 | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| No. | Vegetable names | Unit (kg) | Price (kip) | From | Availability | Unit (kg) | Price (kip) | From | Availability | Unit (kg) | Price (kip) | From | Availability | Unit (kg) | Price (kip) | From | Availability |
| 1 | Salad lettuce | 1 | 8,000 | pakse | many | 1 | 10,000 | pakse | many | 1 | 10,000 | pakse | many | 1 | 7,000 | svk | many |
| 2 | Buttercrunch lettuce ([illegible]) | | | | | | | | | | | | | | | | |
| 3 | Frillice lettuce ([illegible]) | | | | | | | | | | | | | | | | |
| 4 | Chinese kale | 1 | 8,000 | svk | few | 1 | 10,000 | svk | few | 1 | 10,000 | svk | few | 1 | 5,000 | svk | few |
| 5 | Chinese flowering cabbage | | | | | | | | | | | | | | | | |
| 6 | Bok Choy ([illegible]) | | | | | | | | | | | | | | | | |
| 7 | Mustard green | | | | | | | | | | | | | | | | |
| 8 | Mustard cabbage | | | | | | | | | | | | | | | | |
| 9 | Thai mustard | | | | | | | | | | | | | | | | |
| 10 | Chinese cabbage | 1 | 6,000 | pakse | many | 1 | 10,000 | pakse | many | 1 | 8,000 | pakse | many | 1 | 5,000 | pakse | many |
| 11 | Cabbage | 1 | 5,000 | pakse | many | 1 | 4,000 | pakse | many | 1 | 5,000 | pakse | many | 1 | 5,000 | pakse | many |
| 12 | Tang Ho lettuce | | | | | | | | | | | | | | | | |
| 13 | Pi chili (green) | | | | | | | | | | | | | | | | |
| 14 | Pi Chili (mixed) | 1 | 20,000 | att,pakse | many | 1 | 13,000 | att pakse | many | 1 | 14,000 | att pakse | many | 1 | 13,000 | att pakse | many |
| 15 | Pi chili (red) | | | | | | | | | | | | | | | | |
| 16 | Viet red chili (no head) | | | | | | | | | | | | | | | | |
| 17 | Viet red chili (with head) | 1 | 12,000 | | many | 1 | 20,000 | | many | 1 | 14,000 | | many | 1 | 13,000 | | many |
| 18 | Yellow chili(Tomen) | | | | | | | | | | | | | | | | |
| 19 | Mixed-yellow chili(Tomen) | | | | | | | | | | | | | | | | |
| 20 | Khi Noo chili | | | | | | | | | | | | | | | | |
| 21 | Dill | 1 | 14,000 | svk | many | 1 | 13,000 | svk | many | 1 | 10,000 | svk | many | 1 | 13,000 | svk | many |

2) ຢ້ຽມຢາມລູກຄ້າທີ່ມີສັກກະຍະພາບສູງ.



2-1) ເຮັດລາຍຊື່ຂອງລູກຄ້າ ປະກອບດ້ວຍຮ້ານອາຫານ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ. ນັດໝາຍໃນກໍລະນີທີ່ຈຳເປັນ ຫຼື ພຽງແຕ່ຍ່າງເຂົ້າໄປເພື່ອແນະນຳຕົນເອງຄວາມເປັນໄປໄດ້ສູງໃນການພົບປະ ແລະ ການໂອ້ລົມ ຫຼັງຈາກທີ່ຍ່າງເຂົ້າໄປພົບ ເມື່ອເຮົາໄດ້ເຮັດລາຍຊື່ແລ້ວ, ຈະເຮັດໃຫ້ໄວຂຶ້ນ ແລະ ປະສົບຜົນສຳເລັດຫຼາຍກ່ວາທີ່ຈະໄປຢ້ຽມຢາມລູກຄ້າເທື່ອລະຄົນໂດຍທີ່ບໍ່ໄດ້ນັດໝາຍ.

2-2) ໃນເວລາທີ່ລົງໄປຢ້ຽມຢາມລູກຄ້າໃນເບື້ອງຕົ້ນ, ບໍ່ຄວນທີ່ຈະອາຍແຕ່ຄວນຈະຍິ້ມແລ້ວແນະນຳຕົນເອງໄປພ້ອມໆກັນ ຖ້າວ່າເຈົ້າຮູ້ສຶກອາຍທີ່ຈະນຳສະເໜີກ່ຽວກັບໂຄງການ, ລູກຄ້າຈະຄິດວ່າຜະລິດຕະພັນເຮົາບໍ່ມີຄຸນນະພາບມີຄວາມໝັ້ນໃຈ ແລະ ຢ້ຽມຢາມລູກຄ້າຜູ້ທີ່ມີທ່າແຮງໃນຄວາມອາດສາມາດຊື້ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.



ໃນລະຫວ່າງການປະຊຸມ, ຖາມຄຳຖາມດັ່ງລຸ່ມນີ້;

- ທ່ານນຳໃຊ້ພືດຜັກ ຊະນິດໃດ?
- ທ່ານຊື້ຜັກຢູ່ໃສ? ຊື້ເລື້ອຍໆບໍ? ຊື້ເທື່ອໜຶ່ງຈັກກິໂລ?

ສະຫຼຸບຂໍ້ມູນທີ່ໄດ້ເກັບກຳ ແລະ ລວບລວມມາ.

*ຕົວຢ່າງຄັດຕິດມາພ້ອມ

[ຕ້ອງໄດ້ກະກຽມຫຍັງແດ່]

- ແຜ່ນພັບ (ກ່ຽວກັບໂຄງການ).
- ພາບຖ່າຍຂອງພືດຜັກ.
- ລາຍການລາຄາຂອງພືດຜັກ.
- ແຜ່ນພັບ (ຄຸນປະໂຫຍດຂອງພືດຜັກ).

3) ເລືອກພືດຜັກທີ່ມີທ່າແຮງສູງ ແລ້ວມາແນະນຳໃຫ້ຊາວນາປູກ.

ປຶກສາຫາລືນຳ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຮ່ວມກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ວ່າພືດຜັກອັນໃດທີ່ມີຄວາມຕ້ອງການທາງດ້ານຕະຫຼາດສູງ ຫຼື ຊ່ວຍໃນກໍລະນີທີ່ມີການເຮັດສັນຍາປູກ.

**ຈະເລືອກແນວໃດ?**

- ຊອກຫາຕົ້ນທຶນການຜະລິດ
- ຄິດໄລ່ຜົນກຳໄລ
- ວິເຄາະຫາຂໍ້ດີ ແລະ ຂໍ້ເສຍ ຂອງພືດແຕ່ລະຊະນິດ

**ແນະນຳຊາວນາເພື່ອໃຫ້ເຂົາເລືອກ**



✧ ໃນເວລາທີ່ແນະນຳພືດຜັກໃຫ້ຊາວນາ, ຕ້ອງໄດ້ໃຫ້ຂໍ້ມູນຄົບຖ້ວນກ່ຽວກັບຕົ້ນທຶນການຜະລິດ, ໄລຍະການປູກ ແລະ ເຕັກນິກ.

**ໃຫ້ຊາວນາຕັດສິນໃຈ, ຫ້າມບອກໃຫ້ເຂົາທົດລອງ**

*ຜູ້ຈັດຕັ້ງປະຕິບັດ (ກປຂ , ກຄຂ)*

(ເອກະສານຄັດຕິດ : ລາຍການຕົວຢ່າງລາຄາຜັກ)

## Phonsim Farmers' Group Price List

Contact Number: 030 9067364/ 020 9669 4486 / 020 9129 9264 (Mr.Sengsavang)
020 98892879 (Mrs.Chalernphone)

| S/N | Type of vegetable | | Price / Kg | Remarks |
|---|---|---|---|---|
| 1 | ຜັກຫອມປ້ອມ | Corriander | 20,000 | ມີທຸກມື້ |
| 2 | ຜັກບົ່ວໃບ | Spring Oinon | 15,000 | ມີທຸກມື້ |
| 3 | ຫອມເດີ່ນ | Peppermint leaves | 15,000 | ມີທຸກມື້ |
| 4 | ຜັກຄາວທອງ | Fishmint leaves | 15,000 | ມີທຸກມື້ |
| 5 | ຜັກບົວລະພາ | Cinamon basil | 15,000 | ມີທຸກມື້ |
| 6 | ຜັກອີ່ຕູ່ | Sweet basil | 15,000 | ມີທຸກມື້ |
| 7 | ຜັກຫອມແປ | Culantro | 15,000 | ມີທຸກມື້ |
| 8 | ຜັກຫົມ 20 cm | Chinese amaranth 20 cm | 10,000 | ມີທຸກມື້ |
| 9 | ສະຫຼັດຫອມ | Lettuce/salad | 10,000 | ມີທຸກມື້ |
| 10 | ສະຫຼັດໄຂ່ | Butter crunch lettuce | 15,000 | ມີທຸກມື້ |
| 11 | ຜັກກາດຮ່ອງກົງ | Chinese-Bok choy | 7,000 | ມີທຸກມື້ |
| 12 | ຜັກຫົມ 30-35 cm | Chinese amaranth | 7,000 | ມີທຸກມື້ |
| 13 | ຫົວສີໄຄ | Lemon Grass | 5,000 | ມີທຸກມື້ |
| 14 | ຫົວຂ່າ | Galangal | 8,000 | ມີທຸກມື້ |
| 15 | ໝາກຫຸ່ງດິບ | Papaya(Raw) | 4,000 | ມີທຸກມື້ |
| 16 | ຜັກກາດຂາວ | Chinese cabbage | 10,000 | ມີທຸກມື້ |
| 17 | ກະຈຽບຂຽວ | Okra | 20,000 | ມີທຸກມື້ |
| 18 | ຜັກຕຳນິນ | Ivy gourd leaves | 15,000 | ມີທຸກມື້ |
| 19 | ຜັກກາດຊຸມ | Chinese flowering cabbage | 7,000 | ມີທຸກມື້ |
| 20 | ຍອດມັນດ້າງ | Sweet potaoto leave | 10,000 | ມີທຸກມື້ |
| 21 | ຍອດມັນຕົ້ນ | casava leave | 5,000 | ມີທຸກມື້ |
| 22 | ໝາກສະໄລ່ໃຫຍ່ | Bitter melon | 15,000 | ມີທຸກມື້ |
| 23 | ໄຂ່ໄກ່ຟົມ | Eggs (from Bounthong farm) | 25,000 | ມີທຸກມື້ |
| 24 | ໄຂ່ໄກ່ລາດ | Eggs (Free range) | 75,000 | 1 ຄັ້ງຕໍ່ອາທິດ |
| 25 | ໝາກເຂືອ | Eggplant | 10,000 | 2 ຄັ້ງຕໍ່ອາທິດ |
| 26 | ໝາກບວບນ້ອຍ | Small sponge gourd/luffa | 10,000 | 2 ຄັ້ງຕໍ່ອາທິດ |
| 27 | ຜັກຂຶ້ນສ່າຍ | Celery | 30,000 | ສັ່ງກ່ອນລ່ວງໜ້າ |
| 28 | ໝາກຖົ່ວຍາວ | Long bean | 12,000 | ຕອບສະໜອງໄດ້ເລີ່ມຈາກປີ2019 |
| 29 | ຜັກທຽມໃບ | Garlic leaves | 15,000 | ຕອບສະໜອງໄດ້ເລີ່ມຈາກປີ2020 |
| 30 | ຫົວກາດຂາວ | Whtie raddish | 15,000 | ຕອບສະໜອງໄດ້ເລີ່ມຈາກປີ2021 |
| 31 | ຫົວຂາດິດ ແດງ | Red raddish | 15,000 | ຕອບສະໜອງໄດ້ເລີ່ມຈາກປີ2022 |
| 32 | ແຄລົດ | Carrot | 15,000 | ຕອບສະໜອງໄດ້ເລີ່ມຈາກເດືອນ ເມສາ-2019 |
| 33 | ຫົວຂາດິດແດງ(ນ້ອຍ) | Small red raddish | 20,000 | ຍັງບໍ່ມີ |
| 34 | ຜັກກະເພົາ | Holy basil | 15,000 | ມີບໍ່ຫລາຍ |
| 35 | ຜັກບົ້ງ | Morning glory | 8,000 | ມີບໍ່ຫລາຍ |
| 36 | ໝາກແຄ້ງ | Small eggplant | 8,000 | ມີບໍ່ຫລາຍ |
| 37 | ຜັກສີງທອງ | Sangthong vegetable | 20,000 | ຫຼັງຈາກ 2 ອາທິດ |
| 38 | ໝາກເລັ່ນ | Tomato | 10,000 | ຫຼັງຈາກ 1 ເດືອນ |
| 39 | ໝາກເຂືອຍາວຂຽວ | Long green eggplant | 10,000 | ຫຼັງຈາກ 2 ເດືອນ |
| 40 | ໝາກເຜັດ | Chilli | 22,000 | ຫຼັງຈາກ 3 ເດືອນ |

(ເອກະສານຄັດຕິດ : ຕົວຢ່າງຄຸນປະໂຫຍດຂອງພືດຜັກ)



ຜັກທ່າປາງທອງ ສົດ ແລະ ປອດໄພ!

## ກະຈຽບ

ອຸດົມໄປດ້ວຍ

ວິຕາມິນຊີ, ເອ, ເຄ ມີທາດໄປຕີນ, ທາດເຫຼັກ ແລະ ສັງກະສີ

**ຄຸນປະໂຫຍດ:**

- ຮັກສານ້ຳຕານໃນເລືອດ
- ກຳຈັດໄຂມັນສ່ວນເກີນ

**ວິທີແຕ່ງກິນ:**

ສ່ວນປະສົມ: ກະຈຽບຂຽວອ່ອນ, ຊີ້ນໝູ, ໝາກເຜັດ, ຜັກທຽມ, ນ້ຳມັນພືດ, ນ້ຳມັນຫອຍ, ນ້ຳຕານ, ນ້ຳປາ ແລະ ພິກໄທ.

1: ຜ່ານກະຈຽບເປັນຕ່ອນ ໃສ່ນ້ຳມັນຫອຍ, ພິກໄທ, ກະທຽມ, ນ້ຳມັນພືດ, ນ້ຳຕານ, ນ້ຳປາ ແລະ ພິກແດງ.
2: ແລ້ວຜັດໃສ່ລວມກັນ.

ຜັກທ່າປາງທອງ ສົດ ແລະ ປອດໄພ!

## ຜັກກາດກວາງຕຸ້ງ

ອຸດົມໄປດ້ວຍ

ວິຕາມິນເຄ ແລະ ແຮ່ທາດອື່ນໆ, ຟົດສະຟໍລັດ, ສັງກະສີ, ເບຕ້າແຄໂລທີນ

**ຄຸນປະໂຫຍດ :**

- ເສີມສ້າງຄວາມແຂງແຮງຂອງກະດູກ ແລະ ລະບົບພູມຄຸ້ມກັນ
- ມີຄຸນປະໂຫຍດ ຕໍ່ກັບລະບົບຫົວໃຈ ແລະ ຫຼອດເລືອດ

**ວິທີແຕ່ງກິນ :**

ສ່ວນປະສົມ: ຜັກກາດກວາງຕຸ້ງ, ຊອດຫອຍນາງໂລມ, ເຫັດ, ກຸ້ງ, ຕົ້ນອ່ອນຕາເວັນ, ກະທຽມ, ຊີ້ນໝູ ຫຼື ໄກ່ກໍໄດ້

1: ຜັດໃສ່ຊອດຫອຍນາງໂລມ ໃສ່ເຫັດ, ກຸ້ງ, ກະທຽມ, ສາມາດໃສ່ໝູ ຫຼື ໄກ່ກໍໄດ້.
2: ພ້ອມເສີບ ກັບເຂົ້າຈ້າວ.

## ສົດ ແລະ ປອດໄພ

ເບີໂທຕິດຕໍ່: 020 9225 3557

facebook: ຜັກເພື່ອສຸຂະພາບ

ທ່າປາງທອງ ກຸ່ມຕະຫຼາດຊາວນາ!



ຜັກທ່າປາງທອງ ສົດ ແລະ ປອດໄພ!

## ຫົວຜັກກາດແດງ

ອຸດົມໄປດ້ວຍ

ວິຕາມິນຊີ, ໂພແຕຊຽມ, ແຄວຊຽມ, ກົດໂຟລິກ ແລະ ຊີລີນຽມ

**ຄຸນປະໂຫຍດ:**

- ລົດຄວາມດັນໃນເລືອດ
- ເຮັດໃຫ້ຮູ້ສຶກສົດຊື່ນ

**ວິທີແຕ່ງກິນ:**

ສ່ວນປະສົມ: ຫົວຜັກກາດແດງ, ນ້ຳຕານ(ຕົ້ມແລ້ວ), ນ້ຳໝາກພ້າວອ່ອນ

1: ຜ່ານຫົວຜັກກາດແດງ ໂດຍບໍ່ໄດ້ລອກເປືອກອອກ ພຽງແຕ່ລ້າງໃຫ້ສະອາດ ຈຶ່ງຜ່ານເປັນປ່ຽງ.

2: ແລ້ວເອົາສ່ວນຕ່າງໆ ໃສ່ໃນເຄື່ອງປັ່ນເລີຍ.

ຜັກທ່າປາງທອງ ສົດ ແລະ ປອດໄພ!

## ແຄລ໊ອດ

ອຸດົມໄປດ້ວຍ

ວິຕາມິນເຄ, ເບຕາແຄໂລທີນ, ໄຟເບີ, ໂປແຕຊຽມ ແລະ ສານຕ້ານອະນຸມູນ ອິດສະຫຼະ

**ຄຸນປະໂຫຍດ :**

- ລົດຄວາມສ່ຽງຂອງໂລກມະເລັງ
- ຊ່ວຍລົດໂລກຫົວໃຈ ແລະ ຫຼອດເລືອດ

**ວິທີແຕ່ງກິນ :**

ສ່ວນປະສົມ: ແຄລ໊ອດ, ໝາກນັດ, ແອັບເປີ້ນ ແລະ ນ້ຳກ້ອນໜ້ອຍໜຶ່ງ

1: ປະສົມທຸກຢ່າງເຂົ້າດ້ວຍກັນ.
2: ແລ້ວປັ່ນເຂົ້າດ້ວຍກັນ

ຜັກທ່າປາງທອງ ສົດ ແລະ ປອດໄພ!

## ຫົວໄຊເທົ້າ

ອຸດົມໄປດ້ວຍ

ວິຕາມິນຊີ ແລະ ດີຕໍ່ສຸຂະພາບ ທາງເດີນອາຫານ

**ຄຸນປະໂຫຍດ :**

- ປ້ອງກັນໂລກມະເລັງ
- ປັບປຸງລະບົບ ການຍ່ອຍອາຫານ

**ວິທີແຕ່ງກິນ :**

ສ່ວນປະສົມ:ຫົວໄຊເທົ້າ, ໄກ່ ຫຼື ຊີ້ນໝູ, ພິກໄທ, ສະອິ໊ວ, ເກືອ, ເຫັດຫູໜູ ແລະ ຫອມປ້ອມ.
1: ປະສົມທຸກຢ່າງລົງໃນໝໍ້.
2: ລໍຖ້າຈົນນ້ຳເດືອດ ແລ້ວປຸງລົດຊາດ ຕາມໃຈ
3: ພ້ອມເສີບ ກັບເຂົ້າຈ້າວ.

(ເອກະສານຄັດຕິດ: ຕົວຢ່າງ ຮູບຂອງພືດຜັກ)



ກໍລະນີສຶກສາ

## ໂຄງການແນະນຳພືດຜັກ 6 ຊະນິດ ແລະ ທົດລອງປູກແບບມີສັນຍາ

| ລຳດັບ | ຊື່ພືດຜັກ ທີ່ຊາວນາທົດລອງ | ຕະຫຼາດ(ບ່ອນຈຳໜ່າຍ) | ຜົນລັບຈາກການທົດລອງ |
|---|---|---|---|
| 1 | ງາດຳ | ສົ່ງອອກຍີ່ປຸ່ນ | ສາມາດປູກໄດ້ ແລະ ໄດ້ຮັບຜົນຜະລິດເລັກນ້ອຍ, ຍັງຢູ່ໃນຊ່ວງທົດລອງ,ຍ້ອນສະພາບອາກາດ |
| 2 | ສຸກີນີ | ຮ້ານອາຫານ, ລູກຄ້າທົ່ວໄປ, ບໍລິສັດ | ຍັງຢູ່ໃນຂັ້ນທົດລອງ(ແຕ່ສາມາດປູກໄດ້ໃນປະລິມານທີ່ນ້ອຍ ຍ້ອນພະຍາດເຂົ້າທຳລາຍ) |
| 3 | ເຫັດເຟືອງ | ຕະຫຼາດທົ່ວໄປ | ປູກໄດ້(ແຕ່ຍັງໄດ້ຮັບຜົນຜະລິດຕ່ຳ) |
| 4 | ຫົວໄຊທ້າວ | ຕະຫຼາດທົ່ວໄປ, ບໍລິສັດ, ຄົນຫວຽດ-ຄົນຈີນ | ສາມາດຜະລິດໄດ້ |
| 5 | ກວາງຕຸງ | ຕະຫຼາດທົ່ວໄປ, ບໍລິສັດ, ຄົນຫວຽດ-ຄົນຈີນ | ສາມາດຜະລິດໄດ້ |
| 6 | ກະຈຽບຂຽວ | ຕະຫຼາດທົ່ວໄປ, ຄົນຫວຽດ | ສາມາດຜະລິດໄດ້ |
| 7 | ສະຫຼັດ | ສະຫຼັດໃນຊ່ວງລະດູຝົນ | ສາມາດຜະລິດໄດ້ |
| 8 | ໝາກເຜັດປີ | ຕະຫຼາດທົ່ວໄປ | ສາມາດຜະລິດໄດ້ |
| 9 | ໝາກເຂືອສີມ່ວງ | ຕະຫຼາດທົ່ວໄປ, ບໍລິສັດ | ສາມາດຜະລິດໄດ້ |
| 10 | ແຕງເມລອນ | ຕະຫຼາດທົ່ວໄປ, ຊຸບເປີມາເກັດ | ຍັງບໍ່ສາມາດຜະລິດໄດ້: ແມງໄມ້ ແລະ ພະຍາດເຂົ້າທຳລາຍ |
| 11 | ຂີງດຳ | ຕະຫຼາດທົ່ວໄປ, ບໍລິສັດເອັສທີດີ | ຍັງບໍ່ສາມາດຜະລິດໄດ້: ແມງໄມ້ ແລະ ພະຍາດເຂົ້າທຳລາຍ |
| 12 | ແຕງຍີ່ປຸ່ນ | ຕະຫຼາດທົ່ວໄປ, ຕະຫຼາດວຽງຈັນ, ບໍລິສັດ | ຍັງບໍ່ສາມາດຜະລິດໄດ້: ແມງໄມ້ ແລະ ພະຍາດເຂົ້າທຳລາຍ |
| 13 | ແຄລ່ອດ | ຕະຫຼາດທົ່ວໄປ | ສາມາດຜະລິດໄດ້ສ່ວນໜຶ່ງ ແຕ່ຕ້ອງໃຊ້ເວລາ |
| 14 | ໝາກເລັ່ນນ້ອຍ | ຕະຫຼາດທົ່ວໄປ ສຳລັບລະດູຝົນ | ຍັງບໍ່ສາມາດຜະລິດໄດ້: ແມງໄມ້ ແລະ ພະຍາດເຂົ້າທຳລາຍ |
| 15 | ໝາກເລັ່ນໃຫຍ່ | ຕະຫຼາດທົ່ວໄປ ສຳລັບລະດູຝົນ | ຍັງບໍ່ສາມາດຜະລິດໄດ້: ແມງໄມ້ ແລະ ພະຍາດເຂົ້າທຳລາຍ |
| 16 | ຫົວບົ່ວໃຫຍ່ | ບໍລິສັດ | ປູກຍາກ, ໃຊ້ເວລາ, ການແຕກງອກບໍ່ໄດ້ |

## (2) ຈັດຝຶກອົບຮົມ ກ່ຽວກັບການປູກ ແລະ ຕອບສະໜອງແນວພັນເພື່ອທົດລອງປູກ

1) ພະນັກງານແຂວງ ແລະ ເມືອງ ໄດ້ຈັດຝຶກອົບຮົມວິທີການປູກໃຫ້ແກ່ຊາວນາ ແນວພັນເພື່ອທົດລອງແມ່ນສະໜອງໃຫ້ກັບຊາວນາຜູ້ທີ່ມາຮ່ວມໃນຍາມທີ່ຝຶກອົບຮົມແລ້ວ.

(ຄໍາອະທິບາຍ)

1) ຈັດຝຶກອົບຮົມ ວິທີການປູກ ສໍາລັບແນວພັນ ເພື່ອທົດລອງ.

ຫຼັງຈາກຊາວນາໄດ້ຕັດສິນໃຈວ່າຈະທົດລອງພືດຊະນິດໃດ, ພະນັກງານແຂວງ ແມ່ນກະກຽມການຝຶກອົບຮົມ ເພື່ອທີ່ຈະໄດ້ສອນຊາວນາກ່ຽວກັບວິທີການປູກ ທ່ານສາມາດເຂົ້າເບິ່ງຂໍ້ມູນລາຍລະອຽດໄດ້ທີ່:

Savanpad.webnode.com

ໃນຊ່ວງການຝຶກອົບຮົມ, ພະນັກງານແຂວງ ຄວນກວດອີກເທື່ອໜຶ່ງໂດຍ ການເຕືອນຊາວນາກ່ຽວກັບຕົ້ນທຶນການຜະລິດ ແລະ ໃຫ້ເຂົາຄິດໄລ່ກ່ຽວກັບຜົນກໍາໄລ ອີກຄັ້ງ, ອະທິບາຍ ລາຄາຂອງວັດຖຸດິບແຕ່ລະຢ່າງທີ່ໄດ້ສະໜອງໃຫ້ ແລະ ເຂົາສາມາດຊື້ໄດ້ຈາກໃສ.

ຫຼັງຈາກການຝຶກອົບຮົມ, ຖາມຊາວນາ ກ່ຽວກັບຂັ້ນຕອນການປູກແລະ ຂຽນບັນທຶກລົງ, ເມື່ອໃດ ແລະ ຈະເຮັດຫຍັງ. (ສ້າງຕາຕະລາງແຜນປູກ)

ຕົວຢ່າງ"ເຈົ້າຈະເລີ່ມເມື່ອໃດ?" ວັນທີ 10/09 "ມື້ໃດຈະບົ່ງ?"ວັນທີ 25/09
"ມື້ໃດຈະຕ້ອງໄດ້ໃສ່ຝຸ່ນໝັກ?" ວັນທີ 05-10/10

ໃນຕອນທ້າຍ, ພະນັກງານແຂວງໄດ້ ສະໜອງແນວພັນໃຫ້ເພື່ອທົດລອງ ໃຫ້ກັບຊາວນາ ຜູ້ທີ່ມາຮ່ວມການຝຶກອົບຮົມ.

✧ ບໍ່ຄວນສະໜອງແນວພັນໃຫ້ກັບຊາວນາຜູ້ທີ່ບໍ່ໄດ້ມາຮ່ວມການຝຶກອົບຮົມ.



ຂັ້ນຕໍ່ໄປ

ຫຼັງຈາກການຝຶກອົບຮົມ, ພະນັກງານແຂວງ ແລະ ເມືອງ ລົງຢ້ຽມຢາມຊາວກະສິກອນເປັນແຕ່ລະໄລຍະ

ຖ້າມີສະຖານທີ່, ແມ່ນແນະນໍາໃຫ້ ພະນັກງານແຂວງ ຝຶກຝົນເຕັກນິກຂອງພວກເຂົາ ຕົວຢ່າງ ຢູ່ສວນທົດລອງຫຼັກ 35.



✧ ເບິ່ງເອກະສານຄັດຕິດ, ຕົວຢ່າງ ການປູກເຫັດເຟືອງ ພະນັກງານແຂວງ ດໍາເນີນການທົດລອງ ແລະ ສ້າງຄູ່ມື.

*ຜູ້ຈັດຕັ້ງປະຕິບັດ (ກປຂ , ກຄຂ)*

(ເອກະສານຄັດຕິດ: ຕົວຢ່າງ ຄູ່ມືການປູກເຫັດ)

# <u>ການປູກເຫັດເຟືອງ</u>

## 1.ການປູກເຫັດເຟືອງ

ການປູກເຫັດເຟືອງມີຫຼາຍວິທີເຊັ່ນວ່າ: ປູກໃສ່ກະເປົ໋າ, ປູກໃສ່ກະຕ່າ, ປູກດ້ວຍກອງເຕ້ຍ ແລະ ແບບໂຮງເຮືອນ. ແຕ່ວ່າໃນເອກະສານ ຫຼື ຕາມຊ່ອງທາງອິນເຕີເນັດ ມີຫຼາຍວິທີທີ່ແຕກຕ່າງກັນ ຈຶ່ງເຮັດໃຫ້ຜູ້ອ່ານມີຄວາມສັບສົນ ແລະ ບໍ່ເຂົ້າໃຈ ດັ່ງນັ້ນ ເຮົາຈຶ່ງມີວິທີທີ່ຈະແນະນຳໃນການປູກເຫັດເຟືອງທີ່ໄດ້ຮັບຜົນດີ.

ການປູກເຫັດເຟືອງກອງເຕ້ຍ: ເປັນວິທີທີ່ງ່າຍ ແລະ ບໍ່ສັບສົນ ສາມາດນຳໃຊ້ວັດຖຸທີ່ມີໃນທ້ອງຖິ່ນ

## 2. ສ່ວນປະກອບ

- ຜ້າຢາງສຳລັບປູກເຫັດ 12 ແມັດ
- ເຟືອງ 12 ລອບ
- ຂີ້ງົວເຜົາ 1 ລອບ
- ເຊື້ອເຫັດ 4 ຖົງ (ເຊື້ອເຫັດ 2 ຖົງ ສາມາດປູກໄດ້ 3 ກອງເຟືອງ)
- ແບບປູກເຫັດຂະໜາດ 40 ຄູນ 70 ຊັງຕີແມັດ. ເຮັດເປັນຮູບຄາງໝູ
- ນ້ຳສະອາດ 40ລິດ/ກ້ອນເຟືອງ 40 ຊັງຕີແມັດ

## 3. ການກະກຽມ

ແກະເຊື້ອເຫັດເປັນສິ້ນນ້ອຍໆ



ແຊ່ເຟືອງ 5 ນາທີ(ບໍ່ໃຫ້ເຟືອງອີ່ມນ້ຳຫຼາຍ)



ພື້ນທີ່ຕ້ອງບໍ່ແດດ ແລະ ບໍ່ຮົ່ມເກີນໄປ



ຖ້າຊ່ວງຝົນແມ່ນຕ້ອງເປັນພື້ນທີ່ສູງ ນ້ຳບໍ່ໄຫຼຜ່ານ ແລະ ບໍ່ຖືກຝົນຫຼາຍ. ຂະໜາດຂອງໜານປູກ 1 ຄູນ 5 ແມັດ, ຂຸດລົງປະມານ 15 ຊັງຕີແມັດ , ເຮັດຄັນເພື່ອປ້ອງກັນບໍ່ໃຫ້ນ້ຳເຊື້ອເຫັດໄຫຼອອກພື້ນທີ່ຕ້ອງບໍ່ແດດ ແລະ ບໍ່ຮົ່ມເກີນໄປ, ຖ້າຊ່ວງຝົນແມ່ນຕ້ອງເປັນພື້ນທີ່ສູງ ນ້ຳບໍ່ໄຫຼຜ່ານ ແລະ ບໍ່ຖືກຝົນຫຼາຍ. ຂະໜາດຂອງໜານປູກ 1 ຄູນ 5 ແມັດ, ຂຸດລົງປະມານ 15 ຊັງຕີແມັດ , ເຮັດຄັນເພື່ອປ້ອງກັນບໍ່ໃຫ້ນ້ຳເຊື້ອເຫັດໄຫຼອອກ.

## 4. ວິທີການປູກ:

ເອົາເຟືອງໃສ່ປະມານ5ຊັງຕີແມັດ



ເອົາຂີ້ງົວເຜົາໂຮຍຕາມຂອບ



ແລ້ວເອົາເຊື້ອເຫັດໂຮຍຕາມຂອບ



ເອົາເຟືອງລົງ



ຫົດນ້ຳໃຫ້ປຽກ



ເຮັດແບບນີ້ຈົນໄດ້ 3 ຊັ້ນ
ຊັ້ນສຸດທ້າຍໃຫ້ໃຊ້ເຟືອງໜາໆ
ເພື່ອບໍ່ໃຫ້ຜ້າຢາງຖືກກັບເຊື້ອ
ເຫັດ

ຂັ້ນຕອນທັງໝົດແມ່ນລາຍລະອຽດໃນຕາຕາລາງ ແລະ ຮູບພາບ

| |
|---|
| ຫົດນ້ຳ ແລະ ຢຽບພໍປະມານ |
| ຊັ້ນສຸດທ້າຍຕ້ອງໃຊ້ເຟືອງຫຼາຍກວ່າທຸກຊັ້ນເພື່ອປ້ອງກັນຜ້າຢາງບໍ່ໃຫ້ຖືກກັບເຊື້ອເຫັດ |
| ເຮັດໃຫ້ໄດ້ 3 ຊັ້ນ |
| ຫົດນ້ຳ ແລະ ຢຽບພໍປະມານ |
| ເຊື້ອເຫັດລົງ |
| ຂີ້ງົວເຜົາໂຮຍ |
| ເອົາເຟືອງລົງສູງປະມານ 5-10 ຊັງຕີແມັດ |

ເຮັດແບບນີ້ຈົນໄດ້ຮອດ 3 ຊັ້ນ, ຊັ້ນສຸດທ້າຍໃຫ້ໃສ່ເຟືອງສູງປະມານ 20-30ຊັງຕີແມັດ ເພື່ອປ້ອງກັນບໍ່ໃຫ້ເຊື້ອເຫັດຖືກກັບຜ້າຢາງ. ຫຼັງຈາກເຮັດສຳເລັດແລ້ວ ໃຫ້ປົກຄຸມດ້ວຍຜ້າຢາງບໍ່ໃຫ້ອາກາດເຂົ້າ.

5. ວິທີການຮັກສາ: ຫຼັງຈາກ 3-4 ວັນໃຫ້ເຈາະຜ້າຢາງອອກເພື່ອໃຫ້ອາກາດເຂົ້າ, ຫຼັງເຈາະແຕ່ລະມື້ຕ້ອງໄດ້ຕິດຕາມສັງເກດຄວາມຊຸ່ມ ຖ້າເຫັນມີໃຍຂາວຫຼາຍໃຫ້ຫົດນ້ຳພໍປະມານເພື່ອຕັດໃຍ(ຖ້າບໍ່ເຫັນຫຼາຍບໍ່ຄວນຫົດ)

6. ການເກັບກ່ຽວ: ຄວນເກັບຊ່ວງອາກາດເຢັນ( ເຊົ້າ-ແລງ) ບໍ່ມີແດດ, ບໍ່ຄວນຖິ້ມເສດຕີນເຫັດທີ່ເກັບແລ້ວລົງໃສ່ໜານເຫັດ. ຫຼັງຈາກເກັບຕ້ອງໄດ້ປົກຄຸມດ້ວຍຜ້າຢາງ ແລະ ເຟືອງຄືເກົ່າ.

## 2 ການໂຄສະນາ ແລະ ສົ່ງເສີມການຂາຍ

### (1) ຊ່ວຍເຫຼືອໃນເວລາ ເກັບຜົນຜະລິດເພື່ອຂາຍ

1) ພະນັກງານອຸດສະຫະກຳ ແລະ ການຄ້າແຂວງ, ກະສິກຳ ແລະ ປ່າໄມ້ແຂວງ ແລະ ເມືອງ ຊ່ວຍຊາວນາຂາຍຜົນຜະລິດ, ໂດຍສະເພາະປັ້ນຮູບປາມລູກຄ້າຮ່ວມກັບຊາວນາໃນຄັ້ງທຳອິດ.

(ຄຳອະທິບາຍ)

1) ຊ່ວຍຊາວນາ ເພື່ອຂາຍຜົນຜະລິດຂອງພວກເຂົາ.

ຊາວນາຂ້ອນຂ້າງອາຍ ແລະ ບໍ່ຄຸ້ນເຄີຍກັບວິທີການຂາຍ ພວກເຂົາຖ້າໃຫ້ແມ່ຄ້າມາຊື້ຜົນຜະລິດໃນສວນອັນນີ້ແມ່ນມີຄວາມສຳຄັນຫຼາຍ ສຳລັບພະນັກງານອຸດສະຫະກຳ ແລະ ການຄ້າແຂວງ, ກະສິກຳ ແລະ ປ່າໄມ້ແຂວງ, ເມືອງ ໃນການຊ່ວຍເຫຼືອຊາວນາສຳລັບການຕິດຕໍ່ພົວພັນ, ໃນຄັ້ງທຳອິດ <u>ນຳພາຊາວນາໄປຕະຫຼາດ ແລະ ຮ້ານອາຫານເພື່ອຂາຍຜົນຜະລິດ.</u>

ໃນເວລານຳພາຊາວນາ ໄປຂາຍຜົນຜະລິດ, ເອກະສານດັ່ງລຸ່ມນີ້ສາມາດຊ່ວຍໄດ້.

- ແຜ່ນພັບທີ່ນຳສະເໜີ ກ່ຽວກັບໂຄງການ.
- ໃບປິວເພື່ອແນະນຳກ່ຽວກັບຜະລິດຕະພັນຂອງຊາວນາ (ຮູບພາບຂອງພືດຜັກ ແລະ ເບີໂທຕິດຕໍ່ຂອງຊາວນາ).
- ໃບປິວເພື່ອອະທິບາຍ ຄຸນປະໂຫຍດຂອງພືດຜັກ.
- ລາຍການລາຄາຂອງພືດຜັກ(ຖ້າມີ).
- ຕົວຢ່າງຂອງພືດຜັກ.

* ເອກະສານຕົວຢ່າງຄັດຕິດຂ້າງເທິງ.





ເຮົາຈະມີການກະກຽມແນວໃດ ກ່ອນລົງໄປຕິດຕາມການຂາຍ???

*ຜູ້ຈັດຕັ້ງປະຕິບັດ (ອຄຂ,ກປຂ,ກປມ)*

ກ. ແນະນໍາກ່ຽວກັບຄຸນນະພາບຂອງຜະລິດຕະພັນ.

ກ່ອນຈະເຮັດໃບປິວ ຫຼື ເອກະສານສິ່ງເສີມການຂາຍ ແມ່ນໃຫ້ຄິດເຖິງຄຸນຄ່າ ທີ່ລູກຄ້າຢາກໄດ້ ຫຼື ມີຄວາມຕ້ອງການ.





| ມີຄຸນຄ່າ = ດີໃຈ = ຊື້ | ບໍ່ມີຄຸນຄ່າ = ບໍ່ດີໃຈ = ບໍ່ຊື້ |
|---|---|

ລູກຄ້າບໍ່ໄດ້ຊື້ພຽງແຕ່ຜະລິດຕະພັນ, ແຕ່ລູກຄ້າຄໍານຶງເຖິງຄຸນຄ່າ ທີ່ພວກເຂົາຈະໄດ້ຈາກຜະລິດຕະພັນ.

ໃນເລື່ອງຂອງ "ພືດຜັກ", ອາຫານທີ່ປອດໄພ ແລະ ມີຄຸນປະໂຫຍດ ຕໍ່ສຸຂະພາບ ແມ່ນເປັນສິ່ງທີ່ສໍາຄັນຫຼັກ.





ອາຫານທີ່ປອດໄພ

ມີຄຸນປະໂຫຍດຕໍ່ສຸຂະພາບ

ຕົວຢ່າງ:

| ພືດ | ສານອາຫານ | ຄຸນປະໂຫຍດ |
|---|---|---|
| ກະຈຽບ | ມີວິຕາມິນ ເອ,ຊີ,ເຄ, ທາດໂປຣຕີນ, ໄຟເບີ້, ທາດແຄວຊຽມ. | ປັບສົມດຸນຂອງຄໍເລັດເຕີລໍ້, ຊ່ວຍບໍາລຸງສະພາບຂອງຕັບ, ບັນເທົາອາການເຈັບເຂົ່າ ແລະ ອື່ນໆ. |
| ຜັກກາວງຕຸ້ງ | ມີວິຕາມິນເອ, ທາດແຄວຊຽມ, ແມັກນີຊຽມ, ໂປຣເຕຊຽມ. | ຊ່ວຍລະບົບຫົວໃຈໃຫ້ແຂງແຮງ ແລະ ສິ່ງເສີມການຕໍ່ຕ້ານ ໂລກມະເລັງ ແລະ ອື່ນໆ. |
| ແຄລົອດ | ມີວິຕາມິນເອ, ສານຕ້ານອະນຸມູນອິດສະຫຼະ, ແຄໂລທີນ. | ຫຼຸດຄວາມສ່ຽງການເປັນໂລກມະເລັງ, ບໍາລຸງສາຍຕາ, ເຮັດໃຫ້ຜິວພັນສົດໃສ. |

*ຜູ້ຈັດຕັ້ງປະຕິບັດ (ອຄຂ,ກປຂ,ກປມ)*

ຂ. ສ້າງໂພສເຕີ້ ແລະ ໃບປິວ ອີງຕາມຂໍ້ມູນ ຂອງຄຸນຄ່າທີ່ໄດ້ມາ

ອີງຕາມຂໍ້ມູນ ທີ່ໄດ້ເກັບລວບລວມມາ ກ່ຽວກັບຄຸນຄ່າ, ສ້າງໂພສເຕີ້. ສາມາດຕື່ມຂໍ້ມູນດັ່ງລຸ່ມນີ້ໃສ່ໄດ້.

| |
|---|
| 1: ສານອາຫານທີ່ປະກອບມີ: ຕົວຢ່າງ: ວິຕາມິນເອ, ຊີ, ເຄ, ທາດເຫຼັກ, ທາດແຄວຊຽມ, ໂປຣຕີນ ແລະ ອື່ນໆ. |
| 2: ຄຸນປະໂຫຍດຕໍ່ສຸຂະພາບ: ຕົວຢ່າງ: ລົດຄວາມດັນເລືອດ, ຊ່ວຍລົດຄໍເລັສເຕີລໍ, ຊ່ວຍຍ່ອຍອາຫານ ແລະ ອື່ນໆ. |
| 3: ວິທີແຕ່ງກິນ, ຕົວຢ່າງ: ສູດການເຮັດອາຫານງ່າຍໆ. |

*ຜູ້ຈັດຕັ້ງປະຕິບັດ (ອຄຂ,ກປຂ,ກປມ)*





ພະນັກງານອຸດສະຫະກຳ ແລະ ການຄ້າ ພ້ອມກັບ ກະສິກຳ ແລະ ປ່າໄມ້ແຂວງ, ເມືອງ ຊ່ວຍຊາວນາແຈກຢາຍ ແລະ ຕິດໂພສເຕີ.

ຕົວຢ່າງໃບປິວແນະນຳກ່ຽວກັບຊາວນາດັ່ງລຸ່ມນີ້.




ຄິດຫາປະໂຫຍກເພື່ອໃຫ້ໄດ້ຮັບຄວາມສົນໃຈ.

ກວດສອບໃຫ້ແນ່ໃຈວ່າເບີໂທ ຕິດຕໍ່ທີ່ໃສ່ນັ້ນ ສາມາດຕິດຕໍ່ໄດ້ຕະຫຼອດເວລາ.

ນຳໃຊ້ພາບຂອງຜະລິດຕະພັນຕົວຈິງ ຫ້າມນຳໃຊ້ຮູບທີ່ໄດ້ຈາກອິນເຕີເນັດ.

ກໍລະນີສຶກສາ

## ການສົ່ງເສີມ ປູກໝາກກະຈຽບຂຽວ.




ໝາກກະຈຽບບໍ່ໄດ້ເປັນທີ່ຮູ້ຈັກ ແລະ ບໍ່ເປັນທີ່ນິຍົມໃນແຂວງສະຫວັນນະເຂດ ໃນເມື່ອເວລາທີ່ໄປແນະນຳຊາວນາ, ພວກເຂົາເວົ້າວ່າ "ຂ້ອຍບໍ່ຮູ້ວ່າຊິກິນແນວໃດ" "ຂ້ອຍບໍ່ເຄີຍກິນມາກ່ອນ" ໝາກກະຈຽບທີ່ຂາຍໃນແຂວງສະຫວັນນະເຂດ ແມ່ນນຳມາຈາກປະເທດຫວຽດນາມ, ດັ່ງນັ້ນມັນຈຶ່ງເບິ່ງຄືບໍ່ຍາກສິດ. ໂຄງການກໍ່ໄດ້ຖາມຊາວນາ ວ່າຕ້ອງການຢາກທົດລອງປູກບໍ່. ບາງຄົນລອງປູກ ແລະ ເຫັນວ່າປູກງ່າຍເຖິງໃນລະດູຝົນກໍ່ຕາມ ແລະ ພວກເຂົາກໍ່ສາມາດຜະລິດໄດ້ຢ່າງຕໍ່ເນື່ອງ.

ພະນັກງານ ອຸດສະຫະກຳ ແລະ ການຄ້າແຂວງ, ກະສິກຳ ແລະ ປ່າໄມ້ແຂວງ ໄດ້ຄົ້ນຫາຂໍ້ມູນຜ່ານອິນເຕີເນັດ ແລະ ໄດ້ເຫັນວ່າໝາກກະຈຽບຂຽວ ມີຄຸນປະໂຫຍດ ຢ່າງຫຼວງຫຼາຍ ຊາວນາບາງຄົນ ຜູ້ທີ່ກິນຜົນຜະລິດ ທີ່ເຂົາເກັບກ່ຽວເອງ ກໍ່ໄດ້ເວົ້າວ່າ ຫຼັງຈາກກິນກະຈຽບຂຽວແລ້ວ ອາການເຈັບເຂົ່າ ກໍ່ຮູ້ສຶກບັນເທົາ.

ພະນັກງານ ອຸດສະຫະກຳ ແລະ ການຄ້າແຂວງ ໄດ້ສ້າງໂພສເຕີ້ ແລະ ໃບປິວ ເພື່ອໂຄສະນາສົ່ງເສີມ ຄຸນປະໂຫຍດທີ່ດີຕໍ່ສຸຂະພາບ ແລະ ໄດ້ແຈກຈ່າຍໂດຍກົງໃຫ້ກັບລູກຄ້າກັບມື ພ້ອມກັນນັ້ນກໍ່ຍັງໄດ້ອະທິບາຍ ກ່ຽວກັບຄຸນປະໂຫຍດ.

ຫຼັງຈາກນັ້ນ, ລູກຄ້າເລີ່ມກັບມາຖາມຫາໝາກກະຈຽບຂຽວ ແລະ ດ້ວຍສາເຫດນີ້ເອງ ທີ່ເຮັດໃຫ້ຊາວນາຂະຫຍາຍເນື້ອທີ່ປູກໝາກກະຈຽບຕື່ມອີກ.

ຄ. ນຳໃຊ້ປະໂຫຍດຈາກ ສື່ຕ່າງໆເພື່ອດຶງດູດລູກຄ້າ.

<u>**ເຟສບຸກ**</u> ເປັນອີກໜຶ່ງເຄື່ອງມືທີ່ມີປະສິດທິພາບສູງສຸດທີ່ທາງໂຄງການໄດ້ລອງນຳໃຊ້, ພະນັກງານອຸດສະຫະກຳ ແລະ ການຄ້າແຂວງ ພ້ອມກັບ ກະສິກຳ ແລະ ປ່າໄມ້ແຂວງ ໄດ້ໂພສຂໍ້ມູນໃໝ່ລົງເລື້ອຍໆໃນທຸກໆອາທິດ. ໃນເວລາທີ່ຈະຕັ້ງໜ້າເຟສບຸກໃໝ່ຕ້ອງໄດ້ປຶກສາຫາລືກ່ຽວກັບຈຸດປະສົງຂອງໜ້າເຟສບຸກທີ່ເຮົາຈະຕັ້ງ ແລະ ເລືອກຮູບແບບ.

ຈຸດປະສົງຂອງໜ້າເຟສບຸກຂອງໂຄງການສະຫວັນແພັດ: <u>ເພື່ອສົ່ງເສີມການຂາຍຜັກປອດສານພິດໃຫ້ແກ່ຊາວນາ.</u>

| |
|---|
| ຮູບແບບຂອງໜ້າເຟສບຸກ: <u>ເພື່ອສົ່ງເສີມການບໍລິໂພກຂອງດີມີຄຸນປະໂຫຍດຕໍ່ສະຂະພາບໃນແຂວງສະຫວັນນະເຂດ</u>. |

<u>ຕົວຢ່າງຂອງການໂພສ:</u>




- ➢ ຄຸນປະໂຫຍດຂອງພືດຜັກ
  - ✧ ໝາກກະຈຽບ
  - ✧ ຫົວໄຊເທົ້າ
  - ✧ ຊຸກກີນີ
  - ✧ ແຄລ້ອດ
  - ✧ ກວາງຕຸ້ງ
  - ✧ ຕັ້ງສ້າຍ
- ➢ ແມ່ຍິງຖືພາຄວນກິນຫຍັງ
- ➢ ຊາວນາຈະປູກຜັກໃຫ້ປອດສານພິດໄດ້ແນວໃດ
- ➢ ໃຫ້ຂໍ້ມູນກ່ຽວກັບຕະຫຼາດອິນຊີ
- ➢ ແນະນຳສວນຂອງຊາວນາ ແລະ ຜະລິດຕະພັນທີ່ເຂົາປູກ
- ➢ ແນະນຳພືດຊະນິດໃໝ່ເພື່ອຂາຍ

<u>ສື່ໂທລະພາບ</u> ແມ່ນອີກທາງເລືອກໜຶ່ງ, ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມນິຍົມມັນຂຶ້ນກັບຊ່ອງໂທລະພາບທີ່ຈະອອກອາກາດເຊິ່ງທາງໂຄງການໄດ້ທົດລອງ, ເຖິງຢ່າງໃດກໍ່ຕາມມັນກໍ່ບໍ່ໄດ້ສະແດງເຖິງຜົນກະທົບຫຍັງຫຼາຍ.

ກໍລະນີສຶກສາ

ສ້າງຄວາມຕ້ອງການຂອງຜັກສົດໃຫ້ຫຼາຍຂຶ້ນ

ແນະນຳການກິນເພື່ອສຸຂະພາບ ໂດຍການສາທິດ ວິທີທີ່ຈະສາມາດກິນຜັກໃຫ້ຫຼາຍຂຶ້ນໄດ້

ເພື່ອທີ່ຈະເຮັດໃຫ້ຜູ້ຄົນຊື້ຜັກຫຼາຍຂຶ້ນ, ມັນເປັນບົດບາດຂອງການຕະຫຼາດ ເພື່ອສ້າງຄວາມຕ້ອງການໃຫ້ຫຼາຍຂຶ້ນ ໂຄງການໄດ້ແນະນຳກ່ຽວກັບນ້ຳສະມູດຕີ້ ເພື່ອໃຫ້ຜູ້ຄົນສົນໃຈຊື້ຜັກຫຼາຍຂຶ້ນ ພວກເຮົາໄດ້ເຮັດຄຣິບວີດີໂອ ກ່ຽວກັບວິທີເຮັດນ້ຳປັ່ນຜັກ ແລ້ວອັບໂຫຼດລົງເຟສບຸກ.





ການຕະຫຼາດ ຄືການສ້າງຄວາມຕ້ອງການ ແລະ ກະຕຸ້ນໃຫ້ເກີດການຊື້.

ງ. ເປີດຕະຫຼາດຊາວນາ.

ຕາມຄຳຮ້ອງຂໍຂອງຊາວນາ, ການເປີດຕະຫຼາດຊາວນາກໍ່ເປັນອີກໜຶ່ງວິທີ ເພື່ອສົ່ງເສີມການຂາຍ <u>ຈຸດສຳຄັນຄືການເລີ່ມຕົ້ນຈາກຂະໜາດນ້ອຍກ່ອນ</u> ບໍ່ຈຳເປັນຕ້ອງສ້າງຮ້ານຄ້າໃນຊ່ວງເລີ່ມຕົ້ນ.

ນີ້ຄືຂັ້ນຕອນ.

1 ປະຊຸມຮ່ວມກັບຊາວນາເພື່ອຕັ້ງກົດລະບຽບຂອງກຸ່ມ. ລົງທະບຽນສະມາຊິກ ຜູ້ທີ່ຈະຂາຍຜັກສົດ ແລະ ປອດໄພ ອີງຕາມກົດລະບຽບ (ເອກະສານຄັດຕິດມາພ້ອມ2-ງ-1)



2 ຫົວໜ້າກຸ່ມ ຫຼືສະມາຊິກຜູ້ທີ່ໄດ້ຮັບມອບໝາຍ ລົງກວດແຕ່ລະສວນ ເພື່ອຕິດຕາມເບິ່ງວິທີການປູກ ແລະ ຊະນິດຂອງພືດຜັກ (ເອກະສານຄັດຕິດມາພ້ອມ2-ງ-2)



3 ສະມາຊິກພາຍໃນກຸ່ມ ເຮັດແຜນປູກ ແລະ ແລກປ່ຽນກັນພາຍໃນກຸ່ມ ແລ້ວເລືອກມື້ທີ່ຈະເປີດຕະຫຼາດ (ເອກະສານແນບຕິດ 2-ງ-3)



4 ອຸດສາຫະກຳ ແລະ ການຄ້າເມືອງ,ກະສິກຳ ແລະປ່າໄມ້ ພ້ອມກັບຊາວນາ ປຶກສາໜ່ວຍງານຈັດສັນ ເພື່ອເລືອກສະຖານທີ່ເປີດຕະຫຼາດ.



5 ຕັ້ງລາຄາ ແລະ ຂະໜາດຂອງມັດຜັກຮ່ວມກັບສະມາຊິກໃນກຸ່ມ



6 ອຸດສາຫະກຳ ແລະ ການຄ້າເມືອງ,ກະສິກຳ ແລະປ່າໄມ້ ພ້ອມກັບຊາວນາ ຕັ້ງໂຕະ ແລະ ເຕັນເພື່ອຝຶກຊ້ອມການເປີດຕະຫຼາດ

*ອຸປະກອນທີ່ທາງໂຄງການໄດ້ສະໜອງໃຫ້
- ໂຕະພັບ, ຕັ່ງຢາງ, ປ້າຍໂຄສະນາ, ກະຕ່າ, ແຜ່ນພັບ

!ເປີດຕະຫຼາດ!

*ຜູ້ຈັດຕັ້ງປະຕິບັດ (ອຄຂ,ກປຂ,ກປມ)*

(ເອກະສານຄັດຕິດມາພ້ອມ2-ງ-1)

<u>**ກົດລະບຽບກຸ່ມ**</u>

1. ຫ້າມໃຊສານເຄມີ, ຢາປາບສັດຕູພືດ ຖ້າມີຄົນໃຊ້ຕ້ອງຢຸດ 1 ປີ, ຖ້າບຸກຄົນໃດຫາກເຮັດຜິດລະບຽບກຸ່ມ ແມ່ນຈະຖືກໄລ່ອອກ.
2. ມີພຽງສະມາຊິກ ພາຍໃນກຸ່ມ ທີ່ສາມາດຂາຍໄດ້( ຕ້ອງໄດ້ສະໝັກເຂົ້າເປັນສະມາຊິກກຸ່ມ)
3. ຕ້ອງມີການບັນທຶກການຜະລິດ, ຮັກສາຄວາມສະອາດ(ສະຖານທີ່ການຂາຍ)
4. ຫ້າມບັນຈຸ ຜະລິດຕະພັນ ໃສ່ຖົງ ຫຼື ພະຊະນະ ທີມີສານເຄມີ.
5. ການປະກອບສ່ວນຂອງສະມາຊິກພາຍໃນກຸ່ມ(ລາຍຮັບ) ສະມາຊິກພາຍໃນກຸ່ມຕ້ອງໄດ້ປະກອບສ່ວນ 20,000 ກີບ ຕໍ່ຄົນ ຕໍ່ເດືອນ.
6. ການນໍາໃຊ້ເງິນຂອງກຸ່ມ ເຂົ້າໃນການບໍລິຫານພາຍໃນກຸ່ມ:
    1. ຄ່າຂີ້ເຫຍື້ອ
    2. ຄ່ານໍ້າມັນລົດໄປກວດສອນ 3 ເດືອນຕໍ່ຄັ້ງ(3ຄົນ) ແລະ ບັດໂທລະສັບຂອງຫົວໜ້າກຸ່ມ 10,000 ກີບ ຕໍ່ຄົນ ຕໍ່ເດືອນ (3ຄົນ).
    3. ຄ່າໂຕະຕັ່ງ, ເຕັນເວລາເປ່ເພ

(ເອກະສານຄັດຕິດມາພ້ອມ2-ງ-2)

## ການກວດສອບ ໃບສະໝັກສຳລັບ ກຸ່ມກະສິກຳ ຜັກສົດ ແລະ ປອດໄພ

ຊື່ (ຊື່ເຕັມ) :

ເນື້ອທີ່ຕອນດິນ : ເບີໂທ:

| | | | |
|---|---|---|---|
| 1 | ທ່ານເຄີຍນຳໃຊ້ຢາປາບສັດຕູພືດ ໃນເນື້ອທີ່ຂອງທ່ານບໍ? ຖ້າເຄີຍ, ເມື່ອໃດ? | ແມ່ນ | ບໍ່ແມ່ນ |
| 2 | ທ່ານຍັງນຳໃຊ້ ຢາປາບສັດຕູພືດ ໃນເວລາປູກພືດຜັກຢູ່ບໍ? | ແມ່ນ | ບໍ່ແມ່ນ |
| 3 | ມີຊາວນາຄົນອື່ນ ທີ່ໃຊ້ຢາປາບສັດຕູພືດ ໃນໄລຍະ 50 ແມັດ ຫ່າງຈາກເນື້ອທີ່ຂອງທ່ານບໍ? | ແມ່ນ | ບໍ່ແມ່ນ |
| 4 | ທ່ານໃຊ້ປຸ໋ຍເຄມີບໍ? ຖ້າໃຊ້, ປຸ໋ຍຊະນິດໃດ | ແມ່ນ | ບໍ່ແມ່ນ |
| 5 | ທ່ານໄດ້ຮຽນຮູ້ ວິທີການນຳໃຊ້ຝຸ່ນໝັກບໍ ເພື່ອການຈະເລີນເຕີບໂຕຂອງພືດຜັກ? | ແມ່ນ | ບໍ່ແມ່ນ |
| 6 | ທ່ານໄດ້ເລີ່ມເຮັດຝຸ່ນໝັກ ຕາມວິທີການທີ່ໄດ້ຮຽນມາແລ້ວບໍ?(ກວດເບິ່ງຝຸ່ນໝັກ) | ແມ່ນ | ບໍ່ແມ່ນ |
| 7 | ທ່ານໄດ້ຮຽນຮູ້ ວິທີການເຮັດ ແລະ ນຳໃຊ້ນ້ຳໝັກຊີວະພາບແລ້ວບໍ? | ແມ່ນ | ບໍ່ແມ່ນ |
| 8 | ທ່ານໄດ້ເຮັດນ້ຳໝັກຊີວະພາບ ແລະ ນ້ຳຢາປາບສັດຕູພືດ ຕາມວິທີການທີ່ໄດ້ຮຽນມາແລ້ວບໍ?(ກວດເບິ່ງນ້ຳໝັກຊີວະພາບ) | ແມ່ນ | ບໍ່ແມ່ນ |
| 9 | ທ່ານໄດ້ຈົດບັນທຶກຂໍ້ມູນ ລາຍລະອຽດ ຂອງການປູກ ແລະ ການຂາຍ ລົງໃນປຶ້ມບັນທຶກຢູ່ບໍ?(ກວດສອບປຶ້ມບັນທຶກ) | ແມ່ນ | ບໍ່ແມ່ນ |
| 10 | ທ່ານໃຫ້ສັນຍາໄດ້ບໍວ່າ ຈະບໍ່ໃຊ້ສານ ເຄມີປາບສັດຕູພືດ ເຂົ້າໃນການປູກພືດຜັກ ແລະ ເຫັນດີທຸກຢ່າງ ຕາມກົດລະບຽບ ຂອງກຸ່ມກະສິກຳອິນ | ແມ່ນ | ບໍ່ແມ່ນ |

**ຜົນຂອງການສະໝັກ + ຄຳເຫັນ**

ສະໝັກໂດຍ: ກວດກາໂດຍ:

ລາຍເຊັນຊາວນາ ລາຍເຊັນຫົວໜ້າກຸ່ມ

ວັນທີສະໝັກ: ວັນທີກວດກາ:

(ເອກະສານຄັດຕິດມາພ້ອມ2-ງ-3)

ປະຕິທິນການຊື້: ລາຍຈ່າຍ

| ຊື່ພືດ | ເດືອນ10 | ເດືອນ11 | ເດືອນ12 | ເດືອນ1 | ເດືອນ2 | ເດືອນ3 | ເດືອນ4 | ເດືອນ5 | ເດືອນ6 | ເດືອນ7 | ເດືອນ8 | ເດືອນ9 |
|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |



**ຈ. ສ້າງເຄືອຂ່າຍການຕອບສະໜອງ.**

ໃນເມື່ອບາງກຸ່ມປູກຜັກສາມາດຂາຍຜົນຜະລິດ ແລະ ໄດ້ຮັບລາຍການສັ່ງຊື້ຜັກຫຼາຍກວ່າຄວາມສາມາດໃນການຜະລິດ, ພະນັກງານອຸດສາຫະກໍາ ແລະ ການຄ້າແຂວງ, ກະສິກໍາ ແລະ ປ່າໄມ້ແຂວງ ຕ້ອງໄດ້ຊ່ວຍຊາວນາໂດຍການເຊື່ອມໂຍງກັບຊາວນາກຸ່ມອື່ນໃນທົ່ວແຂວງເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງປະລິມານ.

ຍົກຕົວຢ່າງຂອງແຂວງສະຫວັນນະເຂດ, ພະນັກງານ ອຸດສາຫະກໍາ ແລະ ການຄ້າແຂວງ, ກະສິກໍາ ແລະ ປ່າໄມ້ແຂວງ ໄດ້ນໍາພາຊາວນາຈາກກຸ່ມປູກຜັກອິນຊີ ບ້ານໂພນສີມ ຜູ້ທີ່ຮັບຜິດຊອບ ວຽກງານທາງດ້ານການຕະຫຼາດ ໄປພົບກັບຊາວນາເມືອງອື່ນ ເພື່ອສ້າງເຄືອຂ່າຍຮ່ວມກັນ ຊາວນາບ້ານໂພນສີມ ຜູ້ຮັບຜິດຊອບວຽກການຕະຫຼາດ ໄດ້ໄປກວດເບິ່ງຊາວນາເມືອງອື່ນ ເຂົາປູກແບບໃດ ແລະ ກວດຄຸນະພາບພ້ອມ.



ກຸ່ມປູກຜັກອິນຊີ ບ້ານໂພນສີມ

ກໍລະນີ
ສຶກສາ

ໝາກສຸກີນີຕາມຄວາມຕ້ອງການຂອງ ຮ້ານອາຫານ

- ປູກພືດທີ່ມີການຕອບສະໜອງໜ້ອຍ ພາຍໃນແຂວງສະຫວັນນະເຂດ

ພະນັກງານອຸດສາຫະກໍາ ແລະ ການຄ້າ ລົງຢ້ຽມຢາມຮ້ານອາຫານ ເພື່ອຖາມເອົາຂໍ້ມູນວ່າທາງຮ້ານຊື້ຜັກຫຍັງແດ່ ແລະ ຊື້ມາຈາກໃສ ໝາກສຸກີນີ ແມ່ນອີກພືດໜຶ່ງທີ່ທາງຮ້ານອາຫານຊື້ມາຈາກປະເທດໄທ ເຂົາເວົ້າວ່າຫາຊື້ຍາກພາຍໃນແຂວງສະຫວັນນະເຂດ, ດັ່ງນັ້ນ ລູກຄ້າຕ້ອງໄດ້ຂ້າມຂົວໄປຊື້ຢູ່ຝັ່ງໄທ ພາຍໃຕ້ສະພາບການແບບນີ້, ຊາວນາໄດ້ທົດລອງປູກໝາກສຸກີນີ ແລະ ກໍ່ສາມາດເກັບກ່ຽວຜົນຜະລິດໄດ້ ແລ້ວພະນັກງານອຸດສາຫະກໍາ ແລະ ການຄ້າ, ກະສິກໍາ ແລະ ປ່າໄມ້ແຂວງ ໄດ້ຊ່ວຍນໍາຜົນຜະລິດ ຂອງຊາວນາໃນຄັ້ງທໍາອິດ ໝາກສຸກີນີ ຂາຍໃນລາຄາ 25.000 ກີບຕໍ່ກິໂລ ແລະ ລູກຄ້າໄດ້ເວົ້າວ່າເຂົາຈະຊື້ນາຖ້າວ່າຊາວນາສາມາດຕອບສະໜອງໄດ້ຢ່າງຕໍ່ເນື່ອງ.





ຊາວນາຂອງໂຄງການ ຍັງໄດ້ທົດລອງປູກ ຫົວລາດິດແດງ ໃນເບື້ອງຕົ້ນ, ຜູ້ຄົນບໍ່ຮູ້ ແຕ່ວ່າລູກຄ້າມັກຮູບຊົງ, ສີສັນ ແລະ ລົດຊາດ ຫຼັງຈາກນັ້ນ, ລູກຄ້າກໍ່ເລີ່ມສັ່ງຊື້.

**ລອງສິ່ງໃໝ່ໆເພື່ອທົດສອບຕະຫຼາດ!**

ກໍລະນີ
ສຶກສາ

ທົດລອງປູກເຫັດເຟືອງ.

ບໍ່ຕ້ອງສົ່ງເສີມການຂາຍ, ສໍາລັບພືດທີ່ມີຄວາມຕ້ອງການສູງ ຕາມການສໍາຫຼວດຕະຫຼາດ ໃນແຕ່ລະໄລຍະ, ພະນັກງານ ກະສິກໍາ ແລະ ປ່າໄມ້ແຂວງ ສະເໜີກ່ຽວກັບການທົດລອງປູກເຫັດເຟືອງ ພະນັກງານ ກະສິກໍາ ແລະ ປ່າໄມ້ແຂວງ ໄດ້ທົດລອງປູກ ຫຼັງຈາກນັ້ນ ແນະນໍາໃຫ້ຊາວນາໄປທົດລອງ. ເມື່ອເກັບກ່ຽວແລ້ວ, ຊາວນາສາມາດຂາຍເອງໄດ້ ໂດຍທີ່ບໍ່ຕ້ອງການຄວາມຊ່ວຍເຫຼືອຈາກໂຄງການ ເຫັດເຟືອງແມ່ນມີຄວາມຕ້ອງການສູງ ແລະ ມີຜູ້ຕອບສະໜອງ ໜ້ອຍພາຍໃນບ້ານ, ນັ້ນແມ່ນເຮັດໃຫ້ຊາວນາສາມາດ ຂາຍຜົນຜະລິດຂອງເຂົາໄດ້ຢ່າງງ່າຍດາຍ ມັນເປັນສິ່ງທີ່ດີທີ່ສຸດ ທີ່ຈະຊອກຫາພືດແບບນີ້.



ເມື່ອຊາວນາຄົ້ນພົບໄດ້ວ່າ ເຫັດເຟືອງສາມາດຂາຍໄດ້ງ່າຍ ແລະ ຂາຍໄດ້ໃນລາຄາທີ່ສູງ, ພວກເຂົາເລີ່ມຊື້ເຊື້ອເຫັດ ດ້ວຍຕົວເຂົາເອງ ເພື່ອປູກຕໍ່.
ໃນຂະນະທີ່ເຫັດເຟືອງມີຄວາມຕ້ອງການສູງ ແລະ ມີຕະຫຼາດຮອງຮັບ, ຕົ້ນທຶນການຜະລິດກໍ່ຍັງສູງອີກດ້ວຍ ແລະ ໃນຄວາມເປັນຈິງມັນບໍ່ໄດ້ສ້າງຜົນກໍາໄລສູງໃຫ້ກັບຊາວນາ ສະນັ້ນ, ບັນຫາແມ່ນຈະຕ້ອງໄດ້ເພີ່ມຜົນຜະລິດ ແລະ ລົດຕົ້ນທຶນ.



## V ການປັບປຸງ ການບໍລິຫານ ຈັດການສວນປູກ

### 1 ສ້າງຄວາມອາດສາມາດ ໃນການສ້າງຜົນກຳໄລຢ່າງຕໍ່ເນື່ອງ

#### (1) ບັນທຶກການຂາຍ

1) ຈັດຝຶກອົບຮົມ ສຳລັບບັນທຶກລາຍຮັບ ແລະ ລາຍຈ່າຍ.
2) ຕິດຕາມການບັນທຶກ.
3) ສະຫຼຸບການບັນທຶກ ແລະ ແລກປ່ຽນຂໍ້ມູນ ເພື່ອທົບທວນ.

*ຈັດຕັ້ງປະຕິບັດໂດຍ(ກປຂ, ອດ.ສຂ)*

(ຄຳອະທິບາຍ)

1) ຈັດຝຶກອົບຮົມ ສຳລັບການບັນທຶກລາຍຮັບ ແລະ ລາຍຈ່າຍ.

ໃນເວລາທີ່ຊາວນາໄດ້ຂາຍຜົນຜະລິດ, ເອົາປື້ມໃຫ້ຊາວນາເພື່ອຈົດບັນທຶກບັນຊີ ແລະ ໃຫ້ຊາວນາໃຊ້ປື້ມຫົວເກົ່າ ໃນການຈົດບັນທຶກໃນແຕ່ລະຄັ້ງ ມັນອາດຈະໃຊ້ເວລາ ແລະ ຄວາມອົດທົນສົມຄວນ ເພື່ອທີ່ຈະໄດ້ເຫັນຊາວນາ ເລີ່ມຈົດບັນທຶກມັນເປັນເລື່ອງຍາກທີ່ຈະໃຫ້ຊາວນາຈົດບັນທຶກລາຍຮັບ ແລະ ລາຍຈ່າຍໄປພ້ອມໆກັນ, ໃນຊ່ວງ ທຳອິດແມ່ນຈະໃຫ້ຊາວນາຈົດບັນທຶກແຕ່ຍອດຂາຍລວມກໍ່ພໍ.

ຕົວຢ່າງ 1: ກິດຈະກຳ ທາງດ້ານກະສິກຳ

| ວັນທີ | ລາຍລະອຽດ / ລາຍການ | ເງິນເຂົ້າ | ເງິນອອກ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |

ຕົວຢ່າງ 2: ໃນເມື່ອລາຍຮັບທັງໝົດ ໄດ້ມາຈາກການປູກຜັກ (ຕົວຢ່າງ. ຂອງຊາວນາກຸ່ມປູກຜັກອິນຊີ ບ້ານໂພນສິມ), ທ່ານສາມາດຂຽນລາຍຈ່າຍທັງໝົດ ເພື່ອສະແດງໃຫ້ເຫັນຍອດຍັງເຫຼືອ.

| ວັນທີ | ລາຍລະອຽດ / ລາຍການ | ເງິນເຂົ້າ | ເງິນອອກ | ຍອດຍັງເຫຼືອ |
|---|---|---|---|---|
| | | | | |
| | | | | |
| | | | | |
| | | | | |
| | | | | |

ທົບທວນຄືນຮ່ວມກັບຊາວນາ ກ່ຽວກັບຍອດຂາຍລວມພາຍໃນເດືອນ ແລະ ປຽບທຽບກັນພາຍໃນກຸ່ມ ຍອດຂາຍຂອງແຕ່ລະເດືອນ ແລະ ລະດູການ.

2) ຕິດຕາມການບັນທຶກ

ອຸດສາຫະກຳ ແລະ ການຄ້າແຂວງ, ກະສິກຳ ແລະ ປ່າໄມ້ແຂວງ, ກະສິກຳ ແລະ ປ່າໄມ້ເມືອງ ແມ່ນຕ້ອງໄດ້ກວດສອບການບັນທຶກການຂາຍຂອງຊາວນາໃນເວລາລົງຢ້ຽມຢາມກວດສອບປຶ້ມບັນທຶກເພື່ອເບິ່ງວ່າການຄິດໄລ່ຖືກຕ້ອງຫຼືບໍ່ ຕະຫຼອດຈົນຮອດຄວາມຄືບໜ້າຂອງການຂາຍ.

ປຽບທຽບຍອດຂາຍກັບຕົ້ນທຶນການຜະລິດຂອງຊາວນາ ເພື່ອໃຫ້ຊາວນາໄດ້ຮັບຮູ້ວ່າເຂົາໄດ້ກຳໄລຫຼືບໍ່.

ສິ່ງທີ່ບໍ່ຄວນເຮັດ

1: ບໍ່ຄວນຄິດໄລ່ ແລະ ຂຽນໃຫ້ຊາວນາທັງໝົດ, ປ່ອຍໃຫ້ຊາວນາໄດ້ເຮັດເອງເຂົາ, ສອນຊາວນາກ່ຽວກັບວິທີຄິດໄລ່ ໃນແຕ່ລະຂັ້ນຕອນ.

2: ບໍ່ຄວນຈະຈັດສັນປຶ້ມບັນທຶກໃຫ້ຊາວນາໃນແຕ່ລະຄັ້ງຂອງການຝຶກອົບຮົມ ບອກໃຫ້ຊາວນາຖືປຶ້ມມາໃນແຕ່ລະຄັ້ງ ຫຼັງຈາກທີ່ເຮົາໄດ້ເອົາປຶ້ມໃຫ້ຊາວນາໄປແລ້ວ ຖ້າບໍ່ດັ່ງນັ້ນຂໍ້ມູນຈະບໍ່ໄດ້ລວບລວມຢູ່ນຳກັນ.









3) ສະຫຼຸບຂໍ້ມູນກ່ຽວກັບການຈົດບັນທຶກ ແລະ ນຳຂໍ້ມູນມາແລກປ່ຽນ ສຳລັບການທວນຄືນ.

- ເກັບກຳຂໍ້ມູນສັງລວມລາຍຮັບ ປະຈຳເດືອນ ເພື່ອມາປຽບທຽບກັບແຜນທີ່ຊາວນາໄດ້ເຮັດໄວ້ (ຕົວຢ່າງ ໃນ4 ເດືອນ: ເລີ່ມຈາກເດືອນ 6 ຫາ ເດືອນ 9).

- ພະນັກງານແຂວງ ແລະ ເມືອງ ຈັດກອງປະຊຸມເພື່ອທົບທວນຄືນ ກ່ຽວກັບປະສົບການຂາຍ ໃນຊ່ວງທ້າຍລະດູແລ້ງ ຫຼື ລະດູຝົນ. ຖາມຊາວກະສິກອນກ່ຽວກັບປະສົບການ ໃນການປູກຜັກ ແລະ ຂາຍຜັກໃນຊ່ວງລະດູຝົນ. ສິ່ງທີ່ຊາວກະສິກອນປະສົບຜົນສຳເລັດ ແລະ ບັນຫາທີ່ພົບ:



ຫ້າມຖາມວ່າເປັນຫຍັງ ຊາວກະສິກອນ ຈຶ່ງບໍ່ປະສົບຜົນສຳເລັດ ຕາມເປົ້າໝາຍຂອງເຂົາ. ນີ້ຈະເຮັດໃຫ້ຊາວນາທໍ້. ມັນບໍ່ແມ່ນສິ່ງສຳຄັນໃນການບັນລຸເປົ້າໝາຍໃນຈຸດນີ້. ການຮຽນຮູ້ຈາກປະສົບການ ແລະ ການປັບປຸງພຽງເລັກໜ້ອຍ ແມ່ນດີພຽງພໍທີ່ຈະຊຸກຍູ້ສົ່ງເສີມຊາວກະສິກອນ ເພື່ອກ້າວໄປຂ້າງໜ້າ ໄປຍັງອີກຂັ້ນຕອນຕໍ່ໄປ.

- ທົບທວນຄືນຕົວເລກພ້ອມກັນ ແລະ ອຳນວຍຄວາມສະດວກໃຫ້ຊາວກະສິກອນ ໄດ້ສົນທະນາກ່ຽວກັບຫົວຂໍ້ດັ່ງຕໍ່ໄປນີ້;
    - ໃຜມີລາຍໄດ້ທີ່ສູງກ່ວາ ແລະ ພວກເຂົາປູກຫຍັງ?
    - ເດືອນໃດທີ່ໄດ້ລາຍຮັບສູງ ແລະ ສິ່ງທີ່ສາມາດເປັນສາເຫດ?
    - ແມ່ນຫຍັງເປັນສິ່ງທີ່ແຕກຕ່າງ ລະຫວ່າງຊາວກະສິກອນ ຜູ້ທີ່ມີລາຍໄດ້ສູງ ແລະ ຜູ້ທີ່ມີລາຍໄດ້ໜ້ອຍ?
    - ພວກເຂົາຂາຍຜັກຢູ່ໃສ?
    - ມີຫຍັງແດ່ທີ່ຊາວກະສິກອນໄດ້ເຮັດ ເພື່ອເພີ່ມຍອດຂາຍ? ສິ່ງໃດແນ່ທີ່ປະສົບຜົນສຳເລັດ?
    - ມີຜັກຊະນິດໃດແດ່ທີ່ຂາຍຍາກ?

- ຕາມປະສົບການ ແລະ ການທົບທວນຄືນຂອງພວກເຂົາ, ຖາມຊາວກະສິກອນວ່າເຂົາເຈົ້າສາມາດປັບປຸງຫຍັງ ເພື່ອໃຫ້ໄດ້ລາຍຮັບເພີ່ມຂຶ້ນ. ພະຍາຍາມເອົາແນວຄວາມຄິດຂອງພວກເຂົາເຂົ້າໃນແຜນ ແລະ ຕິດຕາມການປະຕິບັດຕົວຈິງ.





*ຈັດຕັ້ງປະຕິບັດໂດຍ(ກປຂ, ອຄ.ສຂ)*

**ກໍລະນີ ສຶກສາ**

ໃນຊ່ວງຂອງການທົບທວນ, ຊາວກະສິກອນໄດ້ຊີ້ໃຫ້ເຫັນ ເຖິງປັດໃຈດັ່ງຕໍ່ໄປນີ້ ທີ່ພົນກ່ຽວກັບ ການຂາຍຂອງພວກເຂົາ.

- ໂດຍສະເພາະພືດທີ່ຖືກທຳລາຍ ໂດຍແມງໄມ້ ແລະ ພະຍາດຫຼາຍກວ່າພືດອື່ນໆ. ພືດທີ່ຖືກທຳລາຍແມ່ນ ຊຸກີນີ ແລະ ໝາກແຕງເມລ້ອນ.
- ໂດຍການປຽບທຽບຍອດຂາຍທັງໝົດ ພາຍໃນກຸ່ມ, ຊາວກະສິກອນຜູ້ທີ່ເລີ່ມຕົ້ນປູກຊ່ວງລະດູຝົນ ໃນເດືອນເມສາ ແມ່ນໄດ້ຂາຍດີກ່ວາຜູທີ່ປູກຊ້າ.
- ລາຄາບໍ່ໄດ້ຖືກກຳນົດ ແລະ ຕົກລົງກັນໃນຕອນເລີ່ມຕົ້ນ, ເຊິ່ງເຮັດໃຫ້ຊາວກະສິກອນບາງຄົນມີລາຍໄດ້ໜ້ອຍ ຖ້າທຽບໃສ່ຄົນອື່ນ.
- ຊາວກະສິກອນບໍ່ແນ່ໃຈວ່າ ພວກເຂົາຈະສາມາດຂາຍຜັກຂອງພວກເຂົາໄດ້ ຈົນກະທັ້ງພວກເຂົາໄດ້ລອງຂາຍຕົວຈິງ.
- ມີແມ່ຄ້າໂທສັ່ງຊື້ຜັກນຳ ຊາວກະສິກອນ, ເຖິງຢ່າງໃດກໍ່ຕາມ ຊາວກະສິກອນກໍ່ບໍ່ສາມາດ ຕອບສະໜອງໄດ້ຢ່າງຕໍ່ເນື່ອງ.
- ຊາວກະສິກອນເລີ່ມຄິດທີ່ຈະສ້າງແຜນເພື່ອການຕອບສະໜອງໄດ້ຢ່າງຕໍ່ເນື່ອງ.



ກ່ຽວກັບຈຸດດັ່ງກ່າວຂ້າງເທິງນັ້ນ ທາງໂຄງການບໍ່ໄດ້ບອກ, ຊາວກະສິກອນເອງ ກໍ່ເລີ່ມນຳເອົາບັນຫາຕ່າງໆ ມາປັບປຸງເພື່ອທີ່ຈະສ້າງລາຍຮັບໃຫ້ເພີ່ມຂຶ້ນ.

ສິ່ງສຳຄັນແມ່ນໃຫ້ພວກເຂົາ ປຽບທຽບຜົນໄດ້ຮັບ ແລະ ສິ່ງທີ່ພວກເຂົາໄດ້ເຮັດ ເພື່ອນຳໄປສູ່ຜົນໄດ້ຮັບ ເຖິງແມ່ນວ່າມັນຈະດີ ຫລື ບໍ່ດີ

## (2) ວາງແຜນປູກ ເພື່ອຕອບສະໜອງ ພືດຜັກໄດ້ຢ່າງຕໍ່ເນື່ອງ

| |
|---|
| 1) ເລືອກພືດທີ່ຕ້ອງການ ໃຫ້ມີການຕອບສະໜອງຢ່າງຕໍ່ເນື່ອງ.<br>2) ສ້າງແຜນປູກເປັນກຸ່ມ. |

*ຜູ້ຈັດຕັ້ງປະຕິບັດ (ກປຂ, ອກຂ)*

(ຄຳອະທິບາຍ)

1) ເລືອກພືດທີ່ຕ້ອງການ ໃຫ້ມີການຕອບສະໜອງຢ່າງຕໍ່ເນື່ອງ.

- ຊ່ວຍຊາວກະສິກອນໃນການປຶກສາຫາລື ວ່າພືດຜັກຊະນິດໃດທີ່ມີຄວາມຕ້ອງການສູງ ແລ້ວປ່ອຍໃຫ້ພວກເຂົາເລືອກ. ສິ່ງສຳຄັນຄື ຈະຕ້ອງໄດ້ພິຈາລະນາ ຄວາມສາມາດໃນການຜະລິດຂອງພວກເຂົາ ກ່ຽວກັບປະລິມານ ແລະ ຊະນິດພັນ.
- ຕົວຢ່າງ ກຸ່ມໂພນສີມໄດ້ເລືອກພືດ 5 ຢ່າງເຊັ່ນ:ຜັກບົ້ງ, ຜັກຫົມ, ກາດຂາວ, ສະຫຼັດ ແລະ ຜັກກາດຫວານ
- ກຸ່ມພະລານໄຊ ໄດ້ເລືອກພືດ 3 ຢ່າງເຊັ່ນ:

ຜັກບົ່ວ, ຫອມປ້ອມ, ຫອມເສີມ

<u>ແບ່ງຊາວນາອອກເປັນກຸ່ມ</u>:

- ສ້າງກຸ່ມປູກ ທີ່ມີການປູກພືດຜັກຊະນິດດຽວກັນ ໃນຕາຕະລາງດຽວກັນ, ໃນວັນດຽວກັນ ຫຼື ຊ່ວງດຽວກັນ ເພື່ອໃຫ້ໄດ້ຈຳນວນພຽງພໍທີ່ຈະສາມາດສະໜອງ ຕາມຄວາມຕ້ອງການຂອງຕະຫຼາດໄດ້.

2) ສ້າງແຜນປູກເປັນກຸ່ມ.

ກຳນົດວັນທີປູກ:

- ຕ້ອງໄດ້ກຳນົດວັນທີ ແລະ ຈຳນວນຂອງແຕ່ລະກຸ່ມ.

-ຂຽນແຜນປູກຂອງແຕ່ລະກຸ່ມ: ສິ່ງສຳຄັນຄືຕ້ອງໄດ້ຮູ້ວັນທີເກັບຜົນຜະລິດ ເພື່ອໃຫ້ພະນັກງານ ຜູ້ຮັບຜິດຊອບວຽກງານ ການຕະຫຼາດສາມາດຕອບສະໜອງ ຕາມລາຍການສັ່ງຊື້ໄດ້ຢ່າງງ່າຍດາຍ ແລະ ສາມາດກວດກາຄວາມຄືບ ໜ້າຂອງສະມາຊິກແຕ່ລະຄົນໄດ້.

**ກໍລະນີ ສຶກສາ**

ກໍລະນີສຶກສາ ກ່ຽວກັບການວາງແຜນ ການສະໜອງຜັກ ຢ່າງຕໍ່ເນື່ອງໂດຍປະຕິທິນການປູກ.

ກຸ່ມໂພນສີມ ມີສະມາຊິກພາຍໃນກຸ່ມເກືອບ 20 ຄົນ. ໃນຕອນນີ້, ພວກເຂົາໄດ້ແບ່ງອອກເປັນ 3 ກຸ່ມ ແຕ່ລະກຸ່ມມີ 5 ຄົນ. ສັງເກດເຫັນວ່າ ບໍ່ແມ່ນຊາວກະສິກອນທັງໝົດ ທີ່ຕ້ອງການມີສ່ວນຮ່ວມ ໃນການວາງແຜນປູກນີ້.
ກຸ່ມໄດ້ເລືອກພືດຜັກ 5 ຊະນິດເຊັ່ນ: ຜັກບົ້ງ, ຜັກຫົມ, ກາດຂາວ, ສະຫຼັດ ແລະ ກາດຫວານ.
ຮູບທາງລຸ່ມນີ້ ແມ່ນຕົວຢ່າງຂອງການສ້າງແຜນປູກ ຂອງກຸ່ມປູກຜັກອິນຊີບ້ານໂພນສີມ.



ກຸ່ມພະລານໄຊໄດ້ສ້າງແຜນປູກແບບງ່າຍດາຍ ເພາະວ່າສະມາຊິກພາຍໃນກຸ່ມມີພຽງແຕ່ 6 ຄົນເທົ່ານັ້ນ ແລະ ໄດ້ເລືອກພືດໄວ້ 3 ຊະນິດ ຊະນິດທີ່ມີໄລຍະເວລາຂອງການປູກທີ່ຄ້າຍຄືກັນ.
ພວກເຂົາໄດ້ເລືອກ ຜັກບົ່ວ, ຫອມປ້ອມ ແລະ ຫອມເສີມ.

ຊາວກະສິກອນໄດ້ຕັດສິນໃຈແບ່ງກຸ່ມດ້ວຍຕົວເຂົາເອງ ໂດຍກຳນົດເອົາກຸ່ມລະ 2 ຄົນ. ໃນທຸກໆເດືອນ, ກຸ່ມທີ 1 ປູກວັນທີ 6, ກຸ່ມທີ 2 ປູກວັນທີ 16 ແລະ ກຸ່ມທີ 3 ປູກວັນທີ 26.




*ຜູ້ຈັດຕັ້ງປະຕິບັດ (ກປຂ, ອກຂ)*

### (3) ການບໍລິຫານຈັດການດ້ານຄຸນນະພາບຂອງກຸ່ມ

1) ກຳນົດກົດລະບຽບ ແລະ ຂໍ້ບັງຄັບ.
2) ລົງທະບຽນສະມາຊິກ ແລະ ກວດກາສວນປູກ.
3) ແລກປ່ຽນແຜນປູກ.
4) ຕິດຕາມການຂຽນບົນ ລົງຂາຍໃນແຕ່ລະວັນ.




(ຄຳອະທິບາຍ)

1) ການສ້າງກົດລະບຽບ ແລະ ຂໍ້ບັງຄັບຂອງກຸ່ມ:

- ອຳນວຍຄວາມສະດວກໃຫ້ ຊາວກະສິກອນ ເພື່ອປຶກສາຫາລື ກ່ຽວກັບກົດລະບຽບ ແລະ ຂໍ້ບັງຄັບຂອງກຸ່ມ ກະຊວງກະສິກຳ ແລະ ປ່າໄມ້ໄດ້ວາງມາດຕະຖານຂອງການປູກພືດແຕ່ລະປະເພດເຊັ່ນວ່າ:
  1)ການປູກຜັກອິນຊີ.
  2)ກະສິກຳສະອາດ ແລະ ປອດໄພ.
  3)ການປູກຜັກໂດຍນຳໃຊ້ເຄມີ.

ຊາວກະສິກອນສາມາດຕັດສິນໃຈວ່າ ຈະເລືອກວິທີການປູກຝັງແບບໃດ ເພື່ອນຳໃຊ້ເຂົ້າໃນກຸ່ມຂອງພວກເຂົາ ແລະ ສ້າງກົດລະບຽບຕາມຄວາມເໝາະສົມ.

ນີ້ແມ່ນຕົວຢ່າງກົດລະບຽບ ຂອງກຸ່ມຊາວກະສິກອນປູກຜັກຢູ່ເມືອງທ່າປາງທອງ. ກ່ອນອື່ນໝົດ, ຊາວກະສິກອນ ໄດ້ຕັດສິນໃຈວ່າ ພວກເຂົາຕ້ອງການນຳໃຊ້ ວິທີການປູກທີ່ປອດໄພ ເຊິ່ງພວກເຂົາກໍ່ໄດ້ກຳນົດວ່າ ຫ້າມບໍ່ໃຫ້ໃຊ້ສານເຄມີປາບສັດຕູພືດ. ຈາກນັ້ນ, ຊາວກະສິກອນ ກໍ່ໄດ້ສ້າງກົດລະບຽບຂອງພວກເຂົາ ຕາມຄວາມເໝາະສົມ.

*ຜູ້ຈັດຕັ້ງປະຕິບັດ (ກປຂ, ອກຂ)*

**ກົດລະບຽບກຸ່ມ**

1. ຫ້າມໃຊ້ສານເຄມີ, ຢາປາບສັດຕູພືດ ຖ້າມີຄົນໃຊ້ຕ້ອງຢຸດ 1 ປີ, ຖ້າບຸກຄົນໃດຫາກເຮັດຜິດລະບຽບກຸ່ມແມ່ນຈະຖືກໄລ່ອອກ.
2. ມີພຽງສະມາຊິກ ພາຍໃນກຸ່ມ ທີ່ສາມາດຂາຍໄດ້( ຕ້ອງໄດ້ສະໝັກເຂົ້າເປັນສະມາຊິກກຸ່ມ)
3. ຕ້ອງມີການບັນທຶກການຜະລິດ, ຮັກສາຄວາມສະອາດ(ສະຖານທີ່ການຂາຍ)
4. ຫ້າມບັນຈຸ ຜະລິດຕະພັນ ໃສ່ຖົງ ຫຼື ພະຊະນະ ທີມີສານເຄມີ.
5. ການປະກອບສ່ວນຂອງສະມາຊິກພາຍໃນກຸ່ມ(ລາຍຮັບ) ສະມາຊິກພາຍໃນກຸ່ມຕ້ອງໄດ້ປະກອບສ່ວນ 20,000 ກີບ ຕໍ່ຄົນ ຕໍ່ເດືອນ.
6. ການນຳໃຊ້ເງິນຂອງກຸ່ມ ເຂົ້າໃນການບໍລິຫານພາຍໃນກຸ່ມ:
    1. ຄ່າຊື້ເຈ້ຍບຶ້ອ
    2. ຄ່ານ້ຳມັນລົດໄປກວດສອບ 3 ເດືອນຕໍ່ຄັ້ງ(3ຄົນ) ແລະ ບັດໂທລະສັບຂອງຫົວໜ້າກຸ່ມ 10,000 ກີບ ຕໍ່ຄົນ ຕໍ່ເດືອນ (3ຄົນ).
    3. ຄ່າໂຕະຕັ່ງ, ເຕັນເວລາເປ່ເພ

2) ການລົງທະບຽນກຸ່ມ ແລະ ກວດກາເນື້ອທີ່ຂອງສະມາຊິກ.

- ການລົງທະບຽນຂອງສະມາຊິກ ແມ່ນຕ້ອງສະໝັກໃຈ.
- ສະມາຊິກທຸກຄົນ ຕ້ອງໄດ້ແຈ້ງເນື້ອທີ່ຂອງຕົນ ເພື່ອທຳການຜະລິດ.
- ສະມາຊິກທຸກຄົນແມ່ນຕ້ອງໄດ້ເອກະພາບກັນໃນການສ້າງລະບຽບຂອງກຸ່ມ ແລະ ສະມາຊິກກຸ່ມຕ້ອງໄດ້ຕື່ມແບບຟອມ ຂອງຕົນເອງໃຫ້ຄົບ ແລະ ຢັ້ງຢືນຈາກອຳນາດການປົກຄອງບ້ານ.
- ສະມາຊິກແຕ່ລະຄົນ ຕ້ອງໄດ້ຜ່ານການຝຶກອົບຮົມເຊັ່ນ: ເຕັກນິກການເຮັດຝຸ່ນ ແລະ ການບົວລະບັດຮັກສາ.
- ມີການແຕ່ງຕັ້ງຄະນະກຳມະການ ລົງກວດກາກ່ຽວກັບມາດຖານການຜະລິດ ອີງຕາມແຜນປົກກະຕິທຸກໆ 3 ເດືອນ 6 ເດືອນ ໂດຍໜ່ວຍງານຮັບຜິດຊອບຂອງກຸ່ມ.

3) ພະນັກງານຜູ້ທີ່ຮັບຜິດຊອບ ຄວບຄຸມເລື່ອງຄຸນນະພາບ ກໍ່ຕ້ອງໄດ້ກວດກາ ລາຍການພືດຜັກໃນແຕ່ລະໄລຍະ ຮ່ວມກັບແຜນປູກຂອງຊາວກະສິກອນ ແລະ ການປູກຕົວຈິງຢູ່ໃນສວນ ໃຫ້ຊາວກະສິກອນແຕ່ລະຄົນຂຽນໃບບິນວ່າພວກເຂົາເກັບກ່ຽວຜົນຜະລິດຫຍັງ ແລະ ເອົາລາຍການຜັກໄປໃຫ້ຫົວໜ້າຄຸ້ມຄອງ ຄຸນະພາບຜັກພາຍໃນກຸ່ມກວດກາ ແລະ ເຊັນຢັ້ງຢືນກ່ອນນຳຜັກໄປຂາຍຢູ່ທີ່ຕະຫຼາດ. ພະນັກງານຜູ້ທີ່ຮັບຜິດຊອບວຽກການຕະຫຼາດ ຕ້ອງໄດ້ກວດສອບລາຍການພືດຜັກກັບຜະລິດຕະພັນຕົວຈິງແລ້ວເບິ່ງລາຍເຊັນຈາກກຸ່ມພ້ອມ.




<u>ໃບບິນລາຍການພືດຜັກນີ້ແມ່ນຈະຊ່ວຍ:</u>

- ຊ່ວຍຄວບຄຸມຄຸນະພາບຂອງຜົນຜະລິດ ພາຍໃນສວນ.
- ເພື່ອຫຼີກລ້ຽງການນຳຜົນຜະລິດມາຈາກ ສະຖານທີ່ອື່ນ.
- ເພື່ອຕິດຕາມແຜນພາຍໃນກຸ່ມ.
- ເພື່ອສະຫຼຸບລາຍຮັບຂອງແຕ່ລະເດືອນ.

ນີ້ແມ່ນແບບຟອມຕົວຢ່າງຂອງການລົງທະບຽນ



| | | | | |
|---|---|---|---|---|
| 1 | [illegible] | ແມ່ນ | | ບໍ່ແມ່ນ |
| 2 | [illegible] | ແມ່ນ | | ບໍ່ແມ່ນ |
| 3 | [illegible] | ແມ່ນ | | ບໍ່ແມ່ນ |
| 4 | [illegible] | ແມ່ນ | | ບໍ່ແມ່ນ |
| 5 | [illegible] | ແມ່ນ | | ບໍ່ແມ່ນ |
| 6 | [illegible] | ແມ່ນ | | ບໍ່ແມ່ນ |
| 7 | [illegible] | ແມ່ນ | | ບໍ່ແມ່ນ |
| 8 | [illegible] | ແມ່ນ | | ບໍ່ແມ່ນ |
| 9 | [illegible] | ແມ່ນ | | ບໍ່ແມ່ນ |
| 10 | [illegible] | ແມ່ນ | | ບໍ່ແມ່ນ |

ນີ້ແມ່ນແບບຟອມຕົວຢ່າງຂອງການກວດສວນປູກ

## ໃບກວດພືດຜັກ

ຊື່ ແລະ ນາມສະກຸນ: ..........................................................................................

ບ້ານ.......................................ເມືອງ.....................................ແຂວງ..............................

ເນື້ອທີ່:.......................................................................................................

ວັນເດືອນປີລົງກວດ:......................................................................................

ຊື່ ແລະ ນາມສະກຸນຜູ້ທີ່ລົງກວດ:.......................................................................

| ລາຍການກວດ | ລາຍລະອຽດທີ່ນໍາໃຊ້ |
|---|---|
| ພືດຊະນິດໃດແດ່ທີ່ໃຊ້ປຸ໋ຍເຄມີ | |
| ພືດຊະນິດໃດແດ່ທີ່ບໍ່ໃຊ້ປຸ໋ຍເຄມີ | |
| ພືດຊະນິດໃດແດ່ທີ່ໃຊ້ສານໄລ່ແມງ, ຂ້າຫຍ້າ | |
| ປັດໃຈການຜະລິດມີຫຍັງແດ່ | ☐ ຝຸ່ນໝັກ ☐ ນໍ້າໝັກ ☐ ປຸ໋ຍ ☐ ສານໄລ່ແມງ |
| ແນວພັນທີ່ນໍາໃຊ້ | ☐ ຈາກໂຄງການ ☐ ຈາກຕະຫຼາດ ☐ ແນວພັນເກັບເອງ |
| ຝຸ່ນທີ່ນໍາໃຊ້ | ☐ ຝຸ່ນຄອກ ☐ ຝຸ່ນໝັກ ☐ ປູກພືດປັບປຸງ ☐ ນໍ້າໝັກຊີວະພາບ |
| ເຄີຍໃຊ້ສານເຄມີບໍ່ | ☐ ໃຊ້ ☐ ບໍ່ໃຊ້ |
| ເຄມີຫຍັງທີ່ໃຊ້ | ຊື່ແນວໃດ........................................ |
| ນໍາໃຊ້ເມື່ອໃດ | ວັນ/ເດືອນ/ປີ ........................ ໃຊ້ໄດ້ຈັກປີ:................ |
| ການກໍາຈັດພະຍາດແມງໄມ້ນໍາໃຊ້ຫຍັງ | |
| ຊື່ແນວໃດ | |

ລາຍເຊັນຜູ້ກວດ

ນີ້ແມ່ນແບບຟອມຕົວຢ່າງຂອງການວາງແຜນປູກ



## VI ປັບປຸງການໃຊ້ນ້ຳ ໃຫ້ມີປະສິດທິຜົນ

### 1 ການສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ

#### (1) ການສ້ອມແປງຄອງເໝືອງທີ່ມີງົບປະມານຈຳກັດ

1) ການສ້ອມແປງຄອງເໝືອງທີ່ມີງົບປະມານຈຳກັດ ໂດຍນຳໃຊ້ເງິນກອງທຶນຂອງກຸ່ມ ຈັດຊື້ວັດສະດຸທີ່ຈຳເປັນ ແລະ ປະກອບສ່ວນແຮງງານ ຈາກຄະນະກຸ່ມ ແລະ ສະມາຊິກທັງໝົດ ໂດຍພາຍໃຕ້ການຕິດຕາມແນະນຳທາງດ້ານເຕັກນິກຈາກວິຊາການຊົນລະປະທານຂັ້ນເມືອງ.

(ຄຳອະທິບາຍ)

**ຄຳອະທິບາຍ:** (ໂຄງການຊົນລະປະທານພະນົມໄຊ ເມືອງພະລານໄຊ ແຂວງສະຫວັນນະເຂດ)

ກໍລະນີທີ່ 01: ນ້ຳເຊາະສັນຄອງເໝືອງ

- ຈັດປະຊຸມຮ່ວມກັບຄະນະກຸ່ມນຳໃຊ້ນ້ຳພ້ອມດ້ວຍອຳນາດການປົກຄອງຂັ້ນບ້ານເພື່ອວາງແຜນນັດມື້ກຳນົດວັນຈັດຕັ້ງປະຕິບັດສ້ອມແປງ ວາງແຜນການນຳໃຊ້ແຮງງານ ແລະ ແຕ່ງຕັ້ງຜູ້ຮັບຜິດຊອບແຕ່ລະໜ້າວຽກ.
- ຊອກຫາບໍດິນທີ່ເອົາມາຖົມສະຖານທີສ້ອມແປງ ໂດຍການຕົກລົງເຫັນດີກັບເຈົ້າຂອງດິນໃກ້ຄຽງ.
- ອະນາໄມສະຖານທີສ້ອມແປງ ( ຕັດຫຍ້າ, ຕົ້ນໄມ້).
- ຖົມດິນອັດແໜ້ນດ້ວຍເຄື່ອງມືທີ່ມີຢູ່(ຕີນຊ້າງ, ຈັກຕຳດິນ).
- ຫ່າຍດິນໃສ່ກະສອບ ແລະ ລຽນຕັ້ນຕາມແລວການກັດເຊາະຕາມສັນຄອງເໝືອງ.




ກໍລະນີ ສຶກສາ: ດິນເຊາະເຈື່ອນ ຂ້າງຄອງເໝືອງແມ່



ອະນາໄມ ບ່ອນທີ່ຈະສ້ອມແປງ



ໃສ່ກະສອບຊາຍ ຕາມບ່ອນທີ່ເຊາະເຈື່ອນ

ກໍລະນີທີ່ 02:  ຄອງເໝືອງແມ່ ມີຮອຍແຕກຕາມຝາຂ້າງ .

- ຈັດປະຊຸມຮ່ວມກັບຄະນະກຸ່ມນໍາໃຊ້ນໍ້າພ້ອມດ້ວຍອໍານາດການປົກຄອງຂັ້ນບ້ານເພື່ອວາງແຜນ ສ້ອມແປງ(ແຜນແຮງງານ, ແຜນງົບປະມານ ແລະ ແຜນວັດສະດຸເຄື່ອງມືຕ່າງໆ).
- ອະນາໄມສະຖານທີສ້ອມແປງ(ທຸບຮອຍແຕກໃຫ້ເຫັນເສັ້ນເຫຼັກ).
- ຕີແບບ ແລະ ຈັບລະດັບໃຫ້ໄດ້ຕາມລະດັບເກົ່າ.
- ຫົດນໍ້າບ່ອນທີ່ຕ້ອງການເທເບຕົງ.
- ປະສົມ ແລະ ເທເບຕົງດ້ວຍສ່ວນປະສົມ 1:2:3 ( ຊີມັງ:ຊາຍ:ຫີນແຮ່).
- ປະໄວ້ປະມານ 05-07 ວັນ, ຫົດນໍ້າຢ່າງໜ້ອຍວັນລະຄັ້ງ.
- ແກະແບບ ແລະ ເກັບມ້ຽນສິ່ງເສດເຫຼືອອອກໃຫ້ໝົດ.




ຝາຄອງແຕກ (ພາບຂ້າງຄອງ)



ຮູບພາບ ທີ່ເປ້ເພ



ຮູບພາບ ທີ່ເປ້ເພ



ສ້ອມແປງ ໂດຍກຸ່ມຜູ້ນໍາໃຊ້ນໍ້າ

*ຜູ້ຈັດຕັ້ງປະຕິບັດ ສະມາຄົມຜູ້ນໍາໃຊ້ນໍ້າ ແລະ ພະນັກງານວິຊາການເມືອງ*

**ກໍລະນີ ສຶກສາ 03: ກຸ່ມນໍາໃຊ້ນໍ້າ ໂຄງການ ແກ້ງກອກເໜືອ, ຂຸດຄອງເໝືອງແມ່ ດ້ວຍຕົນເອງ.**

(ພາບລວມ)

- ໂຄງການ ແກ້ງກອກເໜືອ ມີຄອງເໝືອງແມ່ ຢູ່ 2 ເບື້ອງ. ຄອງເປຕົງຄວາມຍາວ 100m, ແລະ ທີ່ເຫຼືອແມ່ນເປັນຄອງດິນ.
- ໃນເມື່ອກ່ອນ, ແມ່ນພວກເຂົາໃຊ້ເຂົາແຮງງານຄົນ ໃນການອະນາໄມຄອງ ແລະ ຂຸດຄອງ, ເຊິ່ງເຮັດໃຫ້ມີປະສິດທິຜົນຕໍ່າ, ນໍ້າໄຫຼຊ້າ ແລະ ບໍ່ທົ່ວເຖິງ ຈົນເຮັດໃຫ້ບາງເຂດ ຢຸດເຮັດການຜະລິດ.
- ຊາວກະກອນ ກໍ່ມີການຕໍ່ວ່າ ໃຫ້ຄະນະກຸ່ມ.
- ດ້ວຍເຫດນີ້, ຈຶ່ງເຮັດໃຫ້ກຸ່ມນໍາໃຊ້ນໍ້າ ໂຄງການແກ້ງກອກເໜືອ ໄປແລກປ່ຽນ ແລະ ຖອດຖອນບົດຮຽນ ນໍາສະມາຄົມຕົ້ນແໜນ ກ່ຽວກັບ ການຈັດການນໍ້າ ແລະ ຮ່ວມຝຶກອົບຮົມນໍາໂຄງການ.
- ຫຼັງຈາກນັ້ນ, ພວກເຂົາກໍ່ມີຄວາມໝັ້ນໃຈ ໃນການປັບປຸງ, ແກ້ໄຂ ລະບົບຊົນລະປະທານ, ແລະ ຂຸດຄອງ ເພື່ອຂະຫຍາຍເນື້ອທີ່ການຜະລິດ.

**(ພວກເຂົາຂຸດຄອງ ຂະຫຍາຍເນື້ອທີ່ ການຜະລິດ ໄດ້ແນວໃດ?)**

- ກຸ່ມນໍາໃຊ້ນໍ້າ ໄດ້ປຶກສາຫາລື ໃນການຫາທາງອອກກ່ຽວກັບ ບັນຫານີ້.
- ທະນາຄານສົ່ງເສີມກະສິກໍາ ໄດ້ລົງມາບ້ານ ແລະ ໄດ້ສະເໜີ ການກູ້ຢືມເງິນ ໃຫ້ແກ່ກຸ່ມ.
- ກຸ່ມໄດ້ເອົາຂໍ້ສະເໜີ ໄປພິຈາລະນາ ແລະ ໄດ້ຕັດສິນໃຈ ຢືມເງິນມາໃຊ້ໃນການຂຸດຄອງ ຂະຫຍາຍເນື້ອທີ່ການຜະລິດ.
- ກຸ່ມໄດ້ເຜີຍແຜ່ ໃຫ້ແກ່ ສະມາຊິກຊາວນາ ໄດ້ຮັບຮູ້ ວ່າຕົນຢືມເງິນ ຈາກທະນາຄານ ເພື່ອໃຊ້ໃນການ ຂຸດຄອງຂະຫຍາຍເນື້ອທີ່.

**(ຜົນສໍາເລັດ)**

- ເນື້ອທີ່ ໂຄງການແກ້ງກອກເໜືອ ໄດ້ເພີ່ມຂຶ້ນ ***ເຮັກຕາ, ຖ້າທຽບໃສ່ ການຜະລິດໃນປີ ທີ່ຜ່ານມາ.



ກ່ອນການທໍາຄວາມສະອາດ ດ້ວຍແຮງງານຄົນ



ສະພາບຄອງໃນເມື່ອກ່ອນ



ຫຼັງຈາກຂຸດຄອງ



ນໍ້າໄຫຼສະດວກ ແລະ ໄວຂຶ້ນ

<ເງື່ອນໄຂ ໃນການກູ້ຢືມ>

1) ຜູ້ຢືມ : ກຸ່ມນຳໃຊ້ນ້ຳ
2) ຜູ້ໃຫ້ຢືມ: ທະນາຄານ ສົ່ງເສີມ ກະສິກຳ
3) ຈຳນວນ ທີ່ກູ້ຢືມ: 42,000,000 ກີບ
4) ດອກເບ້ຍ: 0.88 % / ປີ
5) ກຳນົດໃນການກູ້ຢືມ: 2 ປີ
6) ຈຳນວນທີ່ຕ້ອງ ຈ່າຍຄືນ ໃຫ້ທະນາຄານ: 43,000,000 ກີບ

## (2) ຄ່າໃຊ້ຈ່າຍ ແລະ ຂັ້ນຕອນໃນການຄຽນ ມໍເຕີ້

> 1) ມໍເຕີ້ ຈຳເປັນຕ້ອງມີການ ຄຽນໃໝ່ທຸກໆ 5-6 ປີ ເພື່ອອາຍຸການໃຊ້ງານ ທີ່ຍາວນານ
> 2) ສະມາຄົມນຳໃຊ້ນ້ຳ ຕ້ອງມີເງິນກອງທຶນ ເພື່ອໃຊ້ໃນການສ້ອມແປງ

(ອະທິບາຍ)

1) ຂັ້ນຕອນການຮື້ຖອນ(ການຍ້າຍອອກ).
- 1-1) ກະກຽມເຄື່ອງຍົກທີ່ມີຄວາມແຮງສາມາດຍົກມໍເຕີ້ທີ່ມີນ້ຳໜັກຫຼາຍ ທີ່ຕ້ອງການຍ້າຍອອກ.
- 1-2) ກະກຽມອຸປະກອນ ເຄື່ອງມືໃຫ້ມີພ້ອມ.
- 1-3) ຕັດກະແສໄຟຟ້າ.
- 1-4) ອະນາໄມ ສິ່ງກີດຂວາງບໍລິເວນເຮືອນຈັກ ເພື່ອສະດວກໃນການເຮັດວຽກ.
- 1-5) ໃຊ້ສາຍເຊືອກຜູກຕິດລະຫວ່າງເຄື່ອງຍົກ ແລະ ມໍເຕີ້.
- 1-6) ຫັນສາຍໄຟຟ້າທຸກສາຍອອກ ແລ້ວໄວ້ໃຫ້ດີ.
- 1-7) ຫັນນ໋ອດຈັບຕີນຈັກທຸກໂຕອອກ.
- 1-8) ໃຊ້ເຄື່ອງຈັກຍົກມໍເຕີ້ອອກ ໂດຍທີ່ມີແຮງງານຄົນເປັນຜູ້ຄວບຄຸມບັງຄັບທິດທາງ.

2) ຂັ້ນຕອນການຕິດຕັ້ງ ມໍເຕີ້.
- 2-1) ກວດກາ ວັດແທກ ຮູນ໋ອດວ່າຖືກຂະໜາດ ແລະ ຕຳແໜ່ງຫຼືບໍ່.
- 2-2) ໃຊ້ສາຍກາບຜູກຕິດມໍເຕີ້ ແລະ ເຄື່ອງຈັກຍົກໃຫ້ຮັບປະກັນຄວາມປອດໄພ.
- 2-3) ຍົກເຄື່ອງຂຶ້ນຕັ້ງແທ່ນ ມໍເຕີ້.
- 2-4) ຫັນນ໋ອດໃຫ້ແໜ້ນ.
- 2-5) ຕໍ່ສາຍໄຟເຂົ້າມໍເຕີ້.
- 2-6) ກວດກາຄວາມຖືກຕ້ອງ.
- 2-7) ທົດລອງທິດທາງການໝູນຂອງເຄື່ອງໂດຍການເປີດເຄື່ອງ.
- 2-8) ຖ້າເຫັນວ່າຖືກຕ້ອງແລ້ວ ປະກອບອຸປະກອນໃຫ້ສົມບູນ.
- 2-9) ທົດສອບເປີດເຄື່ອງໃຊ້ງານເປັນເວລາ 02 ຊົ່ວໂມງ ເພື່ອສັງເກດການເຮັດວຽກຂອງມໍເຕີ້.





Installing motor after overhauling

*ຜູ້ຈັດຕັ້ງປະຕິບັດ ສະມາຄົມຜູ້ນຳໃຊ້ນ້ຳ ແລະ ພະນັກງານວິຊາການເມືອງ*

ກໍລະນີ: ການສ້ອມແປງມໍເຕີ້ ໂຄງການຊົນລະປະທານ ບ້ານເວີນ-ຕົ້ນແຫນ.

- ຂະໜາດມໍເຕີ້ 150 KW ສົ່ງໄປສ້ອມແປງທີ່ບໍລິສັດ CS Motor Service ປະເທດໄທ ໂດຍໃຊ້.
- ງົບປະມານໃນການສ້ອມແປງ ທັງໝົດ ປະມານ 50 ລ້ານກີບ ພາຍໃນເວລາ 01 ອາທິດ ລາຍລະອຽດ ລາຍການສ້ອມແປງ ແລະ ປ່ຽນຖ່າຍໃໝ່ມີດັ່ງນີ້:

ລາຄາ ໃນການ ຄຽນປ້ຳ

| ລາຍການ | | ຈຳນວນ | ລາຄາ/ຫົວໜ່ວຍ (ກີບ) | ລວມລາຄາ (ກີບ) |
|---|---|---|---|---|
| ຄຽນປ້ຳ | (ສ້ອມແປງ ມໍເຕີ້ TECO 150kwh 380V 985RPM) | | | |
| | Rewinding stator | 1 | 18,000,000 | 18,000,000 |
| | Replace bearing DE6220 SKF | 1 | 2,000,000 | 2,000,000 |
| | Replace bearing NDE NU220 SKF | 1 | 4,500,000 | 4,500,000 |
| | Repair rebush housing DE | 1 | 1,500,000 | 1,500,000 |
| | Repair rebush housing NDE | 1 | 1,500,000 | 1,500,000 |
| | Repair shaft metalization DE | 1 | 1,500,000 | 1,500,000 |
| | Repair shaft metalization NDE | 1 | 1,500,000 | 1,500,000 |
| | Balance rotor | 1 | 1,500,000 | 1,500,000 |
| | ລວມລາຄາ | | | 32,000,000 |
| ຄ່າຕິດຕັ້ງ | | 1 | 2,000,000 | 2,000,000 |
| ຄ່າຂົນສົ່ງ | ໂຄງການ ຕົ້ນແຫນ - ມຸກດາຫານ | 1 | 5,000,000 | 5,000,000 |
| | ມຸກດາຫານ - ກຸງເທບ | 1 | 6,000,000 | 6,000,000 |
| | ລວມ | | | 11,000,000 |
| ລວມ | | | | 45,000,000 |

### (3) ການກວດກາ ປະຈໍາວັນ ແລະ ການບໍາລຸງຮັກສາ ມໍເຕີ້

1) ຈັກສູບນໍ້າ ເປັນປັດໄຈຫຼັກໃນການຜະລິດ ຖ້າຈັກສູບນໍ້າເປ່ເພແມ່ນມີຜົນກະທົບຢ່າງໃຫຍ່ຫຼວງ ສະນັ້ນ, ຈຶ່ງຈໍາເປັນຕ້ອງມີການກວດກາ ແລະ ບໍາລຸງຮັກສາເປັນປົກກະຕິ ເພື່ອເຮັດໃຫ້ ຈັກສູບໃຊ້ງານໄດ້ຍາວນານ ແລະ ປະສິດທິພາບສູງ.

(ອະທິບາຍ)

ສະມາຄົມນໍາໃຊ້ນໍ້າ ຕ້ອງມີການກວດສອບການໃຊ້ງານປະຈະວັນ ຕາມຕາຕະລາງດັ່ງລຸ່ມນີ້. ເມື່ອໃຊ້ງານມໍເຕີ້ຮອດ 2000 ຊ.ມ ຫຼື 3 ເດືອນ, ຕ້ອງມີການຕື່ມກະແລັດເຂົ້າຕາມປະລິມານທີ່ກໍານົດໄວ້. ເມື່ອໄດ້ 4000 ຊ.ມ ຫຼື 6 ເດືອນ, ຜູ້ຮັບຜິດຊອບໃນການສ້ອມແປງປໍ້າ ແລະ ກຸ່ມຜູ້ນໍາໃຊ້ນໍ້າ ຕ້ອງໄດ້ກວດສອບຕູ້ສະຕັດ ແລະ ດອກໄຟ ຖ້າມີການເປ້ເພຕ້ອງໄດ້ສ້ອມແປງ. ເມື່ອໄດ້ 8000 ຊ.ມ ຫຼື 12 ເດືອນ, ຕ້ອງໄດ້ເອົາຝາຄອບອອກ ເພື່ອກວດເບິ່ງໃບພັດ. ພະນັກງານຂັ້ນແຂວງ (ໜ່ວຍງານຄຸ້ມຄອງນໍາໃຊ້), ພະນັກງານເມືອງ ຕ້ອງໄດ້ລົງຕິດຕາມພາກສະໜາມ ແລະ ໃຫ້ຄໍາແນະນໍາ ຕິດຕາມການຕື່ມກະແລັດ.

**ຕາຕະລາງການກວດກາ ຈັກສູບນໍ້າ ປົກກະຕິ ແລະ ກໍານົດເວລາໃນການບໍາລຸງຮັກສາ**

| ກວດກາ (✔)<br>ສ້ອມແຊມ (▶)<br>(ໃນເວລາເຄື່ອງເຮັດວຽກ) | ເປັນປົກກະຕິ | 2000 ຊມ ຫຼື 3 ເດືອນ | 4000 ຊມ ຫຼື 6 ເດືອນ | 8000 ຊມ ຫຼື 12 ເດືອນ |
|---|---|---|---|---|
| ໂປມກະແລັດ | | ▶ | | |
| ສຽງທີ່ຜິດປົກກະຕິ | ✔ | | | |
| ກວດແຮງດັນ V | ✔ | | | |
| ກວດກະແສໄຟ I | ✔ | | | |
| ການສັ່ນສະເທືອນຜິດປົກກະຕິ | ✔ | | | |
| ສາຍໄຟເຂົ້າ-ອອກ ຕູ້ສະຕັດ ແລະ ມໍເຕີ | ✔ | | | |
| ອຸນຫະພູມຜິດປົກກະຕິ | ✔ | | | |
| ຮອຍຮົ່ວໃນ ປໍ້າ ຫຼື ທໍ່ | ✔ | | | |
| ກວດກາສະພາບຂອງເຄື່ອງຈັກທົ່ວໄປ ດ້ວຍຕາເປົ່າ | ✔ | | | |
| ຄວາມສົມບູນຂອງເພົາ | ✔ | | | |
| ກວດກາການດໍາ ເນີນງານຂອງທຸກໆວາວ ໃນລະບົບ | | | ✔ | |
| ດອກໄຟຕູ້ຄວບຄຸມ (ພາຍນອກ, ພາຍໃນ, ສຸກເສີນ) ໃຫ້ພ້ອມໃຊ້ງານ | | | ✔ | |
| ຖອດຝາຄອບອອກແລ້ວສັງເກດເບິ່ງພັດລົມ ວ່າພ້ອມໃຊ້ງານຫຼືບໍ່ | | | | ▶ |

*ຜູ້ຈັດຕັ້ງປະຕິບັດ ນາຍຈັກ, ຄະນະກຸ່ມ*

## 1) ເຕັກນິກການປະຕິບັດ ສຳລັບ ສະມາຄົມນຳໃຊ້ນ້ຳ ແລະ ພະນັກງານເມືອງ

### a. ສາເຫດສຳຄັນທີ່ໃຫ້ ມໍເຕີ້(Motor) ອາດເປ້ເພໄວກວ່າປົກກະຕິ

(ອະທິບາຍ)

ກ່ອນມໍເຕີ້ (Motor) ຈະມີການເປ້ເພອາດເນື່ອງມາຈາກຫຼາຍສາເຫດ ແຕ່ວ່າສາເຫດຫຼັກແມ່ນ ການຕິດຕັ້ງໃນລະດັບ ແລະ ແລວທີ່ບໍ່ແນ່ນອນ ເຊັ່ນວ່າ ລະດັບບໍ່ຮາບພຽງກັນ, ແລວຂອງແກນບໍ່ຊື່, ກາແລັດບໍ່ມີໃນລູກບີ (Motor bearing) ແລະ ໃຊ້ກາແລັດບໍ່ໄດ້ຄຸນນະພາບທີ່ບໍ່ສາມາດທົນກັບຄວາມຮ້ອນຂອງລູກບີ(Bearing)ເຫຼົ່ານີ້ເປັນຕົ້ນ.



ການຕິດຕັ້ງມໍເຕີ້



ບໍ່ມີກາແລັດໃນລູກບີ



ກາແລັດບໍ່ທົນຕໍ່ອຸນຫະພູມຄວາມຮ້ອນສູງ

ຂໍ້ແນະນຳ.

ວິສະວະກອນ ຫຼື ພະນັກງານເມືອງ ຕ້ອງກວດກາລະດັບ ແລະ ແລວຂອງຈັກສູບນ້ຳໃຫ້ລະອຽດຖືກ ຕ້ອງກ່ອນຈະຕິດຕັ້ງ ຕ້ອງມີເຄື່ອງມືອຸປະກອນວັດແທກແລວຊື່(Alignment).

ຕົວຢ່າງ Laser Alignment



ລາຄາ 300,000 ບາດ(ໄທ)

- ຄະນະກຸ່ມນຳໃຊ້ນ້ຳ ຫລື ພະນັກງານເມືອງ ຕ້ອງກວດກາລູກບີ(Motor Bearing) ວ່າມີກາແລັດຫລືບໍ
- ພະນັກງານເມືອງ ແລະ ຄະນະກຸ່ມນຳໃຊ້ນ້ຳ ຕ້ອງກວດກາແລັດ(Grease) ວ່າມີຄຸນນະພາບ ແລະ ສາມາດທົນຄວາມຮ້ອນ(ອຸນຫະພູມສູງ)
- ອຸປະກອນ ແລະ ວັດສະດຸທີ່ບໍລິສັດນຳມາສ້ອມແປງ ແລະ ປ່ຽນຖ່າຍໃໝ່ຕ້ອງມີໃບຢັ້ງຢືນ.

*ຖ້າມີຄຳຄິດເຫັນ ກະລຸນາຕິດຕໍ່, (ທ່ານ ສົ້ມ ພົມທອງສີງ)*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ສົ້ມ ພົມທອງສີງ 041 216 009 (ກປຂ ທ່າປາງທອງ)

## b. ການເປີດຈັກສູບນໍ້າທີ່ຖືກວິທີ

(ຄໍາອະທິບາຍ)

ການເປີດຈັກສູບນໍ້າທີ່ຖືກວິທີຕ້ອງປະຕິບັດຕາມຄໍາແນະນໍາຂອງຊ່າງວຊານ ຫຼື ຄູ່ມືການນໍາໃຊ້ ຈັກສູບນໍ້າຢ່າງເຄັ່ງຄັດ ເພື່ອບໍ່ໃຫ້ເກີດຄວາມເສຍຫາຍ, ຂັ້ນຕອນປະຕິບັດດັ່ງລຸ່ມນີ້:

1. ກວດກາສາຍໄຟ ວ່າຍັງຢູ່ໃນສະພາບດີຫຼືບໍ່.
2. ປິ່ນແກນຈັກສູບເພື່ອໃຫ້ໝັ້ນໃຈວ່າບໍມີສິ່ງຜິດປົກກະຕິ.
3. ກວດສອບ ລະບົບໄຟ ໂວນ, ອໍາແປ.
4. ເປີດ ເບັກເກີໃຫຍ່.
5. ເປີດ ເບັກເກີ ຟິວ.
6. ກົດ ສະຕາດ.










*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນໍາໃຊ້ນໍ້າ*

ຖ້າມີຄໍາຖາມ ຕິດຕໍ່

- ທ່ານ. ອັນລະຄອນ 041212152 (ກປຂ)

## c. ວິທີເປີດຈັກສູບນ້ຳທີ່ປະຢັດຄ່າກະແສໄຟຟ້າ

(ອະທິບາຍ)

- ມີຫຼາຍໂຄງການທີ່ມີອັດຕາຄ່າກະແສໄຟຟ້າແພງຫຼາຍໂດຍສົມທຽບໃນບັດດາໂຄງການທີ່ຢູ່ໃກ້ຄຽງ
- ສາຍເຫດຫຼັກໃຫ້ມີກຳລັງໄຟຟ້າສູງກໍ່ຍ້ອນ ຈັກສູບເກົ່າແກ່ ສະໜາມແມ່ເຫຼັກ ເຊື່ອມຄຸນນະພາບ ເຮັດໃຫ້ຈັກສູບນ້ຳວຽກບໍ່ເຕັມປະສິດທິພາບ ໃຊ້ກະແສໄຟຟ້າສູງ
- ການເປີດຈັກສູບນ້ຳແຕ່ລະຄັ້ງ ຈັກສູບນ້ຳຈະດຶງກະແສໄຟຟ້າສູງໃນເວລາເປີດເຄື່ອງທຳອິດເຊິ່ງເຫັນໄດ້ຈາກໄຟຟ້າຕຶກ
- ການເປີດຈັກສູບນ້ຳແຕ່ລະຄັ້ງຈະເສຍຄ່າໄຟຟ້າປະມານ 30 ພັນກີບຕໍ່ຄັ້ງ

ຂໍ້ແນະນຳ: ຄວນເປີດຈັກສູບນ້ຳ 24 ຊມ ຕໍ່ວັນ ຈົນກວ່າຊາວນາຈະໄດ້ຮັບນ້ຳພຽງພໍ ແລ້ວຈິ່ງ ປິດເຄື່ອງ ອີກຖັດໄປ 3-4 ວັນຈິ່ງເປີດເຄື່ອງອີກຄັ້ງໃໝ່.



*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ວັນລະຄອນ 041212152 (ກປຂ)

## d. ປະເພດກາແລັດທີ່ຄວນໃຊ້ຈັກສູບນ້ຳ

(ອະທິບາຍ)

- ກະແລັດມີປະໂຫຍດເຮັດໃຫ້ມີຄວາມມື່ນ ຫຼຸດຜ່ອນແຮງຮຸກຖູ ແລະ ຫຼຸດຜ່ອນຄວາມຮ້ອນໃນລູກບີ.
- ໃນເວລາໃຊ້ລູກບີໃໝ່ຕ້ອງໃສ່ກະແລັດ ເຂົ້າໃຫ້ເຕັມໃນບໍລິເວນທາງໃນຂອງລູກບີ (ດັ່ງຮູບ 01).





ຮູບ 01: ການເອົາກະແລັດເຂົ້າໃນ ລູກບີ

- The grease that uses, should select the high quality and heat resistant
- ກະແລັດທີ່ໃຊ້ຕ້ອງມີຄຸນະພາບ ທີ່ທົນທານຕໍ່ຄວາມຮ້ອນສູງລະຫວ່າງ 80 - 120 ອົງສາເຊ( ດັ່ງຮູບ 02)








ຮູບ 02: ປະເພດກາແລັດທີ່ນິຍົມໃຊ້

- ອາຍຸການໃຊ້ງານຂອງກະແລັດໄດ້ສູງສຸດ 10.000 ຊົ່ວໂມງ
  a. ຖ້າເປີດຈັກສູບນ້ຳ 10 ຊມ/ວັນ;  30 ວັນເທົ່າກັບ 300 ຊມ
  b. ຖ້າເປີດຈັກສູບນ້ຳ 24 ຊມ/ວັນ;  30 ວັນເທົ່າກັບ 720 ຊມ
- ເມື່ອນຳໃຊ້ຄົບອາຍຸການໃຊ້ງານ ຕ້ອງລ້າງ ແລ້ວ ຕື່ມກະແລັດໃສ່ໃຫມ່
- ໃນເມື່ອໃຊ້ງານ ຈັກສູບນ້ຳໄປໄລຍະໃດໜຶ່ງ ຕ້ອງກວດຄືນໂດຍການອັດກະແລັດຕື່ມຈົນເຕັມ ໂດຍປົກກະຕິ ປະມານ:
  a. ຖ້າເປີດຈັກສູບນ້ຳ 10 ຊມ/ວັນ;  03 ເດືອນ ຕື່ມກະແລັດ 01 ລະຄັ້ງ  60-100 mg
  b. ຖ້າເປີດຈັກສູບນ້ຳ 24 ຊມ/ວັນ;  03 ເດືອນ ຕື່ມກະແລັດ 01 ລະຄັ້ງ  200-300 mg

- ຖ້າຫາກໃຊ້ກະແລັດທີ່ບໍ່ມີ ມາດຕະຖານ ແລະ ບໍ່ຖືກວິທີ ຈະເຮັດໃຫ້ ກະແລັດໄຫຼເຂົ້າເຄື່ອງ ເກີດມີຄວາມຊຸ່ມ ແລະ ເປັນສາຍເຫດໃຫ້ ມໍເຕີ້ໄໝ້

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ວັນລະຄອນ 041212152 (ກປຂ)

## e. ຜົນດີ ແລະ ຜົນເສຍຂອງການປ່ອຍໄຟຟ້າແລະຕັດໄຟຟ້າ ຕໍ່ກັບຈັກສູບນໍ້າໂຄງການຊົນລະປະທານ

(ຄໍາອະທິບາຍ)

PAFO and DAFO need to consider improvement of electrical system.

❖ **ການເປີດກະແສໄຟຟ້າ**

- **ດ້ານດີ.**
  - ປ້ອງກັນຂະໂມຍລັກສາຍໄຟຟ້າ.
  - ປ້ອງກັນສັດຕ່າງໆເຂົ້າໄປໃນມໍເຕີ(Motor) .
  - ຮັກສາອຸນຫະພູມໃນຂົດລວດໃຫ້ມີຄວາມຮ້ອນທີ່ເໝາະສົມຢູ່.
- **ດ້ານອ່ອນ:**
  - ອາດເກີດໄຟຟ້າຊ໋ອດໃນຊ່ວງລະດູຝົນ ເຊັ່ນວ່າ: ຝົນຕົກໜັກ, ລົມແຮງເຮັດໃຫ້ຕົ້ນໄມ້ຫັກ ຫຼື ນໍ້າຖ້ວມ.

❖ **ການປິດກະແສໄຟຟ້າ**

- **ດ້ານດີ:**
  - ບໍ່ຢ້ານໄຟຟ້າຮົ່ວຊືມ.
- **ດ້ານອ່ອນ:**
  - ອາດມີຄວາມຊຸ່ມໃນຂົດລວດ.
  - ສັດອາດຈະນໍາສິ່ງເສດເຫຼືອເຊັ່ນວ່າ ຂີ້ເຫຍື່ອ, ກິ່ງໄມ້ຕ່າງໆເຂົ້າໄປໃນມໍເຕີ້.
  - ການໃຊ້ສາຍຄວບຄຸມຄວາມຮ້ອນ (Space heater) ເປັນໂຕຮັກສາອຸນຫະພູມໃນຂົດລວດບໍ່ມີຄວາມໝາຍ ແລະ ເສຍງົບປະມານ.
  - ເສຍຄ່າບໍລິການໃຫ້ພະນັກງານໄຟຟ້າຕໍ່ການປິດ-ເປີດໄຟຟ້າອີກຄັ້ງ.




ຝາອັດ ມໍເຕີ້ທີ່ເປິະເປື້ອນດ້ວຍເສດຂີ້ເຫຍື່ອ.

*ຜູ້ຈັດຕັ້ງປະຕິບັດ: ກປຂ, ກປມ*

ຖ້າມີຄໍາຖາມຕິດຕໍ່
- ທ່ານ. ສຸດສະຫວັນ 041212152 (ກປຂ)

## f. ການປຽບທຽບມໍເຕີ້ ລຸ້ນເກົ່າ ແລະ ລຸ້ນໃໝ່

(ອະທິບາຍ)

- ມໍເຕີ້ ລຸ້ນເກົ່າ ແລະ ໃໝ່ ມີຂໍ້ດີ ແລະ ຂໍ້ເສຍແຕກຕ່າງກັນດັ່ງນີ້:

| ລາຍການ | ຂໍ້ດີ | ຂໍ້ເສຍ |
|---|---|---|
| ມໍເຕີ້ ລຸ້ນເກົ່າ | ເຫຼັກໜາ ແຂງແຮງ | ມີນໍ້າໜັກຫຼາຍ |
| | ໃຊ້ງານໄດ້ຫຼາຍປີ | ໃຊ້ກະແສໄຟຟ້າຫຼາຍ |
| | ລະບາຍຄວາມຮ້ອນໄດ້ດີ | |
| ມໍເຕີ້ ລຸ້ນໃໝ່ | ລາຄາຖືກ | ເພໄວ |
| | ນໍ້າໜັກເບົາ | ເຫຼັກອ່ອນ ແລະ ບາງ |
| | ປະຢັດກະແສໄຟຟ້າ | ຮ້ອນໄວ ເຢັນໄວ |
| | | ບໍ່ເໝາະໃນການສ້ອມແປງ |

- ກປຂ (ໜ່ວຍງານຄຸ້ມຄອງນໍາໃຊ້) ຕ້ອງໃຫ້ຄໍາແນະນໍາແກ່ ປກມ ແລະ ສະມາຄົມນໍາໃຊ້ນໍ້າ



ມໍເຕີ້ ລຸ້ນເກົ່າ



ມໍເຕີ້ ລຸ້ນໃໝ່

*ຜູ້ຈັດຕັ້ງປະຕິບັດ: ກປຂ*

ຖ້າມີຄໍາຖາມ ຕິດຕໍ່

- ທ່ານ. ວັນລະຄອນ 041212152 (ກປຂ)

## g. ການເປ້ເພ Motor ຂອງຈັກສູບນ້ຳ ຫລາຍກວ່າ 70% ຄວນຊື້ Motor ເຄື່ອງໃໝ່

(ຄຳອະທິບາຍ)

Motor ຈັກສູບນ້ຳແມ່ນມີ 02 ພາກສ່ວນໃຫຍ່ທີ່ສຳຄັນຄື:

1. ໂຣເຕີ (Rotor) ປະກອບມີ ແກ່ນ, ບາ...
2. ສເຕເຕີ (Stator) ປະກອບມີ ລວດ, ລະບົບສາຍໄຟ....






ໂຣເຕີ (Rotor)



ສເຕເຕີ ( Stator)

- ກໍລະນີ Motor ໂຄງການຊົນລະປະທານ ຕົ້ນແຫນ
  - ລາຍການທີ່ຕ້ອງການສ້ອມແປງຂອງ Motor
    - ຝາອັດ (Cover)
    - ໂຣເຕີ (Rotor)

  - ລາຍການທີ່ຕ້ອງການປ່ຽນໃໝ່
    - Space heater ( ສາຍຄວບຄຸມຄວາມຮ້ອນໃນຂົດລວດ) 2 ຊຸດ
    - Motor terminals block 1 ຊຸດ
    - ສາຍ Thermal motor 3 ເສັ້ນ
    - ລູກປີ (Bearing) 2 ໂຕ
    - ຂົດລວດ (Winding stator)

ອີງຕາມລາຍການການສ້ອມແປງ ແລະ ປ່ຽນໃໝ່ ພ້ອມລາຄາ ສາມາດປະເມີນໄດ້ວ່າ ໂຄງການ ຊົນລະປະທານ ຕົ້ນແຫນ ມີການເປ່ເພປະມານ 50%

ຂໍ້ແນະນຳ.

- ໂລເຕີ້ ສາມາດສ້ອມແປງຄືນໃໝ່ໄດ້ ແຕ່ວ່າ ສເຕເຕີໂດຍສະເພາະສະໜາມແມ່ເຫຼັກ ເປ້ເພ ບໍສາມາດສ້ອມແປງໄດ້ ຕ້ອງໄດ້ຊື່ໃໝ່ ສະນັ້ນ, ຕ້ອງຄຸ້ມຄອງຮັກສານຳໃຊ້ລະມັດລະວັງໃນລະບົບ ສເຕເຕີ( Stator).
- ຖ້າວ່າມໍເຕີ້ມີການເປ້ເພ ຫລາຍກວ່າ 70% ລາຄາສ້ອມແປງແມ່ນສູງເກືອບເທົ່າກັບລາຄາ ມໍເຕີ້ ທີ່ຊື້ໃໝ່. ລາຍລະອຽດລາຄາສ້ອມແປງແຕ່ລະລາຍງານແມ່ນໄດ້ຄັດຕິດມາພ້ອມນີ້.
- ກປມ ຕ້ອງສິ່ງເສີມ ແລະ ໃຫ້ຄຳແນະນຳ ໃນລະຫວ່າງທີ່ ສະມາຄົມນຳໃຊ້ນ້ຳ ຈະເຮັດການສ້ອມແປງ ຫຼື ຊື້ໃໝ່

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ, ກປມ*

ຖ້າມີຄຳຖາມຕິດຕໍ່
- ທ່ານ. ສົ້ນ ພິມທອງສີງ 041216009 (ກປມ ທ່າປາທອງ)

## h. ຢີ້ຫໍ້ກະແລັດ ( Grease) ທີ່ນິຍົມນຳໃຊ້ທົ່ວໄປ

(ຄຳອະທິບາຍ)

ກາແລັດເປັນສ່ວນທີ່ສຳຄັນຂອງລູກປີ ( Motor Bearing), ຢີ້ຫໍ້ ແລະ ອຸນຫະພູມທີ່ທົນຕໍ່ຄວາມຮ້ອນ, ບໍລິສັດ C.H Motor service ໃນປະເທດໄທ ໄດ້ນຳໃຊ້ ກາແລັດ ຢີ້ຫໍ້ Shell ທີ່ມີການບອກອຸນຫະພູມທົນຕໍ່ກັບຄວາມຮ້ອນ $80^{\circ C}$ ແລະ $120^{\circ C}$




ນ້ຳມັນກະແລັດ ຢ້ຫ້ Shell

ຂໍ້ແນະນຳ.

- ຄະນະກຸ່ມນຳໃຊ້ນ້ຳກ່ອນຈະຊື້ກາແລັດຕ້ອງໄດ້ກວດເບິ່ງ ຢີ້ຫໍ້ ແລະ ອຸນຫະພູມທີ່ທົນຕໍ່ຄວາມຮ້ອນທີ່ໄດ້ຂຽນບອກໄວ້ໃນຕຸກ, ອຸນຫະພູມທີ່ໄດ້ຂຽນບອກໄວ້ໃນຕຸກ ຕ້ອງຫຼາຍກວ່າອຸນຫະພູມຄວາມຮ້ອນໃນລູກປີ(Motor Bearing)
- ພະນັກງານເມືອງແນະນຳຄະນະກຸ່ມນຳໃຊ້ນ້ຳທົດລອງໃຊ້ກາແລັດ ຢີ້ຫໍ້ Shell

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ*

ຖ້າມີຄຳຖາມຕິດຕໍ່
- ທ່ານ. ສັ້ນ ພົມທອງສີງ 041216009 (ກປມ ທ່າປາທອງ)

## i. ຜົນຂອງການນຳໃຊ້ກະແລັດຫຼາຍເກີນໄປ

(ຄຳອະທິບາຍ)

ການໃສ່ກະແລັດຫຼາຍເກີນໄປຈະເຮັດໃຫ້ຂົດລວດຢູ່ທາງໃນຂອງມໍເຕີ້ເກີດມີຄວາມຊຸ່ມ, ດັ່ງນັ້ນຈຶ່ງເປັນສາເຫດທີ່ພາໃຫ້ກະແສໄຟຟ້າຊັອດຫຼືໄໝ້ໄດ້ ໃນເວລາມໍເຕີ້ແລ່ນເຄື່ອງ.



ໃສ່ກະແລັດຫຼາຍເກີນໄປ



ມໍເຕີ້ໄໝ້

ຄຳແນະນຳ ແລະ ວິທີປ້ອງກັນ.

- ຄະນະກຸ່ມບໍ່ຄວນຕື່ມກາແລັດທຸກໆມື້ ຖ້າເຄື່ອງມໍເຕີ້(Motor) ເຮັດວຽກພາຍໃນ10-12 ຊົ່ວໂມງຕໍ່ມື້, ທຸກໆ 03 ເດືອນ ຕ້ອງຕື່ມກາແລັດ 3-5 ປັບ 60-100 ມີລີກຣາມ
- ຖ້າມໍເຕີ້ (Motor) ເຮັດວຽກ 24 ຊົ່ວໂມງ(ໝົດມື້), ທຸກໆ 03 ເດືອນ ຕ້ອງຕື່ມກາແລັດ 10-15 ປັບ 200-300 ມີລີກຣາມ
- ໃນການປ່ຽນຖ່າຍກາແລັດ ຕ້ອງອັດລົງໃສ່ໃຫ້ເຕັມ ເມື່ອເວລາມໍເຕີ້ (Motor)ເຮັດວຽກມັນຈະຫຼຸດລົງພໍດີ ຕາມຂະໜາດທີ່ເໝາະສົມ.

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## j. ຄວາມສຳຄັນຂອງການທາສີກັນໝ້ຽງ

(ຄຳແນະນຳ)

ສຳລັບຄະນະສະມາຄົມນຳໃຊ້ນ້ຳຊົນລະປະທານ

ວັດຖຸອຸປະກອນຕ່າງໆທີ່ມີຢູ່ໃນລະບົບຊົນລະປະທານຈະເປ້ເພ ແລະ ບໍ່ສາມາດນຳໃຊ້ຍາວນານຖ້າບໍ່ທາສີກັນໝ້ຽງ ສະນັ້ນຄະນະສະມາຄົມຕ້ອງເອົາໃຈໃສ່ກວດກາເບິ່ງວັດຖຸອຸປະກອນຕ່າງໆທີ່ເຮັດດ້ວຍໂລຫະໃນຊ່ວງກ່ອນແລະຫຼັງລົງມືເຮັດການຜະລິດວ່າພາກສ່ວນໃດແດ່ ທີ່ເຫັນວ່າບໍ່ມີສີກັນໝ້ຽງເຊັ່ນ: ມໍເຕີ້, ຕູ້ສະຕັດ, ປະຕູປິດເປີດນ້ຳ ຢູ່ໃນຄອງເໝືອງ ຖ້າເຫັນວ່າວັດຖຸໃດບໍ່ມີສີກັນໝ້ຽງຄວນທຳຄວາມສະອາດ ແລະ ນຳໃຊ້ກະດາດຊາຍຖູໃຫ້ລະອຽດ ແລ້ວທາສີກັນໝ້ຽງພື້ນ ຫຼື ທາໃສ່ວັດຖຸດັ່ງກ່າວເພື່ອໃຫ້ໃຊ້ໄດ້ຢ່າງຍາວນານ.



ການທາສີກັນໝ້ຽງ



ບໍ່ມີສີກັນໝ້ຽງ

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## k. ເຄື່ອງວັດແທກອຸນຫະພູມ.

(ຄໍາອະທິບາຍ)

- ເຄື່ອງວັດອຸນຫະພູມຍີ່ຫໍ້ DIGICON DP-88 ຄືເຄື່ອງວັດອຸນຫະພູມແບບບໍ່ຕ້ອງສໍາຜັດພຽງໃສ່ແສງເລເຊີຍິງໃສ່ວັດສະດຸທີ່ຕ້ອງການວັດອຸນຫະພູມກໍ່ສາມາດບອກຜົນໄດ້ທັນທີໃນໜ້າຈໍຂອງເຄື່ອງວ່າມີອຸນຫະພູມວ່າເທົ່າໃດ.
- ເຄື່ອງວັດອຸນຫະພູມຍີ່ຫໍ້ DIGICON DP-88 ລາຄາ 3,500-4,000 ບາດ
- ມີການກໍານົດ D:S = 8:1 (ເບິ່ງຕາມຮູບຂ້າງລຸ່ມ)
- ອຸນຫະພູມ : ຕໍ່າກວ່າ 60 ອົງສາເຊ ------- ແມ່ນ ປົກກະຕິ.
  ສູງກວ່າ 60 ອົງສາເຊ ------ ຄວນຢຸດການໃຊ້ງານ ແລະ ກວດສອບກ່ອນ.






ເຄື່ອງວັດອຸນຫະພູມ ( DIGICON DP-88 )



ວັດອຸນຫະພູມໃສ່ Motor stator



ຜົນຂອງການວັດ

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນໍາໃຊ້ນໍ້າ, ກປມ*

ຖ້າມີຄໍາຖາມຕິດຕໍ່
- ທ່ານ. ສຸດສະຫວັນ 041212152 (ກປຂ)

## I. ການອະນາໄມ ຫົວກະໂຫລກເຫິງ ແລະ ແກນກ່ອນຈະໃສ່ລູກບີ

(ຄຳແນະນຳ)

ພະນັກງານເມືອງຕ້ອງເອົາໃຈໃສ່ ຕິດຕາມກວດກາ ນຳສະມາຄົມຜູ້ນຳໃຊ້ນ້ຳ ແລະ ຜູ້ຮັບຜິດຊອບເປີດປິດຈັກສູບນ້ຳ ຄວນອະນາໄມຫົວກະໂຫລກເຫິງຫຼືແກນເພື່ອບໍ່ໃຫ້ມີຄາບກະແລັດທີ່ຫມົດຄຸນນະພາບຕິກຄ້າງ, ຄາບໜັຽງຢູ່ໃນແກນເຫຼັກ ບໍລິເວນບ່ອນທີ່ຈະໃຊ້ໜ່ວຍແກນໃໝ່ ໃຊ້ແທນໜ່ວຍເກົ່າທີ່ເປ້ເພ ໃນການອະນາໄມຕ້ອງໃຊ້ນ້ຳມັນກະຊວນລ້າງ ເພື່ອຮັກສາຄຸນນະພາບຂອງອາໄຫຼ່ຊິ້ນສ່ວນຕ່າງໆ

ພາຍຫຼັງທີ່ອະນາໄມຫົວກະໂຫລກເຫິງຂອງປໍ້າສຳເລັດແລ້ວຕ້ອງເອົາໃຈໃສ່ອະນາໄມທີ່ໂປມກະແລັດ ແລະ ທໍ່ລະບາຍນ້ຳມັນກາແລັດໂດຍປະຕິບັດຕາມຂັ້ນຕອນທີ່ໄດ້ກ່າວມາຂ້າງເທິງ



ຫົວກະໂຫຼກເຫິງ

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນ້ຳ, ກປມ*

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## 2) ເຕັກນິກປະຕິບັດ ສໍາລັບ ພະນັກງານ ກປຂ ແລະ ກປມ

ຂໍ້ "a" ຫາ "k" ແມ່ນຄວາມຮູ້ພື້ນຖານ ແກ່ພະນັກງານ ກປຂ ແລະ ກປມ. ໃນເວລາທີ່ພວກເຂົາສັງເກດເບິ່ງການຄຽນມໍເຕີ້, ພວກເຂົາຕ້ອງໄດ້ເອົາໃຈໃສ່ຕໍ່ຈຸດເຫຼົ່ານີ້.

### a. ຂັ້ນຕອນການຂົດລວດເຂົ້າໃນສະໜາມແມ່ເຫຼັກໃນສເຕເຕີ( Stator)

(ຄໍາອະທິບາຍ)

1. ການອະນາໄມຮ່ອງສະໜາມແມ່ເຫຼັກ.
    - ຂັ້ນຕອນທໍາອິດແມ່ນການນໍາໃຊ້ເຄນເພື່ອຍົກເອົາໂຣເຕີອອກ.
    - ການເອົາຂົດລວດເກົ່າອອກໂດຍໃຊ້ແກ໋ດຈູດ ແລ້ວໃຊ້ຄີມດຶ່ງອອກ.
    - ນໍາເອົາໂຄງ(Frame) ໄປອະນາໄມໂດຍການສີດນໍ້າ, ຈາກນັ້ນ ນໍາເອົາແກ໋ດຈູດເຮັດໃຫ້ແຫ້ງຕາມຮ່ອງສະໜາມແມ່ເຫຼັກ.
2. ການນໍາເອົາແຜນປຣາສະຕິກຮອງຂົດລວດ.
    - ຮ່ອງສະໜາມແມ່ເຫຼັກມີທັງໝົດ 72 ຮ່ອງ, ກ່ອນຈະນໍາເອົາແຜນປຣາສະຕິກຮອງຂົດລວດຕ້ອງໃຊ້ສະໃບຖູຕາມຮ່ອງ,ຂອບສະໜາມແມ່ເຫຼັກ ລົບຄົມ ແລະ ສ້ຽນອອກ ໃນເວລາເອົາລວດເຂົ້າບໍ່ໃຫ້ລວດເກີດມີຮອຍບາດຫຼືຂາດໄດ້; ອະນາໄມຄວາມສະອາດເປົ່າຝຸ່ນອອກໂດຍເຄື່ອງເປົ່າລົມ.
    - ໃຊ້ແຜນປຣາສະຕິກ (DMD) ເປັນແຜນທີ່ສາມາດທົນຄວາມຮ້ອນ ແລະ ສາມາດປ້ອງກັນການຊ໋ອດຫາກັນລະຫວ່າງຂົດລວດ, ຕ້ອງຄິດໄລ່ຄວາມຍາວ,ກ້ວາງແລະຕັດໃສ່ລົງຮ່ອງສະໜາມແມ່ເຫຼັກໃຫ້ຄົບ72 ຮ່ອງ
3. ການນໍາເອົາຂົດລວດລົງຮ່ອງໃນສະໜາມແມ່ເຫຼັກ
    - ນໍາໃຊ້ລວດ 10 ເສັ້ນ, ເສັ້ນລວດເບີ 17 ຄຽນໃຫ້ໄດ້ຫົກຮອບ, ຫົກຮອບເທົ່າກັບ 01 ຄອຍ, ສີ່ຄອຍເທົ່າກັບ 01 ຊຸດ, ທັງໝົດມີ 18 ຊຸດ ຜ່ານການຄິດໄລ່ຂອງນາຍຊ່າງ
    - ຫຼັງການຄິດໄລ່ກະກຽມສໍາເລັດແລ້ວແມ່ນຄ່ອຍໆລະມັດລະວັງວາງຂົດລວດລົງທັບກັບແຜນປຣາສຕິກທີ່ວາງໄວ້ຕາມແຕ່ລະຮ່ອງຕາມການຄິດໄລ່ຊຸດຂົດລວດຂອງນາຍຊ່າງ.
4. ການນໍາໃຊ້ແຜນປຣາສຕິກ (DMD)
    - ຄິດໄລ່ຂະໜາດແຜນປຣາສຕິກ ແລ້ວຕັດມາໃສ່ຕາມຊຸດຂົດລວດເພື່ອປ້ອງກັນຄວາມຮ້ອນ ແລະ ປ້ອງກັນການຊ໋ອດລະຫວ່າງຂົດລວດຫາກັນ.
5. ການນໍາໃຊ້ສາຍປຣາສຕິກ ແລະ ເຊືອກມັດຣັດແໜ້ນ.
    - ນໍາໃຊ້ສາຍປຣາສຕິກ ຫຸ້ມຫໍ່ສາຍຂົດລວດເພື່ອປ້ອງການຄວາມຮ້ອນ ແລະ ປ້ອງກັນການຊ໋ອດລະຫວ່າງເສັ້ນລວດ
    - ເຊືອກມັດເປັນເຊືອກທີ່ທົນຕໍ່ຄວາມຮ້ອນ ສາມາດມັດບໍ່ໃຫ້ຂົດລວດເຄື່ອນຍ້າຍ ແລະ ມັດໃຫ້ສາຍລວດວາງໄວ້ເປັນລະບົບ.
6. ການອົບນໍ້າຢາ
    - ຂັ້ນຕອນນີ້ເປັນຂັ້ນຕອນສຸດທ້າຍຫຼັງຈາກສໍາເລັດການຂົດລວດຕ່າງໆໃນສະໜາມແມ່ເຫຼັກ ແມ່ນຕ້ອງໄດ້ໄປອົບນໍ້າຢາເພື່ອເຄືອບຂົດລວດຄືນ ແລະ ປະກອບລະຫວ່າງ ໂຣເຕີ ແລະ ສເຕເຕີ.




ການອະນາໄມ




ແຜນປຣາສຕິກຮອງ
ຂີດລວດ





ການໃສ່ຂີດລວດ




ການໃສ່ແຜນປຣາສຕິກ ແລະ
ເຊືອກມັດ



ສຳເລັດການໃສ່ຂີດລວດ




ການປະກອບຢ່າງສົມບູນ

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ສຸດສະຫວັນ 041212152 (ກປຂ)

## ៦.ວິທີການເອົາໃບພັດເຂົ້າ ແລະ ອອກ

(ການອະທິບາຍ:)

ຂະໜາດຮູຂອງໃບພັດ ແລະ ຂະໜາດຂອງແກ່ນມີຂະໜາດເທົ່າກັນເຮັດໃຫ້ຫຍຸ້ງຍາກໃນການເອົາເຂົ້າ ແລະ ອອກ , ວິທີທີ່ງ່າຍແມ່ນ ວິທີໃຫ້ຂະໜາດຮູຂອງໃບພັດມີຄວາມຮ້ອນ ເມື່ອມີຄວາມຮ້ອນຂະໜາດຂອງຮູຈະມີການຂະຫຍາຍຕົວຂຶ້ນ ເຮັດໃຫ້ການເອົາເຂົ້າ ແລະ ເອົາອອກງ່າຍ ໃນນີ້ ວິຊາການບໍລິສັດແມ່ນນໍາໃຊ້ແກ໋ສຈູດເຮັດໃຫ້ເກີດຄວາມຮ້ອນ, ເຫລັກຕ່າງໆເມື່ອຖືກເຜົາດ້ວຍຄວາມຮ້ອນມັນກໍຈະເກີດມີຄວາມອ່ອນຕົວ ເພາະສະນັ້ນເຮົາຈຶ່ງເອົາໃບພັດເຂົ້າ - ອອກໄດ້ງ່າຍດາຍ.





ການຈູດແກ໋ສເຮັດໃຫ້ມັນຮ້ອນເພື່ອນໍາໃບພັດອອກ-ເຂົ້າ

ຄໍາແນະນໍາ:

- ພະນັກງານແຂວງ ແລະ ເມືອງຕ້ອງມີການກວດກາບໍລິສັດຮັບເໝົາສ້ອມແປງໃນເວລາທີ່ເອົາໃບພັດອອກຈະຕ້ອງມີການໃຊ້ຄວາມຮ້ອນດ້ວຍການຈູດແກ໋ສໃນເມື່ອມີຄວາມຮ້ອນ 80-100C ຈຶ່ງສາມາດເອົາໃບພັດເຂົ້າ-ອອກງ່າຍ.
- ຫ້າມບໍ່ໃຫ້ນໍາໃຊ້ຄ້ອນປອນຫລືວ່າຄ້ອນຕີທຸບເຂົ້າໂດຍຮູໃບພັດລົມບໍ່ມີຄວາມຮ້ອນເພາະວ່າຈະເຮັດໃຫ້ຮູຂອງໃບພັດບຽ້ວແລະແກນຂອງໂລເຕີ (Rotor)ສູນເສຍຄວາມທ່ຽງ.

ຖ້າມີຄໍາຖາມ ຕິດຕໍ່
- ທ່ານ. ສຸດສະຫວັນ 041212152 (ກປຂ)

## c. ແຜ່ນໄມລ່າ ແລະ ສາຍຟາຍເບີຫຸ້ມຫໍ່ ປ້ອງກັນຄວາມຮ້ອນໃນຂົດລວດ (Coil)

(ຄໍາອະທິບາຍ.)

1. ແຜ່ນ ໄມລ່າ ປ້ອງກັນຄວາມຮ້ອນ(DMD) ເປັນແຜ່ນໄຍແກ້ວປ້ອງກັນຄວາມຮ້ອນຂົດລວດບໍ່ໃຫ້ໄຟທີ່ອາດຈະຊ໋ອດແລ່ນເຂົ້າຫາກັນ, ທາງບໍລິສັດຊື້ມາເປັນກໍ້ ທີ່ມີລາຄາ 170,000 ບາດ ແລະ ມີຂາຍເປັນກິໂລ ລາຄາ 560 ບາດຕໍ່ກິໂລ.
2. ສາຍຟາຍເບີຫຸ້ມຫໍ່ປ້ອງກັນຄວາມຮ້ອນ (Fiber glass cable) ມີຫລາຍຂະໜາດຕັ້ງແຕ່ Ø1;2;3;4;5;6;7;8;9; 10;12;14;26;20;25;30 ແລະ 40 mm ແລະ ສາມາດທົນຕໍ່ອຸນຫະພູມ ເຖິງ 600$^{\circ c}$ ລາຄາທີ່ບໍລິສັດຊື້ເຂົ້າໃນການຫຸ້ມຫໍ່ຂົດລວດຄັ້ງນີ້ແມ່ນມີ 03 ຂະໜາດ Ø 3, 10,50 mm ແມ່ນລາຄາ 30 ບາດ ແລະ 60 ບາດ ແລະ ທົນຕໍ່ອຸນຫະພູມທີ່ມີຄວາມຮ້ອນ 220$^{\circ c}$






ແຜ່ນໄມລ່າປ້ອງກັນຄວາມຮ້ອນ



ສາຍຟາຍເບີຫຸ້ມຫໍ່ປ້ອງກັນຄວາມຮ້ອນ

ຂໍ້ແນະນໍາ.

- ວິສະວະກອນ ຫຼື ພະນັກງານເມືອງ ຕ້ອງໄດ້ກວດກາວ່າທີ່ປະເທດລາວຫຼື ແຂວງສະຫວັນເຂດ ເວລາຂົດລວດໄດ້ໃຊ້ແຜ່ນ ແລະ ສາຍປ້ອງກັນຄວາມຮ້ອນໃນຂົດລວດແບບທີ່ໄດ້ອະທິບາຍໄວ້ຂ້າງເທິງຫຼືບໍ.

ຖ້າມີຄໍາຖາມ ຕິດຕໍ່
- ທ່ານ. ສັ້ນ ພິມທອງສີງ 041216009 (ກປມ ທ່າປາງທອງ)

## d. ຄວາມສຳຄັນຂອງການໃຊ້ສາຍຄວບຄຸມຄວາມຮ້ອນ (Space heater)

(ຄຳອະທິບາຍ)

ສາຍຄວບຄຸມຄວາມຮ້ອນຢູ່ໃນຂົດລວດຂອງມໍເຕີ້ ເຮັດໃຫ້ອຸນຫະພູມຂອງຂົດລວດ ໃນມໍເຕີ້ມີຄວາມຮ້ອນເໝາະສົມຢູ່ສະເໝີ ແລະ ເພື່ອບໍ່ໃຫ້ຂົດລວດມີຄວາມຊຸ່ມ, ຖ້າມີຄວາມຊຸ່ມຫຼາຍອາດຈະພາໃຫ້ກະແສໄຟຟ້າຢູ່ໃນຂົດລວດຮົ່ວໄຫຼ, ຊ໋ອດ ແລະ ໄໝ້ມໍເຕີ້ໄດ້ ສະນັ້ນ, ສາຍຄວບຄຸມຄວາມຮ້ອນແມ່ນມີຄວາມສຳຄັນຫຼາຍ.



ສາຍຄວບຄຸມຄວາມຮ້ອນ(Space heater)

ຄຳແນະນຳ.

- ຄະນະກຸ່ມນຳໃຊ້ນ້ຳຕ້ອງແຈ້ງພະນັກງານໄຟຟ້າຮັບຮູ້ ຖ້າຈັກສູບນ້ຳບໍ່ໄດ້ເຮັດວຽກເປັນເວລາຫຼາຍວັນ ຫຼື ຍາວນານ ບໍ່ໃຫ້ຕັດກະແສໄຟຟ້າ ຕ້ອງໃຫ້ມີກະແສໄຟຟ້າ ເພື່ອເຮັດໃຫ້ສາຍ ຄວບຄຸມຄວາມຮ້ອນ (Space heater) ຮັກສາອຸນ ຫະພູມໃນຂົດລວດ.
- ຖ້າຕັດກະແສໄຟຟ້າຈະເຮັດໃຫ້ຂົດລວດທາງໃນມໍເຕີ້ເຢັນ ແລະ ກໍ່ໃຫ້ເກີດມີຄວາມຊຸ່ມຖ້າຂົດລວດມີຄວາມຊຸ່ມ ເຮັດໃຫ້ສາຍຄວບຄຸມຄວາມຮ້ອນເຊື່ອມຄຸນະພາບ ໃສ່ບໍ່ມີຄວາມໝາຍ ແລະ ເສຍງົບປະມານ (ສາຍຄວບຄຸມຄວາມຮ້ອນມີລາຄາແພງ ປະມານ 2 – 2.5 ລ້ານກີບ/01ສາຍ)
- ໃນກໍລະນີຫາກຈຳເປັນຕ້ອງຕັດກະແສໄຟຟ້າ ຄະນະກຸ່ມສາມາດປະສານຫາໄຟຟ້າເຂດເພື່ອເອົາໄຟຟ້າຄົວເຮືອນຕໍ່ເຂົ້າກັບສາຍຄວບຄຸມຄວາມຮ້ອນ Space heater

ຖ້າມີຄຳຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## e. ຄວາມສຳຄັນຂອງການອົບມໍເຕີ້

(ອະທິບາຍ)

- ເມື່ອມໍເຕີມີຄວາມຊຸ່ມ ຈະກໍ່ໃຫ້ເກີດກະແສໄຟຟ້າຮົ່ວໄຫຼ ແລະ ຈະກໍ່ໃຫ້ເກີດການຊັອດ ໄໝ້ ເສຍຫາຍໄດ້ ສະນັ້ນ ເມື່ອເວລາມໍເຕີ ມີຄວາມຊຸ່ມຫຼືຖຽນຂົດລວດໃໝ່ ຈຶ່ງຕ້ອງມີການເຄືອບນໍ້າຢາ ແລ້ວອົບໃດຄືນໃໝ່ ເພື່ອໃຫ້ມໍເຕີມີຄວາມຊຸ່ມໜ້ອຍທີ່ສຸດ (ບໍ່ໃຫ້ເກີນ 50 ເມກາໂອມ MΩ).
- ໄລຍະເວລາ ແລະ ອຸນຫະພູມທີ່ໃຊ້ໃນການອົບມໍເຕີ້ ແມ່ນຂຶ້ນກັບເງື່ອນໄຂຂອງແຕ່ລະທ້ອງຖິ່ນ ແຕ່ໂດຍທົ່ວໄປແມ່ນປະຕິບັດດັ່ງນີ້:

| ລາຍການ | ອຸນຫະພູມ | ໄລຍະເວລາ |
|---|---|---|
| ອົບມໍເຕີ ເລັ່ງດ່ວນ | 200 ອົງສາ | 4 ຊົ່ວໂມງ |
| ອົບມໍເຕີ ບໍ່ເລັ່ງດ່ວນ | 100 ອົງສາ | 8 ຊົ່ວໂມງ |







ຕູ້ອົບມໍເຕີ້



ຈໍສະແດງການຕັ້ງຄ່າ

ຖ້າມີຄຳຖາມ ຕິດຕໍ່
- ທ່ານ. ອັນລະຄອນ 041212152 (ກປຂ)

## f. ຂໍ້ດີ ແລະ ຂໍ້ເສຍໃນການໃຊ້ເຄື່ອງຄວບຄຸມຄວາມໄວຮອບຂອງມໍເຕີ້

(ຄໍາອະທິບາຍ)

ເຄື່ອງຄວບຄຸມຄວາມໄວຂອງມໍເຕີ້ເປັນເຄື່ອງຄວບຄຸມຄວາມໄວຮອບ ມີຈຸດດີ ແລະ ຈຸດອ່ອນດັ່ງນີ້:

❖ **ຈຸດດີ**

- ສາມາດຄວບຄຸບຄວາມໄວຈາກຄວາມໄວຊ້າຫາໄວ
- ຊ່ວຍຫຼຸດຜ່ອນຄ່າກະແສໄຟຟ້າໃນເວລາປິດ-ເປີດມໍເຕີ້ຊ່ວງທໍາອິດໄດ້
- ມໍເຕີ້ທີ່ມີຂະໜາດຄວາມແຮງດຽວກັນແຕ່ວ່າຮອບປິ່ນບໍ່ຄືກັນສາມາດໃຊ້ງານຮ່ວມກັນໄດ້
- ກະແສໄຟຟ້າຈະປົກກະຕິທຸກຄັ້ງໃນເວລາເປີດມໍເຕີ້.

❖ **ຈຸດອ່ອນ**

- ບໍ່ເໝາະກັບເຂດກະແສໄຟ້າບໍ່ປົກກະຕິ
- ລາຄາສູງຖ້າຈະໃຊ້ (ຂະໜາດແຮງມໍເຕີ້ ລະຫວ່າງ132-150 KW ລາຄາ 200,000 ບາດ/ເຄື່ອງ)




ເຄື່ອງຄວບຄຸມຄວາມໄວມໍເຕີ້

ຖ້າມີຄໍາຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## g. ຂັ້ນຕອນຂອງການປັບຄວາມດຸ່ນດ່ຽງແກນມໍເຕີ້ ( Motor Balance)

(ຄຳອະທິບາຍ)

ພະນັກງານແຂວງ, ເມືອງ ຕ້ອງເອົາໃຈໃສ່ຕິດຕາມຂັ້ນຕອນຂອງການປັບຄວາມດຸ່ນດ່ຽງແກນມໍເຕີ້ ທັງກ່ອນ ແລະ ຫຼັງການປັບຄວາມດຸ່ນດ່ຽງນຳບໍລິສັດໃນການປະຕິບັດຂັ້ນຕອນຕ່າງໆເຊັ່ນ:

- ການອະນາໄມຄາບກະແລັດຕິກຄ້າງ, ຄາບກະແລັດ ຕ້ອງໃຊ້ນ້ຳມັນກາຊວນລ້າງ
- ການນຳເອົາແກນມໍເຕີ້ຂຶ້ນປັບຄວາມດຸ່ນດ່ຽງຕ້ອງເຊັກລະດັບໂດຍໃຊ້ນ້ຳທ່ຽງ ລວມທັງການຕັ້ງຄ່າຂອງເຄື່ອງ ແລະ ແທກລວງຍາວຂອງແກນມໍເຕີ້ ກ່ອນທີ່ຈະປັບຄວາມດຸ່ນດ່ຽງ
- ຕັ້ງລະບົບເຊັນເຊີ້ ເພື່ອຈັບຮອບປິ່ນ ຂອງການປັບຄວາມດຸ່ນດ່ຽງແກນມໍເຕີ້
- ສິ່ງທີ່ຄວນເອົາໃຈໃສ່ເປັນພິເສດແມ່ນ ຜົນວັດຂອງແກນມໍເຕີ້ ແມ່ນບໍ່ໃຫ້ຫຼາຍກວ່າ ກຼາມ




ການປັບຄວາມດຸ່ນດ່ຽງແກນມໍເຕີ້

ຖ້າມີຄຳຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## h. ຄວາມແຕກຕ່າງລະຫວ່າງ ມໍເຕີ້ລະບົບ AC ແລະ ມໍເຕີລະບົບ DC

(ຄຳອະທິບາຍ)

- ມໍເຕີ້ລະບົບ AC ( Alternating Current ).
  ແມ່ນໃຊ້ຕໍ່ໄຟຟ້າ ແບບມໍເຕີ້ທຳມະດາທີ່ໃຊ້ທົ່ວໄປເຊັ່ນ:ມໍເຕີ້ທີ່ໃຊ້ປັ້ມນ້ຳ,ໃຊ້ໃນການລາກແກ່ ໂຮງງານເຟີນີເຈີ.
- ເວລາມີການເປ້ເພກໍສ້ອມແປງງ່າຍ,ອາໄຫຼ່ທາງໃນມໍເຕີ້ມີບໍ່ຫລາຍຊະນິດ.
- ມູນຄ່າໃນການສ້ອມແປງບໍ່ຫລາຍ.
- ໃຊ້ເວລາໃນການສ້ອມແປງນ້ອຍ.
- ມໍເຕີ້ລະບົບ DC ( Direct Current).
- ແມ່ນນຳໃຊ້ຢູ່ໃນໂຮງງານອຸດສະຫະກຳປະເພດທີ່ມີການທົດລອງຄວາມໄວຂອງຮອບໝູນຂອງເຄື່ອງໃຊ້ຊະນິດອື່ນ.
- ໃຊ້ກະແສໄຟຟ້າສູງແລະໃຊ້ຮ່ວມກັບກະແສໄຟຟ້າຂອງຊະນິດອື່ນບໍ່ໄດ້.
- ໃນກໍລະນີມີການເປ້ເພແມ່ນສ້ອມແປງຍາກ,ໃຊ້ເຄື່ອງມືສ້ອມແປງຫລາຍຊະນິດ ແລະ ນຳໃຊ້ເຕັກນິກສູງ.
- ໃຊ້ມູນຄ່າໃນການສ້ອມແປງສູງ ແລະໃຊ້ເວລາໃນການສ້ອມແປງຫລາຍ.



ມໍເຕີ້ລະບົບ AC.



ມໍເຕີ້ລະບົບ DC.

ຖ້າມີຄຳຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

# 9. ວິທີປະກອບລູກປືນມໍເຕີ້

(ຄໍາອະທິບາຍ)

ຕ້ອງເຮັດໃຫ້ວົງໃນລູກປືນມີຄວາມຮ້ອນປະມານ 70-80c ກ່ອນທີ່ຈະນໍາເອົາລູກປືນເຂົ້າໃສ່ແກນ,ການທີ່ເຮັດໃຫ້ວົງໃນລູກປືຮ້ອນແມ່ນຈະເຮັດໃຫ້ວົງໃນລູກປືນມີການຫົດຢືດ ເພື່ອເປັນການຫລີກລ້ຽງບໍ່ໃຫ້ວົງໃນຂອງລູກປືນມີການສຽດສີກັບແກນມໍເຕີ້.

- ວິທີເຮັດໃຫ້ວົງໃນຂອງລູກປືນມີຄວາມຮ້ອນ ຕ້ອງໃຊ້ເຄື່ອງທໍາຄວາມຮ້ອນຂອງລູກປືນຫລືໃຊ້ແກ໋ສຈູດຄ່ອຍໆໂດຍທີ່ວ່າບໍ່ໃຫ້ໄຟຖືກລູກປືນ ແລະວົງນອກຂອງປືນເພາະຈະເຮັດໃຫ້ລູກປືນເສື່ອມຄຸນນະພາບ.
- ຫ້າມບໍ່ໃຫ້ໃຊ້ເຫລັກຫລືຄ້ອນຕີຕອກລູກປືນເຂົ້າແກນມໍເຕີ້ ແລະບໍ່ໃຫ້ໃຊ້ເຫລັກຫລືຄ້ອນຕີຖືກໝ່ວຍປືນເພາະວ່າມັນຈະເປັນຜົນກະທົບໃນເວລານໍາໃຊ້.



ເຄື່ອງທໍາຄວາມຮ້ອນລູກປືນ.



ການເອົາລູກປືນເຂົ້າແກນມໍເຕີ້.

ຖ້າມີຄໍາຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## j. ການອະນາໄມຊິ້ນສ່ວນຕ່າງໆຂອງມໍເຕີ້ກ່ອນທາສີກັນໜ້ຽງ

(ຄຳອະທິບາຍ)

- ພະນັກງານແຂວງ, ເມືອງຕ້ອງຕິດຕາມບໍລິສັດໃນການອະນາໄມຊິ້ນສ່ວນຕ່າງໆຂອງມໍເຕີໃຫ້ສະອາດໂດຍປະສະຈາກສິ່ງຕົກຄ້າງຕ່າງໆເຊັ່ນ: ຄາບກາແລັດເກົ່າ, ຄາບສີເກົ່າ ແລະໜ້ຽງ, ຫລັງຈາກອະນາໄມແລ້ວຕ້ອງນຳເອົາຊິ້ນສ່ວນດັ່ງກ່າວໄປເຮັດໃຫ້ແຫ້ງໂດຍໃຊ້ໄຟແກ໋ສລົນຄ່ອຍໆເພື່ອບໍ່ໃຫ້ມີຄວາມຊຸ່ມຕົກຄ້າງ ແລະໃຊ້ກະດາດຊາຍເບີ 600 ມາຖູຄ່ອຍໆເພື່ອໃຫ້ຜິວໜ້າຂອງຊິ້ນສ່ວນຕ່າງໆຂອງມໍເຕີ້ມີຄວາມລະອຽດຫລັງຈາກນັ້ນຈຶ່ງນຳສີກັນໜ້ຽງຍີ່ຫໍ້ KOBE 909 ຂະໜາດ 400 CC ຜະລິດຈາກບໍລິສັດ TOA ປະເທດໄທ ມາພົ່ນສີດ ໃຫ້ບໍລິເວນພາກສ່ວນຕ່າງໆຂອງມໍເຕີ້.
- ລາຄາຂອງສີກັນໜ້ຽງແມ່ນ 45 ບາດ/ປ໋ອງ.



ອະນາໄມສ່ວນຕ່າງໆໃຫ້ສະອາດ.



ໃຊ້ໄຟລົນໃຫ້ແຫ້ງ.



ພົ່ນສີກັນໜ້ຽງ.

ຖ້າມີຄຳຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## k. ຂະໜາດຂອງເສັ້ນລວດທີ່ນຳໃຊ້ໃນການຄຽນມໍເຕີ້

(ຄຳອະທິບາຍ)

- ຂະໜາດຂອງເສັ້ນລວດທີ່ນຳໃຊ້ໃນການຄຽນມໍເຕີ້ແຕ່ລະຂະໜາດແມ່ນມີຄວາມແຕກຕ່າງກັນເຊັ່ນ: ມໍເຕີ້ຂະໜາດ 1 - 11KW ແມ່ນໃຊ້ເສັ້ນລວດເບີ 20 ຂຶ້ນໄປ ແລະ ເສັ້ນລວດຕ້ອງທົນຄວາມຮ້ອນ 200C.
- ຖ້າໃສ່ເສັ້ນລວດໃຫຍ່ເກີນໄປແມ່ນຈະເອົາລົງໃສ່ຮ່ອງສະໜາມແມ່ເຫລັກບໍ່ໄດ້.
- ລວດທີ່ນຳໃຊ້ສຳລັບມໍເຕີ້ທີ່ມີຂະໜາດ 37KW-150KW ແມ່ນໃຊ້ເສັ້ນລວດຂະໜາດດຽວກັນແລະເສັ້ນລວດທີ່ເໝາະສົມຄືເບີ17 ແລະທົນຄວາມຮ້ອນໄດ້ 180 - 200C.
- ຍີ່ຫໍ້ຂອງລວດ ແລະ ແຫລ່ງຜະລິດ (ບໍລິສັດນີ້ແມ່ນ ຍີ່ຫໍ້ ຮິຕາສິ ຂອງປະເທດຍີ່ປຸ່ນ ລາຄາ 330 ບາດຕໍ່ກິໂລ,ສຳລັບເບີ 17 ແລະ ລວດເບີ 20 ແມ່ນ 333 ບາດຕໍ່ກິໂລ.



ກໍ້ລວດ.



ວິທີຂົດລວດ.



ການເອົາຂົດລວດລົງໃສ່ສະໜາມແມ່ເຫຼັກ.

ຖ້າມີຄຳຖາມຕິດຕໍ່
- ທ່ານ. ເວດສະດາ ຈັນທະວົງສາ 041211016 (ກປມ ໄຊບູລີ)

## 2 ການຈັດການນໍ້າ

### (1) ການວັດແທກຄວາມໄວຂອງນໍ້າ

ຈຸດປະສົງການວັດແທກຄວາມໄວຂອງນໍ້າໄຫຼໃນຄອງເໝືອງ.

- ເພື່ອຄິດໄລ່ປະລິມານນໍ້າ(Q)ທີ່ຈັກສູບນໍ້າສູບຂຶ້ນມາ ຫຼື ປະຕູນໍ້າ(Intake) ໃນເຂື່ອນປ່ອຍອອກ.
- ເພື່ອຄິດໄລ່ປະລິມານນໍ້າທັງໝົດທີ່ນໍາໃຊ້ເຂົ້າໃນເນື້ອທີ່ຫົດຊ່ວງໄລຍະເວລາທໍາການຜະລິລະດູແລ້ງ.
- ເພື່ອນໍາເອົາຜົນໄດ້ຮັບຈາກການຄິດໄລ່ ໄປເຜີຍແຜ່ໃຫ້ຄະນະກຸ່ມນໍາໃຊ້ນໍ້າ ແລະ ສະມາຊິກໃນການປັບ ປຸງການຈັດການນໍ້າຊົນລະປະທານແຕ່ລະເດືອນ ແລະ ສົກປີຄັ້ງຕໍ່ໄປ.

(ຄໍາອະທິບາຍ.)

ການວັດແທກນໍ້າໄຫຼ ແມ່ນເພື່ອຄິດໄລ່ປະລິມານນໍ້າ (Q) ທີ່ຈັກສູບນໍ້າ ສູບອອກມາ, ແລະ ເພື່ອຄິດໄລ່ ປະລິມານນໍ້າທັງໝົດທີ່ໃຊ້ໃນການຜະລິດລະດູແລ້ງ ເພື່ອນໍາເອົາຜົນມາວິເຄາະ ແລະ ປັບປຸງໃນການຈັດການນໍ້າໃນປີຕໍ່ໄປ ໃຫ້ມີປະສິດທິຜົນຫຼາຍຂຶ້ນ.

1. ໄລຍະເວລາ: ເດືອນ ພະຈິກ ຫາເດືອນ ເມສາ
2. ສະຖານທີວັດແທກ: ຄອງເໝືອງແມ່ໃກ້ຫົວງານ
3. ຜູ້ຈັດຕັ້ງປະຕິບັດ: ພະນັກງານວິຊາການຊົນລະປະທານເມືອງ
4. ຄວາມຖີ່ການວັດແທກ: ທຸກໆມື້
5. ອຸປະກອນວັດແທກ: ເຄື່ອງວັດແທກຄວາມໄວຂອງນໍ້າ(ຂະແໜງຊົນລະປະທານມີອຸປະກອນ ສາມາດໃຫ້ຢືມໄດ້)

**ກໍລະນີ:** ວັດແທກຄວາມໄວຂອງນໍ້າໄຫຼໃນຄອງເໝືອງຢູ່ໂຄງການຊົນລະປະທານເຊສາລາລອງ ໃນຊ່ວງເວລາການຜະລິດລະດູ ແລ້ງສົກປີ 2018-2019 ເປັນເວລາ 04 ເດືອນ, ເດືອນ 12(ທັນວາ) ຫາເດືອນ 3(ມີນາ) ໂດຍວິຊາການຊົນລະປະທານຂັ້ນເມືອງເປັນຜູ້ເກັບກໍາຂໍ້ມູນໂດຍໃຊ້ເຄື່ອງວັດແທກຄວາມໄວຂອງນໍ້າ, ວັດແທກຢູ່ໃຈກາງຄອງ ເ ໜືອງແມ່ໃກ້ກັບຫົວງານ, ລະດັບຄວາມເລິກຂອງການວັດແທກໃນຄອງເໝືອງແມ່ນຂຶ້ນກັບຄວາມເລິກຂອງນໍ້າ (D)ໃນຄອງເໝືອງ.

- ຖ້າຄວາມເລິກນໍ້າ(D),D $\geq$ 40cm ວັດຄວາມໄວ(V)ຂອງນໍ້າຢູ່ 02 ຈຸດຄື: ຄວາມເລິກ 0.2D ແລະ 0.8D
- ຖ້າຄວາມເລິກນໍ້າ(D), D < 40cm ວັດຄວາມໄວ(V)ຂອງນໍ້າຢູ່ 01 ຈຸດ ທີ 0.6D






ສູດຄິດໄລ່ເນື້ອທີໜ້າຕັດຄອງເໝືອງ( A)

$$A=1/2(b+B)D$$




ສູດຄິດໄລ່ປະລິມານນໍ້າ (Q)

$$Q=AV$$

Q ແມ່ນປະລິມານນໍ້າ ( $m^3/s$)
A ແມ່ນເນື້ອທີໜ້າຕັດປຽກຂອງຄອງເໝືອງ ($m^2$)
V ຄວາມໄວຂອງນໍ້າໄຫຼໃນຄອງເໝືອງ ( m/s)




ຄຸນສົມບັດຂອງເຄື່ອງ




ໜ້າຈໍເຄື່ອງວັດແທກຄວາມໄວຂອງນໍ້າໄຫຼ





ການວັດແທກຄວາມໄວຂອງນໍ້າໄຫຼໃນຄອງເໝືອງ

*ຜູ້ຈັດຕັ້ງປະຕິບັດ: ກປຂ, ກປມ*

## ຟອມຕິດຕາມການວັດແທກຄວາມໄວການໄຫຼຂອງນ້ຳໃນຄອງເໝືອງ

**ບ້ານເປົ້າໝາຍ:** ບ້ານ ທົ່ງປາງ ໂຄງການ ຊົນລະປະທານ ເຊສາລາລອງ

| ລ/ດ | ວັນທີ,ເດືອນ,ປີ | ຊື່ພະນັກງານວັດແທກ | ປະຕູນ້ຳທີ່ເປີດໃຊ້ | ຄວາມເລິກຂອງນ້ຳ | ຄວາມໄວຂອງກະແສນ້ຳໄຫຼໃນຄອງເໝືອງ | | | | | ຄວາມໄວ | ເນື້ອທີ່ໜ້າຕັດປຽກ | ປະລິມານນ້ຳ |
|---|---|---|---|---|---|---|---|---|---|---|---|---|
| | | | (ຊັງຕີແມັດ) | (ຊັງຕີແມັດ) | ລະດັບຄວາມເລິກD(cm) | | ຄັ້ງທີ 1 | ຄັ້ງທີ 2 | ຄັ້ງທີ 3 | m/s | $m^2$ | m3/s |
| 1 | 3-Jan-19 | ທ.ສັ້ນ ພົມທອງສີ | 07 | 81 | 0.2*D | 16 | 0.5 | 0.5 | 0.5 | 0.43 | 1.79 | 0.78 |
| | | | | | 0.8*D | 65 | 0.3 | 0.4 | 0.4 | | | |
| | | | | | 0.6*D | | | | | | | |
| 2 | 4-Jan-19 | ທ.ສັ້ນ ພົມທອງສີ | 07 | 65 | 0.2*D | 13 | 0.3 | 0.4 | 0.4 | 0.30 | 1.25 | 0.38 |
| | | | | | 0.8*D | 52 | 0.3 | 0.2 | 0.2 | | | |
| | | | | | 0.6*D | | | | | | | |
| 3 | 5-Jan-19 | ທ.ສັ້ນ ພົມທອງສີ | 07 | 70 | 0.2*D | 14 | 0.3 | 0.5 | 0.4 | 0.35 | 1.38 | 0.48 |
| | | | | | 0.8*D | 56 | 0.3 | 0.3 | 0.3 | | | |
| | | | | | 0.6*D | | | | | | | |
| 4 | 6-Jan-19 | ທ.ສັ້ນ ພົມທອງສີ | 10 | 58 | 0.2*D | 12 | 0.5 | 0.5 | 0.5 | 0.45 | 1.08 | 0.49 |
| | | | | | 0.8*D | 46 | 0.3 | 0.5 | 0.4 | | | |
| | | | | | 0.6*D | | | | | | | |
| 5 | 7-Jan-19 | ທ.ສັ້ນ ພົມທອງສີ | 10 | 72 | 0.2*D | 14 | 0.5 | 0.5 | 0.5 | 0.45 | 1.43 | 0.64 |
| | | | | | 0.8*D | 58 | 0.4 | 0.4 | 0.4 | | | |
| | | | | | 0.6*D | | | | | | | |
| 6 | 8-Jan-19 | ທ.ສັ້ນ ພົມທອງສີ | 10 | 72 | 0.2*D | 14 | 0.6 | 0.5 | 0.5 | 0.47 | 1.43 | 0.67 |
| | | | | | 0.8*D | 58 | 0.4 | 0.4 | 0.4 | | | |
| | | | | | 0.6*D | | | | | | | |

ຕາຕະລາງການບັນທຶກ ແລະ ຄິດໄລ່ປະລິມານນ້ຳ

# ຟອມຕິດຕາມການວັດແທກຄວາມໄວການໄຫຼຂອງນໍ້າໃນຄອງເໝືອງ

**ບ້ານເປົ້າໝາຍ:** ບ້ານ ທົ່ງປາງ ໂຄງການ ຊົນລະປະທານ ເຊສາລາລອງ

| ລ/ດ | ວັນທີ,ເດືອນ,ປີ | ຊື່ພະນັກງານວັດແທກ | ປະຕູນໍ້າທີ່ເປີດໃຊ້ | ຄວາມເລິກຂອງນໍ້າ | ຄວາມໄວຂອງກະແສນໍ້າໄຫຼໃນຄອງເໝືອງ | | | | | ຄວາມໄວ | ເນື້ອທີ່ໜ້າຕັດປຽກ | ປະລິມານນໍ້າ |
|---|---|---|---|---|---|---|---|---|---|---|---|---|
| | | | (ຊັງຕີແມັດ) | (ຊັງຕີແມັດ) | ລະດັບຄວາມເລິກD(cm) | | ຄັ້ງທີ 1 | ຄັ້ງທີ 2 | ຄັ້ງທີ 3 | m/s | $m^2$ | m3/s |
| 1 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| 2 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| 3 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| 4 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| 5 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| 6 | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

## (2) ບັນທຶກຊົ່ວໂມງ ການເຮັດວຽກຂອງປໍ້າ

1) ສະມາຄົມນຳໃຊ້ນໍ້າ ຕ້ອງໄດ້ບັນທຶກ ຊົ່ວໂມງການເຮັດວຽກຂອງປໍ້າ ແລະ ບັນທຶກຈຳນວນກະແສໄຟຟ້າ ເພື່ອນຳມາວິເຄາະ ປະລິມານນໍ້າທີ່ໃຊ້

(ຄຳອະທິບາຍ)

ການບັນທຶກຊົ່ວໂມງການເຮັດວຽກຂອງຈັກສູບນໍ້າເປັນຂໍ້ມູນທີ່ສຳຄັນຢ່າງໜຶ່ງໃນການຈັດ ການນໍ້າຊົນລະປະທານ ເພາະວ່າຂໍ້ມູນທີ່ໄດ້ຈາກການບັນທຶກຄືຊົ່ວໂມງການເຮັດວຽກຂອງຈັກສູບນໍ້າ ແລະ  ຈຳນວນກຳລັງໄຟຟ້າທີ່ໃຊ້ແຕ່ລະມື້ ການບັນທຶກຊົ່ວໂມງການເຮັດວຽກຂອງຈັກສູບນໍ້າຍັງເປັນຂໍ້ມູນເຜີຍແຜ່ໃຫ້ຄະນະກຸ່ມແລະສະມາຊິກວ່າໃນແຕ່ລະມື້ ເປີດໃຊ້ງານຈັກສູບນໍ້າຈັກຊົ່ວໂມງ ,ໃຊ້ໄຟຟ້າຫຼາຍໜ້ອຍເທົ່າໃດ ແລະ ສູບນໍ້າໄດ້ຈັກແມັດກ້ອນ.

1. ໄລຍະເວລາ: ເດືອນ ພະຈິກ ຫາເດືອນ ເມສາ
2. ສະຖານທີບັນທຶກ: ກົງເຕີໄຟຟ້າ
3. ຜູ້ຈັດຕັ້ງປະຕິບັດ: ນາຍຈັກ
4. ຄວາມຖີ່ການບັນທຶກ: ກ່ອນ ແລະ ຫຼັງການເປີດຈັກສູບນໍ້າ
5. ແບບຟອມບັນທຶກ: ຊົ່ວໂມງການເຮັດວຽກຂອງຈັກສູບນໍ້າ

**ໃນກໍລະນີ:**

ບັນທຶກຊົ່ວໂມງການເຮັດວຽກຂອງຈັກສູບນໍ້າ ໂຄງການຊົນລະປະທານ ໜອງບົວຫຼວງ ເມືອງ ຊົນນະບູລີ ແຂວງ ສະຫວັນນະເຂດ.

- ເປີດ 12 ຊົ່ວໂມງ/ມື້ ເລີ່ມເປີດແຕ່ 6 : 30 ນາທີ ໂຕເລກກົງເຕີໄຟຟ້າ 00048 ປິດ 18 : 50 ນາທີ ໂຕເລກກົງເຕີໄຟຟ້າ 00061
- ຕົວຄູນກົງເຕີໄຟຟ້າ 40 ອີງໃສ່ຂະໜາດຂອງໝໍ້ແປງໄຟຟ້າ
- ກຳລັງກະແສໄຟຟ້າທີໃຊ້  ເທົ່າກັບ 13x40 = 520 kwh



| | | | | | | |
|---|---|---|---|---|---|---|
| 26/02/2019 | [illegible] | 7:00 | 00,217 kwh | 17:00 | 00,227 kwh | 16,17,18 |
| [illegible] | [illegible] | – | kwh | – | – kwh | – |
| 27/02/2019 | [illegible] | 6:50 | 00227 kwh | 18:11 | 00.240 kwh | 17,16,15 |
| ພຸດ | [illegible] | – | kwh | – | – kwh | – |
| 28/02/2019 | [illegible] | 9:07 | 00240 kwh | 20:00 | 00,250 kwh | 15,14,13 |
| [illegible] | [illegible] | – | – kwh | – | – kwh | |
| 01/03/2019 | [illegible] | 6:30 | 00,250 kwh | 19:00 | 00,260 kwh | 13,12,11 |
| ສຸກ | [illegible] | – | – kwh | – | – kwh | – |
| 02/03/2019 | [illegible] | – | – kwh | – | – kwh | – |
| ເສົາ | [illegible] | 6:50 | 00,260 kwh | 16:00 | 00,270 kwh | 11,10,9 |
| 03/03/2019 | [illegible] | 7.00 | 00270 kwh | 12:00 | 00.275 kwh | 4,3,2 |
| ອາ | [illegible] | – | – kwh | – | – kwh | – |

ຟອມບັນທຶກຊົ່ວໂມງການເຮັດວຽກຂອງຈັກສູບນໍ້າ

*ຜູ້ຈັດຕັ້ງປະຕິບັດ: ສະມາຄົມນຳໃຊ້ນໍ້າ*

(Attachment: Recording format of pump working)

ຊື່ຂອງກຸ່ມຜູ້ໃຊ້ນ້ຳ (WUA) ( )

| ວັນທີ | | ເວລາຈັກສູບນ້ຳເລີ່ມທຳງານ(ສູບນ້ຳ) | | ເວລາຢຸດພັກການສູບນ້ຳຂອງຈັກ | | ໝາຍເຫດ (Irrigation area, secondary canal name) |
|---|---|---|---|---|---|---|
| | | | ມີເຕີ້ວັດໄຟຟ້າ | | ມີເຕີ້ວັດໄຟຟ້າ | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |
| | ຈັກສູບນ້ຳເບີ 1 | | kwh | | kwh | |
| | ຈັກສູບນ້ຳເບີ 2 | | kwh | | kwh | |

## (3) ວິເຄາະຂໍ້ມູນປະລິມານນ້ຳ ແລະ ເຜີຍແຜ່ ໃຫ້ກັບສະມາຄົມນຳໃຊ້ນ້ຳ

| |
|---|
| 1) ທຸກໆໂຄງການຊົນລະປະທານແມ່ນມີຄວາມຈຳເປັນທີ່ສຸດທີ່ຕ້ອງຮູ້ ແລະ ມີຂໍ້ມູນປະລິມານນ້ຳໄຫຼໃນຄອງເໝືອງເພື່ອເປັນຂໍ້ມູນໃນການວາງແຜນການຈັດການນ້ຳໃຫ້ທົ່ວເຖິງ ແລະ ມີປະສິດທິພາບ. |

(ຄຳອະທິບາຍ.)

ຫຼັງຈາກທີ່ໄດ້ຂໍ້ມູນບັນທຶກຊົ່ວໂມງການເຮັດວຽກຂອງຈັກສູບນ້ຳ ແລະ ຈຳນວນກຳລັງໄຟຟ້າຈາກນາຍຈັກ ແລະ ຂໍ້ມູນການວັດແທກຄວາມໄວນ້ຳໄຫຼໃນຄອງເໝືອງຈາກພະນັກງານເມືອງແລ້ວ ນຳເອົາຂໍ້ມູນມາ ຄິດໄລ່ປະລິມານນ້ຳ ແລະ ວິເຄາະໃຫ້ເຫັນຄວາມແຕກຕ່າງໃນການນຳໃຊ້ປະລິມານນ້ຳ ແລະ ນຳໃຊ້ກະແສໄຟຟ້າ ຂອງແຕ່ລະສາຍຄອງ ຫຼັງຈາກນັ້ນ , ນຳເອົາຜົນຂອງການວິເຄາະເຜີຍແຜ່ໃຫ້ຄະນະກຸ່ມ ແລະ ຫົວໜ້າສາຍຄອງນ້ຳທັງໝົດເພື່ອຄົ້ນຄວ້າ, ປຶກສາຫາລື ປັບປຸງແກ້ໄຂວິທີການເຮັດວຽກຂອງຫົວໜ້າສາຍນ້ຳ ຫຼຸດຜ່ອນຊົ່ວໂມງການເຮັດວຽກຂອງຈັກສູບນ້ຳ, ປະຢັດນ້ຳ ແລະ ຫຼຸດຜ່ອນການຈ່າຍຄ່າກະແສໄຟຟ້າ.

| Canal name ຊື່ສາຍນ້ຳ | Length ລວງຍາວ | | | Irrigation ຊົນລະປະທານ | | | | | | |
|---|---|---|---|---|---|---|---|---|---|---|
| | | (Concrete) ຄອງເໝືອງຊີເມັນ | (Earth) ຄອງເໝືອງດິນ | Days ຈຳນວນມື້ | Area ເນື້ອທີ່ | | Electric Consumption ການນຳໃຊ້ໄຟຟ້າ | | Water consumption ການນຳໃຊ້ນ້ຳ | |
| | | | | (1) | (2) | (2)/(1) | (4) | (4)/(2) | (5) | (5)/(2) |
| Yousawai ຍູສະໄຫວ | 650m | 400m | 250m | 6days | 48.0ha | 8.0ha/d | 23.0kwh | 0.5kwh/ha | 139,249m3 | 2,901m3/ha |
| Khaophone ຂາວພອນ | 2,100m | 400m | 1,700m | 5days | 32.0ha | 6.4ha/d | 19.7kwh | 0.6kwh/ha | 125,514m3 | 3,922m3/ha |
| Khambeng ຄຳແບ້ງ | 2,400m | 400m | 2,000m | 15days | 49.0ha | 3.3ha/d | 45.0kwh | 0.9kwh/ha | 351,929m3 | 7,182m3/ha |
| | | | | | | | △10%(4.5kwh) | | △10%(35,200m3) | |
| Pen ເປັງ | 3,100m | 400m | 2,700m | 10days | 36.0ha | 3.6ha/d | 32.5kwh | 0.9kwh/ha | 230,599m3 | 6,406m3/ha |
| | | | | 36days | 165.0ha | 4.6ha/d | 120.2kwh | 0.7kwh/ha | 847,291m3 | 5,135m3/ha |

ຕາຕະລາງ ວິເຄາະການນຳໃຊ້ປະລິມານນ້ຳ ແລະ ກຳລັງໄຟຟ້າ



ກອງປະຊຸມເຜີຍແຜ່ຜົນການວິເຄາະປະລິມານນ້ຳ ແລະ ພະລັງງານໄຟຟ້າ

*ຜູ້ຈັດຕັ້ງປະຕິບັດ, ພະນັກງານຊົນລະປະທານເມືອງ*

### 3 ການປັບປຸງທາງດ້ານ ບັນຊີ-ການເງິນ ຂອງສະມາຄົມ

#### (1) ດຳເນີນຕິດຕາມ ການບັນທຶກ ບັນຊີ-ການເງິນຂອງກຸ່ມ

| |
|---|
| 1) ພະນັກງານເມືອງ ຕ້ອງດຳເນີນການຕິດຕາມ ບັນຊີ ແລະ ມີການກວດກາ ເປັນປະຈຳ |

(ຄຳອະທິບາຍ.)

ລະບົບບັນຊີ-ການເງິນຂອງກຸ່ມແມ່ນມີຄວາມສຳຄັນຫຼາຍຕໍ່ກັບວຽກງານການບໍລິຫານຈັດການລະບົບຊົນລະປະທານໃຫ້ສາມາດນຳໃຊ້ໄດ້ຍາວນານ ຄະນະສະມາຄົມຜູ້ນຳໃຊ້ນ້ຳຕ້ອງມີລະບົບບັນຊີທີ່ລະອຽດຈະແຈ້ງ ແລະ ມີແຜນການນຳໃຊ້ງົບປະມານ ເຂົ້າໃນການບຳລຸງຮັກສາທີ່ຊັດເຈນ.

ກໍລະນີ 01: ໂຄງການຊົນລະປະທານ ບ້ານເວີນ-ຕົ້ນແຫນ .

ຄະນະສະມາຄົມໃຊ້ນ້ຳຕ້ອງໄດ້ສຳຫຼວດກວດກາເບິ່ງສະພາບຂອງລະບົບຫົວງານ ແລະ ຄອງເໝືອງໃນປະຈຸບັນເພື່ອວາງແຜນສ້ອມແປງໃຫ້ຢູ່ໃນສະພາບກຽມພ້ອມໃຊ້ງານຢູ່ສະເໝີ ລະບົບຊົນລະປະທານເມື່ອມີການໃຊ້ງານຕ້ອງມີການລຸ່ຍຫ້ຽນ ສະນັ້ນ, ຄະນະສະມາຄົມຜູ້ໃຊ້ນ້ຳຕ້ອງມີການເງິນທີ່ໝັ້ນຄົງ, ມີບັນຊີລາຍຮັບລາຍຈ່າຍທີ່ໂປ່ງໃສ, ມີບັນຊີເງິນຝາກເພື່ອແຮ່ເງິນໄວ້ສ້ອມແປງໃນອານາຄົດ ນອກຈາກນັ້ນຄະນະກຸ່ມຕ້ອງໄດ້ສ້າງແຜນບຳລຸງຮັກສາ, ແຜນສ້ອມແປງລະບົບຊົນລະປະທານໃນໄລຍະຍາວ ແລະ ແຜນນຳໃຊ້ງົບປະມານເຂົ້າໃນການສ້ອມແປງທີ່ຊັດເຈນ ຄະນະກຸ່ມນຳໃຊ້ນ້ຳຕ້ອງມີປຶ້ມບັນທຶກດ້ານບັນຊີ-ການເງິນຂອງກຸ່ມດັ່ງນີ້:

1. ປຶ້ມແຜນການເກັບເງິນຄ່າບໍລິການຊົນລະປະທານຂອງແຕ່ລະສາຍນ້ຳ.
2. ປຶ້ມບັນທຶກຕິດຕາມການມອບເງິນເຂົ້າຄັງຂອງແຕ່ລະສາຍນ້ຳ.
3. ປຶ້ມບັນທຶກລາຍຮັບ-ລາຍຈ່າຍທັງໝົດ.
4. ປຶ້ມບັນທຶກໜີ້ຕ້ອງຮັບ-ໜີ້ຕ້ອງຈ່າຍ.
5. ປຶ້ມຕິດຕາມບັນຊີເງິນຝາກ.
6. ເຮັດຕາຕະລາງການສ້ອມແປງໄລຍະຍາວ.

*ຜູ້ຈັດຕັ້ງປະຕິບັດ: ກປມ ແລະ ສະມາຄົມນຳໃຊ້ນ້ຳ*



ປຶ້ມບັນທຶກຕິດຕາມການມອບເງິນເຂົ້າຄັງຂອງແຕ່ລະສາຍນ້ຳ



ປຶ້ມບັນທຶກສະຫຼຸບລາຍຮັບ-ລາຍຈ່າຍທັງໝົດ



ປຶ້ມຕິດຕາມລາຍຮັບ-ລາຍຈ່າຍປະຈຳເດືອນ



ປຶ້ມແຜນການເກັບເງິນຄ່າບໍລິການຊົນລະປະທານ ຂອງແຕ່ລະສາຍນໍ້າ



ປຶ້ມຕາຕະລາງສະຫຼຸບລາຍຮັບ-ລາຍຈ່າຍປະຈຳປີ

ກໍລະນີ 02 : ໂຄງການຊົນລະປະທານ ບ້ານເວີນ-ຕົ້ນແຫນ ແລະ ໂຄງການຊົນລະປະທານສົມສະອາດ I, ເມືອງໄຊບູລີ.

ຫຼັງຈາກຄະນະກຸ່ມນໍາໃຊ້ນໍ້າໄດ້ຮັບການຝຶກອົບຮົມທາງດ້ານບັນຊີການເງິນຂອງກຸ່ມຈາກໂຄງການ PAD ໃນເດືອນ 10(ຕຸລາ) ປີ 2018 ທາງຄະນະກຸ່ມຜູ້ນໍາໃຊ້ນໍ້າໂດຍສະເພາະແມ່ນຜູ້ຮັບຜິດຊອບວຽກງານບັນຊີທັງສອງໂຄງການກໍໄດ້ນໍາເອົາບົດຮຽນທີ່ໄດ້ຝຶກອົບຮົມມາໄປນໍາໃຊ້ໃນໂຄງການຂອງຕົນ ເພື່ອເຮັດໃຫ້ລະບົບບັນຊີ-ການເງິນຂອງກຸ່ມມີຄວາມຊັດເຈນສາມາດກວດກາໄດ້ຢ່າງງ່າຍດາຍ ນອກຈາກນັ້ນພະນັກງານຈາກຫ້ອງການກະສິກໍາ-ປ່າໄມ້ເມືອງກໍ່ໄດ້ລົງຊຸກຍູ້ຕິດຕາມກ່ຽວກັບການເກັບເງິນຄ່າບໍລິການຊົນລະປະທານ, ການເຮັດປຶ້ມບັນຊີລາຍຮັບ-ລາຍຈ່າຍຂອງຄະນະກຸ່ມນໍາໃຊ້ນໍ້າທັງສອງໂຄງການໃນທຸກໆເດືອນ.



ການຕິດຕາມບັນຊີ-ການເງິນຂອງກຸ່ມ



ການຕິດຕາມບັນຊີ-ການເງິນຂອງກຸ່ມ

*ຜູ້ຈັດຕັ້ງປະຕິບັດ: ກປມ ແລະ ສະມາຄົມນໍາໃຊ້ນໍ້າ*

## ບັນທຶກການ ເກັບຄ່ານ້ຳ

| ເລກທີ | ຊື່ຫົວໜ້າສາຍນ້ຳຄອງຂັ້ນສອງ | ຊື່ສະມາສິກ | 2017-2018 | | | | | | ໜີ້ເກົ່າ | ລວມໜີ້ທັງໝົດ |
|---|---|---|---|---|---|---|---|---|---|---|
| | | | ເນື້ອທີ່ຊົນລະປະທານ (ເຮັກຕາ) | ຄ່ານ້ຳ (ກີບ) | ຈ່າຍແລ້ວ | | | ຍັງເຫຼືອ (ກີບ) | (ກີບ) | (ກີບ) |
| | | | | | 1st(ກີບ) | 2nd(ກີບ) | 3rd(ກີບ) | | | |
| (ex.) 1 | ທ່ານ. ພູ ລຳແກ້ວ | ຕາກາຍສີ | 1.5 | 900.000 | 300.000 | | | 600.000 | 100.000 | 700.000 |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |

ປຶ້ມບັນທຶກລາຍລະອຽດຂອງສະມາຊິກ

## ແຜນການຟື້ນຟູ ແລະ ສ້ອມແປງລະບົບຊົນລະປະທານ ໄລຍະຍາວ

| ປີ | ລະບົບປໍ້າ | | | | | | | | ຄອງເໝືອງ | | | ລວມ (ກີບ) |
|---|---|---|---|---|---|---|---|---|---|---|---|---|
| | ປໍ້າ 1 | ປໍ້າ 2 | ມໍເຕີ້ 1 | ມໍເຕີ້ 2 | ຕູ້ຄວບຄຸມ ໄຟ 1 | ຕູ້ຄວບ ຄຸມໄຟ 2 | ສາຍໄຟ | ທໍ່ | ຄອງເໝືອງແມ່ | | ປະຕູ ນໍ້າ | |
| | | | 135kw | 135kw | 135kw | 135kw | | | ເບື້ອງຊ້າຍ 3.700m (ຄອງຄອນກີດ) 300m (ຄອງດິນແດງ) 3.400m | ເບື້ອງຂວາ 3.000m (ຄອງຄອນກີດ) 850m (ຄອງດິນແດງ) 2.150m | 15 | |
| 2019 | | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (2000m) ດ້ວຍທຶນ GGP | | |
| | | | | | | | | | | 0 | | |
| | | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (150m) | | |
| | | | | | | | | | | 10.000.000 | | 10.000.000 |
| 2020 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2021 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2022 | ປໍ້າ ທີ່ບູລະນະໂດຍທາງລັດ | | ມໍເຕີ້ ທີ່ບູລະນະໂດຍທາງລັດ | | ຕູ້ຄວບຄຸມໄຟ ບູລະນະໂດຍທາງລັດ | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | 0 | | 0 | | 0 | | | | 20.000.000 | | | 20.000.000 |
| 2023 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2024 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2025 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2026 | | | | | | | ປ່ຽນສາຍໄຟ | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | 10,000,000 | | 20.000.000 | | | 20.000.000 |
| 2027 | | ປໍ້າ ທີ່ບູລະນະໂດຍທາງລັດ | | ມໍເຕີ ທີ່ບູລະນະໂດຍທາງລັດ | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | 0 | | 0 | | | | | 20.000.000 | | | 20.000.000 |
| 2028 | | | | | | | | | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | | 20.000.000 | | | 20.000.000 |
| 2029 | | | | | | | | ປ່ຽນທໍ່ | ບູລະນະ ຄອງດິນແດງ ດ້ວຍຄອນກີດ (330m) | | | |
| | | | | | | | | 20.000.000 | 20.000.000 | | | 40.000.000 |

## (2) ການເກັບຄ່າທຳນຽມການໃຊ້ນ້ຳ ຊົນລະປະທານ

> 1) ການເກັບເງິນຄ່າບໍລິການຊົນລະປະທານ ເປັນວຽກໜຶ່ງທີ່ສຳຄັນໃນການຄຸ້ມຄອງນຳໃຊ້ ແລະ ເພື່ອເປັນກອງທຶນໃນການບຳລຸງຮັກສາລະບົບຊົນລະປະທານໃຫ້ຍືນຍົງ.

(ຄຳອະທິບາຍ:)

ກໍລະນີ ສຶກສາ 01 : ໂຄງການຊົນລະປະທານ ແກ້ງກອກເໜືອ ເມືອງ ຈຳພອນ.

- ໄລຍະຜ່ານມາການເກັບເງິນຄ່າບໍລິການຊົນລະປະທານມີຄວາມຫຍຸ້ງຍາກ ແລະ ບໍ່ໄດ້ຕາມແຜນທີ່ກຳນົດໄວ້ ຈຶ່ງເຮັດໃຫ້ເປັນໜີ້ຄ່າກະແສໄຟຟ້າເປັນຈຳນວນຫຼວງຫຼາຍ.
- ຄະນະກຸ່ມ, ສະມາຊິກ, ອຳນາດການປົກຄອງຂັ້ນບ້ານ ແລະ ພະນັກງານເມືອງ ໄດ້ປຶກສາລືໃນການເກັບຄ່າບໍລິການນຳໃຊ້ນ້ຳ ຜ່ານການປຶກສາຫາລື ໄດ້ຕົກລົງເປັນເອກະພາບກັນ ໃນອັດຕາ **70.000** ກີບ/ຊົ່ວໂມງ ຜ່ານການຈັດຕັ້ງປະຕິບັດເກັບເງິນຄ່າບໍລິການຊົນລະປະທານເຫັນວ່າຍັງບໍ່ທັນໄດ້ 100%.
- ເມື່ອໂຄງການພັດທະນາກະສິກຳແບບມີສ່ວນຮ່ວມເຂົ້າມາໄດ້ນຳພາຄະນະກຸ່ມນຳໃຊ້ນ້ຳເປີດຝຶກອົບຮົມ, ແລກປ່ຽນບົດຮຽນນຳໂຄງການຊົນລະປະທານ ບ້ານເອີນ-ຕົ້ນແຫນ ດ້ານບັນຊີ-ການເງິນ ການຈັດຕັ້ງປະຕິບັດແມ່ນເຫັນວ່າປະຕິບັດໄດ້ 100%.
- ຄ່າກອງທຶນແມ່ນເກັບໃນອັດຕາ 400.000 ກີບ/ເຮັກຕາ/ລະດູການ ແຕ່ວ່າ: ເກັບເດືອນລະ 100.000ກີບ/ເຮັກຕາ ພາຍໃນ 04 ເດືອນ ຊ່ວງທຳການຜະລິດໃນລະດູແລ້ງ.
- ໃນການເກັບເງິນຄ່າບໍລິການຊົນລະປະທານວິທີແບບນີ້ເໝາະສົມກັບໂຄງການເນື້ອທີຂະໜາດນ້ອຍ (ກໍລະນີ ທີ່ 01: ໂຄງການຊົນລະປະທານ ແກ້ງກອກເໜືອ ມີເນື້ອທີ່ທົດ 42 ເຮັກຕາ).

❖ **ຂໍ້ດີ**

- ເກັບເງິນຄ່ານ້ຳໄດ້ 100%, ຄ່າກະແສໄຟຟ້າຫຼຸດລົງ, ການນຳໃຊ້ນ້ຳແມ່ນຫຼຸດລົງ ແລະ ການຈັດການນ້ຳແມ່ນ ມີປະສິດທິຜົນຫຼາຍຂຶ້ນ.
- ຊາວກະສິກອນ ໄດ້ປັບປຸງປະສິດທິຜົນໃນການໃຊ້ນ້ຳ ເພື່ອຫຼຸດຜ່ອນການຊື້ປີ້.

ການເກັບເງິນຄ່ານ້ຳຊົນລະປະທານ ໂດຍການຊື້ປີ້ ແມ່ນເລີ່ມຕົ້ນໃນລະດູການຜະລິດທີ່ຜ່ານມາ, ໂດຍຊາວກະສິກອນຕ້ອງມາຊື້ປີ້ເອົານ້ຳ ເປັນ ຊ.ມ, ຫຼັງຈາກໄດ້ປີ້ແລ້ວ ກໍ່ເອົາປີ້ດັ່ງກ່າວໄປໃຫ້ຜູ້ເປີດຈັກ, ເປີດນ້ຳຕາມກຳນົດເວລາທີ່ລະບຸໄວ້ໃນປີ້. ສະນັ້ນ ຈຶ່ງເປັນເຫດໃຫ້ ຜູ້ທີ່ຢູ່ທ້າຍຄອງຈຳເປັນຕ້ອງຊື້ປີ້ຫຼາຍກວ່າຜູ້ທີ່ຢູ່ເທິງຄອງ ເຊິ່ງບໍ່ຄ່ອຍຍຸດຕິທຳປານໃດ. ແຕ່...ກຸ່ມນຳໃຊ້ນ້ຳກໍ່ບໍ່ລະເລີຍ ແລະ ຊ່ວຍກັນຫາທາງອອກ ເພື່ອແກ້ໄຂ ສະຖານະການເຫຼົ່ານີ້ ໃນປີຕໍ່ໄປ.

ເຫັນວ່າ ພວກເຂົາໄດ້ແບ່ງອອກເປັນ 5 ກຸ່ມການສົ່ງນ້ຳ, ໃຫ້ແຕ່ລະກຸ່ມ ເກັບເງິນກັນ ແລ້ວຊື້ປີ້ ເອົານ້ຳບາດດຽວ ເຊິ່ງບໍ່ໄດ້ສົ່ງເປັນລາຍບຸກຄົນຄືເມື່ອກ່ອນ. ໃນລະຫວ່າງການຮັບນ້ຳ ສະມາຊິກຊາວນາພາຍໃນກຸ່ມແມ່ນຊ່ວຍກັນ ຍ່າງເລາະຕາມຄອງ, ອັດຕາມປະຕູນ້ຳຕ່າງໆ ເພື່ອບໍ່ໃຫ້ນ້ຳ ທີ່ຕົນເອງຊື້ ຮົ່ວໄຫຼອອກໄປທາງອື່ນ.

ກໍລະນີສຶກສາ 02: ໂຄງການຊົນລະປະທານ ບ້ານເອີນ-ຕົ້ນແຫນ ສົກປີ 2018-2019 ມີເນື້ອທີທົດທັງໝົດ 423 ເຮັກຕາ, ອັດຕາຄ່າບໍລິການຊົນລະປະທານ 730.000 ກີບ/ເຮັກຕາ.

- ການລົງທະບຽນຂອງສະມາຊິກຂອງຊາວນາ.
- ປະຊຸມວາງແຜນການຈັດການນ້ຳ.
- ວັດແທກເນື້ອທີ່ຮ່ວມກັນລະຫວ່າງຄະນະກຸ່ມ ແລະ ສະມາຊິກ.

- ຄິດໄລ່ອັດຕາການເກັບເງິນຄ່າບໍລິການຊົນລະປະທານ.
- ເປີດປະຊຸມ ແລະ ເຜີຍແຜ່ຕໍ່ສະມາຊິກຊາວນາທັງໝົດ.
- ເກັບເງິນຄ່າບໍລິການຊົນລະປະທານ ໃຫ້ສໍາເລັດພາຍໃນ 02 ເດືອນ, ຫຼັງຈາກເກັບກ່ຽວເຂົ້ານາແຊງແລ້ວ.
- ຄະນະກຸ່ມລາຍງານຜົນຂອງການເກັບເງິນຄ່າບໍລິການຊົນລະປະທານ 02 ຄັ້ງຕໍ່ເດືອນ ເພື່ອເປັນການປຶກສາຫາລືບັນຫາທີ່ຄ້າງຄາ ແລະ ມອບເງິນທີ່ເກັບໄດ້ໃຫ້ນາຍຄັງເງິນສົດເກັບໄວ້ ວາງແຜນເກັບເພື່ອໃຫ້ໄດ້ 100%.

**ໝາຍເຫດ:** ຕໍ່ກັບບັນຫາສະມາຊິກຜູ້ທີ່ຄ້າງຈ່າຍເງິນຄ່າບໍລິການຊົນລະປະທານ ທາງຄະນະສະມາຄົມນໍາໃຊ້ນໍ້າ ໄດ້ສົມທົບອໍານາດປົກຄອງບ້ານ ເຊີນຜູ້ກ່ຽວຂຶ້ນມາສຶກສາອົບຮົມ ເຮັດບົດບັນທຶກສັນຍາ ນັດໝາຍມື້ທີ່ຈະຈ່າຍ ຖ້າຮອດມື້ກໍານົດໝາຍຜູ້ກ່ຽວຍັງບໍ່ຈ່າຍ ແມ່ນຈະໄດ້ປັບໝາຍຕາມກົດລະບຽບທີ່ວາງໄວ້ ແລະ ໂອນໜີ້ດັ່ງກ່າວໄປບວກໃສ່ຄ່າບໍລິການຊົນລະປະທານໃນສົກປີຕໍ່ໄປ.



ກໍລະນີ ສຶກສາ 03: ການໂອນເງິນຄ່ານໍ້າຊົນລະປະທານ ໄປຍັງຄ່າໄຟເຮືອນ ຂອງໂຄງການ ນາໂສກ.

- ໂຄງການ ນາໂສກ ກໍ່ມີຊາວກະສິກອນ ບາງທ່ານ ທີ່ຄ້າງຈ່າຍເງິນຄ່ານໍ້າ ຊົນລະປະທານ.
  (ຄ່ານໍ້າຊົນລະປະທານມີ: ຄ່າບໍລິຫານ, ຄ່າກອງທຶນ ແລະ ຄ່າໄຟຟ້າ)
- ເພື່ອບໍ່ໃຫ້ໜີ້ຄ່າໄຟຂອງກຸ່ມເພີ່ມຂຶ້ນ, ກຸ່ມນໍາໃຊ້ນໍ້າ ຈຶ່ງໄດ້ໂອນໜີ້ຄ້າງຈ່າຍຂອງຊາວກະສິກອນ ໄປຍັງໄຟເຮືອນ.

(1) ກຸ່ມນໍາໃຊ້ນໍ້າ ໄດ້ເຜີຍແຜ່ກົດລະບຽບ ເມື່ອຊາວກະສິກອນມາລົງທະບຽນເອົານໍ້າຊົນລະປະທານ ເພື່ອໃຊ້ໃນການຜະລິດລະດູແລ້ງ.

<ກົດລະບຽບ>

ຖ້າຊາວກະສິກອນຄົນໃດບໍ່ຈ່າຍຄ່ານໍ້າໃຫ້ຄະນະກຸ່ມ, ແມ່ນຈະໄດ້ໂອນໜີ້ ທັງໝົດເຂົ້າເປັນໄຟເຮືອນຂອງບຸກຄົນດັ່ງກ່າວ.

(2) ຫຼັງຈາກສິ້ນສຸດ ລະດູການຜະລິດ, ຄະນະກຸ່ມ ຈະເລີ່ມເກັບເງິນຄ່ານໍ້າ ກັບຊາວກະສິກອນ ຜູ້ທີ່ມາລົງທະບຽນ, ຖ້າຜູ້ໃດບໍ່ຈ່າຍຄ່ານໍ້າໃຫ້ກັບກຸ່ມ, ແມ່ນກຸ່ມຈະເອົາລາຍຊື່ ແລະ ຈໍານວນ ທີ່ຄ້າງຈ່າຍ ໃຫ້ບໍລິສັດໄຟຟ້າ.

(3) ຫຼັງຈາກນັ້ນ ບໍລິສັດໄຟຟ້າກໍ່ໄດ້ ລວມມູນຄ່າ ເຂົ້າເປັນຄ່າໄຟເຮືອນ ແລະ ເກັບເອົານໍາ ຊາວກະສິກອນ.

(4) ສໍາຄັນທີ່ສຸດ ແມ່ນກຸ່ມນໍາໃຊ້ນໍ້າຕ້ອງເກັບຄ່າ ບໍລິຫານ ແລະ ກອງທຶນ ມາກ່ອນ, ທີ່ເຫຼືອຄ່ານໍ້າ ແມ່ນໂອນເຂົ້າ ເປັນຄ່າໄຟເຮືອນທີຫຼັງ ສໍາລັບຜູ້ທີ່ຄ້າງຈ່າຍ.

*ຜູ້ຈັດຕັ້ງປະຕິບັດ: ຄະນະສະມາຄົມນໍາໃຊ້ນໍ້າ ແລະ ພະນັກງານວິຊາການຊົນລະປະທານເມືອງ*

## 4 ປັງປຸງ ການບໍລິຫານ ຂອງສະມາຄົມ

### (1) ການຈັດກອງປະຊຸມ ແລະ ສ້າງແຜນກິດຈະກຳ

| |
|---|
| 1) ຄະນະສະມາຄົມຜູ້ນຳໃຊ້ນໍ້າ ຕ້ອງມີການປະຊຸມກັນປົກກະຕິ ເພື່ອການປຶກສາຫາລືສ່ອງແສງການເຮັດວຽກຂອງຄະນະກຸ່ມ, ແກ້ໄຂບັນຫາ, ປັບປຸງການຈັດຕັ້ງປະຕິບັດທີ່ຜ່ານມາ ແລະ ວາງແຜນຈັດຕັ້ງປະຕິບັດໃນຄັ້ງຕໍ່ໄປ. |

(ຄຳອະທິບາຍ)

**ຄຳອະທິບາຍ:** ການຈັດຕັ້ງປະຕິບັດ (ກໍລະນີໂຄງການຕົ້ນແຫນ)

ການຈັດກອງປະຊຸມສະມາຄົມຜູ້ນຳໃຊ້ນໍ້າແຕ່ລະຄັ້ງ ຕ້ອງມີອຳນາດການປົກຄອງບ້ານ, ຄະນະບໍລິຫານງານຂອງກຸ່ມທັງໝົດ ແລະ ພະນັກງານຂອງ(ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ)ເຂົ້າຮ່ວມປະຊຸມ, ການປະຊຸມຄະນະສະມາຄົມຜູ້ນຳໃຊ້ນໍ້າຈະຕ້ອງໄດ້ກຽມວາລະກອງປະຊຸມໃຫ້ຊັດເຈນເຊັ່ນ: ກຳນົດເວລາ, ສະຖານທີ່ປະຊຸມ, ຫົວຂໍ້ທີ່ຈະປະຊຸມປຶກສາຫາລືຮ່ວມກັນເພື່ອແຈ້ງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຊາບກ່ອນໃນການປະຊຸມຕ້ອງໄດ້ມີການລົງທະບຽນກ່ອນເຂົ້າຮ່ວມ ແລະ ມີການບັນທຶກກອງປະຊຸມຢ່າງລະອຽດ ເພື່ອເປັນບ່ອນອີງໃນການຈັດຕັ້ງກິດຈະກຳໃນຕໍ່ໜ້າ.

ເວົ້າລວມແລ້ວການຈັດກອງປະຊຸມປົກກະຕິຂອງຄະນະສະມາຄົມຜູ້ນຳໃຊ້ນໍ້າແມ່ນຈັດຂຶ້ນ 02 ຄັ້ງຕໍ່ເດືອນ ທຸກໆວັນທີ 15 ແລະ ວັນທີ 30, ຖ້າວ່າໃນກໍລະນີສຸກເສີນ ຄະນະກຸ່ມກໍ່ໄດ້ຈັດກອງປະຊຸມຢ່າງເລັ່ງດ່ວນເພື່ອແກ້ໄຂບັນຫາໄດ້ຢ່າງທັນການ, ການຈັດກອງປະຊຸມປຶກສາຫາລືສະຫຼຸບຜົນຂອງການຈັດຕັ້ງປະຕິບັດ ແລະ ວາງແຜນການຈັດຕັ້ງປະຕິບັດກິດຈະກຳໃນຕໍ່ໜ້າຂອງຄະນະສະມາຄົມນຳໃຊ້ນໍ້າ ແມ່ນມີຜົນດີຢ່າງຫຼວງຫຼາຍຕໍ່ກັບວຽກງານການບໍລິຫານຈັດການລະບົບຊົນລະປະທານ ແລະ ສາມາດແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໄດ້ຢ່າງທັນເວລາ.

ຕາຕະລາງການຈັດກອງປະຊຸມໃນແຕ່ລະໂຄງການ

| ລຳດັບ | ຊື່ໂຄງການ | ເວລາຈັດກອງປະຊຸມ | ໝາຍເຫດ |
|---|---|---|---|
| 01 | ເວີນ-ຕົ້ນແຫນ | 15 ແລະ 30 ທຸກໆເດືອນ | ໝົດປີ |
| 02 | ເຊສາລາລອງ | 15 ແລະ 30 ທຸກໆເດືອນ | ຊ່ວງເກັບເງິນຄ່າບໍລິການນໍ້າ |



ໃບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ




ກອງປະຊຸມຂອງສະມາຄົມຜູ້ນາໃຊ້ນ້າ

*ຜູ້ຈັດຕັ້ງປະຕິບັດ,ຄະນະກຸ່ມນຳໃຊ້, ພະນັກງານວິຊາການເມືອງ*

## (2) ການເລືອກຕັ້ງປະທານ ແລະ ສະມາຊິກຂອງ ສະມາຄົມ

1) ອີງຕາມກົດລະບຽບຂອງສະມາຄົມຜູ້ນຳໃຊ້ນ້ຳ ອາຍຸການຂອງຄະນະປະທານສະມາຄົມແມ່ນຂຶ້ນກັບອາຍຸການຂອງນາຍບ້ານ ຫຼື ບໍ່ເກີນ 04 ປີ ຖ້າຫາກວ່າຄະນະກຸ່ມບໍ່ສາມາດບໍລິຫານກຸ່ມໄດ້ຕ້ອງໄດ້ມີການເລືອກຕັ້ງກ່ອນກຳນົດໂດຍເຫັນດີເປັນເອກະພາບຂອງສະມາຊິກທັງໝົດ, ອຳນາດການປົກຄອງບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

(ຄຳອະທິບາຍ)

- **ຂັ້ນຕອນໃນການເລືອກຕັ້ງຄະນະບໍລິຫານກຸ່ມນຳໃຊ້ນ້ຳ:**

1. ເຮັດໃບສະເໜີ ຂອງບ້ານ ຫາຫ້ອງການກະສິກຳ - ປ່າໄມ້ເມືອງ, ໂດຍອຳນາດການປົກຄອງບ້ານ.
2. ແຕ່ງຕັ້ງຄະນະກຳມະການກະກຽມເລືອກຕັ້ງ ໂດຍຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
3. ທາບທາມເປົ້າໝາຍຄັ້ງທີ 1 ໂດຍອຳນາດການປົກຄອງບ້ານ.
4. ລົງທາບທາມເປົ້າໝາຍຄັ້ງທີ 2 ໂດຍອຳນາດການປົກຄອງບ້ານຮ່ວມກັບພະນັກງານກະສິກຳເມືອງເຮັດບົດບັນທຶກກອງປະຊຸມເພື່ອລາຍງານຂັ້ນເທິງ.
5. ພະນັກງານກະສິກຳ ແລະ ປ່າໄມ້ ຮ່ວມກັບອຳນາດການປົກຄອງບ້ານ ນຳພາສະມາຄົມຜູ້ນຳໃຊ້ນ້ຳເຮັດບົດສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາ.
6. ເຮັດໃບສະເໜີຫາທ່ານເຈົ້າເມືອງເພື່ອຂໍອະນຸມັດເປີດກອງປະຊຸມ ສະຫຼຸບຄັດເລືອກຄະນະສະມາຄົມຊຸດໃໝ່ໂດຍຫ້ອງ ການກະສິກຳ ແລະ ປ່າໄມ້ ເມືອງ.
7. ເປີດກອງປະຊຸມປຶກສາຫາລືແບ່ງຄວາມຮັບຜິດຊອບ ໃນການເປີດກອງປະຊຸມໂດຍຫ້ອງການກະສິກຳ, ອຳນາດການປົກຄອງບ້ານ ແລະ ຄະນະກະກຽມກອງປະຊຸມ.
8. ເປີດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດບັດຜ່ານມາ, ຜ່ານແຜນໃນຕໍ່ໜ້າ ແລະ ປ່ອນບັດເລືອກເອົາຄະນະສະມາຄົມຊຸດໃໝ່ ແລະ ເຮັດບົດບັນທຶກກອງປະຊຸມ ລາຍງານຂັ້ນເທິງ.
9. ສະເໜີເຈົ້າເມືອງອອກຂໍ້ຕົກລົງ.
10. ປະກາດຂໍ້ຕົກລົງຂອງທ່ານເຈົ້າເມືອງ ແລະ ມອບຮັບໜ້າທີ່ ເກົ່າ ແລະ ໃໝ່
11. ເປີດກອງປະຊຸມຝຶກອົບຮົມການຄຸ້ມຄອງ-ນຳໃຊ້ຊົນລະປະທານໃຫ້ແກ່ຄະນະສະມາຄົມຊຸດໃໝ່.



ການເຂົ້າຮ່ວມຂອງສະມາຊິກໃນການລົງຄະແນນສຽງ ປ່ອນບັດເລືອກຕັ້ງ



ຄະນະກຳມະການ ນັບຄະແນນສຽງ

*ຜູ້ຈັດຕັ້ງປະຕິບັດ,(ຫ້ອງການກະສິກຳ, ບ້ານ, ຄະນະສະມາຄົມ)*

## (3) ການແລກປ່ຽນລະຫວ່າງຊາວນາ ກັບຊາວນາ ເພື່ອກະຕຸ້ນແຮງຈູງໃຈຂອງກຸ່ມ

| |
|---|
| 1) ການຮຽນຮູ້ ແລະ ແລກປ່ຽນບົດຮຽນ ລະຫວ່າງກຸ່ມກັບກຸ່ມ ແມ່ນສຳຄັນຫຼາຍ. |
| 2) ການແບ່ງປັນສະພາບຂອງອົງກອນ ສາມາດມີຜົນຕໍ່ການເພີ່ມແຮງບັນດານໃຈຂອງກຸ່ມ. |

(ອະທິບາຍ)

ກຸ່ມຜູ້ນຳໃຊ້ນ້ຳ ແມ່ນໃສ່ໃຈຕໍ່ ອົງກອນ ແລະ ສະມາຊິກ ຂອງພວກເຂົາຢູ່ສະເໝີ. ແຕ່ບາງຄັ້ງກໍ່ຍາກ ທີ່ພວກເຂົາຈະປະເມີນຕົນເອງ ເພາະບໍ່ມີຂໍ້ມູນຂອງ ກຸ່ມຜູ້ນຳໃຊ້ນ້ຳໂຄງການອື່ນໆມາປຽບທຽບ ແລະ ເປັນບ່ອນອີງ.

ໂດຍທົ່ວໄປແລ້ວ, ກຸ່ມທີ່ຍັງບໍ່ເຂັ້ມແຂງ ແມ່ນເສຍໂອກາດ ໃນການຮຽນຮູ້ ແລະ ປັບປຸງ ອົງກອນຂອງພວກເຂົາ, ເພາະວ່າ ພວກເຂົາບໍ່ມີເປົ້າໝາຍໃນການວາງແຜນຈັດການ ວຽກງານ ແລະ ການເງິນອື່ນໆ. ດັ່ງນັ້ນ ພະນັກງານ ຂັ້ນແຂວງ, ຂັ້ນເມືອງ ຄວນຈັດທັດສະນະສຶກສາໃຫ້ພວກເຂົາໄດ້ໄປຮຽນຮູ້ການປະຕິບັດທີ່ດີ ແລະ ແລກປ່ຽນກັບກຸ່ມອື່ນໆ ເພື່ອນຳມາໝູນໃຊ້ໃນໂຄງການຂອງຕົນ.

(1) ທັດສະນະສຶກສາ

<ຈຸດດີ ແລະ ໝາກຜົນ ຂອງການຈັດທັດສະນະສຶກສາ>

- ເພື່ອຊີ້ແຈງ ຈຸດປະສົງ ແລະ ຫົວຂໍ້ທີ່ຕ້ອງການຮຽນຮູ້ ຢ່າງຊັດເຈນ ຈາກໂຄງການຕົວແບບ.
  * ກ່ອນການໄປທັດສະນະ ໂຄງການໃດໜຶ່ງ, ພະນັກງານຂັ້ນແຂວງ, ຂັ້ນເມືອງ ຕ້ອງຊີ້ແຈງ ຈຸດປະສົງ, ຫົວຂໍ້ທີ່ໄປຮຽນຮູ້ ແລະ ແລກປ່ຽນ, ລວມທັງຜູ້ເຂົ້າຮ່ວມ ໃຫ້ຊັດເຈນ, ຖ້າພະນັກງານບໍ່ມີການຊີແຈງຫຍັງ ມັນກໍ່ຄ້າຍຄືກັບໄປທ່ອງທ່ຽວເບິ່ງໂຄງການອື່ນໆເທົ່ານັ້ນ ໂດຍທີ່ວ່າ ກຸ່ມບໍ່ໄດ້ຮຽນຮູ້ຫຍັງເລີຍ.
- ເພື່ອທົບທວນຜົນຂອງການໄປທັດສະນະ ແລະ ຄວາມປະທັບໃຈໃຫ້ກັນແລະກັນຮູ້, ລວມທັງໃຫ້ພວກເຂົາເລືອກເອົາການປະຕິບັດທີ່ດີ ຂອງໂຄງການຕົວແບບ ເພື່ອນຳໄປໃຊ້ກັບໂຄງການຂອງຕົນ.

ກໍລະນີ ສຶກສາ 1: ໄປທັດສະນະສຶກສາ ຢູ່ໂຄງການ ລະຫານ້ຳ

- ທັດສະນະສຶກສານີ້ ແມ່ນຈັດຂຶ້ນເພື່ອປັບປຸງທາງດ້ານການເງິນຂອງກຸ່ມ.
- ກປຂ ແມ່ນສຸມໃສ່ການສ້າງຄວາມເຂັ້ມແຂງ ໃນການຮຽນຮູ້ ເຕັກນິກ ການເກັບເງິນຄ້າງຈ່າຍ.
- ທັດສະນະສຶກສາ ຄັ້ງນີ້, ຫຼັກໆ ແມ່ນປຶກສາຫາລື ແລະ ຫາທາງອອກໃນການເກັບເງິນຄ້າງຈ່າຍ ຈາກຊາວກະສິກອນ ທີ່ໂຄງການລະຫານ້ຳ, ແລະ ກຸ່ມທີ່ເຂົ້າຮ່ວມທັງໝົດ ໄດ້ແບ່ງປັນ ແລະ ເລົ່າເຖິງບັນຫາ ລວມທັງທາງອອກພາຍໃນໂຄງການຂອງຕົນ ໃຫ້ໂຄງການອື່ນໆໄດ້ຮູ້.



ກອງປະຊຸມ ປຶກສາຫາລື
(ແນະນຳກິດຈະກຳ ໂຄງການລະຫານ້ຳ)



ກອງປະຊຸມ ປຶກສາຫາລື
(ແລກປ່ຽນປະສົບການ ໂຄງການແກ້ງກອກເໜືອ)

ກໍລະນີ ສຶກສາ 2: ທັດສະນະສຶກສາ ຮຽນຮູ້ ການປະຕິບັດທີ່ດີ ຢູ່ແຂວງ ວຽງຈັນ.

- ທັດສະນະສຶກສານີ້ ແມ່ນສຸມໃສ່ການຮຽນຮູ້ ເລື່ອງ ການຈັດການນໍ້າ ແລະ ລະບົບຊົນລະປະທານ.
- ກ່ອນການທັດສະນະສຶກສາ, ກປຂ ໄດ້ໄປຢ້ຽມຍາມ, ສໍາພາດ ແລະ ເບິ່ງສະຖານທີ່ ລວມທັງຄວາມກະຕືລືລົ້ນ ຂອງກຸ່ມໃນໂຄງການ ທີ່ແຂວງວຽງຈັນ, ເພື່ອຈະໄດ້ຊີ້ແຈງວ່າ ແມ່ນຫຍັງ ແລະ ຈຸດໃດ, ສະຖານທີ່ໃດ ທີ່ກຸ່ມ ຂອງພວກເຮົາສາມາດຮຽນຮູ້ ແລະ ນໍາເອົາມາໝູນໃຊ້.



ການຢ້ຽມຍາມ ກ່ອນນໍາພາຊາວກະສິກອນ ມາແລກປ່ຽນບົດຮຽນ

- ກ່ອນເລີ່ມການທັດສະນະ, ກປຂ ໄດ້ອະທິບາຍເຖິງຈຸດປະສົງ ແລະ ຈຸດທີ່ຄວນຮຽນຮູ້ ໃຫ້ ກປມ ເພື່ອຈະໄດ້ ໃຫ້ພວກເຂົາຊ່ວຍໃນການຊຸກຍູ້ກຸ່ມໃນຂອງພວກເຂົາ.
- ທັດສະນະສຶກສາຄັ້ງນີ້, ຫຼັກໆແມ່ນ ປຶກສາຫາລືໃນກອງປະຊຸມ ເພື່ອແລກປ່ຽນບົດຮຽນ ແລະ ປະສົບການ ໃຫ້ກັນແລະກັນຮູ້.
- ໃນມື້ສຸດທ້າຍ ຂອງການທັດສະນະສຶກສາ, ຜູ້ເຂົ້າຮ່ວມທັງໝົດ ແມ່ນໄດ້ມີການປະຊຸມທົບທວນ ໂດຍ ພະນັກງານຂັ້ນເມືອງ ແລະ ກຸ່ມນໍາໃຊ້ນໍ້າ ຂຶ້ນມາລາຍງານ ແບ່ງປັນບົດຮຽນ ແລະ ສະຫຼຸບ ຜົນຂອງການມາ ທັດສະນະ, ລວມທັງບອກເຕັກນິກ ທີ່ຕົນຈະເອົາໄປນໍາໃຊ້.



ກອງປະຊຸມ ປຶກສາຫາລື



ທົບທວນ ແລະ ລາຍງານຜົນການທັດສະນະ

(2) ກອງປະຊຸມຮ່ວມ

- ກປຂ ເຫັນວ່າ ພະນັກງານເມືອງທັງໝົດ ແລະ ກຸ່ມທັງໝົດ ໄດ້ພົບກັນ ຈຶ່ງໄດ້ເປີດກອງປະຊຸມຮ່ວມ ເພື່ອໃຫ້ພວກເຂົາ ຂຶ້ນລາຍງານ, ເຜີຍແຜ່ ສະພາບການພາຍໃນໂຄງການຂອງຕົນໃຫ້ກັນຮູ້.
- ໃນກອງປະຊຸມນີ້ ແມ່ນກຸ່ມນຳໃຊ້ນ້ຳ ແຕ່ລະໂຄງການ ໄດ້ຂຶ້ນມາລາຍງານ ກ່ຽວກັບຜົນ ລາຍຮັບ, ລາຍຈ່າຍ, ແລະ ແຜນການຟື້ນຟູ ແລະ ບຳລຸງຮັກສາ ໄລຍະຍາວ ໃຫ້ກັນຮູ້.



ກປຂ ສົ່ງເສີມກຸ່ມໃນການຂຽນຂໍ້ມູນລາຍງານ



ລາຍງານ ການບັນຊີ



ສະຫຼຸບບັນຊີ



ແຜນບຳລຸງຮັກສາ 3 ປີ

*ຜູ້ຈັດຕັ້ງປະຕິບັດ,(ກປຂ, ກປມ)*

<ບົດລາຍງານໂຄງການ: ກຸ່ມໄດ້ມີການປ່ຽນແປງຫຍັງ?>

ໂຄງການໄດ້ຈັດຕັ້ງປະຕິບັດຫຼາຍໆກິດຈະກຳໃຫ້ກັບກຸ່ມນຳໃຊ້ນ້ຳ, ເຫັນວ່າ ກຸ່ມມີການປ່ຽນແປງໃນທາງທີ່ດີດັ່ງລຸ່ມນີ້:

(1) ໂຄງການ ໜອງບົວຫຼວງ (ທ່ານ. ອ່ອນ ຂຽນຂໍ້ມູນລົງ, XNB DAFO)

➢ ໄດ້ມີການປ່ຽນແປງ ຫຍັງແນ່?

- ກຸ່ມແມ່ນມີການບັນທຶກບັນຊີທີ່ລະອຽດຂຶ້ນ, ການວາງແຜນເກັບເງິນຄ່ານ້ຳ ແມ່ນໄວກວ່າທີ່ຜ່ານມາ, ການລົງວັດແທກເນື້ອທີ່ ແມ່ນເປັນໄປຕາມເວລາ ທີ່ກຳນົດໄວ້,
- ກຸ່ມມີຄວາມສາມັກຄີ ແລະ ຮ່ວມມືກັນຢ່າງດີໃນການເຮັດວຽກ.
- ກຸ່ມວາງລະບຽບໃນການສົ່ງນ້ຳ, ສ້າງຮອບວຽນການເອົານ້ຳ, ສະມາຊິກແຕ່ລະສາຍ ປະຕິບັດຕາມກົດລະບຽບ ແລະ ບໍ່ມີການລັກນ້ຳ ຄືປີທີ່ຜ່ານມາ.

➢ ພະນັກງານເມືອງ ໄດ້ລົງສົ່ງເສີມຫຍັງແນ່?

- ສົ່ງເສີມກຸ່ມດ້ານການເຮັດເອກະສານ
- ສົ່ງເສີມໃນການລົງວັດແທກເນື້ອທີ່
- ແນະນຳກຸ່ມໃນການບຳລຸງຮັກສາລະບົບຊົນລະປະທານ ແລະ ການປະຕິບັດຕາມກົດລະບຽບຢ່າງເຄັ່ງຄັດ
- ເປັນທີ່ປຶກສາ ແລະ ຊ່ວຍຫາທາງອອກ ເວລາກຸ່ມມີບັນຫາ

(2) ໂຄງການ ພະນົມໄຊ (ທ່ານ. ບຸນມີ ຂຽນຂໍ້ມູນລົງ: PLX DAFO)

➢ ໄດ້ມີການປ່ຽນແປງ ຫຍັງແນ່?

- ຄະນະກຸ່ມມີການຈັດການນ້ຳໄດ້ດີເຮັດໃຫ້ຄ່າກະແສໄຟຟ້າຫຼຸດລົງ
- ສະມະຊິກຊາວນາໄດ້ມີສ່ວນຮ່ວມໃນການສ້ອມແປງ ແລະ ບຳລຸງຮັກສາຄອງເໝືອງ.
- ຄະນະກຸ່ມໄດ້ນຳບົດຮຽນຈາກການຝຶກອົບຮົມເຂົ້າມານຳໃຊ້ໃນດ້ານ ການເງິນ, ການບັນຊີ ໃນການເກັບເງິນຄ່າບໍລິຫານຊົນລະປະທານ.

➢ ພະນັກງານເມືອງ ໄດ້ລົງສົ່ງເສີມຫຍັງແນ່?

- ໄດ້ລົງຈັດແບ່ງຈຸຮອບວຽນການເອົານ້ຳ
- ໄດ້ນຳພາຄະນະກຸ່ມພ້ອມດ້ວຍສະມະຊິກອອກແຮງງານລວມສ້ອມແປງຄອງເໝືອງຈຸດເປ່ເພ
- ຈັດປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານ ແລະ ວາງແຜນຈັດຕັ້ງປະຕິບັດໃນແຕ່ລະເດືອນ
- ໄດ້ລົງຕິດຕາມການເອົານ້ຳຂອງແຕ່ລະຈຸໃນແຕ່ລະວັນ
- ຄິດໄລ່ການເກັບເງິນບໍລິຫານຊົນລະປະທານໃຫ້ທາງຄະນະກຸ່ມຈັດຕັ້ງປະຕິບັດ.

## VII. ການຄັດເລືອກໂຄງການໃໝ່

### 1. ຂະບວນການ ໃນການຄັດເລືອກໂຄງການໃໝ່

> 1) ໂຄງການ ແມ່ນຕ້ອງຖືກຄັດເລືອກ ໂດຍຜູ້ທີ່ມີສ່ວນກ່ຽວຂ້ອງ.
> 2) ຂະບວນການໃນການຄັດເລືອກ ປະກອບດ້ວຍ ການລົງສຳຫຼວດຄັ້ງທີ 1st, ການຈັດກອງປະຊຸມຄົ້ນຄວ້າຫຼັງການສຳຫຼວດ, ການລົງສຳຫຼວດຄັ້ງທີ 2nd, ຈັດກອງປະຊຸມສະຫຼຸບ ແລະ ສ້າງຄວາມເຫັນດີ ເຫັນພ້ອມກັບ ຄະນະ PAPC.

(ອະທິບາຍ)

1) ໂຄງການ PAD ຮ່ວມຈັດຕັ້ງປະຕິບັດໂດຍຫຼາຍພາກສ່ວນ ເຊັ່ນ: PAFO, DPI, DOIC, DOF ແລະ DAFO, ແຕ່ PAFO, DPI ແລະ DOIC ແມ່ນເປັນຜູ້ຫຼັກໃນການຄັດເລືອກໂຄງການ ແລະ ປະເມີນໂຄງການ.

2) ຂະບວນການໃນການຄັດເລືອກ ແມ່ນມີ 6 ຂັ້ນຕອນ ດັ່ງລຸ່ມນີ້:

2-1) ຈັດກອງປະຊຸມເພື່ອກະກຽມການລົງສຳຫຼວດຄັ້ງທີ 1st

PAFO ແລະ DPI ເປັນຜູ້ລວບລວມ ແລະ ເກັບກຳຂໍ້ມູນ ຂອງໂຄງການທີ່ຖືກສະເໜີຊື່ ເຂົ້າຮ່ວມໃນການຄັດເລືອກ ເຊິ່ງໃນເບື້ອງຕົ້ນແມ່ນຍັງບໍ່ສາມາດຫາໂຄງການທີ່ຈະເຂົ້າມາຄັດເລືອກເທື່ອ ແຕ່ກໍ່ມີບາງຂະແໜງການ ທີ່ແນະນຳ ແລະ ສະເໜີຊື່ ໂຄງການເປົ້າໝາຍຕ່າງໆເຂົ້າມາ ເພື່ອປະກອບເຂົ້າໃນການຄັດເລືອກ.

PAFO ແລະ DPI ເປັນຜູ້ປະສານໃນການຈັດກອງປະຊຸມ ແລະ ສ້າງແຜນ ເພື່ອກະກຽມການລົງສຳຫຼວດຄັ້ງທີ 1st ຮ່ວມກັບ DOIC.

*(ຕໍ່ຈາກນີ້ ເອີ້ນວ່າ, "ທີມຄັດເລືອກໂຄງການ")*

2-2) ການລົງສຳຫຼວດຄັ້ງທີ 1st ສຳລັບໂຄງການທີ່ຖືກສະເໜີຊື່ເຂົ້າມາ

ການລົງສຳຫຼວດຄັ້ງທີ 1st ແມ່ນລົງໄປຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເພື່ອສຳພາດພະນັກງານ ແລະ ເກັບກຳຂໍ້ມູນຂອງໂຄງການທີ່ມີຊື່ເຂົ້າໃນການຄັດເລືອກ.

ນອກຈາກນີ້, ການສຳພາດ ພະນັກງານ ຍັງເປັນການເບິ່ງຄວາມກະຕືລືລົ້ນຂອງພວກເຂົາອີກດ້ວຍ.

2-3) ຈັດກອງປະຊຸມຄົ້ນຄວ້າຫຼັງການສຳຫຼວດ

ຫຼັງຈາກການສຳຫຼວດຄັ້ງທີ 1st, ທີມຄັດເລືອກແມ່ນໄດ້ຈັດກອງປະຊຸມເພື່ອປຶກສາຫາລື ແລະ ຄົ້ນຄວ້າຫຼັງການສຳຫຼວດ ເພື່ອຄັດເລືອກເອົາໂຄງການ ທີ່ຈະລົງສຳຫຼວດຄັ້ງທີ 2nd. ໃນກອງປະຊຸມນີ້ ແມ່ນທີມຄັດເລືອກໄດ້ປະເມີນຕາມຜົນຂອງການສຳພາດ ໃຫ້ເຫຼືອ 6-8 ໂຄງການ ເພື່ອກຽມການລົງສຳຫຼວດຄັ້ງທີ 2nd

2-4) ການສຳຫຼວດຄັ້ງທີ 2nd ແມ່ນເພື່ອທຳຄວາມເຂົ້າໃຈກັບສະຖານະການຕ່າງໆ ພາຍໃນໂຄງການ

ທີມຄັດເລືອກ ແມ່ນໄດ້ລົງໄປໂຄງການ ທີ່ຜ່ານການຄັດເລືອກ ຫຼັງການສຳຫຼວດຄັ້ງທີ 1st ເພື່ອເກັບກຳຂໍ້ມູນ ໂດຍການສຳພາດ ກຸ່ມຜູ້ນຳໃຊ້ນ້ຳ ແລະ ຊາວກະສິກອນ, ລວມທັງການລົງສຳຫຼວດ ພາກສະໜາມ.

ໃນການສຳຫຼວດຄັ້ງນີ້, ທີມຄັດເລືອກ ແມ່ນໄດ້ແບ່ງອອກເປັນ 3 ກຸ່ມ ໂດຍມີ: ກຸ່ມ ການກະສິກຳ, ການຕະຫຼາດ ແລະ ຊົນລະປະທານ ເພື່ອສຳພາດ ຊາວກະສິກອນ ແລະ ກຸ່ມນຳໃຊ້ນ້ຳ ຕາມແບບສອບຖາມ ທີ່ກະກຽມມາ.

2-5) ຈັດກອງປະຊຸມສະຫຼຸບ.

ທີມຄັດເລືອກ ແມ່ນໄດ້ຈັດກອງປະຊຸມ ເພື່ອສະຫຼຸບຂໍ້ມູນຈາກການສຳພາດ ແລະ ການລົງສັງເກດການພາກສະໜາມ, ແລະ ໄດ້ລົງຄະແນນຕາມຜົນການສຳຫຼວດ.

ຫຼັງຈາກໄດ້ໂຄງການໃໝ່ແລ້ວ, ພວກເຂົາກໍ່ໄດ້ເອົາໄປນຳສະເໜີໃນກອງປະຊຸມ PAPC.

2-6) ລາຍງານ ແລະ ສ້າງຄວາມເຫັນດີເຫັນພ້ອມ ກັບຄະນະ PAPC

ທີມຄັດເລືອກ ໄດ້ຈັດກອງປະຊຸມ ເພື່ອລາຍງານ ແລະ ສ້າງຄວາມເຫັນດີເຫັນພ້ອມ ກັບຄະນະ PAPC

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## 2 ລາຍລະອຽດຂອງກິດຈະກຳ ໃນແຕ່ລະຂະບວນການ

### (1) ຈັດກອງປະຊຸມເພື່ອກະກຽມການລົງສຳຫຼວດຄັ້ງທີ 1st

| |
|---|
| 1) PAFO ແລະ DPI ເປັນຜູ້ລວບລວມ ແລະ ເກັບກຳຂໍ້ມູນ ຂອງໂຄງການທີ່ຖືກສະເໜີຊື່ ເຂົ້າຮ່ວມໃນການຄັດເລືອກ<br>2) ທີມຄັດເລືອກ ຈັດກອງປະຊຸມເພື່ອເຜີຍແຜ່ຂໍ້ມູນ ແລະ ສ້າງແຜນ ການລົງສຳຫຼວດຄັ້ງທີ 1st |

(ອະທິບາຍ)

1) PAFO ແລະ DPI ເປັນຜູ້ກະກຽມແຜນກິດຈະກຳ ຄັດເລືອກໂຄງການໃໝ່.

ທຳອິດ, ແມ່ນພວກເຂົາໄດ້ກະກຽມລາຍຊື່ໂຄງການ ທີ່ເຂົ້າຮ່ວມ ໃຫ້ທີມຄັດເລືອກ.

*1 ລາຍຊື່ໂຄງການ: ລາຍຊື່ໂຄງການທີ່ຖືກສະເໜີທັງໝົດ ແມ່ນມາຈາກການສະເໜີຂອງ ຂະແໜງການ ທີ່ ກ່ຽວຂ້ອງ.

*2 ທີມຄັດເລືອກໂຄງການ: ແມ່ນເປັນຜູ້ຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ເຊັ່ນ: ພະນັກງານຈາກ PAFO, DPI ແລະ DOIC.

<ກໍລະນີ ສຶກສາ>

ໂຄງການ ແມ່ນໄດ້ເຮັດເປັນລາຍຊື່ ອອກມາຕາມການສະເໜີຂອງ ຂະແໜງການ ທີ່ກ່ຽວຂ້ອງ ດັ່ງລຸມນີ້: (8 ເມືອງ, 11 ໂຄງການ)

1. ເມືອງ ວິລະບູລີ (ໂຄງການ ນາເຕີ້)
2. ເມືອງ ພີນ (ໂຄງການ ຫ້ວຍສະຄວງ)
3. ເມືອງ ຈຳພອນ (ໂຄງການ ທວດ ແລະ ຄຳປາແໜ)
4. ເມືອງ ໄຊພູທອງ (ໂຄງການ ຝາຍນ້ຳລົ້ນ ແລະ ຂັນທະຈານ)
5. ເມືອງ ໄກສອນ (ໂຄງການ ຜັກຂະ)
6. ເມືອງ ໄຊບູລີ (ໂຄງການ ບຶງເຊ ແລະ ພູເຮືອຊາວາ)
7. ເມືອງ ຊົນນະບູລີ (ໂຄງການ ດົງບູນ)
8. ເມືອງ ສອງຄອນ (ໂຄງການ ດົງສະຫວ່າງ)

2) ກອງປະຊຸມ ທີມຄັດເລືອກໂຄງການ

ໃນກອງປະຊຸມນີ້ ແມ່ນຜູ້ຈັດຕັ້ງປະຕິບັດທັງໝົດໄດ້ປຶກສາຫາລື ແລະ ເຜີຍແຜ່ ກ່ຽວກັບແຜນ ແລະ ວາລະການລົງສຳຫຼວດ ຂອງໂຄງການທີ່ມີລາຍຊື່ເຂົ້າຮ່ວມໃນການຄັດເລືອກ.

< ແຜນການລົງສຳຫຼວດ ຄັ້ງທີ 1st >

ຜູ້ສຳຫຼວດ: PAFO (ຂະແໜງ ແຜນການ ແລະ ການເງິນ, ຂະແໜງ ຊົນລະປະທານ, ຂະແໜງ ກະສິກຳ ແລະ ຂະແໜງ ສົ່ງເສີມ)

DPI (ຂະແໜງ ຮ່ວມມືສາກົນ)

DOIC (ຂະແໜງ ສົ່ງເສີມ ຜະລິດຕະພັນ ແລະ ການຄ້າ)

| ມື້ | ໂຄງການ | ສະຖານທີ່ | ຈຸດປະສົງ | ຜູ້ເຂົ້າຮ່ວມ |
|---|---|---|---|---|
| ທີ 1st | | ຫ້ອງການ ປົກຄອງ ເມືອງ ໄຊພູທອງ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ຝາຍນ້ຳລົ້ນ ຂັນທະຈານ | ກປມ ໄຊພູທອງ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| | ຜັກຂະ | ກປມ ໄກສອນ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| ທີ 2nd | | ຫ້ອງການ ປົກຄອງ ເມືອງ ຈຳພອນ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ຄຳປາແຫ ທອດ | ກປມ ຈຳພອນ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| | | ຫ້ອງການ ປົກຄອງ ເມືອງ ຊົນນະບູລີ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ດົງບູນ | ກປມ ຊົນນະບູລີ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| ທີ 3rd | | ຫ້ອງການ ປົກຄອງ ເມືອງ ສອງຄອນ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ດົງສະຫວ່າງ | ກປມ ສອງຄອນ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| | | ຫ້ອງການ ປົກຄອງ ເມືອງ ໄຊບູລີ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ບຶງເຊ ພູເຮືອຊາວາ | ກປມ ໄຊບູລີ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| ທີ 4th | | ຫ້ອງການ ປົກຄອງ ເມືອງ ພີນ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ຫ້ວຍສະຄວງ | ກປມ ພີນ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |
| | | ຫ້ອງການ ປົກຄອງ ເມືອງ ວິລະບູລີ | ລາຍງານກ່ຽວກັບ ຈຸດປະສົງ ຂອງທີມ ຄັດເລືອກໂຄງການ | ຮອງເຈົ້າເມືອງ, ຫົວໜ້າ ກປມ, ທີມ ຄັດເລືອກໂຄງການ |
| | ນາເຕີ້ | ກປມ ວິລະບູລີ | ທີມສຳຫຼວດ ໄດ້ສຳພາດ ພະນັກງານ ເມືອງ ລວມທັງເກັບຂໍ້ມູນຂອງ ໂຄງການທີ່ມີລາຍຊື່ ຄັດເລືອກ | ຫົວໜ້າ ກປມ, ແຜນການເມືອງ, ກະສິກຳເມືອງ, ຊົນລະປະທານເມືອງ, ທີມຄັດເລືອກໂຄງການ |

- **ກ່ອນຈະເລີ່ມລົງມືຈັດຕັ້ງປະຕິບັດກິດຈະກຳຄັດເລືອກໂຄງການເປົ້າໝາຍໃໝ່ໄດ້ມີການກະກຽມໃນທີມງານເຊັ່ນ:**

a. ວາງແຜນການເຄື່ອນໄຫວ ( ກຳນົດເວລາ ) ລົງຈັດຕັ້ງປະຕິບັດການຄັດເລືອກໂຄງການ.
b. ຈັດຕັ້ງທີມງານໃນການລົງເຄື່ອນໄຫວ ສຳພາດ ແລະ ເກັບກຳຂໍ້ມູນ.
c. ປະຊຸມປຶກສາຫາລືກ່ອນລົງສະໜາມ ແລະ ແບ່ງຄວາມຮັບຜິດຊອບກັນລະອຽດ
d. ຮ່າງແຈ້ງການຫາຫ້ອງການກະສິກຳ ແລະ ປ່າໄມ້ເມືອງທີ່ກ່ຽວຂ້ອງ
e. ກະກຽມເນື້ອໃນເພື່ອສະເໜີຈຸດປະສົງຂອງໂຄງການໃຫ້ຂັ້ນເມືອງ ແລະ ກຸ່ມຊາວນາຮັບຮູ້ ກ່ຽວກັບກິດຈະກຳຂອງໂຄງການ.

- **ຫຼັງຈາກສຳເລັດການຈັດຕັ້ງປະຕິບັດການສຳຫຼວດແລ້ວໄດ້ມີການຄື:**

a. ກະກຽມເອກະສານລາຍງານຕໍ່ກອງປະຊຸມເພື່ອລາຍງານຜົນຂອງການຄັດເລືອກໂຄງການຕໍ່ຄະນະຊີ້ນຳໂຄງການຂັ້ນແຂວງ.
b. ສະເໜີອອກຂໍ້ຕົກລົງຈາກ ປະທານຄະນະຊີ້ນຳໂຄງການ ຂັ້ນແຂວງ ເພື່ອຮັບຮອງໂຄງການເປົ້າ ໝາຍໃໝ່.
c. ແຈ້ງການຫາເມືອງທີ່ຖືກຮັບຮອງ ເພື່ອແຕ່ງຕັ້ງຄະນະຊີ້ນຳ ແລະ ຜູ້ປະສານງານໂຄງການຂັ້ນເມືອງເພື່ອຈັດຕັ້ງປະຕິບັດໂຄງການ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## (2) ການລົງສຳຫຼວດ ຄັ້ງທີ 1st

<table><tr><td>1) ການລົງສຳຫຼວດຄັ້ງທີ 1st ແມ່ນໄປຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເພື່ອສຳພາດ ພະນັກງານ ແລະ ເກັບກຳຂໍ້ມູນຂອງໂຄງການທີ່ມີຊື່ເຂົ້າໃນການຄັດເລືອກ.<br>2) ທີມຄັດເລືອກບໍ່ພຽງແຕ່ສຳພາດພະນັກງານເມືອງເທົ່ານັ້ນ ແຕ່ຕ້ອງຮັບຟັງ ຄວາມຄວາມຄິດເຫັນ ແລະ ຄຳແນະນຳ ຂອງພວກເຂົາອີກດ້ວຍ.</td></tr></table>

(ອະທິບາຍ)

1) ການສຳຫຼວດຄັ້ງທີ 1st ແມ່ນເພື່ອທຳຄວາມເຂົ້າໃຈກ່ຽວກັບໂຄງການທີ່ມີລາຍຊື່ເຂົ້າຮ່ວມໃນການຄັດເລືອກ, ດັ່ງນັ້ນ ທີມຄັດເລືອກໂຄງການຈຶ່ງຈຳເປັນຕ້ອງໄປຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອສຳພາດ ພະນັກງານ.

ໃນການລົງສຳຫຼວດຄັ້ງນີ້ ແມ່ນທີມຄັດເລືອກ ໄດ້ຈັດກອງປະຊຸມເພື່ອສະເໜີ ຈຸດປະສົງ ແລະ ວາລະ ການລົງສຳຫຼວດ ກ່ອນການເລີ່ມສຳພາດ ພະນັກງານເມືອງ ແລະ ບຸກຄົນອື່ນໆ ທີ່ເຂົ້າຮ່ວມ.

ທີມຄັດເລືອກໂຄງການ ເກັບກຳຂໍ້ມູນ ດັ່ງຕໍ່ໄປນີ້:

(ຂໍ້ມູນທົ່ວໄປ)
- ຈຳນວນບ້ານໃນເຂດເປົ້າໝາຍ
- ຈຳນວນຊາວກະສິກອນ
- ຄວາມກະຕືລືລົ້ນຂອງຊາວກະສິກອນ
- ໄລຍະທາງຈາກ ກປມ ຫາ ໂຄງການ
- ໂຄງຮ່າງການຈັດຕັ້ງຂອງ ກປມ
- ໂຄງການຊ່ວຍເຫຼືອລ້າ ອື່ນໆ
- ດ້ານໄພທຳມະຊາດ
- ຄວາມກະຕືລືລົ້ນຂອງພະນັກງານ

(ດ້ານ ກະສິກຳ)
- ເນື້ອທີ່ການຜະລິດ (ນາປີ, ນາແຊງ)
- ການນຳໃຊ້ ປຸ໋ຍເຄມີ ແລະ ຢາປາບສັດຕູພືດ
- ສະມັດຕະພາບ (ນາປີ, ນາແຊງ)
- ແນວພັນເຂົ້າທີ່ໃຊ້
- ດ້ານເຕັກນິກການປູກເຂົ້າ
- ອື່ນໆ

(ດ້ານ ການຕະຫຼາດ)
- ສະນິດພືດຜັກ ທີ່ປູກ
- ກຸ່ມຜະລິດ ກະສິກຳ
- ອື່ນໆ
- ການປູກ ຜັກທີ່ຕະຫຼາດຕ້ອງການ
- ດ້ານລາຍຮັບ (ອື່ນໆ)

(ດ້ານ ຊົນລະປະທານ)
- ເນື້ອທີ່ຫົດ (ຕາມແຜນ ແລະ ເຮັດຕົວຈິງ)
- ລະບົບຊົນລະປະທານ
- ໜີ້ຄ່າກະແສໄຟຟ້າ
- ແຫຼ່ງນ້ຳ (ທີ່ໃຊ້ເປັນ ຊົນລະປະທານ)
- ກຸ່ມນຳໃຊ້ນ້ຳ
- ອື່ນໆ



ການສຳຫຼວດຄັ້ງທີ 1st ທີ່ ກປມ ໄກສອນ



ການສຳຫຼວດຄັ້ງທີ 1st ທີ່ ກປມ ຊົນນະບູລີ

2) ທີມຄັດເລືອກໂຄງການ ຖາມຂໍ້ຄິດເຫັນ ແລະ ຄຳແນະນຳກ່ຽວກັບໂຄງການອື່ນໆ ນຳພະນັກງານເມືອງ ເພາະຍັງມີໂຄງການອື່ນໆ ທີ່ເໝາະສົມ ທີ່ທີມຄັດເລືອກ ຄວນນຳໄປພິຈາລະນາ ຮ່ວມກັບໂຄງການທີ່ມີລາຍຊື່ ເພື່ອໃຊ້ໃນການສຳຫຼວດໃນຄັ້ງນີ້.

<ກໍລະນີສຶກສາ, ດ້ານຄຳແນະນຳ ຂອງພະນັກງານເມືອງ>

ການສຳຫຼວດແມ່ນວາງໄວ້ 10 ໂຄງການໃນເບື້ອງຕົ້ນ, ແຕ່ເວລາລົງໄປສຳພາດ ພະນັກງານເມືອງ ພວກເຂົາກໍ່ແນະນຳໂຄງການອື່ນໆ ເຂົ້າມາເພີ່ມ ແລະ ກໍ່ໄດ້ຕັດໂຄງການທີ່ມີລາຍຊື່ຖືກສຳຫຼວດ ເພື່ອປ່ຽນໂຄງການອື່ນເຂົ້າແທນ. ທີມຄັດເລືອກໂຄງການຈຶ່ງຮັບເອົາຄຳສະເໜີ ແລະ ລົງສຳພາດໂຄງການດັ່ງລຸ່ມນີ້:

- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ຈຳພອນ
  (ຕາມແຜນ ແມ່ນລົງໄປສຳຫຼວດ) : ໂຄງການ ຄຳປາແໜ ແລະ ທວດ
  (ກປມ ແນະນຳ) : ໂຄງການ ຄຳປາແໜ, ທວດ, ສະຄຶນ ແລະ ແກ້ງປູນ
- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ໄຊພູທອງ
  (ຕາມແຜນ ແມ່ນລົງໄປສຳຫຼວດ) : ໂຄງການ ຝາຍນ້ຳລົ້ນ ແລະ ຂັນທະຈານ
  (ກປມ ແນະນຳ) : ໂຄງການ ນ້ຳພຸ ແລະ ກຸດຕາປໍ
- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ໄຊບູລີ
  (ຕາມແຜນ ແມ່ນລົງໄປສຳຫຼວດ) : ໂຄງການ ບຶງເຊ ແລະ ພູເຮືອຊາວາ
  (ກປມ ແນະນຳ) : ໂຄງການ ບຶງເຊ ແລະ ນາຊຽງຄານ
- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ສອງຄອນ
  (ຕາມແຜນ ແມ່ນລົງໄປສຳຫຼວດ) : ໂຄງການ ດົງສະຫວ່າງ
  (ກປມ ແນະນຳ) : ໂຄງການ ນາໂສກ, ໜອງເດີ່ນ, ສີງທ່າ
- ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ພິນ
  (ຕາມແຜນ ແມ່ນລົງໄປສຳຫຼວດ) : ໂຄງການ ຫ້ວຍສະຄວງ
  (ກປມ ແນະນຳ) : ໂຄງການ ຫ້ວຍສະຄວງ ແລະ ຫ້ວຍໄກ້

<ນະໂຍບາຍ ໃນການຄັດເລືອກ >

ໂຄງການ PAD ແມ່ນຈັດຕັ້ງປະຕິບັດ 3 ກິດຈະກຳຫຼັກ ໄດ້ແກ່: ກິດຈະກຳ ຊົນລະປະທານ, ກະສິກຳ ແລະ ການຕະຫຼາດ. ຖ້າຫາກວ່າ ໂຄງການໃດບໍ່ສົນໃຈ ໃນການປະຕິບັດກິດຈະກຳທັງໝົດ ກໍ່ສາມາດເລືອກເອົາ 1 ໃນ 3 ກິດຈະກາທີ່ມີຢູ່ ເຊັ່ນ: ກິດຈະກຳ ກະສິກຳ ແລະ ການຕະຫຼາດ ຫຼື ກິດຈະກຳ ກະສິກຳ ແລະ ຊົນລະປະທານ ກໍ່ແລ້ວແຕ່ຄວາມເໝາະສົມ ເພາະທີມຄັດເລືອກ ໃຊ້ນະໂຍບາຍເຫຼົ່ານີ້ ໃນການຄັດເລືອກ.

- ຜ່ານການສຳພາດພະນັກງານເມືອງ ຂໍ້ມູນທີ່ໄດ້ມາມີ : ສະພາບລວມຂອງເມືອງ, ຈຸດພິເສດ ແລະ ທີ່ຕັ້ງ, ທ່າແຮງ, ການຕື່ນຕົວກະຕືລືລົ້ນ ແລະ ເປັນເຈົ້າການຂອງປະຊາຊົນຂອງບ້ານເປົ້າ.
- ຈຳນວນພະນັກງານຢູ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ? ອາສາສະໝັກຈັກທ່ານ? ເພື່ອຢາກຮູ້ວ່າມີພະນັກງານພຽງພໍທີ່ຈະຮ່ວມວຽກກັບແຕ່ລະທີມງານບໍ?
- ໄລຍະທາງຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງຫາບ້ານໂຄງການເປົ້າໝາຍໃໝ່?
- ບ້ານດັ່ງກ່າວເຄີຍມີໂຄງການຊ່ວຍເຫຼືອຫຍັງແດ່? ກວມຈັກບ້ານ?

  ຜ່ານການສຳພາດພະນັກງານເມືອງ: ເຫັນວ່າພະນັກງານຫ້ອງການກະສິກຳເມືອງເປົ້າໝາຍ ມີຄວາມສົນໃຈ ເມື່ອທີມງານໄດ້ມີການສະເໜີ ຈຸດປະສົງຂອງໂຄງການ ແລະ 3 ກິດຈະກຳຫຼັກໃຫ້ຮັບຊາບ ເພາະວ່າບັນດາກິດຈະດັ່ງກ່າວຍັງມີຄວາມຕ້ອງການຫລາຍໃນແຕ່ລະເມືອງ ເພື່ອການສົ່ງເສີມດ້ານວຽກງານກະສິກຳເຊັ່ນ: ວຽກຊຸກຍູ້ສົ່ງເສີມດ້ານເຕັກນິກກະສິກຳ ເຊິ່ງໄດ້ຍົກໃຫ້ເຫັນດ້ານສະມັດຕະພາບ ແລະ ຜົນໄດ້ຮັບຂອງເມືອງເປົ້າໝາຍເກົ່າໃຫ້ເຫັນ ແລະສະມັດຕະພາບເພີ່ມຂຶ້ນແທ້, ສາມາດສ້າງລາຍຮັບໃຫ້ຊາວນາແທ້, ແລະ ເລື່ອງນະໂຍບາຍການກູ້ຢືມແນວພັນເຂົ້າ ແລະ ປຸ໋ຍກໍ່ມີຄວາມສົນໃຈຫລາຍ, ສຳລັບວຽກງານຊຸກຍູ້ສົ່ງດ້ານກິດຈະກຳຊົນລະປະທານກໍ່ເຊັ່ນກັນມີຫລາຍໂຄງການທີ່ຂາດດ້ານການຈັດການກຸ່ມນຳໃຊ້ນຳ, ເຕັກນິກການຄຸ້ມຄອງບົວລະບັບຮັກສາຈັກສູບນ້ຳ ແລະ ຄອງເໝືອງຍັງຕ່ຳ ແລະ ວຽກງານການຕະຫຼາດກໍ່ມີຄວາມສົນໃຈຫລາຍ ເຊິ່ງຢູ່ເຂດໂຄງການຫ້ອຍສະຄວງ ເມືອງພີນ ບອກວ່າ: ປະຊາຊົນເຂດນີ້ສ່ວນໃຫຍ່ແມ່ນປູກຜັກຂາຍ ແຕ່ບໍ່ມີຕະຫຼາດ, ຢາກໃຫ້ຊ່ວຍເລື່ອງຕະຫຼາດຈຳໜ່າຍພືດຜັກເປັນຕົ້ນ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## (3) ຈັດກອງປະຊຸມເພື່ອຄັດເລືອກໂຄງການທີ່ໄດ້ເຂົ້າຮອບຫຼັງຈາກການລົງສຳຫຼວດ

1) ທີມຄັດເລືອກໂຄງການ ຈັດກອງປະຊຸມເພື່ອທົບທວນຜົນຂອງການລົງສຳຫຼວດຄັ້ງທີ 1st
2) ໃນກອງປະຊຸມນີ້ ແມ່ນຄັດເລືອກເອົາໂຄງການ ໂດຍອີງຕາມຂໍ້ມູນການລົງສຳຫຼວດທີ່ໄດ້ມາ ເພື່ອຜ່ານເຂົ້າຮອບຕໍ່ໄປ

(ອະທິບາຍ)

1) ທີມຄັດເລືອກໂຄງການ ຈັດກອງປະຊຸມຂຶ້ນເພື່ອເຜີຍແຜ່ຂໍ້ມູນຜົນການສຳຫຼວດໃຫ້ສະມາຊິກແຕ່ລະຄົນໄດ້ຮູ້ ແລະ ສະຫຼຸບອອກມາເປັນດັ່ງນີ້:

ຕາຕະລາງ: ຮູບແບບການສັງລວມຂໍ້ມູນ ຂອງແຕ່ລະໂຄງການ

| ເລກທີ | | | 1 |
|---|---|---|---|
| ເມືອງ | | | ໄຊພູທອງ |
| ໂຄງການ | | | ກຸດຕາປໍ |
| ຫົວຂໍ້ | ຄຳຖາມ | | |
| ຂໍ້ມູນທົ່ວໄປ | ຈຳນວນບ້ານ ໃນໂຄງການ | | 2 ບ້ານ |
| | ຈຳນວນຊາວກະສິກອນ | | ??? |
| | ຄວາມກະຕືລືລົ້ນ ຂອງຊາວກະສິກອນ | | ບໍ່ປານໃດ |
| | ໄລຍະທາງ ຈາກ ກປມ | | 12 km |
| | ໂຄງຮ່າງຈັດຕັ້ງ ກປມ | | ພະນັກງານຖາວອນ 22 ທ່ານ ຊົນລະປະທານ: 3 ທ່ານ, ກະສິກຳ: 3 ທ່ານ, ການຕະຫຼາດ: 0 ທ່ານ, ຮັບຜິດຊອບໜ້າວຽກອື່ນໆ: 16 ທ່ານ, *ອາສາສະໝັກ: 14 ທ່ານ. |
| | ໂຄງການຊ່ວຍເຫຼືອລ້າ | | ບໍ່ມີ |
| | ໄພທຳມະຊາດ | | ບໍ່ແມ່ນເຂດນ້ຳຖ້ວມ |
| | Others | | |
| ກະສິກຳ ການຕະຫຼາດ | ເນື້ອທີ່ການຜະລິດ | ປູກເຂົ້າ ນາປີ | 100 ເຮັກຕາ |
| | | ປູກຜັກ ຊ່ວງລະດູຝົນ | ປູກບໍລິໂພກພາຍໃນເຮືອນເທົ່ານັ້ນ |
| | | ປູກເຂົ້າ ນາແຊງ | 86ha |
| | | ປູກຜັກ ຊ່ວງລະດູແລ້ງ | ປູກບໍລິໂພກພາຍໃນເຮືອນເທົ່ານັ້ນ |
| | ແນວພັນ | ເຂົ້າ | ໂພງາມ ແລະ ອື່ນໆ |
| | | ຜັກ | - |
| | ຢາຂ້າແມງໄມ້ | | ບໍ່ໄດ້ໃຊ້ |
| | ປຸ໋ຍເຄມີ | | ໃຊ້ |
| | ຄວາມອາດສາມາດ | | |
| ກະສິກຳ | ການປູກເຂົ້າ | | ເຮັດນາດຳ |
| | ສະມັດຕະພາບ | ນາປີ | 4.2 ໂຕນ/ເຮັກຕາ |
| | | ນາແຊງ | 4.8 ໂຕນ/ເຮັກຕາ |
| ການຕະຫຼາດ | ປູກຜັກເພື່ອຂາຍໃນຕະຫຼາດ | | - |
| | | (ການຂົນສົ່ງ) | |
| | ກຸ່ມກະສິກຳ | | ??? |
| | ລາຍຮັບ ອື່ນໆ | | ເປັນກຳມະກອນກໍ່ສ້າງ, ຫາປາ, ລ້ຽງສັດ |
| ຊົນລະປະທານ | ເນື້ອທີ່ຫົດ | | ຫຼາຍກວ່າ 100 ເຮັກຕາ |
| | ຊັບພະຍາກອນນ້ຳ | | ອ່າງເກັບນ້ຳ (3,000,000 $m^3$) |
| | ລະບົບຊົນລະປະທານ (ຈັກສູບນ້ຳ) | | - |
| | ລະບົບຊົນລະປະທານ (ຄອງ) | | ຄອງແມ່ 525 m (ເປຕົງ) ຄອງຂັ້ນ 2nd ແລະ 3rd ຍາວ1,000m<br>* ກໍ່ສ້າງໃນປີ (1986) ບູລະນະ (ປີ 2019 ທຶນລັດທະບານ) |
| | ກຸ່ມນຳໃຊ້ນ້ຳ | | 112 ຄົວເຮືອນ (ສ້າງຕັ້ງຂຶ້ນໃນປີ 2019) |
| | ໜີ້ຄ່າກະແສໄຟຟ້າ | | |

ໃນການເອົາຂໍ້ມູນລົງໃສ່ໃນຕາຕະລາງ, ຖ້າມີຂໍ້ມູນໃດຍັງບໍ່ກະຈ່າງແຈ້ງ ທີມປະເມີນແມ່ນບໍ່ໄດ້ເອົາມາສົນທະນາ ແຕ່ເອົາຂໍ້ມູນທີ່ເກັບມາໄດ້ ສືບຕໍ່ກອງປະຊຸມ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

(ຜົນການສຳພາດໃນການລົງສຳຫຼວດຄັ້ງທີ 1st, ສັງລວມໂຄງການ ທີ 1-6)

| ລຳດັບ | | | 1 | 2 | 3 | 4 | 5 | 6 |
|---|---|---|---|---|---|---|---|---|
| ເມືອງ | | | ໄຊພູທອງ | ໄຊພູທອງ | ໄກສອນ | ຈຳພອນ | ຈຳພອນ | ຈຳພອນ |
| ໂຄງການ | | | ຖຸດຕາປໍ່ | ນ້ຳພຸ | ຜັກຂະ | ສະຄືນ | ແກ້ງປູນ | ຄຳປາແໜ |
| ຂໍ້ມູນທົ່ວໄປ | ຈຳນວນບ້ານ | | 2 ບ້ານ | 1 ບ້ານ | ??? | 3 ບ້ານ | 2 ບ້ານ | 1 ບ້ານ |
| ຂໍ້ມູນທົ່ວໄປ | ຈຳນວນ ສະມາຊິກ ຊາວກະສິກອນ | | 112 ຄອບຄົວ | 17 ຄອບຄົວ | 120 ຄອບຄົວ | | 100 ຄອບຄົວ | 28 ຄອບຄົວ |
| ຂໍ້ມູນທົ່ວໄປ | ຄວາມກະຕືລືລົ້ນ ຂອງຊາວກະສິກອນ | | ບໍ່ສູງ | ສູງ | ບໍ່ປານໃດ | ສູງ | ສູງ | ບໍ່ມີ |
| ຂໍ້ມູນທົ່ວໄປ | ໄລຍະທາງ ຈາກ DAFO | | 12km | 13km | 12 km | 24 km | 10 km | 12 km |
| ຂໍ້ມູນທົ່ວໄປ | ໂຄງສ້າງ ຂອງ DAFO | | ພະນັກງານ 22 ຄົນ ຍິງ 11 ພະນັກງານ ຊົນລະປະທານ: 3 ຄົນ<br>ພະນັກງານ ປູກຝັງ: 3 ຄົນ ພະນັກງານ ການຕະຫຼາດ : 0 ຄົນ<br>ອື່ນໆ : 16 *ພະນັກງານ ອາສາ : 14 | | | ພະນັກງານ 43 ຄົນ ຍິງ 18 ຊົນລະປະທານ: 3<br>ປູກຝັງ: 4 ການຕະຫຼາດ : 0<br>ອື່ນໆ: 36 *ພະນັກງານ ອາສາ: 17 | | |
| ຂໍ້ມູນທົ່ວໄປ | ໂຄງການ ຊ່ວຍເຫຼືອລ້າ | | ບໍ່ມີ | ບໍ່ມີ | ໂຄງການ ADB ຈະມາ (2020) | | | ເຮຍເກຍ ນ້ຳໂລມາຄຳ |
| ຂໍ້ມູນທົ່ວໄປ | ໄພທຳມະຊາດ | | ບໍ່ແມ່ນເຂດນ້ຳຖ້ວມ | ບໍ່ແມ່ນເຂດນ້ຳຖ້ວມ | | ເຂດນ້ຳຖ້ວມ | ເຂດນ້ຳຖ້ວມ | ບໍ່ມີ |
| ຂໍ້ມູນທົ່ວໄປ | ອື່ນໆ | | | | | ເຂດນ້ຳຖ້ວມ | | ບ້ານຂໍທານ |
| ປູກຝັງ,ຕະຫຼາດ | ເນື້ອທີ່ | ນາປີ (ເຂົ້າ) | 100 ເຮັກຕາ | 24 ເຮັກຕາ | 907 ເຮັກຕາ | 250 ເຮັກ | 150 ເຮັກຕາ | ??? |
| ປູກຝັງ,ຕະຫຼາດ | | ນາປີ (ຜັກ) | ປູກຜັກສວນຄົວ | 0 ເຮັກຕາ | - | ປູກຜັກສວນຄົວ | | ??? |
| ປູກຝັງ,ຕະຫຼາດ | | ນາແຊງ (ເຂົ້າ) | 86 ເຮັກຕາ | 12 ເຮັກຕາ | 100 ເຮັກຕາ | 150 ເຮັກ | 70 ເຮັກຕາ | ??? |
| ປູກຝັງ,ຕະຫຼາດ | | ນາແຊງ (ຜັກ) | ປູກຜັກສວນຄົວ | 50 ເຮັກຕາ | ??? | ສາລີ (5 ເຮັກຕາ, 20 ຄອບຄົວ), ອື່ນໆ | ສາລີ(1ເຮັກຕາ,10ຄອບຄົວ), ແລະ ອື່ນໆ | ??? |
| ປູກຝັງ,ຕະຫຼາດ | ແນວພັນ | ເຂົ້າ | ໂພນງາມ ແລະ ອື່ນໆ | ທ່າສະໂນ10 ແລະ ອື່ນໆ | ທ່າສະໂນ7, ທ່າດອກຄຳ8 | ທ່າດອກຄຳ 8, ທ່າສະໂນ 8 (ຊື້ແນວພັນໃໝ່ທຸກປີ) | ທ່າດອກຄຳ 8, ທ່າສະໂນ 8 (ຊື້ແນວພັນໃໝ່ທຸກປີ) | ທ່າດອກຄຳ 8, ທ່າສະໂນ 8 (ຊື້ແນວພັນໃໝ່ທຸກປີ) |
| ປູກຝັງ,ຕະຫຼາດ | | ຜັກ | - | ກະລ່ຳດອກ, ສາລີຫວານ, ຖົ່ວດິນ,<br>ແລະ ອື່ນໆ | ຜັກບົ່ວໃບ, ຜັກບົ່ວໃຫ່ຍ, ຜັກເສີມ, ແລະ ອື່ນໆ | ສາລີ, ຖົ່ວຍາວ, ຖົ່ວດິນ | ສາລີ, ຖົ່ວດິນ | ຜັກບົ່ວ, ຜັກບົ້ງ, ໝາກເຂືອ |
| ປູກຝັງ,ຕະຫຼາດ | ຢາຂ້າແມງໄມ້ | | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | ໃຊ້ | ໃຊ້ | ໃຊ້ |
| ປູກຝັງ,ຕະຫຼາດ | ປຸ່ຍເຄມີ | | ໃຊ້ | ໃຊ້ | ໃຊ້ | | | ໃຊ້ |
| ປູກຝັງ,ຕະຫຼາດ | ການສ້າງຄວາມເຂັ້ມແຂງ | | | | | ພະນັກງານເມືອງ ລົງໄປຕິດຕາມວຽກປູກຝັງ | ພະນັກງານເມືອງ ລົງໄປຕິດຕາມວຽກປູກຝັງ | ຈາກເຮຍເກຍ ເຈົ້າຂອງນ້ຳ ໂລມາຄຳ |
| ປູກຝັງ | ການປູກເຂົ້າ | | ນາດຳ | ນາດຳ | | ນາດຳ | ນາດຳ | ຢອດ |
| ປູກຝັງ | ສະມັດຕະພາບ | ນາປີ | 4.2 ໂຕນ/ເຮັກຕາ | 3.5 ໂຕນ/ເຮັກຕາ | 4.2 ໂຕນ/ເຮັກຕາ | | | ??? |
| ປູກຝັງ | | ນາແຊງ | 4.8 ໂຕນ/ເຮັກຕາ | - | - | | | ??? |
| ການຕະຫຼາດ | ຜັກສິ່ງຂາຍໃນຕະຫຼາດ | | - | ສາລີຫວານ : ພໍ່ຄ້າຄົນກາງ<br>(ມາຮັບຊື້) | ຕະຫຼາດທົ່ວໄປ | ຂາຍສາລີ: ສົ່ງຕະຫຼາດ (21 ຫຼັກ) | ຂາຍສາລີ: ສົ່ງຕະຫຼາດ (6 ຫຼັກ) | ໂຮງງານນ້ຳ ປາໂລມາຄຳ ຮັບຊື້ |
| ການຕະຫຼາດ | | | | ອື່ນໆ : ມີຕະຫຼາດຢູ່ໃນບ້ານ ແລະ<br>(ຕະຫຼາດມ່ວງໄຂ່ 3km ຫຼັກ ຈາກນ້ຳພຸ) | | ຜັກອື່ນໆ: ຂາຍຕາມບ້ານ | | |
| ການຕະຫຼາດ | | | | | | | | |
| ການຕະຫຼາດ | | (ການຂົນສົ່ງ) | | | ລົດຈັກ, ລົດໄຖ | ລົດຈັກ, ລົດໄຖ, ຮຸ່ນໄດ | ລົດຈັກ | ໂຮງງານນ້ຳ ປາໂລມາຄຳ ຮັບຊື້ |
| ການຕະຫຼາດ | ກຸ່ມປູກເຂົ້າ | | ??? | ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ | ມີ |
| ການຕະຫຼາດ | ລາຍຮັບຈາກແຫຼ່ງອື່ນ | | ກຳມະກອນກໍ່ສ້າງ, ຫາປາ, ຂາຍສັດລ້ຽງ | ກຳມະກອນກໍ່ສ້າງ, ຫາປາ, ຂາຍສັດລ້ຽງ | | ໄປເຮັດວຽກຢູ່ໄທ, ຫາປາ | ໄປເຮັດວຽກຢູ່ໄທ, ຫາປາ | ໄປເຮັດວຽກຢູ່ໄທ, ຫາປາ |
| ຊົນລະປະທານ | ເນື້ອທີ່ ຊົນລະປະທານ | | ຫຼາຍກວ່າ 100 ເຮັກຕາ | ຫຼາຍກວ່າ 12ha | 350 ເຮັກຕາ | 250 ເຮັກຕາ(ແຜນ), 150 ເຮັກຕາ(ເຮັດຕົວຈິງ) | 150 ເຮັກຕາ(ແຜນ), 70 ເຮັກຕາ(ເຮັດຕົວຈິງ) | ບໍ່ມີຊົນລະປະທານ |
| ຊົນລະປະທານ | ຊັບພະຍາກອນນ້ຳ | | ອ່າງເກັບນ້ຳ ທຳມະຊາດ (3,000,000m3) | ອ່າງເກັບນ້ຳ ປະດິດ (1,200,000m3) | ແມ່ນ້ຳ | ສຸຍ | ແມ່ນ້ຳ | ບໍ່ມີຊົນລະປະທານ |
| ຊົນລະປະທານ | ລະບົບຊົນລະປະທານ | ປ້ຳ | - | - | 90kwh*2 (ປ້ຳແພ, ຕິດຕັ້ງປີ 1993) | 75kwh, 37kwh | 75kwh*2 | ບໍ່ມີຊົນລະປະທານ |
| ຊົນລະປະທານ | | ຄອງ | ຄອງແມ່ 525 m (ເປຕົງ)<br>ຄອງຂັ້ນ 2nd,3rd 1,000 m<br>* ກໍ່ສ້າງ (1986)<br>ຖືກປັບປຸງ (2019, ລັດທະບານ) | ບໍ່ມີຄອງ | ຄອງແມ່ 950 m<br>ຄອງຂັ້ນ 2nd: 2000 m | ຄອງເປຕົງ<br>*ທະນາຄານໂລກ ສ້າງ 2017 | ຄອງແມ່ 500m (ເປຕົງ)<br>*ທະນາຄານໂລກ ສ້າງ 2017 | ບໍ່ມີຊົນລະປະທານ ແຕ່ມີແຜນເຮັດ |
| ຊົນລະປະທານ | ກຸ່ມຜູ້ນຳໃຊ້ນ້ຳ | | 112 ຄອບຄົວ (ສ້າງຕັ້ງປີ 2019) | 11 ຄອບຄົວ (ສ້າງຕັ້ງປີ 2019) | ມີການສ້າງໄດ້ | | | ບໍ່ມີຊົນລະປະທານ |
| ຊົນລະປະທານ | ໜີ້ຄ່າກະແສໄຟຟ້າ | | | | | | | |

(ຜົນການສຳພາດໃນການລົງສຳຫຼວດຄັ້ງທີ 1st, ສັງລວມໂຄງການ ທີ 7-11)

| ລຳດັບ | | | 7 | 8 | 9 | 10 | 11 |
|---|---|---|---|---|---|---|---|
| ເມືອງ | | | ຈຳພອນ | ຊົນນະບູລີ | ສອງຄອນ | ສອງຄອນ | ສອງຄອນ |
| ໂຄງການ | | | ທວດ | ໜອງບົວລາວ | ສີງທ່າ | ສອງຄອນ | ໜອງເດີ່ນ |
| ຂໍ້ມູນທົ່ວໄປ | ຈຳນວນບ້ານ | | 8 ບ້ານ | 1 ບ້ານ | 1 ບ້ານ | 1 ບ້ານ | 1 ບ້ານ |
| ຂໍ້ມູນທົ່ວໄປ | ຈຳນວນ ສະມາຊິກ ຊາວກະສິກອນ | | | ??? | 160 ຄອບຄົວ | 205 ຄອບຄົວ | 180 ຄອບຄົວ |
| ຂໍ້ມູນທົ່ວໄປ | ຄວາມກະຕືລືລົ້ນ ຂອງຊາວກະສິກອນ | | ມີຄວາມກະຕືລືລົ້ນ | ສູງ | ທຳມະດາ | ທຳມະດາ | ທຳມະດາ |
| ຂໍ້ມູນທົ່ວໄປ | ໄລຍະທາງ ຈາກ DAFO | | 24 km | 30km | 15km | 15km | 17km |
| ຂໍ້ມູນທົ່ວໄປ | ໂຄງສ້າງ ຂອງ DAFO | | ພະນັກງານ 43 ຄົນ ຍິງ 18 ຊົນລະປະທານ: 3<br>ປູກຝັງ: 4 ການຕະຫຼາດ : 0<br>ອື່ນໆ: 36 *ພະນັກງານ ອາສາ: 17 | | ພະນັກງານ 59 ຄົນ ຊົນລະປະທານ: 5<br>ປູກຝັງ: 8 ການຕະຫຼາດ: 0<br>ອື່ນໆ : 46 *ພະນັກງານ ອາສາ : 8 | | |
| ຂໍ້ມູນທົ່ວໄປ | ໂຄງການ ຊ່ວຍເຫຼືອລ້າ | | ໂຄງການ ADB ກຳລັງດຳເນີນ ແລະ ມີການສອນ ເຕັກນິກ ການປູກ | ໂຄງການ ອິນເດຍ | ບໍ່ມີ | ບໍ່ມີ | ບໍ່ມີ |
| ຂໍ້ມູນທົ່ວໄປ | ໄພທຳມະຊາດ | | ເຂດນ້ຳຖ້ວມ | ບໍ່ແມ່ນເຂດນ້ຳຖ້ວມ | ເຂດນ້ຳຖ້ວມ (ເສຍຫາຍ 80%) | ເຂດນ້ຳຖ້ວມ (ເສຍຫາຍ 80%) | ເຂດນ້ຳຖ້ວມ (ເສຍຫາຍ 80%) |
| ຂໍ້ມູນທົ່ວໄປ | ອື່ນໆ | | | | ຕ້ອງການ ຄວາມຊ່ວຍເຫຼືອ ລຳດັບທີ 1st ສົ່ງເສີມການປູກເຂົ້ານາແຊງ | ຕ້ອງການ ຄວາມຊ່ວຍເຫຼືອ ລຳດັບທີ 2nd ສົ່ງເສີມການປູກເຂົ້ານາແຊງ | ຕ້ອງການ ຄວາມຊ່ວຍເຫຼືອ ລຳດັບທີ 3rd ສົ່ງເສີມການປູກເຂົ້ານາແຊງ |
| ປູກຝັງ,ຕະຫຼາດ | ເນື້ອທີ່ | ນາປີ (ເຂົ້າ) | 1000 ເຮັກ | ຫຼາຍກວ່າ 50 ເຮັກຕາ | ??? | ??? | ??? |
| ປູກຝັງ,ຕະຫຼາດ | | ນາປີ (ຜັກ) | ປູກຜັກຄົວເຮືອນ | ??? | ??? | ??? | ??? |
| ປູກຝັງ,ຕະຫຼາດ | | ນາແຊງ (ເຂົ້າ) | 500 ເຮັກຕາ | ??? | 58 ເຮັກຕາ | ??? | ??? |
| ປູກຝັງ,ຕະຫຼາດ | | ນາແຊງ (ຜັກ) | ??? | ??? | ??? | ??? | 0.5 ເຮັກຕາ/ຄອບຄົວ |
| ປູກຝັງ,ຕະຫຼາດ | ແນວພັນ | ເຂົ້າ | ທ່າດອກຄຳ 8, ທ່າສະໂນ 8 (ຊື້ແນວພັນໃໝ່ທຸກປີ) | ທ່າສະໂນ 8, ທ່າດອກຄຳ 8 (ບາງຄອບຄົວໃຊ້ແນວພັນເກົ່າ) | ທ່າດອກຄຳ8, ທ່າສະໂນ8, ທ່າສະໂນ9 | ທ່າດອກຄຳ8, ທ່າສະໂນ8, ທ່າສະໂນ9 | ທ່າດອກຄຳ8, ທ່າສະໂນ8, ທ່າສະໂນ9 |
| ປູກຝັງ,ຕະຫຼາດ | | ຜັກ | ໝາກໂມ, ໝາກຮຸ່ງ, ໝາກແຕງ | ສາລີ, ຖົ່ວຍາວ, ຜັກບົ່ວ, ມັນ (ຕາມແຄມເຊ) | ສາລີ, ໝາກເຂືອ, ໝາກເຜັດ, ໝາກແຕງ, ກ້ວຍ, ໝາກຮຸ່ງ, ຂີງ, ຄ່າ ແລະ ອື່ໆ | ສາລີ, ໝາກເຂືອ, ໝາກເຜັດ, ໝາກແຕງ, ກ້ວຍ, ໝາກຮຸ່ງ, ຂີງ, ຄ່າ ແລະ ອື່ໆ | ມັນຕົ້ນ, ສາລີ |
| ປູກຝັງ,ຕະຫຼາດ | ຢາຂ້າແມງໄມ້ | | ໃຊ້ | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ |
| ປູກຝັງ,ຕະຫຼາດ | ປຸ໋ຍເຄມີ | | ໃຊ້ | ໃຊ້ | ໃຊ້ | ໃຊ້ | ໃຊ້ |
| ປູກຝັງ,ຕະຫຼາດ | ການສ້າງຄວາມເຂັ້ມແຂງ | | ພະນັກງານເມືອງ ລົງໄປຕິດຕາມວຽກປູກຝັງ | | | ຝຶກອົບຮົມ ເລື່ອງ ກະສິກຳສະອາດ (1ມື້, 30 ຄົນເຂົ້າຮ່ວມ) | ພະນັກງານເມືອງ ລົງໄປຕິດຕາມວຽກປູກຝັງ |
| ປູກຝັງ | ການປູກເຂົ້າ | | ນາດຳ | ຫວ່ານ | ນາດຳ | ນາດຳ | ນາດຳ |
| ປູກຝັງ | ສະມັດຕະພາບ | ນາປີ | ??? | 3.5-3.7 ໂຕນ/ເຮັກຕາ | | | ??? |
| ປູກຝັງ | | ນາແຊງ | ??? | 5.3 ໂຕນ/ເຮັກຕາ | 5.1 ໂຕນ/ເຮັກຕາ (ສະເລ່ຍເອົາ 2 ຄອບຄົວ) | 4.5 ໂຕນ/ເຮັກຕາ | 4.75 ໂຕນ/ເຮັກຕາ |
| ການຕະຫຼາດ | ຜັກສິ່ງຂາຍໃນຕະຫຼາດ | | ຫ່າງຈາກຕະຫຼາດ 21 ຫຼັກ | ຫ່າງຈາກ ຕະຫຼາດ 37 ຫຼັກ | | | ມັນຕົ້ນ (ຂາຍໃຫ້ ບໍລິສັດສາຍໄຫມ) |
| ການຕະຫຼາດ | | | | | | | |
| ການຕະຫຼາດ | | | | | | | |
| ການຕະຫຼາດ | | (ການຂົນສົ່ງ) | ລົດຈັກ, ລົດໄຖ ແລະ ອື່ນໆ | | ລົດຫຸ້ມໄດ ແລະ ພາຫະນະ ອື່ນໆ | ລົດຫຸ້ມໄດ ແລະ ພາຫະນະ ອື່ນໆ | ລົດຫຸ້ມໄດ ແລະ ພາຫະນະ ອື່ນໆ |
| ການຕະຫຼາດ | ກຸ່ມປູກເຂົ້າ | | ບໍ່ມີ | | ບໍ່ມີ | ບໍ່ມີ | ບໍ່ມີ |
| ການຕະຫຼາດ | ລາຍຮັບຈາກແຫຼ່ງອື່ນ | | ໄປເຮັດວຽກຢູ່ໄທ, ຫາປາ | | ຂາຍສັດລ້ຽງ, ຫາປາ, ໄປເຮັດວຽກຢູ່ໄທ | ຂາຍສັດລ້ຽງ, ຫາປາ, ໄປເຮັດວຽກຢູ່ໄທ | ຂາຍສັດລ້ຽງ, ຫາປາ, ໄປເຮັດວຽກຢູ່ໄທ |
| ຊົນລະປະທານ | ເນື້ອທີ່ ຊົນລະປະທານ | | 1000 ເຮັກຕາ(ແຜນ), 500 ເຮັກຕາ(ເຮັດຕົວຈິງ) | 50 ເຮັກຕາ (ໃຊ້ງານ ແຕ່ 1 ປີ) | 120 ເຮັກຕາ(ແຜນ), 50 ເຮັກຕາ(ເຮັດຕົວຈິງ) | 120 ເຮັກຕາ(ແຜນ), 50-60ເຮັກຕາ(ເຮັດຕົວຈິງ) | 150 ເຮັກຕາ(ແຜນ), 120 ເຮັກຕາ(ເຮັດຕົວຈິງ) |
| ຊົນລະປະທານ | ຊັບພະຍາກອນນ້ຳ | | ອ່າງເກັບນ້ຳ (13,000,000m3) | River | ແມ່ນ້ຳ ເຊບັ້ງຫຽງ | ແມ່ນ້ຳ ເຊບັ້ງຫຽງ | ອ່າງເກັບນ້ຳ ທຳມະຊາດ |
| ຊົນລະປະທານ | ລະບົບຊົນລະປະທານ | ປ້ຳ | ເປີດປະຕູນ້ຳເອົາ | 75kwh*3 (ຕິດຕັ້ງ 2020 ໂຄງການອິນເດຍ) | 75kwh*2 (1998) | 75kwh*2 (1998) | 75kwh*2 (1998) |
| ຊົນລະປະທານ | | ຄອງ | ຄອງແມ່ 5000 m (ເປຕົງ)<br>ມີຄອງ ຂັ້ນ 2nd, 3rd | ຄອງແມ່ 150m (ຄອງດິນ) | ຄອງແມ່ 650m (ເປຕົງ)<br>ຄອງດິນ 460m | | |
| ຊົນລະປະທານ | ກຸ່ມຜູ້ນຳໃຊ້ນ້ຳ | | | ສ້າງຂຶ້ນ ປີ (2019) | | | |
| ຊົນລະປະທານ | ໜີ້ຄ່າກະແສໄຟຟ້າ | | | ບໍ່ມີ | 50,000,000 ກີບ | ??? | |

(ຜົນການສຳພາດໃນການລົງສຳຫຼວດຄັ້ງທີ 1st, ສັງລວມໂຄງການ ທີ 12-16)

| ລຳດັບ | | | 12 | 13 | 14 | 15 | 16 |
|---|---|---|---|---|---|---|---|
| ເມືອງ | | | ໄຊບູລີ | ໄຊບູລີ | ພີນ | ພີນ | ວິລະບູລີ |
| ໂຄງການ | | | ບຶງເຊ | ນາຊຽງຄານ | ຫ້ວຍສະຄວງ | ຫ້ວຍໃກ້ | ນາເຕີ້ |
| ຂໍ້ມູນທົ່ວໄປ | ຈຳນວນບ້ານ | | 4 ບ້ານ | 1 ບ້ານ | 7 ບ້ານ | ??? | 4 ບ້ານ |
| ຂໍ້ມູນທົ່ວໄປ | ຈຳນວນ ສະມາຊິກ ຊາວກະສິກອນ | | 252 ຄອບຄົວ | 100 ຄອບຄົວ | | ??? | 72 ຄອບຄົວ |
| ຂໍ້ມູນທົ່ວໄປ | ຄວາມກະຕືລືລົ້ນ ຂອງຊາວກະສິກອນ | | ສູງ | ບໍ່ໄດ້ລະບຸ | ບໍ່ຢາກເຮັດວຽກຮ່ວມ ກັບໂຄງການ ຖ້າບໍ່ໄດ້ຮັບຜົນປະໂຫຍດ | ບໍ່ຢາກເຮັດວຽກຮ່ວມ ກັບໂຄງການ ຖ້າບໍ່ໄດ້ຮັບຜົນປະໂຫຍດ | ສູງ |
| ຂໍ້ມູນທົ່ວໄປ | ໄລຍະທາງ ຈາກ DAFO | | 16km | 14km | 15km | 12km | |
| ຂໍ້ມູນທົ່ວໄປ | ໂຄງສ້າງ ຂອງ DAFO | | ກຸ່ມນຳໃຊ້ນ້ຳ ມີ 32 ກຸ່ມ ທີ່ສົ່ງເສີມໂດຍ ພະນັກງານ ຊົນລະປະທານ 3 ຄົນ ໃນນັ້ນມີໂຄງການ WB, ADB, India, JICA ກຳລັງຈັດຕັ້ງປະຕິບັດ ຢູ່ | | ພະນັກງານ 50 ຄົນ ຊົນລະປະທານ: 1<br>ປູກຝັງ: 4 ການຕະຫຼາດ: 0<br>ອື່ນໆ: 45 *ພະນັກງານ ອາສາ ຫຼາຍກວ່າ 3 ທ່ານ | | ພະນັກງານ 23 ຄົນ ຊົນລະປະທານ: 2<br>ປູກຝັງ: 6 ການຕະຫຼາດ: 0<br>ອື່ນໆ: 15 *ພະນັກງານອາສາ: 11 |
| ຂໍ້ມູນທົ່ວໄປ | ໂຄງການ ຊ່ວຍເຫຼືອລ້າ | | ADB | ບໍ່ມີ | ADB ຈະເຂົ້າມາໄວໆ ນີ້ | | SMB ການປະມົງ, ລ້ຽງສັດ ແລະ ສົ່ງເສີມການປູກ 2014.<br>ADB ເຂົ້າມາຝຶກອົບຮົມໃຫ້ກຸ່ມ |
| ຂໍ້ມູນທົ່ວໄປ | ໄພທຳມະຊາດ | | ເຂດນ້ຳຖ້ວມ | ເຂດນ້ຳຖ້ວມ | ບໍ່ແມ່ນເຂດນ້ຳຖ້ວມ | ບໍ່ແມ່ນເຂດນ້ຳຖ້ວມ | |
| ຂໍ້ມູນທົ່ວໄປ | ອື່ນໆ | | | | ລະບົບຊົນລະປະທານ ມີຄວາມຈຳເປັນໃນການສ້ອມແປງ ດ່ວນ<br>ແລະ ມີຫຼາຍໆໂຄງການ ເຮັດວຽກຮ່ວມກັບ DAFO, ຊາວກະສິກອນ. (ເຊັ່ນ UNDP, WV ແລະ ອື່ນໆ) | ລະບົບຊົນລະປະທານ ມີຄວາມຈຳເປັນໃນການສ້ອມແປງ ດ່ວນ<br>ແລະ ມີຫຼາຍໆໂຄງການ ເຮັດວຽກຮ່ວມກັບ DAFO, ຊາວກະສິກອນ. (ເຊັ່ນ UNDP, WV ແລະ ອື່ນໆ) | ຫ່າງຈາກ ເຊໂປນ 60km<br>ບໍ່ຄຳເຊໂປນໃຫ້ງົບປະມານ 300,000$/ປີ |
| ປູກຝັງ,ຕະຫຼາດ | ເນື້ອທີ່ | ນາປີ (ເຂົ້າ) | ??? | ??? | 200 ເຮັກຕາ | 1200 ເຮັກຕາ | ??? |
| ປູກຝັງ,ຕະຫຼາດ | | ນາປີ (ຜັກ) | ??? | ??? | | ??? | ??? |
| ປູກຝັງ,ຕະຫຼາດ | | ນາແຊງ (ເຂົ້າ) | ??? | ??? | 30 ເຮັກຕາ (ແຕ່ລະປີ ຈະລົດລົງເລື້ອຍໆ) | 500 ເຮັກຕາ | 105ha |
| ປູກຝັງ,ຕະຫຼາດ | | ນາແຊງ (ຜັກ) | ??? | ??? | 15 ເຮັກຕາ | ??? | 63ha |
| ປູກຝັງ,ຕະຫຼາດ | ແນວພັນ | ເຂົ້າ | ທ່າດອກຄຳ8 | ທ່າດອກຄຳ8 | ທ່າດອກຄຳ8, ທ່າດອກຄຳ11 | ທ່າດອກຄຳ8, ທ່າດອກຄຳ11 | ທ່າດອກຄຳ8, ທ່າສະໂນ8 |
| ປູກຝັງ,ຕະຫຼາດ | | ຜັກ | ໝາກເລັ່ນ (9 ຄອບຄົວ), ໝາກຟັກ, ຜັກບົ່ວ | ສາລີ (10 ຄອບຄົວ) 0.16 ເຮັກຕາ/ຄອບຄົວ | ໝາກໂມ, ສາລີ, ໝາກແຕງ, ໝາກຖົ່ວ, ໝາກເຜັດ | | ສາລີ, ໝາກໂມ, ກວງຕຸ້ງ (200kg), ຜັກບົ່ວ, ຫອມປ້ອມ, ກະລ່ຳ (400kg), ໝາກແຕງ (400kg) |
| ປູກຝັງ,ຕະຫຼາດ | ຢາຂ້າແມງໄມ້ | | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | ບໍ່ໄດ້ໃຊ້ | | |
| ປູກຝັງ,ຕະຫຼາດ | ປຸ໋ຍເຄມີ | | ໃຊ້ | ໃຊ້ | ໃຊ້ (16-20-0, 46-0-0) | ໃຊ້ (16-20-0, 46-0-0) | ໃຊ້ (16-20-0, 16-8-8, 46-0-0) |
| ປູກຝັງ,ຕະຫຼາດ | ການສ້າງຄວາມເຂັ້ມແຂງ | | DAFO ໄປຊ່ວຍໃນການເຮັດນ້ຳໝັກສະໝຸນໄພ | ພະນັກງານເມືອງນຳເອົາເຕັກນິກ ຂອງ ໂຄງການ Savan PAD ເຂົ້າໄປຝຶກອົບຮົມໃຫ້ | | ໂຄງການ World Vision ສົ່ງເສີມການປູກຜັກ | ໂຄງການ SMB ຂອງບໍ່ຄຳ ໄດ້ຝຶກອົບຮົມ ດ້ານ ການຕະຫຼາດ, ລ້ຽງສັດ ແລະ ປູກເຂົ້າ |
| ປູກຝັງ | ການປູກເຂົ້າ | | ນາດຳ | ນາດຳ | ນາດຳ | ນາດຳ | ນາດຳ |
| ປູກຝັງ | ສະມັດຕະພາບ | ນາປີ | ??? | ??? | 3.5 ໂຕນ/ເຮັກຕາ | ??? | ??? |
| ປູກຝັງ | | ນາແຊງ | ??? | ??? | 3.6 ໂຕນ/ເຮັກຕາ | ??? | 4.2 ໂຕນ/ເຮັກຕາ |
| ການຕະຫຼາດ | ຜັກສົ່ງຂາຍໃນຕະຫຼາດ | | | | ສົ່ງຂາຍຢູ່ ເຊໂປນ ຫ່າງໄກ 46 ຫຼັກ | | ຕະຫຼາດເມືອງວັງ ຢູ່ຈຸດສຸມ, ຕະຫຼາດພາຍໃນບ້ານ ແລະ ໄຊບົວທອງ ແຂວງຄາມ່ວນ |
| ການຕະຫຼາດ | | | | | | | ມີພໍ່ຄ້າ ມາຊື້ |
| ການຕະຫຼາດ | | | | | | | ບໍຄຳເຊໂປນ |
| ການຕະຫຼາດ | | (ການຂົນສົ່ງ) | ລົດຈັກ, ລົດໄຖ | ລົດຈັກ, ລົດໄຖ | ລົດຫຸ່ນໄດ ແລະ ລົດໄຖ | ລົດຫຸ່ນໄດ ແລະ ລົດໄຖ | ລົດຈັດ, ລົດຫຸ່ນໄດ ແລະ ລົດໄຖ |
| ການຕະຫຼາດ | ກຸ່ມປູກເຂົ້າ | | ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ |
| ການຕະຫຼາດ | ລາຍຮັບຈາກແຫຼ່ງອື່ນ | | ຂາຍສັດລ້ຽງ, ຫາປາ, ໄປເຮັດວຽກຢູ່ໄທ | ຂາຍສັດລ້ຽງ, ຫາປາ, ໄປເຮັດວຽກຢູ່ໄທ | ຂາຍສັດລ້ຽງ, ເຮັດວຽກຢູ່ສວນຢາງ, ກໍ່ສ້າງ ລາຍຮັບ 1.2 ລ້ານ/ເດືອນ | ເຮັດວຽກຢູ່ສວນຢາງ, ຂາຍສັດລ້ຽງ ແລະ ມາເຮັດວຽກຢູ່ສະຫວັນ | ຂາຍສັດລ້ຽງ ແລະ ຫາສັດປ່າ ມາຂາຍ |
| ຊົນລະປະທານ | ເນື້ອທີ່ ຊົນລະປະທານ | | 420 ເຮັກຕາ(ແຜນ), 296 ເຮັກຕາ(ເຮັດຕົວຈິງ) | ?? ເຮັກຕາ(ແຜນ), 86 ເຮັກຕາ(ເຮັດຕົວຈິງ) | 200 ເຮັກຕາ(ແຜນ), 30 ເຮັກຕາ(ເຮັດຕົວຈິງ) | 373 ເຮັກຕາ | 250 ເຮັກຕາ ແຜນ, 105 ຕົວຈິງ |
| ຊົນລະປະທານ | ຊັບພະຍາກອນນ້ຳ | | ແມ່ນ້ຳ | ແມ່ນ້ຳ | ອ່າງເກັບນ້ຳສ້າງຂຶ້ນ ປີ (1989) | ປະລິມານເກັບໃນ ອ່າງເກັບນ້ຳ (26,000,000m3) | ແມ່ນ້ຳ |
| ຊົນລະປະທານ | ລະບົບຊົນລະປະທານ | ປໍ້າ | 250kwh*2 (2019) | 75kwh*2(2015)<br>75kwh*2(1996) | ບໍ່ມີ | ບໍ່ມີ | ບໍ່ມີ |
| ຊົນລະປະທານ | | ຄອງ | | ຄອງເໝືອງແມ່ 550m (ເປ/ຕົງ) | ປີ 2020 ໂຄງການ ADB ຈະເຂົ້າມາພື້ນຟູ | ລະບົບຊົນລະປະທານ ແມ່ນສຳເລັດ 60 %<br>ງົບປະມານບໍ່ພຽງພໍ ເລຍຕ້ອງຢຸດໄວ້ກ່ອນ | ຄອງເປຕົງ ສ້າງ (1975) |
| ຊົນລະປະທານ | ກຸ່ມຜູ້ນຳໃຊ້ນ້ຳ | | ສ້າງປີ (1996) | ສ້າງຕັ້ງ ປີ (1996) | ສ້າງຕັ້ງ | ບໍ່ມີ | ສ້າງຂຶ້ນ (2018) ບໍ່ມີບັນຊີ ການເງິນ |
| ຊົນລະປະທານ | ໜີ້ຄ່າກະແສໄຟຟ້າ | | 130,000,000 ກີບ | 126,000,000 ກີບ | | | ບໍ່ມີ, ບໍ່ຄຳເຊໂປນ ມອບເງິນໃຫ້ 5,000-10,000$/ປີ |

2) ຫຼັງຈາກ ທີມກະສິກຳ, ການຕະຫຼາດ, ຊົນລະປະທານ ແລະ ແຜນການ ສະຫຼຸບຜົນຂອງການສຳຫຼວດ, ພວກເຂົາກໍ່ໄດ້ພິຈາລະນາຮ່ວມກັນໃນທີມ ເພື່ອຄັດເລືອກໂຄງການ ທີ່ເໝາະສົມກັບກິດຈະກຳໃດໜຶ່ງທີ່ໂຄງການຈັດຕັ້ງປະຕິບັດ. ແຕ່ລະທີມເອົາຜົນສະຫຼຸບຂອງຕົນມາເຜີຍແຜ່ໃຫ້ກັນຮູ້ ແລະ ສ້າງຄວາມເຫັນດີ ເຫັນພ້ອມ ເຖິງເຫດຜົນໃນການຄັດເລືອກ ທີ່ຈະລົງໄປສຳຫຼວດຄັ້ງທີ 2nd ເພື່ອສາພາດຊາວກະສິກອນ ແລະ ກຸ່ມນາໃຊ້ນ້ຳ ລວມທັງການລົງສຳຫຼວດພາກສະໜາມ. ໃນການສຳຫຼວດນີ້ ແມ່ນເລືອກເອົາ 6-8 ໂຄງການ ຕາມເວລາທີ່ເຮົາມີພໍໃນການລົງສຳຫຼວດ.


ການສົນທະນາຫາຂໍ້ມູນ ຂອງແຕ່ລະທີມ


ການສົນທະນາຮ່ວມທີມ ເພື່ອຄັດເລືອກໂຄງການ

| ເມືອງ | ໂຄງການ | ການສະເໜີຂອງແຕ່ລະທີມ | | | | ຜົນໄດ້ຮັບ |
|---|---|---|---|---|---|---|
| | | ແຜນ | ກະສິກຳ | ການຕະຫຼາດ | ຊົນລະປະທານ | |
| ໄຊພູທອງ | ກຸດຕາປໍ | ○ | ○ | | | ◎ |
| | ນ້ຳພູ | ○ | ○ | ○ | | ◎ |
| ໄກສອນ | ຜັກຂະ | | | | | |
| ຈຳພອນ | ສະຄືນ | | | | ○ | ◎ |
| | ແກ້ງປູນ | | | | ○ | |
| | ຖຳປາແໜ | | | | | |
| | ທອດ | ○ | ○ | | | ◎ |
| ຊົນນະບູລີ | ໜອງບົວລາວ | | | ○ | | |
| ສອງຄອນ | ສີງທ່າ | ○ | ○ | ○ | | ◎ |
| | ນາໂສກ | | ○ | | ○ | ◎ |
| | ໜອງເດີ່ນ | | | ○ | ○ | ◎ |
| ໄຊບູລີ | ບຶງເຊ | ○ | | | | |
| | ນາຊຽນຄານ | ○ | | | | |
| ພີນ | ຫ້ວຍສະຄວງ | ○ | ○ | ○ | | ◎ |
| | ຫ້ວຍໃກ້ | | | | | |
| ວີລະບູລີ | ນາເຕີ້ | ○ | ○ | ○ | ○ | ◎ |

ໃນກໍລະນີ ໂຄງການ ສະຄືນ ທີ່ໄດ້ຄະແນນຕ່ຳ, ພວກເຂົາກໍ່ໄດ້ພາກັນຊີ້ແຈງເຖິງເຫດຜົນ ແລະ ສ້າງຄວາມເປັນເອກະພາບໄປນຳກັນ, ສ່ວນໂຄງການທີ່ມີຄະແນນສູງ ພວກເຂົາກໍ່ໄດ້ສ້າງຄວາມເປັນເອກະພາບນຳກັນເຊັ່ນກັນ ເຖິງສາເຫດທີ່ວ່າ ເປັນຫຍັງໂຄງການດັ່ງກ່າວຈຶ່ງຈຳເປັນຕ້ອງຖືກເລືອກເຂົ້າຮອບຕໍ່ໄປ.
ຫຼັງຈາກການປະຊຸມຊີ້ແຈງສຳເລັດ, ພວກເຂົາກໍ່ໄດ້ກ້າວໄປສູ່ ຂັ້ນຕອນການສຳຫຼວດຄັ້ງທີ 2nd.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## (4) ການສຳຫຼວດຄັ້ງທີ 2nd

| |
|---|
| 1) ການສຳຫຼວດຄັ້ງທີ 2nd ແມ່ນແຕ່ລະທີມ ລົງໄປສຳພາດຊາວກະສິກອນ ແລະ ກຸ່ມນຳໃຊ້ນ້ຳ ລວມທັງສຳຫຼວດພາກສະໜາມ.<br>2) ທີມຄັດເລືອກໂຄງການ ໄດ້ແບ່ງອອກເປັນ 3 ທີມ ເຊັ່ນ: ທີມກະສິກຳ, ທີມການຕະຫຼາດ ແລະ ທີມຊິນລະປະທານ, ເຊິ່ງແຕ່ລະທີມໃຊ້ແບບຟອມທີ່ກະກຽມມາໃນການສຳພາດ. |

(ອະທິບາຍ)

ທີມຄັດເລືອກໂຄງການ ໄດ້ມອບໝາຍໃຫ້ພະນັກງານເມືອງ ໃນການປະສານເລື່ອງນັດໝາຍການສຳພາດ ເຊິ່ງສະຖານທີ່ແມ່ນ ຢູ່ຫ້ອງການບ້ານ ຫຼື ວັດ ຕາມຄວາມເໝາະສົມ.

<ຜູ້ເຂົ້າຮ່ວມໃນການສຳພາດ>

1 ຜູ້ສຳພາດ : PAFO, DPI, DOIC

2 ຜູ້ປະສານງານ : DAFO, ຄະນະບ້ານ

3 ຜູ້ຖືກສຳພາດ : ຊາວກະສິກອນ, ປະທານກຸ່ມ, ຊາວບ້ານ ແລະ ອື່ນໆ

* ເພື່ອໃຫ້ໄດ້ຂໍ້ມູນທີ່ກວ້າງ, ຈຶ່ງໄດ້ແບ່ງຊາວກະສິກອນອອກເປັນ ກຸ່ມປູກຜັກ ແລະ ປູກເຂົ້າ. ໃນໜຶ່ງກຸ່ມຕ້ອງມີສະມາຊິກປະມານ 10-15 ຄົນ.

ກ່ອນເລີ່ມການສຳພາດ, ທີມຄັດເລືອກໂຄງການ ໄດ້ອະທິບາຍເຖິງພາບລວມ ຂອງການສຳຫຼວດຄັ້ງນີ້ ໃຫ້ຜູ້ເຂົ້າຮ່ວມໄດ້ຮູ້ ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈເຖິງຈຸດປະສົງ.

| |
|---|
| <ຈຸດທີ່ໃຊ້ໃນການ ອະທິບາຍ><br>ເມື່ອພະນັກງານລັດລົງໄປໃນບ້ານ, ຊາວກະສິກອນສ່ວນໃຫ່ຍ ແມ່ນຄາດຫວັງວ່າ ຈະມາຊ່ວຍເຫຼືອ, ມາມອບສິ່ງຂອງເງິນທອງໃຫ້. ສະນັ້ນ ທີມຄັດເລືອກໂຄງການ ຈຳເປັນຕ້ອງອະທິບາຍ ຫົວຂໍ້ທີ່ສຳຄັນດັ່ງລຸ່ມນີ້:<br>1 ໃນການສຳຫຼວດຄັ້ງນີ້ ແມ່ນການສຳຫຼວດຄັດເລືອກໂຄງການ ຂອງ PAD.<br>2 ໂຄງການ PAD ແມ່ນເປັນໂຄງການທີ່ບໍ່ໄດ້ໃຫ້ ວັດຖຸ ຫຼື ອຸປະກອນຫຍັງ. ພຽງແຕ່ໃຫ້ ຄວາມຮູ້ດ້ານເຕັກນິກຂອງ ການກະສິກຳ, ການຕະຫຼາດ ແລະ ຊິນລະປະທານ ເພື່ອສົ່ງເສີມການເພີ່ມລາຍຮັບໃຫ້ແກ່ຊາວກະສິກອນ.<br>3 ໂຄງການພວກເຮົາ ແມ່ນເປັນໂຄງການແບບມີສ່ວນຮ່ວມ. ການມີສ່ວນຮ່ວມນີ້ໝາຍຄວາມວ່າ ຊາວກະສິກອນ ສາມາດ ພິຈາລະນາ ແລະ ຕັດສິນໃຈດ້ວຍຕົນເອງ ວ່າຈະເຂົ້າຮ່ວມກິດຈະກຳຂອງໂຄງການ ຫຼື ບໍ່. |

ໃນການສຳພາດ ແມ່ນໄດ້ແບ່ງອອກເປັນ 3 ກຸ່ມຄື: ກຸ່ມກະສິກຳ, ການຕະຫຼາດ ແລະ ຊີນລະປະທານ. ແຕ່ລະກຸ່ມແມ່ນ ໃຊ້ແບບສອບຖາມ ທີ່ກຽມມາ ໃນສຳພາດ ຫຼື ຖາມ ນອກຄຳຖາມກໍ່ໄດ້ ຕາມຄວາມຈຳເປັນ.


ກອງປະຊຸມແນະນຳ


ສຳພາດ (ກຸ່ມກະສິກຳ)


ສຳພາດ (ກຸ່ມການຕະຫຼາດ)


ສຳພາດ (ກຸ່ມຊົນລະປະທານ)

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

(ແບບສອບຖາມ)

| | | |
|---|---|---|
| I | ດ້ານຊົນລະປະທານ | |
| 1.1 | ແຫຼ່ງນໍ້າ | |
| | ຫົວງານ | ຈັກສູບນໍ້າ(KW)/ ? ປີຜ່ານມາລະດູນາແຊງ ໃຊ້ພະລັງງານໄຟຟ້າ ຈັກ KW |
| | | ອ່າງເກັບນໍ້າ(ບໍລິມາດ) m³ |
| | | ທໍ່ສົ່ງນໍ້າ ແມັດ |
| | ລະບົບຄອງເໝືອງ | MC, SC, TC (m) |
| | | ອາຄານແບ່ງນໍ້າ, ຈຸດ?, ປະຕູນໍ້າ ທໍ່ເອົານໍ້າເຂົ້ານາ |
| | | ເນື້ອທີ່ຫົດໄດ້ (ha) ປີ 2014-15-16-17 |
| 1.2 | ການກໍ່ສ້າງສໍາເລັດປີໃດ? | ສ້ອມແປງຄັ້ງສຸດທ້າຍ? ປີໃດ ບໍລິສັດຮັບເໝົາ |
| | | ມູນຄ່າ? ໃຜໃຫ້ທຶນ ADB/WB/LG/IFAD |
| 1.3 | ວຽກຄຸ້ມຄອງນໍາໃຊ້ | ຈັດຕັ້ງກຸ່ມຊາວນາປີໃດ ຫລືໄດ້ປັບປຸງກຸ່ມປີໃດ ມີໂຄງຮ່າງການຈັດຕັ້ງບໍ ມີຈັກຄົນ |
| | | ກວມເອົາບ້ານໃດແດ່ ມີຈັກຈຸຮັບນໍ້າ, ແຕ່ລະຈຸມີຈັກຄອບຄົວ/ສະມາຊິກ |
| | | ການບົວລະບັດຮັກສາເຮັດແບບໃດ?ອານາໄມກ່ອນ-ຫຼັງສົ່ງ |
| | | ຮອບວຽນການສົ່ງນໍາ້?ມີການປຶກສາການແຈກນໍາ້-ຜູ້ເປັນຜູ້ຕິດຕາມ |
| | | ປີກາຍນີ້ ນໍ້າຊົນລະປະທານ ພຽງພໍບໍ |
| | | ມີງົບປະມານສ້ອມແປງບໍ |
| 1.4 | ວຽກບໍລິຫານກຸ່ມ | ປະຊຸມປະຈໍາເດືອນ/ປີ (ມີການຈັດກອງປະຊຸມບໍ) |
| | | ມີບົດສະຫຼຸບ ລາຍງານບໍ ລາຍງານໃຫ້ພາກສ່ວນໃດແດ່ / ວຽກການເງິນໄດ້ສະຫລຸບບໍ |
| | | ມີບັນຊີເງິນຝາກ,ກອງທຶນບໍ? ມີຫລາຍປານໃດ ຝາກທະນາຄານບໍ |
| | | ມີລະບົບບັນຊີການເງິນບໍ? ມີໃຜມາອົບຮົມໃຫ້ |
| | | ໃຜຮັບຜິດຊອບເກັບເງິນຄ່ານໍ້າ? |
| | | ໃຊ້ເວລາຈັກເດືອນເກັບເງິນຄ່ານໍ້າ…/ ອັດຕາສ່ວນການຈ່າຍເງິນຄ່ານໍ້າ ຈັກເປີເຊັນ |
| | | ມີບັນຊີເງິນສົດ-ບັນຊີໜີ້ບໍ? ຄ່າບໍລິຫານ/ຄ່າກອງທຶນ/ ຄ່າກະແສໄຟຟ້າ |
| | | ພະນັກງານເມືອງ ໄດ້ມາຕິດຕາມປົກກະຕິບໍ?(ມາເວົ້າວຽກຫຍັງ,ແນະນໍາແນວໃດ) |
| II | ວຽກສົ່ງເສີມກະສິກໍາ | ສະຖິຕິກະສິກໍາຂອງໂຄງການເປົ້າໝາຍ |
| | 1 | ເບິ່ງເອກະສານ ຕາຕະລາງຊ້ອນທ້າຍ 01 |
| | 2 | ວຽກຝຶກອົບຮົມ |
| | 2.1 | ຜ່ານມາໂຄງການກຸ່ມໄດ້ຮັບການຝຶກອົບຮົມຫຍັງແດ່? |
| | 2.2 | ຫົວຂໍ້?ມີຈັກຄົນເຂົ້າຮ່ວມ?ມີຈັກຄັ້ງ?ປີໃດ? |
| | 2.3 | ພາກສ່ວນໃດຝຶກອົບຮົມໃຫ້? |
| | 2.4 | ມີການໄປທັດສະນະສຶກສາຈັກຄັ້ງ?ຢູ່ໃສ? ໃຜນໍາພາໄປ? |
| | 2.5 | ມີໂຄງການອື່ນ ມາແລກປ່ຽນບົດຮຽນບໍ? |
| | 3 | ວຽກງານເຕັກນິກ |
| | 3.1 | ຍັງນໍາໃຊ້ແນວພັນພື້ນເມືອງບໍ |
| | 3.2 | ໃຊ້ແນວພັນພືດຊະນິດໃດ?ເອົາແນວພັນມາຈາກໃສ?ລາຄາ/Kg |
| | 3.3 | ການນໍາໃຊ້ຝຸ່ນ, ຝຸ່ຍ ແລະ ຢາປາບສັດຕູພືດ |
| | 3.4 | ນາດໍາ, ນາວ່ານ, ນາຢອດ,ນາປຽກ-ແຫ້ງ? ໃຜນໍາພາເຮັດ? |

| | | |
|---|---|---|
| | 3.5 | ການປົວລະບັດຮັກສາ(ນຳ້ພຽງພໍ, ການຫຼີກຫຍ້າ) |
| | 3.6 | ການເກັບກ່ຽວ(ດ້ວຍມື, ກົນຈັກ ຫຼື ຈ້າງແຮງງານອື່ນ) |
| | 3.7 | ການຂົນສົ່ງ ? ການເກັບມ້ຽນ |
| III | ການຕະຫຼາດ | |
| | 1 | ການປູກພືດ |
| | 1.1 | ໂຄງການເຮົາປູກພືດຊະນິດໃດແດ່ / ພືດຊະນິດໃດປູກຫຼາຍກວ່າໝູ່ / ໄດ້ຂາຍໄດ້ດີ |
| | 1.2 | ປູກກິນ ແລະ ຂາຍ(ພືດ) |
| | 1.3 | ປູກເພື່ອຂາຍ(ພືດ) |
| | 1.4 | ຖ້າຂາຍຜົນຜະລິດ ຂາຍເທົ່າໃດ?ຂາຍຢູ່ໃສ?ໃຜມາພົວພັນຊື້? |
| | 1.5 | ເລີ່ມປູກພືດຊະນິດນັ້ນເມື່ອໃດ |
| | 1.6 | ມີຈັກຄອບຄົວປູກພືດຊະນິດດຽວກັນ? ພືດຊະນິດໃດ |
| | 1.7 | ມີໃຜເປັນຜູ້ແນະນຳການປູກ? |
| | 1.8 | ເລີມຕົ້ນເນື້ອທີ່ເທົ່າໃດ(ໃນປີໃດ)? ປະຈຸບັນເນື້ອທີ່ເທົ່າໃດ? |
| | 1.9 | ລາຍຮັບຂອງຊາວນາສ່ວນຫຼາຍມາຈາກການກະສິກຳບໍ ຫຼືໄດ້ຈາກວຽກອື່ນ |
| | 1.10 | ມີແຮງງານພັກໃນການເຮັດວຽກກະສິກຳຈັກຄົນ? (ຖາມສະເພາະຄອບຄົວ) |
| | 2 | ການປູກເຂົ້າ |
| | 2.1 | ມີໂຮງສີຈັກແຫ່ງໃນບ້ານ? ມີພໍ່ຄ້າມາຊື້ໃນບ້ານບໍ? |
| | 2.2 | ເນື້ອທີ່ປູກເພີ່ມຂຶ້ນຫຼືຫຼຸດລົງ? |
| | 2.3 | ລາຄາເຂົ້າໃນປີຜ່ານມາເທົ່າໃດ? (ເຂົ້ານາປີ, ນາແຊງ) |

(Annex 01: ຕາຕະລາງ ເກັບຂໍ້ມູນສະຖິຕິ ດ້ານ ກະສິກຳ ການປູກເຂົ້າ ແລະ ຜັກ)

| ລ/ດ | ລາຍການ | ເຮັກຕາ | ຄອບຄົວ | ສະມັດຕະພາບ ໂຕນ/ເຮັກຕາ | ປີຜະລິດ |
|---|---|---|---|---|---|
| 1 | ເຂົ້ານາປີ | | | | |
| | ເຂົ້ານາແຊງ | | | | |
| 2 | ພືດຊະນິດອື່ນໆ | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| 8 | | | | | |
| 9 | | | | | |
| 10 | | | | | |

**(5) ຈັດກອງປະຊຸມ ເພື່ອສະຫຼຸບຜົນ ແລະ ຄັດເລືອກເອົາເປັນໂຄງການໃໝ່ ແລະ ລາຍງານໃຫ້ກອງປະຊຸມ PMU.**

| |
|---|
| 1) ທີມຄັດເລືອກໂຄງການ ຈັດກອງປະຊຸມເພື່ອສະຫຼຸບຜົນການລົງສໍາຫຼວດ ແລະ ໃຫ້ຄະແນນຕາມຜົນໄດ້ຮັບ.<br>2) ຫຼັງຈາກລົງຄະແນນ ຂອງແຕ່ລະທີມແລ້ວ, ແມ່ນໄດ້ຕັດສິນເປັນໂຄງການໃໝ່.<br>3) ທີມຄັດເລືອກໂຄງການ ຈັດກອງປະຊຸມ PMU ເພື່ອລາຍງານຜົນ ແລະ ສ້າງຄວາມເຫັນດີ ເຫັນພ້ອມ ຢ່າງເປັນທາງການ. |

(ອະທິບາຍ)

1) ທີມຄັດເລືອກໂຄງການ ຈັດກອງປະຊຸມເພື່ອເຜີຍແຜ່ ຂໍ້ມູນທີ່ໄດ້ລວບລວມໃຫ້ກັນຮູ້.
ໃນກອງປະຊຸມນີ້ ແມ່ນໄດ້ແບ່ງອອກເປັນ 4 ທີມຄື: ທີມກະສິກໍາ, ການຕະຫຼາດ, ຊົນລະປະທານ ແລະ ແຜນການ ໃນການສັງລວມຂໍ້ມູນທີ່ເປັນຜົນ ແລະ ບໍ່ເປັນຜົນ ເພາະວ່າ ໃນການສໍາຫຼວດຄັ້ງທີ 2nd ນີ້ ແມ່ນເກັບກໍາຂໍ້ມູນກວມລວມ ດ້ານ ກະສິກໍາ, ການຕະຫຼາດ, ຊົນລະປະທານ, ຂໍ້ມູນບ້ານ, ແລະ ອື່ນໆ. ຖ້າເອົາຂໍ້ມູນທັງໝົດ ມາເຜີຍແຜ່ ໂດຍບໍ່ມີການຄັ່ນກອງ ອາດຈະເຮັດໃຫ້ຄົນອື່ນສັບສົນໄດ້. ສະນັ້ນ ແຕ່ລະທີມຈຶ່ງ ສັງລວມເອົາແຕ່ປະເດັນສໍາຄັນ ລວມທັງຈຸດດີ ແລະ ຈຸດອ່ອນ ຂອງໂຄງການທີ່ລົງສໍາຫຼວດ ມາເຜີຍແຜ່ໃຫ້ກັນຮູ້.


ການສັງລວມຂໍ້ມູນ (ທີມ ແຜນການ)


ການສັງລວມຂໍ້ມູນ (ທີມ ການຕະຫຼາດ)


ຂໍ້ມູນສັງລວມທີ່ໄດ້ມາ


ຂໍ້ມູນສັງລວມທີ່ໄດ້ມາ

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

(ຜົນການສຳພາດໃນການລົງສຳຫຼວດຄັ້ງທີ 2st, ສັງລວມໂຄງການ ທີ 1-3)

| ກິດຈະກຳ | Xaiphou thong ເມືອງ ໄຊພູທອງ<br>1. kou Thapoh ກຸດຕາປໍ | Xaiphou thong ເມືອງ ໄຊພູທອງ<br>2. Nam phou ນໍ້າພູ | Champhone ເມືອງຈຳພອນ<br>3. Sakuen ສະຄືນ |
|---|---|---|---|
| ຊົນລະປະທານ | 1. ເນື້ອທີ່ຊົນລະປະທານເຮັດໄດ້45%<br>2. ສະພາບຊົນລະປະທານດີ.<br>3. ຊາວນາມາຄວາມກະຕືລືລົ້ນ.<br>4. ບໍ່ມີໜີ້ຄ່າກະແສໄຟຟ້າ.<br>5. ໂຄງການຄວນສົ່ງເສີມ. | 1. ມີເນື້ອທີ່ບໍ່ຫຼາຍ.<br>2. ມີແຕ່ທົ່ງນາ-ແຕ່ປີມີຄອງ.<br>3. ໂຄງການບໍ່ຄວນຊ່ວຍເຫຼືອ. | 1. ເນື້ອທີ່ຊົນລະປະທານເຮັດໄດ້ 56%.<br>2. ສະພາບຊົນລະປະທານໃຊ້ໄດ້ປົກກະຕິ.<br>3. ຄອງແມ່ປະຊາຊົນຂຸດເອງ, ສະພາບບໍ່ດີ.<br>4. ບໍ່ມີຄວາມກະຕືລືລົ້ນ.<br>5. ມີໜີ້ກະແສໄຟຟ້າຫຼາຍ.<br>6. ໂຄງການບໍ່ຄວນເລືອກ. |
| ເຕັກນິກກະສິກຳ | 1. ຊາວນາມີຄວາກະຕືລືລົ້ນ.<br>2. ທາງເຂົ້າໄປຊ່ວຍເຫຼືອງ່າຍ.<br>3. ຜົນຜະລິດ ແລະ ເຕັກນິກປານກາງ. | 1. ບໍ່ມີການປູກເຂົ້ານາແຊງ.<br>2. ປີໃດຝົນບໍ່ດີສະມັດຕະພາບຕໍ່າ (ດິນນາເປັນດິນຊາຍ).<br>3. ສ່ວນຫຼາຍເຮັດນາຫວ່ານ ແລະ ເຮັດນາ ປອດ (ເຕັກນິກສະໄໝໃໝ່). | 1. ຊາວນາບໍ່ມີຄວາມກະຕືລືລົ້ນ.<br>2. ມີໂຄງການໂຮງຮຽນຊາວນາ.<br>3. ເຕັກນິກດີແລ້ວ. |
| ການຕະຫຼາດ | ມີ 2 ບ້ານ ສຳພາດ 1 ບ້ານ, ໂພນທັນລາຍຮັບຫຼັກແມ່ນການປູກເຂົ້າ-ມັນຕົ້ນ, ພືດສຳຮອງ ພືດຜັກສ່ວນຄົວ.<br><u>ຈຸດດີ:</u><br>- ມີຊາວນາປູກພືດໃນລະດູຝົນ ແລະ ສາມາຂາຍໄດ້.<br>- ຊາວນາດີໃຈໄດ້ລາຍຮັບຈາກການປູກ ມັນຕົ້ນ.<br><u>ຈຸດອ່ອນ:</u><br>- ຊາວນາຕ້ອງການໃຫ້ມີແມ່ຄ້າ-ຫຼື ບໍລິສັດມາຮັບຊື້, ບໍ່ຕ້ອງການໄປຊາຍເອງ.<br>- ຊາວນາຂາດຄວາມເຊື່ອໝັ້ນ ບໍລິສັດ ເພາະເຂົາບໍ່ມາຮັບຊື້. | ປູກເຂົ້າເປັນຫຼັກ, ປູກພືດຮອງ ໃນຊວງຍາມແລ້ງ, ຊາວນາມີລາຍຮັບຈາກການປູກພືດ, ແມ່ຄ້າມາຮັບຊື້, ໃຊ້ຢາປາບສັດຕູພືດໃນການຜະລິດ.<br><u>ຈຸດດີ:</u><br>- ຊາວນາສົນໃຈຢາກປູກພືດເປັນສິນຄ້າ, ສົນໃຈຢາກທົດລອງປູກພືດໃໝ່: ໝາກ ກ້ຽງ.<br>- ຊາວນາມີປະສົບການໃນການປູກພືດ.<br><u>ຈຸດອ່ອນ:</u><br>- ຕ້ອງການໃຫ້ພໍ່ຄ້າມາຮັບຊື້, ບໍ່ຕ້ອງການ ໄປຂາຍເອງ.<br>- ໃຊ້ຢາປາບສັດຕູພືດ, ນໍ້າຖ້ວມ.<br>- ລາຄາຜັກບໍ່ສູງ, ບໍ່ມີພືດທີ່ວ່າງຂາຍໃນ ລະດູຝົນ. | ຊາວນາສ່ວນຫຼາຍມັກພືດແຕ່ເຂົ້າ, ປູກພືດພາຍໃນຄອບຄົວ, ບໍ່ມີຄວາມສົນໃຈທີ່ຈະຜະລິດພືດຜັກ ເພື່ອຂາຍ.<br><u>ຈຸດດີ:</u><br>- ທີ່ນທາງດີ (ໄປມາສະດວກສະບາຍ).<br>- ມີແຕ່ຕະຫຼາດ 2 ແຫ່ງທີ່ສາມາດຂາຍ ຜົນຜະລິດໄດ້.<br><u>ຈຸດອ່ອນ:</u><br>- ຊາວນາບໍສົນໃຈເຂົ້າຮ່ວມກອງປະຊຸມ.<br>- ເຂດນໍ້າຖ້ວມ.<br>- ບໍ່ມີຜັກ ແລະ ຂາດຄວາມຮູ້ດ້ານການ ຕະຫຼາດ. |
| ຕິດຕາມ, ປະເມີນຜົນ | 1. ໄລຍະເສັ້ນທາງສະດວກ/ພະນັກງານ ເມືອງໄດ້ເອົາໃຈໃສ.<br>2. ອຳນາດການປົກຄອງມີຄວາມເຂັ້ມ ແຂວງ.<br>3. ປະຊາຊົນບໍ່ມີປະສົບການໃນການເຮັດ ວຽກກັບໂຄງການ, ໃຊ້ລະບົບຝາຍ ນໍ້າລົ້ນ. | 1. ອຳນາດການປົກຄອງມີຄວາມສົນໃຈ, ຢາກປັບປຸງທາງການຕະຫຼາດ.<br>2. ປະຊາຊົນມີຄວາມສົນໃຈແຕ່ລະບົບພື້ນ ຖານໂຄງການຍັງບໍ່ພ້ອມ.<br>3. ພະນັກງານຂັ້ນເມືອງອຳນວຍຄວາມສະ ດວກດີ.<br>4. ທາງດ້ານເສັ້ນທາງດີ. | 1. ປະຊາຊົນບໍ່ມີຄວາມສົນໃຈ, ອຳນາດການ ປົກຄອງຍັງບໍ່ທັນມີຄວາມເຂັ້ມແຂງ.<br>2. ເຄີຍມີໂຄງການເຂົ້າມາຊ່ວຍເຫຼືອແລ້ວ.<br>3. ທາງດ້ານເສັ້ນທາງສະດວກສະບາຍດີ. |

(ຜົນການສຳພາດໃນການລົງສຳຫຼວດຄັ້ງທີ 2$^{st}$, ສັງລວມໂຄງການ 4-6)

| ກິດຈະກຳ | Champhone ເມືອງຈຳພອນ<br>4. Thoad ທວດ | Song khon ເມືອງ ສອງຄອນ<br>5. Singtha ສິ່ງທາ | Song khon ເມືອງ ສອງຄອນ<br>6. Song khon ບ້ານ ສອງຄອນ |
|---|---|---|---|
| ຊົນລະປະທານ | 1. ເນື້ອທີ່ຊົນລະປະທານເຮັດໄດ້45%.<br>2. ສະພາບຊົນລະປະທານດີ.<br>3. ຊາວນາມີຄວາມກະຕືລືລົ້ນ.<br>4. ບໍ່ມີໜີ້ກະແສງໄຟຟ້າ.<br>5. ໂຄງການຄວນສົ່ງເສີມ. | 1. ເນື້ອທີ່ເຮັດໄດ້ 56%<br>2. ສະພາບທີ່ວງານບໍ່ດີ.<br>3. ຄວາມກະຕືລືລົ້ນບໍ່ດີປານໃດ.<br>4. ສະພາບຄອງບໍ່ດີປານໃດ.<br>5. ມີໜີ້ຄ່າກະແສໄຟຟ້າຫຼາຍ.<br>6. ໂຄງການບໍ່ຄວນເລືອກ. | 1. ເນື້ອທີ່ເຮັດໄດ້ 50%.<br>2. ສະພາບຊົນລະປະທານບໍ່ດີຫຼາຍປານໃດ.<br>3. ກຸ່ມມີຄວາມກະຕືລືລົ້ນ.<br>4. ມີໜີ້ບໍ່ຫຼາຍ.<br>5. ໂຄງການຄວນຊ່ວຍເຫຼືອ. |
| ເຕັກນິກກະສິກຳ | 1. ຊາວນາມີຄວາມກະຕືລືລົ້ນ.<br>2. ທາງເຂົ້າໄປຊ່ວຍເຫຼືອງ່າຍ.<br>3. ຜົນຜະລິດແລະ ເຕັກນິກປານກາງ | 1. ນ້ຳຖ້ວມທຸກປີ.<br>2. ສະມັດຕະພາບສູງແລ້ວ.<br>3. ການເຂົ້າເຖິງມີຄວາມຍຸ້ງຍາກຫຼາ | 1. ນ້ຳຖ້ວມທຸກປີ.<br>2. ສະມັດຕະພາບສູງແລ້ວ.<br>3. ການເຂົ້າເຖິງມີຄວາມຍຸ້ງຍາກຫຼາ |
| ການຕະຫຼາດ | - ມີ 7 ບ້ານ, ຂາດແຮງງານ, ມີໂຄງການເຂົ້າຊ່ວຍເຫຼືອສະເພາະບ້ານທວດ.<br>- ບ້ານວັງເມົາມີຄວາມສົນໃຈຢາກໄດ້ການຊ່ວຍເຫຼືອ.<br>- ຍັງອີກ 5 ບ້ານທີ່ຍັງບໍ່ທັນໄດ້ສຳພາດ ແຕ່ບໍ່ຮູ້ວ່າເຂົ້າຈະສົນໃຈບໍ.<br><u>ຈຸດດີ</u>:<br>- ໄດ້ຮັບການຝຶກອົບຮົມເຕັກນິກປູກເຂົ້າ-ເຮັດຝຸ່ນ, ມີປະສົບການໃນການປູກ.<br><u>ຈຸດອ່ອນ</u>:<br>- ຂາດປະສົບການທາງດ້ານການຕະຫຼາດ. | ເປັນເຂດນ້ຳຖ້ວມ, ມີປະຊາກອນຫຼາຍ 655 ຄົນ, ຊາວນາມີລາຍຮັບຈາກການປູກພືດ: ພືດຫຼັກປູກ: ມັນຕົ້ນ, ພືດສຳຮອງ: ສາລີກັບພືດຜັກສວນຄົວ ແລະ ກ້ວຍ.<br><u>ຈຸດດີ</u>:<br>- ສາມາດປູກພືດໄດ້, ມີປະສົບການ ແລະ ມີຄວາມກະຕືລືລົ້ນ. ຂາຍຜົນຜະລິດດ້ວຍຕົນເອງພາຍໃນຕະຫຼາດເມືອງ.<br><u>ຈຸດອ່ອນ</u>:<br>- ເຂດນ້ຳຖ້ວມ 5 ປີ, ເຮັດໃຫ້ມີຜົນກະທົບຕໍ່ການຜະລິດ-ລະດູແລ້ງແມ່ນຂາດນ້ຳ. | ຈຳນວນ 1.162 ປູກເຂົ້າ ແລະ ສາລີ ປູກພືດຕາມຕາຝັ່ງເຊ ຜູ້ທີ່ມີເນື້ອທີ່ແຄມເຊແມ່ນສາມາດປູກ ແລະ ມີລາຍຮັບ.<br><u>ຈຸດດີ</u>:<br>- ສາມາດປູກພືດແມ່ນມີແມ່ຄ້າມາຮັບຊື້ໃນບ້ານ.<br><u>ຈຸດອ່ອນ</u>:<br>- ເຂດນ້ຳຖ້ວມ, ຂາດແຮງງານ.<br>- ລາຄບໍ່ສູງຍ້ອນປູກຫຼາຍ (ສິນຄ້າຄືກັນ). |
| ຕິດຕາມ, ປະເມີນຜົນ | 1. ເປັນບ້ານ 3 ສ້າງ ມີໂຄງການເຂົ້າຫຼາຍ.<br>2. ເສັ້ນທາງດໍພໍສົມຄວນ.<br>3. ເປັນໂຄງການໃໝ່ກວມເອົາຫຼາຍບ້ານເຮັດໃຫ້ການຄຸ້ມຄອງຍາກ. | 1. ເປັນບ້ານຢູ່ກາງດອນ, ນ້ຳຖ້ວມທຸກປີ, ເຂົ້າຍາກໃນລະດູຝົນ.<br>2. ປະຊາຊົນມີຄວາມສົນໃຈເຮັດວຽກກັບໂຄງການ.<br>3. ປະຊາຊົນໃນເຂດດັ່ງກ່າວມີແຕ່ຜະລິດເພື່ອກິນ, ບໍ່ໄດ້ເພື່ອຂາຍ. | 1. ບ້ານໃຫຍ່, ມີປະຊາກອນຫຼາຍ (800-1.000 ຄົນ).<br>2. ເປັນທາງຜ່ານໂຄງການໜອງບົວຫຼວງ (ໃນລະດູແລ້ງ).<br>3. ປະຊາຊົນມີຄວາມສົນໃຈ. |

(ຜົນການສໍາພາດໃນການລົງສໍາຫຼວດຄັ້ງທີ 2st, ສັງລວມໂຄງການ 7-9)

| ກິດຈະກໍາ | Song khon ເມືອງ ສອງຄອນ<br>7. Nong dem ບ້ານໜອງເດີ່ມ | Phin ເມືອງພີນ<br>8. HuaysaKuang ບ້ານ ຫ້ວຍສະຄວງ | Vilabouly ເມືອງ ວິລະບູລີ<br>9. Natur ບ້ານ ນາເຕີ |
|---|---|---|---|
| ຊົນລະປະທານ | 1. ເຮັດການຜະລິດໄດ້ 38%.<br>2. ຫົວງານໃຊ້ໄດ້ປົກກະຕິ.<br>3. ລອງເຫືອດີ<br>4. ມີຄວາມກະຕືລືລົ້ນຫຼາຍ.<br>5. ບໍ່ມີໜີ້ກະແສໄຟຟ້າ.<br>6. ໂຄງການການຄວນເຂົ້າໄປຊ່ວຍເຫຼືອ. | 1. ເນື້ອທີ່ເຮັດໄດ້ 15%.<br>2. ສະພາບຄອງເໝືອງບໍ່ດີ.<br>3. ບໍ່ມີໜີ້.<br>4. ຊາວນາບໍ່ມີຄວາມກະຕືລືລົ້ນ.<br>5. ຄວນຊ່ວຍເຫຼືອ. | 1. ເຮັດໄດ້ພຽງ 37%<br>2. ບໍ່ດີ<br>3. ບໍ່ມີຄວາມກະຕືລືລົ້ນ<br>4. ບໍ່ມີໜີ້ໄຟຟ້າ |
| ເຕັກນິກກະສິກໍາ | 1. ຊາວນາມີຄວາມສາມັກຄີ ແລະ ຫ້າວຫັນ.<br>2. ຕິດກັບໂຄງການເປົ້າໝາຍເກົ່າ, ທີມງານ ໂຄງການເຮັດວຽກແບບບໍ່ເສຍເວລາໃນ ການເດີນທາງ.<br>3. ນໍ້າຖ້ວມບາງສ່ວນ. | 1. ທາງເຂົ້າກາສະດວກ.<br>2. ຊາວນາຫ້າວຫັນມີຄວາມກະຕືລືລົ້ນ.<br>3. ຜົນຜະລິດບາງຜ່ອງຕໍ່າບາງຜ່ອງສູງ. | 1. ຢູ່ໄກໂພດ, ທາງຍາກ.<br>2. ຜົນຜະລິດປານກາງ |
| ການຕະຫຼາດ | ລາຍຮັບຫຼັກມີ ມັນຕົ້ນ ຊາວນາມີຄວາມສົນໃຈປູກມັນຫຼາຍກວ່າ ປູກພືດເປັນສິນຄ້າ.<br>ຈຸດດີ:<br>- ຊາວນາມີຄວາມພໍໃຈກັບລາຍຮັບທີ່ໄດ້.<br>- ມີຊາວນາໜຶ່ງຄົນສົນໃຈປູກພືດເປັນ ສິນຄ້າ.<br>ຈຸດອ່ອນ:<br>- ຊາວນາບໍ່ມີເນື້ອທີ່-ບໍ່ມີຄວາມສົນໃຈ- ຂາດແຮງງານ.<br>- ເຂດນໍ້າຖ້ວມ. | ຈຸດດີ: ມີ 7 ບ້ານ:<br>- ຊາວນາມີຄວາມສົນໃຈໃນໂຄງການ.<br>- ຊາວນາມີປະສົບການໃນການປູກ.<br>- ລາຍຮັບໄດ້ຈາກການປູກປພືດ ແລະ ຂາຍສັດລ້ຽງ.<br>- ນໍ້າຊົນລະປະທານແມ່ນບໍ່ໄດ້ໃຊ້ໄຟຟ້າ.<br>ຈຸດອ່ອນ:<br>- ຂາຍພັນພືດບໍ່ຂາດ.<br>- ບໍ່ມີຕະຫຼາດ (ປູກຫຼາຍບໍ່ໄດ້).<br>- ຊາວນາມີການໃຊ້ຢາຂ້າັສັດຕູພືດ. | ຈຸດດີ:<br>- ຊາວນາສົນໃຈໃນໂຄງການ.<br>- ມີປະສົບການໃນການປູກ.<br>- ຊາວນາໄດ້ທົດລອງປົກພືດຫຼາຍຊະນິດ.<br>- ລາຍຮັບຫຼັກແມ່ນປູກກະສິກໍາ.<br>ຈຸດອ່ອນ:<br>- ທາງໄກ, ທາງລໍາບາກ<br>- ບໍ່ມີຕະຫຼາດຂາຍສິນຄ້າ. |
| ຕິດຕາມ, ປະເມີນຜົນ | 1. ສະຖານທີ່ໃກ້ກັບໂຄງການເກົ່າ (ເສັ້ນທາງໜອງບົວທອງ).<br>2. ປະຊາຊົນມີຄວາມຫ້າວຫັນ, ມີຄວາມ ສົນໃຈ.<br>3. ບ້ານດັ່ງກ່າວແມ່ນນໍ້າຖ້ວມທຸກປີ.<br>4. ບໍ່ມີໂຄງການຊ່ວຍເຫຼືອ. | 1. ຫົນທາງສະດວກ (ທາງເລກ 9).<br>2. ປະຊາຊົນມີຄວາມສົນໃຈໃນການພືດ.<br>3. ໂຄງການທີ່ກວມເອົາຫຼາຍບ້ານ (ຍາກໃນ ການຄຸ້ມຄອງ) ຄວາມຕ້ອງການຂອງແຕ່ ລະບ້ານຕ່າງກັນ. | 1. ເສັ້ນທາງໄກ (ຫຍຸ້ງຍາກ).<br>2. ປະຊາຊົນມີເຕັກນິກໃນການປູກ.<br>3. ກຸ່ມນໍາໃຊ້ນໍ້າຍັງບໍ່ທັນເຂັ້ມແຂງ.<br>4. ມີໂຄງການອື່ນ(SNV, WS). |

2) ແຕ່ລະທີມ ຢືນຢັນຜົນທີ່ໄດ້ຮັບ, ລົງຄະແນນ ແລະ ຄິດໄລ່ຄະແນນ. ໂຄງການທີ່ໄດ້ຄະແນນຫຼາຍ ແມ່ນຖືວ່າໄດ້ຖືກຄັດເລືອກເຂົ້າເປັນໂຄງການໃໝ່.

ຈາກນັ້ນ ແມ່ນລາຍງານ ຜົນຄະແນນ ແລະ ຜົນການສຳຫຼວດ ທີ່ກອງປະຊຸມ PMU ເພື່ອລາຍງານຜົນ ແລະ ສ້າງຄວາມເຫັນດີ ເຫັນພ້ອມ ຢ່າງເປັນທາງການ.



ລົງຄະແນນ ແລະ ຊີ້ແຈງເຫດຜົນ

ຜົນຄະແນນ ການຕັດສິນ ຜ່ານເຂົ້າເປັນໂຄງການໃໝ່

| Activities | Xaiphouthong | Phin | Songkhone | | Xaiphouthong | Champhone | Songkone | Vilabouly | Champhone |
|---|---|---|---|---|---|---|---|---|---|
| | Kouttapoh | Huaysakhuang | Songkhone | Nongderen | Namphou | Thoad | Singtha | Natur | Sakuen |
| Irrigation | 5 | 3 | 4 | 4 | 2 | 1 | 2 | 1 | 2 |
| Agriculture | 4 | 4 | 3 | 4 | 3 | 4 | 3 | 2 | 2 |
| Marketing | 4 | 5 | 3 | 2 | 4 | 2 | 3 | 3 | 2 |
| Planning | 4 | 4 | 3 | 3 | 3 | 3 | 2 | 2 | 1 |
| Total | 17 | 16 | 13 | 13 | 12 | 10 | 10 | 8 | 7 |

ລະດັບ ການລົງຄະແນນ

5 ສູງຫຼາຍ 4 ສູງ 3 ປານກາງ 2 ຕ່ຳ 1 ຕ່ຳທີ່ສຸດ

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## (6) ຈັດກອງປະຊຸມເພື່ອແນະນຳ ໂຄງການໃໝ່

| |
|---|
| 1) ຫຼັງຈາກ ຮັບໂຄງການຢ່າງເປັນທາງການແລ້ວ, ທີມຄັດເລືອກໂຄງການ ກໍ່ໄດ້ຈັດກອງປະຊຸມ ແນະນຳກ່ຽວກັບ ພາບລວມຂອງໂຄງການ PAD ໃຫ້ ເຈົ້າເມືອງ, ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ຄະນະບ້ານ, ກຸ່ມນຳໃຊ້ນ້ຳ ແລະ ພາກສ່ວນທີ່ກ່ຽວຂ້ອງ. |

(ອະທິບາຍ)

1) ຫຼັງຈາກຄະນະ PMU ມີຄວາມເຫັນດີ ເຫັນພ້ອມ ໃນໂຄງການທີ່ຄັດເລືອກແລ້ວ. PAFO ແລະ DPI ໄດ້ຈັດກອງ ປະຊຸມແນະນຳໂຄງການ ໃຫ້ແກ່ໂຄງການທີ່ໄດ້ຮັບການຄັດເລືອກ. ເຖິງວ່າໃນການລົງສຳຫຼວດຄັ້ງທີ $2^{nd}$ ພວກເຮົາກໍ່ໄດ້ ອະທິບາຍກ່ຽວກັບພາບລວມຂອງໂຄງການ PAD ແລ້ວ, ແຕ່ກໍ່ຕ້ອງໄດ້ປະກາດ ຫຼື ແຈ້ງການ ໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງ ຮູ້ຕື່ມອີກຜ່ານການຈັດກອງປະຊຸມ.

<ກອງປະຊຸມ ແນະນຳໂຄງການ>

ຈຸດປະສົງ: - ເພື່ອແຈ້ງການໃຫ້ໂຄງການໃໝ່ໄດ້ຮູ້ ວ່າພວກເຂົາໄດ້ຮັບ ການຄັດເລືອກ ແລະ ຈະໄດ້ຈັດຕັ້ງປະຕິບັດ ກິດຈະກຳ ຢ່າງເປັນທາງການ.

- ເພື່ອເຮັດໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງ ເຂົ້າໃຈນະໂຍບາຍຂອງໂຄງການ ແລະ ວິທີການ ປະຕິບັດວຽກ ໃນ ແຕ່ລະກິດຈະກຳ.

**ຜູ້ເຂົ້າຮ່ວມ:**

- ເຈົ້າເມືອງ
- ຫົວໜ້າ ແລະ ພະນັກງານ ຈາກຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ.
- ພະນັກງານ ຈາກແຜນການ ເມືອງ
- ພະນັກງານ ຈາກ ອຸດສາຫະກຳ ແລະ ການຄ້າເມືອງ
- ນາຍບ້ານ
- ຄະນະກຸ່ມນຳໃຊ້ນ້ຳ
- ສະຫະພັນ ແມ່ຍິງ
- ຊາວກະສິກອນ
- ພາກສ່ວນອື່ນໆ (ຖ້າ ຈຳເປັນ)

**ຜູ້ບັນຍາຍ:**

- ພະນັກງານ ຈາກ ຂະແໜງແຜນການ ແລະ ການເງິນ ພະແນກກະສິກຳ ແລະ ປ່າໄມ້ແຂວງ
- ພະນັກງານຈາກ ພະແນກ ແຜນການ ແລະ ການລົງທຶນ

**ສະຖານທີ່:** ຫ້ອງການປົກຄອງເມືອງ ຫຼື ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ



ກອງປະຊຸມແນະນຳໂຄງການ ທີ່ເມືອງ ຊົນນະບູລີ



ກອງປະຊຸມແນະນຳໂຄງການ ທີ່ເມືອງ ສອງຄອນ

ຮູບແບບການຈັດຕັ້ງປະຕິບັດຂອງໂຄງການພັດທະນາກະສິກຳແບບມີສ່ວນຮ່ວມແຂວງສະຫວັນນະເຂດ ປະກອບມີ 3 ສ່ວນຮ່ວມ: ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ການຮັບຟັງການສະເໜີຂອງຊາວກະສິກອນ ແລະ ການມີສ່ວນຮ່ວມຢ່າງສະໝ່ຳສະເໜີ, ໃຫ້ການຮ່ວມມືຢ່າງຫ້າວຫັນໃນບັນດາຂະແໜງການຕ່າງໆ ແລະ 5ຜົນໄດ້ຮັບ:

- ສ້າງຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ ປະກອບມີ ພະແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນ.
- ຍົກລະດັບຄວາມສາມາດໃຫ້ແກ່ພະນັກງານກະສິກຳ ແລະ ປ່າໄມ້ແຂວງ/ເມືອງໃນການຈັດຕັ້ງປະຕິບັດໂຄງການ ແລະ ການວາງແຜນງົບປະມານ.
- ການປັບປຸງການນຳໃຊ້ຊົນລະປະທານໃຫ້ມີປະສິດທິຜົນ: ຍົກລະດັບຄວາມສາມາດໃນການຫຼຸດຄ່າໃຊ້ຈ່າຍໃນລະບົບຊົນລະປະທານ ແລະ ຂະຫຍາຍເນື້ອທີ່.
- ປັບປຸງການຄຸ້ມຄອງການປູກຝັງ, ການເພີ່ມສະມັດຕະພາບການຜະລິດ, ການສົ່ງເສີມການການຂາຍຜົນຜະລິດ, ການຜະລິດໃສ່ຄວາມຕ້ອງການຂອງຕະຫຼາດ.
- ຂະຫຍາຍໂຄງການໄປເຂດອື່ນ.
- ໃນການສັງລວມຂໍ້ມູນໄດ້ເນັ້ນໜັກດັ່ງນີ້:
  a. ດ້ານການຮ່ວມມື ແລະ ປະສານງານຈາກຂັ້ນເມືອງເປັນແນວໃດ ? ຮ່ວມມືດີບໍ່ ? ມີຄວາມສົນໃຈຢາກຮ່ວມຈັດຕັ້ງປະຕິບັດໂຄງການນີ້ບໍ? ແລະ ມີຄວາມກະຕືລືລົ້ນບໍ່
  b. ເບິ່ງຍຸດທະສາດແຜນພັດທະນາຂອງເມືອງ ໃນເຂດທີ່ຈະພັດທນາ
  c. ດ້ານເສັ້ນເສັ້ນທາງຄົມມະນາຄົມສາມາດເຂົ້າເຖິງສະດວກບໍ?
  d. ສະພາບເນື້ອທີ່ ແລະ ສະບົບຊົນລະປະທານຍັງມີຄວາມຕ້ອງການຍາກຂະຫຍາຍ ຫຼືປັບປຸງສວນໃດ
  e. ຊາວນາຊາມີຄວາມສົນໃຈຢາກຮ່ວມຈັດຕັ້ງປະຕິບັດໃນ 3 ກິດຈະກຳຫຼັກຂອງໂຄງການບໍ?

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DOIC)*

## VIII ການຕິດຕາມ ແລະ ປະເມີນຜົນ

### 1 ຈຸດປະສົງ ແລະ ພາບລວມ ຂອງກິດຈະກຳ

1) ການຕິດຕາມ ແມ່ນການທຳຄວາມເຂົ້າໃຈກ່ຽວກັບສະຖານະການທີ່ເກີດຂຶ້ນໃນປັດຈຸບັນ ເພື່ອໃຊ້ໃນວຽກງານປະເມີນ.
2) ການປະເມີນ ແມ່ນການຊີ້ແຈງຜົນສຳເລັດ ໃນການຈັດຕັ້ງປະຕິບັດກິດຈະກຳໂຄງການ ແລະ ພິຈາລະນາ ເຖິງການຢຸດຕິການສົ່ງເສີມກິດຈະກຳທີ່ສຳເລັດ
3) ທີມຕິດຕາມ ແລະ ປະເມີນ ຊອກຫາຜົນດີຂອງກິດຈະກຳ ເພື່ອສືບຕໍ່ການຈັດຕັ້ງປະຕິບັດ

(ອະທິບາຍ)

1) ກິດຈະກຳການຕິດຕາມ ຄວນປະຕິບັດຕາມຈຸດປະສົງດັ່ງລຸ່ມນີ້
   - ເພື່ອຕິດຕາມ ຜົນກະທົບທາງກົງ/ທາງອ້ອມ ຫຼື ການປ່ຽນແປງ ຈາກການປະຕິບັດກິດຈະກຳ/ໜ້າວຽກໃດໜຶ່ງທີ່ກຳລັງດຳເນີນການຈັດຕັ້ງປະຕິບັດ ກ່ອນສິ້ນສຸດໂຄງການ ແລະ ທັງເປັນຂໍ້ມູນທີ່ສຳຄັນສຳລັບການປະເມີນຜົນໂຄງການ.
2) ກິດຈະກຳການປະເມີນຜົນ ຄວນປະຕິບັດຕາມຈຸດປະສົງດັ່ງລຸ່ມນີ້:
   - ເພື່ອກວດກາ ແລະ ວັດແທກຜົນສຳເລັດ ທາງດ້ານປະລິມານ ແລະ ຄຸນນະພາບ ໂດຍທຽບໃສ່ແຜນການຄາດຄະເນທີ່ວາງໄວ້ກ່ອນການປະຕິບັດກິດຈະກຳຂອງໂຄງການ;
   - ເພື່ອຮັບຮູ້ຄວາມຄືບໜ້າ ຫຼື ໜ້າວຽກທີ່ໄດ້ສຳເລັດໃນໄລຍະໃດໜຶ່ງ ທັງເປັນຕົວຊີ້ວັດຂອງກິດຈະກຳ ວ່າຈະສຳເລັດຕາມແຜນການທີ່ວາງໄວ້ຫຼືບໍ່ ແລະ ສາມາດປັບປຸງແກ້ໄຂວິທີການປະຕິບັດໃຫ້ສຳເລັດຕາມຄາດໝາຍ;
   - ເພື່ອສັງລວມຜົນກະທົບດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ແລ້ວລາຍງານໃຫ້ພາກສ່ວນກ່ຽວຂ້ອງໄດ້ຮັບຊາບ ແລະ ມີທິດຊີ້ນຳໃນຕໍ່ໜ້າ.
3) ຜົນຂອງການຕິດຕາມ ແລະ ປະເມີນຜົນ ແມ່ນເປັນແບບຢ່າງການປະຕິບັດທີ່ດີ ໃນການເຜີຍແຜ່ ຮູບແບບຂອງໂຄງການ ພັດທະນາ ກະສິກຳ ແບບມີສ່ວນຮ່ວມ.
   - ທີມຕິດຕາມ ແລະ ປະເມີນ ເກັບກຳຂໍ້ມູນ ດ້ານປະລິມານ ແລະ ຄຸນນະພາບ ໃນລະຫວ່າງ ການສຳຫຼວດພາກສະໜາມ ແລະ ສຳພາດ ພະນັກງານເມືອງ, ກຸ່ມນຳໃຊ້ນໍ້າ ແລະ ຊາວກະສິກອນ.
   - ເຫັນວ່າແຕ່ລະໂຄງການແມ່ນມີຈຸດດີຫຼາຍຢ່າງ, ຫຼັງຈາກທີ່ ທີມປະເມີນເກັບກຳຈຸດດີທັງໝົດມາໄດ້ ແມ່ນຈະເອົາມາສະຫຼຸບ ແລ້ວເຮັດເປັນກໍລະນີສຶກສາ ເພື່ອເປັນແບບຢ່າງຕໍ່ໄປ.
   - ຈາກນັ້ນ ທີມປະເມີນ ຈະໄດ້ລາຍງານ ກໍລະນີສຶກສາໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງໄດ້ຮັບຮູ້ ເພື່ອເຜີຍແຜ່ຮູບແບບຂອງໂຄງການ PAD ໄປຍັງເຂດອື່ນ.

<ທີມຕິດຕາມ ແລະ ປະເມີນຜົນ ຈໍາເປັນຕ້ອງສົ່ງເສີມ ທີມອື່ນໆ.>

ທີມຕິດຕາມ ແລະ ປະເມີນຜົນ ແມ່ນບໍ່ໄດ້ເຮັດກິດຈະກໍາໂດຍກົງ ກັບ ກຸ່ມນໍາໃຊ້ນໍ້າ ແລະ ຊາວກະສິກອນ, ແຕ່ພວກເຂົາເປັນຜູ້ຕິດຕາມ ແລະ ເກັບກໍາຂໍ້ມູນຂອງແຕ່ລະທີມ.

ພວກເຂົາບໍ່ພຽງແຕ່ຊອກຫາຈຸດດີ ແຕ່ຍັງຊອກຫາຈຸດອ່ອນເພື່ອປັບປຸງ ແກ້ໄຂ. (ພວກເຂົາບໍ່ແມ່ນຜູ້ຈັດການ ຫຼື ຫົວໜ້າ ແຕ່ພວກເຂົາເປັນພຽງຜູ້ທີ່ສົ່ງເສີມເທົ່ານັ້ນ).

ໂດຍທົ່ວໄປແລ້ວ, ຈຸດອ່ອນແມ່ນໃຜໆກໍ່ຫາໄດ້ງ່າຍ, ແຕ່ຈຸດດີ ແມ່ນຫາຍາກທີ່ສຸດ. ຖ້າເວົ້າເຖິງຈຸດດີ ກໍ່ສາມາດກະຕຸ້ນ ຫຼື ສ້າງແຮງບັນດານໃຈ ໃຫ້ຊາວກະສິກອນໄດ້, ແຕ່ຖ້າເວົ້າເຖິງຈຸດອ່ອນອອກໄປ ແຕ່ບໍ່ມີ ຄໍາແນະນໍາທີ່ດີ ກໍ່ເຮັດໃຫ້ຄວາມກະຕືລືລົ້ນ ຂອງ ພະນັກງານເມືອງ, ກຸ່ມນໍາໃຊ້ນໍ້າ ແລະ ຊາວກະສິກອນ ຫຼຸດລົງ.

ດັ່ງນັ້ນ, ທີມຕິດຕາມ ແລະ ປະເມີນຜົນ ຄວນທໍາຄວາມເຂົ້າໃຈ ແລະ ຄົ້ນຄິດ ວ່າຈະຊ່ວຍສົ່ງເສີມ ໃຫ້ແຕ່ລະທີມປະສົບຜົນສໍາເລັດໄດ້ແນວໃດ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI)*

## 2 ຮູບແບບການຕິດຕາມ ແລະ ປະເມີນຜົນ

| |
|---|
| 1) ການຕິດຕາມ ແລະ ປະເມີນຜົນ ແມ່ນຈັດຂຶ້ນຫຼັງຈາກ ການຜະລິດ ລະດູແລ້ງ ແລະ ລະດູຝົນ.<br>2) ການຕິດຕາມ ແລະ ປະເມີນຜົນ ຫຼັກໆແມ່ນການລົງສຳພາດ ແລະ ເກັບກຳຂໍ້ມູນນຳ ພະນັກງານເມືອງ. |

(ອະທິບາຍ)

1) ໄລຍະ ຂອງການ ຕິດຕາມ ແລະ ປະເມີນຜົນ.

- ໄລຍະເວລາຂອງການລົງສຳຫຼວດ: ເດືອນ ມິຖຸນາ - ກໍລະກົດ < **(ຕິດຕາມ ການຜະລິດ ລະດູແລ້ງ)>**
- ໄລຍະເວລາຂອງການລົງສຳຫຼວດ: ເດືນ ທັນວາ - ມັງກອນ < **(ຕິດຕາມ ການຜະລິດ ລະດູຝົນ)>**

ຜູ້ເຂົ້າຮ່ວມ ໃນການສຳພາດ

- ຄະນະຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພະນັກງານຜູ້ຮັບຜິດຊອບກິດຈະກຳດັ່ງກ່າວ
- PAFO, PDI

ລະບຽບ ແລະ ຂັ້ນຕອນ:

- ການສຳພາດຈະຕ້ອງໄດ້ຖືກປະຕິບັດໃນຮູບແບບກອງປະຊຸມ ຊຶ່ງປະກອບດ້ວຍ ບຸກຄົນທີ່ກ່າວມາຂ້າງເທິງ, ກອງປະຊຸມດັ່ງກ່າວຈະຕ້ອງຖືກຈັດຕັ້ງຂຶ້ນໃນສະຖານທີ່ເໝາະສົມ ສາມາດບັນຈຸຜູ້ເຂົ້າຮ່ວມໄດ້.
- ຜູ້ດຳເນີນກອງປະຊຸມແມ່ນພະນັກງານແຂວງ ເປັນຜູ້ທີ່ນຳສະເໜີວິທີການນຳໃຊ້ແບບຟອມ ແລະ ຄຳຖາມສຳພາດ; ພະນັກງານຂັ້ນເມືອງແມ່ນຮັບຜິດຊອບການບັນທຶກຂໍ້ມູນຕ່າງໆໃສ່ແບບຟອມໃຫ້ຄົບຖ້ວນ.
- ຜູ້ທີ່ສຳພາດຕ້ອງແນ່ໃຈວ່າ ຄຳຖາມທີ່ຖາມໄປນັ້ນ ຈະຕ້ອງໄດ້ຮັບຄຳຕອບຢ່າງຄົບຖ້ວນ.

ແຜນວາດວົງຈອນການຕິດຕາມປະເມີນຜົນໂຄງການ:



2) ການລົງສຳພາດ ພະນັກງານເມືອງ.

- ການສຳພາດພະນັກງານເມືອງ ແມ່ນຈັດຕັ້ງປະຕິບັດໂດຍທີມຕິດຕາມ ແລະ ປະເມີນຜົນ. ກ່ອນອື່ນ ພວກເຂົາຈັດກອງປະຊຸມຮ່ວມກັບ ກປມ, ແຜນການເມືອງ ເພື່ອອະທິບາຍເຖິງຈຸດປະສົງ ແລະ ລາຍລະອຽດຕ່າງໆ



ກອງປະຊຸມອະທິບາຍ ລາຍລະອຽດຕ່າງໆ (ເມືອງ ຊົນນະບູລີ)

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI)*

ແບບຟອມຕິດຕາມ 1

| **ຕາຕະລາງ ການຄິດໄລ່ການລົງທຶນໃນລະດູແລ້ງ** | | | **ຕາຕະລາງ 1** |
|---|---|---|---|
| **ຊື່ໂຄງການ** | | | |
| **ພາກສ່ວນ** | | | |
| **ລະດູການຕິດຕາມ** | | | |
| | | | |
| **I. ລາຍຮັບທີ່ເພີ່ມຂຶ້ນຂອງຊາວນາ** | | ກ່ອນໂຄງການ (2016/17 ນາແຊງ) | ໄລຍະໂຄງການ (2017/18 ນາແຊງ) |
| | | (a) | (b) |
| ເນື້ອທີ່ການປູກ (ເຮັກຕາ) | | A | A' |
| | | | |
| ຜົນຜະລິດເຂົ້າ (ກິໂລ/ເຮັກຕາ) | | B | B' |
| (ຜົນຜະລິດເຂົ້າ (ໂຕນ)) | A*B/1 000 | | |
| ລາຄາຂາຍຕໍ່ໜ່ວຍ (ກີບ/ກິໂລ) | | C | C' |
| ລາຍຮັບຂອງຊາວກະສິກອນ (ກີບ) | D=A*B*C | D | D' |
| | | | |
| ຄ່າໃຊ້ຈ່າຍສຳລັບ ຄ່າບໍລິຫານ, ກອງທຶນ ແລະ ອື່ນໆ ຂອງກຸ່ມໃຊ້ນ້ຳ(ກີບ/ເຮັກຕາ) | | F | F' |
| ຄ່າໃຊ້ຈ່າຍທັງຫມົດ (ກີບ) | G= F*A | G | G' |
| | | | |
| ຄ່າໄຟຟ້າ (= ຄ່ານ້ຳ) ຄ່າໃຊ້ຈ່າຍຂອງກຸ່ມນຳໃຊ້ນ້ຳ (ກີບ/ເຮັກຕາ) | | H | H' |
| ລວມຄ່າໄຟຟ້າທັງໝົດໃນປີ (ກີບ) | I = H*A | I | I' |
| | | | |
| ລາຍໄດ້ທັງໝົດ = (ລາຍຮັບ - ລາຍຈ່າຍ - ຄ່າໄຟຟ້າ) | J =D-G-I | J | J' |
| | | | |
| ລວມຍອດລາຍໄດ້(ກຳໄລ) | K'=J'-J | | K' |
| **II. ຄ່າໃຊ້ຈ່າຍຂອງໂຄງການ** | | | |
| ຄ່າບໍລິຫານ (ຄ່າໃຊ້ຈ່າຍປະຈຳວັນ, ຄ່ານ້ຳມັນ ແລະ ອື່ນໆ.) | | | L' |
| ຄ່າຈັດຝຶກອົບຮົມ ໃຫ້ແກ່ຊາວກະສິກອນ | | | M' |
| ອື່ນໆ | | | N' |
| ຄ່າໃຊ້ຈ່າຍທັງໝົດຂອງໂຄງການ | O'=L'+M'+N' | | O' |
| **III. ປະສິດທິຜົນການນຳໃຊ້ງົບປະມານ** | Q'=K'/O' | | Q' |

## ແບບຟອມຕິດຕາມ 2

| **ຕາຕະລາງສັງລວມຕິດຕາມປະສິດທິຜົນຄ່າໃຊ້ຈ່າຍການລົງທຶນ ລະດູແລ້ງ ແລະ ລະດູຝົນ** | | | | | | | ຕາຕະລາງ 2 |
|---|---|---|---|---|---|---|---|
| **ລາຍການ** | ເປົ້າໝາຍ ຕົວຊີ້ | ຊ່ວງທີ 1 (2017/18 ນາແຊງ) | ຊ່ວງທີ 2 (2018 ນາປີ) | ຊ່ວງທີ 3 (2018/19 ນາແຊງ) | ຊ່ວງທີ 4(2019ນາປີ) | ຊ່ວງທີ 5 (2019/2020 ນາແຊງ) | ຊ່ວງທີ 6 (2020 ນາປີ) |
| ເນື້ອທີ່ປູກ | | | | | | | |
| ຜົນຜະລິດເຂົ້າ (ການ ຜະລິດເຂົ້າ) | | | | | | | |
| ລາຄາ ຕໍ່ຫົວໜ່ວຍ | | | | | | | |
| ລາຍຮັບເພີ່ມຂຶ້ນໂດຍ ໂຄງການ | | | | | | | |
| ລາຍຈ່າຍຂອງໂຄງການ | | | | | | | |
| ປະສິດທິຜົນຄ່າໃຊ້ຈ່າຍ | | | | | | | |
| ຄໍາເຫັນກ່ຽວກັບປະ ສິດທິຜົນຄ່າໃຊຈ່າຍ | | | | | | | |
| | | | | | | | |

## ແບບຟອມຕິດຕາມ 3

| | | ຕາຕະລາງ 3 |
|---|---|---|
| **ຕາຕະລາງ ການປະເມີນຜົນ ຄວາມສໍາເລັດຂອງໂຄງການ ນາແຊງ ປີ.........................** | | |
| **ກະສິກໍາ** | **ຕະຫຼາດ** | **ຊົນລະປະທານ** |
| ຜົນສໍາເລັດ ທີ່ເປັນປະລິມານ | (ຜົນສໍາເລັດ ທີ່ສາມາດຄິດໄລເປັນປະລິມານ) | (ຜົນສໍາເລັດ ທີ່ສາມາດຄິດໄລເປັນປະລິມານ) |
| | | |
| (ຜົນສໍາເລັດ ທີ່ເປັນຄຸນນະພາບ) | (ຜົນສໍາເລັດ ທີ່ເປັນຄຸນນະພາບ) | (ຜົນສໍາເລັດ ທີ່ເປັນຄຸນນະພາບ) |
| | | |

### 3. ປະຊຸມ ແລະ ສໍາພາດ ພະນັກງານເມືອງ, ຊາວກະສິກອນ ລວມທັງການລົງສໍາຫຼວດ ພາກສະໜາມ.

| |
|---|
| 1) ທີມຕິດຕາມ ແລະ ປະເມີນ ສໍາພາດ ແລະ ເກັບກໍາຂໍ້ມູນ ນໍາພະນັກງານເມືອງ.<br>2) ໃນການເກັບກໍາຂໍ້ມູນກໍລະນີສຶກສາ, ທີມຕິດຕາມ ແລະ ປະເມີນ ຈໍາເປັນຕ້ອງສໍາພາດ ຊາວກະສິກອນ ແລະ ລົງສໍາຫຼວດພາກສະໜາມ. |

(ອະທິບາຍ)

1) ຈັດກອງປະຊຸມຮ່ວມກັບ ພະນັກງານເມືອງ:

- ການຈັດປະຊຸມຮ່ວມພະນັກງານເມືອງ ກໍ່ເປັນວຽກໜຶ່ງທີ່ສໍາຄັນ ເພາະວ່າພະນັກງານເມືອງໄດ້ເຮັດວຽກໃກ້ຊິດກັບກຸ່ມຊາວນາຢ່າງເປັນປະຈໍາ ໃນທຸກໆກິດຈະກໍາ, ສະນັ້ນ ຕ້ອງໄດ້ມີການສໍາພາດຢ່າງລະອຽດ ເພື່ອເກັບກໍາຂໍ້ມູນທັງໝົດ ແລະ ກວດກາເບິ່ງບົດລາຍງານປະຈໍາເດືອນ, ປະຈໍາ 3 ເດືອນ ແລະ ບົດລາຍງານປະຈໍາປີຕື່ມ
- ໃນກອງປະຊຸມນີ້ ແມ່ນພະນັກງານເມືອງຕ້ອງຕື່ມຂໍ້ມູນໃສ່ແບບຟອມຕິດຕາມ 1 (ຍົກເວັ້ນ ຄ່າໃຊ້ຈ່າຍຂອງໂຄງການ), ແບບຟອມຕິດຕາມ 2 ແລະ ແບບຟອມຕິດຕາມ 3
- ໃນກອງປະຊຸມນີ້ ແມ່ນພະນັກງານ ຈາກຂະແໜງແຜນການ ເປັນຜູ້ກະກຽມຂໍ້ມູນ ຄ່າໃຊ້ຈ່າຍທັງໝົດ ຂອງແຕ່ລະກິດຈະກໍາ, ອັດຕາກິນ, ແລະອື່ນໆ.

ຕາຕະລາງ ເກັບກໍາຄ່າໃຊ້ຈ່າຍຂອງໂຄງການ

| ມູນຄ່າ ການໃຊ້ຈ່າຍລົງປະຕິບັດວຽກງານ | | | | | | ຕາຕະລາງ 4 |
|---|---|---|---|---|---|---|
| | | | | | | |
| ກິຈະກໍາ | ລາຍການ | ຕົ້ນແຫນ | ສົມສະອາດ | ໂພນທອງ ດອນແຍງ | ແກ້ງກອກເໜືອ | ອື່ນໆ |
| ດ້ານຊົນລະປະທານ | ອັດຕາກິນ | | | | | |
| | ຝຶກອົບຮົມ | | | | | |
| ດ້ານກະສິກໍາ | ຝຶກອົບຮົມ | | | | | |
| | ອຸປະກອນຝຶກອົບຮົມ | | | | | |
| | ອັດຕາກິນ | | | | | |
| ລວມທັງໝົດ | | | | | | |

- ໃນກອງປະຊຸມນີ້ ຜູ້ເຂົ້າຮ່ວມອາດຈະພິຈາລະນາຂໍ້ມູນໃນດ້ານຕ່າງໆທີ່ໄດ້ຮັບ ຈາກການບັນທຶກຂອງຄະນະກຸ່ມ ແລະ ຊາວນາ ຜູ້ເຂົ້າຮ່ວມ, ທີ່ໄດ້ຜ່ານການຄົ້ນຄວ້າ ແລະ ຕົກລົງເປັນເອກະພາບຢ່າງເປັນທາງການ.
- ຮັບປະກັນວ່າບັນດາຂໍ້ມູນຕ່າງໆໃນແບບຟອມທັງໝົດນັ້ນ ແມ່ນສາມາດລາຍງານໃຫ້ພາກສ່ວນກ່ຽວຂ້ອງຂັ້ນເມືອງ ເພື່ອຮັບຊາບ ແລະ ມີຄໍາເຫັນຊີ້ນໍາໃນຕໍ່ໜ້າ.



ປະຊຸມຮ່ວມ ກປມ



ປະຊຸມຮ່ວມ ກປມ

<ຈຸດທີ່ຄວນເໜັ້ນໜັກ ໃນກອງປະຊຸມ>

ທີມຕິດຕາມ ແລະ ປະເມີນຄວນໃສ່ໃຈຄື ຕ້ອງອະທິບາຍໃຫ້ພະນັກງານເມືອງເຂົ້າໃຈເຖິງກິດຈະກຳນີ້ ຢ່າງລະອຽດ ເພື່ອໃຫ້ພວກເຂົາເຂົ້າໃຈວ່າ ພວກເຮົາບໍ່ໄດ້ລົງໄປປະເມີນວຽກງານ ແລະ ປະສິດທິພາບການເຮັດວຽກຂອງເຂົາເຈົ້າ. ເພາະທົ່ວໄປແລ້ວຖ້າພະນັກງານແຂວງ ລົງໄປເມືອງ ພະນັກງານທ້ອງຖິ່ນ ຈະຄິດຢ້ານ ແລະ ບໍ່ບອກຕາມສະຖານະການຈິງທີ່ເກີດຂຶ້ນ.

ຖ້າທີມຕິດຕາມ ແລະ ປະເມີນ ຊີ້ແຈງບໍ່ລະອຽດ ພວກເຂົາອາດລາຍງານເຊັ່ນ: ກຸ່ມເຮັດວຽກບໍ່ດີ, ຊາວນາບໍ່ປະຕິບັດຕາມກົດລະບຽບທີ່ລັດວາງອອກ, ແລະ ອື່ນໆ ເຊິ່ງຈະເຮັດໃຫ້ພວກເຮົາ ບໍ່ສາມາດເກັບກຳຂໍ້ມູນ ທີ່ແທ້ຈິງໄດ້.

ດັ່ງນັ້ນ ທີມຕິດຕາມ ແລະ ປະເມີນຄວນອະທິບາຍໃຫ້ພວກເຂົາລະອຽດ ໃນຫຼາຍໆຮອບ ແລະ ຊີ້ແຈງ ວ່າພວກເຮົາມານີ້ ແມ່ນບໍ່ໄດ້ມາ ປະເມີນພວກເຂົາ, ພວກເຮົາພຽງແຕ່ມາເກັບກຳຂໍ້ມູນ ເພື່ອໃຊ້ໃນການປັບປຸງ ແລະ ແກ້ໄຂເພື່ອໃຫ້ເປັນຜົນດີ.

2) ສຳພາດ ຊາວກະສິກອນ ແລະ ການສຳຫຼວດພາກສະໜາມ ເພື່ອຊອກຫາກໍລະນີສຶກສາທີ່ດີ.

- ຫຼັກໆແລ້ວ, ການສຳພາດ ແລະ ການສຳຫຼວດພາກສະໜາມ ແມ່ນຈະເກັບກຳເອົາຂໍ້ມູນທີ່ດີ. ທຸກໆໂຄງການ ແມ່ນມີຈຸດດີ ບໍ່ບ່ອນໃດກໍ່ບ່ອນໜຶ່ງ. ທີມຕິດຕາມ ແລະ ປະເມີນຜົນ ຕ້ອງພະຍາຍາມຊອກຫາໃຫ້ພົບ.
- ກ່ອນການສຳພາດ ແລະ ການສຳຫຼວດພາກສະໜາມ, ທີມຕິດຕາມ ແລະ ປະເມີນ ຈັດກອງປະຊຸມພາຍໃນທີມ ເພື່ອຊີ້ແຈງເຖິງຈຸດປະສົງ, ກະກຽມຄຳຖາມ, ແລະ ເຮັດວາລະການລົງສຳຫຼວດຕ່າງໆ.



ກອງປະຊຸມພາຍໃນທີມ



ຕາຕະລາງ ແລະ ຄຳຖາມ ການລົງສຳຫຼວດ

<ຈຸດທີ່ຄວນເໜັ້ນໜັກ ໃນການລົງສຳຫຼວດ>

ໃນການສຳຫຼວດນີ້ ແມ່ນຕ້ອງໄດ້ຮັບການຮ່ວມມື ແລະ ຍິນດີ ຈາກຊາວກະສິກອນເສຍກ່ອນ. ທີມຕິດຕາມ ແລະ ປະເມີນ ຕ້ອງເບິ່ງຄວາມສະດວກທາງດ້ານເວລາ ຂອງຊາວກະສິກອນ ເພາະ ກິດຈະກຳ ຊົນລະປະທານ, ກະສິກຳ ແລະ ການຕະຫຼາດ ແມ່ນເປັນກິດຈະກຳທີ່ມີປະໂຫຍດຫຼາຍຕໍ່ຊາວກະສິກອນ ເພາະພວກເຂົາໄດ້ຮຽນຮູ້ເຕັກນິກທີ່ສາມາດຊ່ວຍເພີ່ມລາຍຮັບໃຫ້ແກ່ເຂົາເຈົ້າ. ດັ່ງນັ້ນ ພວກເຂົາຈຶ່ງມີຄວາມຍິນດີ ທີ່ຈະຮ່ວມທຸກໆກິດຈະກຳຂອງເຫຼົ່າທີມດັ່ງກ່າວ, ແຕ່ວ່າທີມຕິດຕາມ ແລະ ປະເມີນ ບໍ່ຄ່ອຍມີຜົນຫຍັງຕໍ່ພວກເຂົາ, ສະນັ້ນ ພວກເຮົາຈຶ່ງຈຳເປັນຕ້ອງຄຳນຶງ ເຖິງເວລາ ກ່ອນທີ່ຈະຈັດສຳພາດ ຫຼື ລົງສຳຫຼວດພາກສະໜາມ ກັບເຂົາເຈົ້າ.

2-1) ການສໍາພາດຊາວກະສິກອນ

- ການສໍາພາດຊາວກະສິກອນຜູ້ເຂົ້າຮ່ວມການປະຕິບັດກິດຈະກໍາໂຄງການແມ່ນມີຄວາມສໍາຄັນຫລາຍ, ສະນັ້ນ ພະນັກງານຜູ້ຖືກແຕ່ງຕັ້ງ ຕ້ອງເອົາໃຈໃສ່ປະຕິບັດຕາມໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ສາມາດນໍາໃຊ້ແບບຟອມ ຕາຕະລາງ ......... ເບິ່ງເອກະສານຊ້ອນທ້າຍ;
- ໃນການສໍາພາດຊາວກະສິກອນ ແມ່ນຕ້ອງໃຊ້ເວລາຢ່າງໜ້ອຍ 30 ນາທີ ເພື່ອບໍ່ເປັນການລົບກວນ ເວລາຂອງເຂົາເຈົ້າ.


ການສໍາພາດ ຊາວກະສິກອນ


ການສໍາພາດ ຊາວກະສິກອນ

2-2) ການລົງສໍາຫຼວດພາກສະໜາມ ຫຼື ບ່ອນເຮັດຕົວຈິງຂອງຊາວກະສິກອນ:

- ພະນັກງານອາດຈະຖາມຊາວກະສິກອນແບບຄໍາເວົ້າທີ່ທໍາມະດາກໍ່ໄດ້ ເພື່ອໃຫ້ເຂົາຕອບແບບເປັນທໍາມະຊາດ (ບໍ່ກົດດັນ) ຫຼື ໃຫ້ຊາວກະສິກອນເລົ່າຄືນສິ່ງທີ່ເຂົາໄດ້ເຮັດຜ່ານມາ, ຈາກນັ້ນ ພະນັກງານຈະບັນທຶກຫຍໍ້ເອົາຂໍ້ມູນດັ່ງກ່າວ, ຖ້າຫາກສົນໃຈຈຸດໃດ ປະເດັນໃດ ກໍ່ໃຫ້ຕັ້ງຄໍາຖາມໆຄືນ ເພື່ອຄວາມກະຈ່າງແຈ້ງ. ຖ່າຍຮູບພາບໄວ້ເພື່ອປະກອບໃສ່ບົດລາຍງານຍິ່ງເປັນການດີ;


ການລົງສໍາຫຼວດພາກສະໜາມ


ການລົງສໍາຫຼວດຄອງ ຮ່ວມກັບເມືອງ

<ພວກເຮົາ ແມ່ນມີຄວາມເທົ່າທຽມກັນ.>
ຜູ້ຫຼັກໃນການປະຕິບັດວຽກ ຂອງໂຄງການ PAD ແມ່ນຊາວກະສິກອນ, ຜູ້ສົ່ງເສີມຫຼັກ ແມ່ນພະນັກງານເມືອງ. ໝາຍຄວາມວ່າພະນັກງານແຂວງ ກໍ່ມີຄວາມເທົ່າທຽມ ແລະ ຕ້ອງເຄົາລົບ ພະນັກງານເມືອງ ແລະ ຊາວກະສິກອນ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI, DAFO)*

(ແບບສອບຖາມ)

| | | | | | |
|---|---|---|---|---|---|
| **ຮ່າງຄຳຖາມ ສຳພາດຊາວນາຜູ້ເຂົ້າຮ່ວມກິດຈະກຳ ໂຄງການ** | | | | | |
| | | | | | |
| **1. ດ້ານການຜະລິດ ແລະ ລາຍຮັບ** | | | | | |
| ໄດ້ເຮັດນາແຊງບໍປີນີ້ | | | | | |
| ປີນີ້ປູກເຂົ້ານາປີ ຈັກເຮັກຕາ | | ຜົນຜະລິດຈັກກະສອບ | | ໄດ້ຂາຍຈັກກະສອບ/ໂຕນ | |
| ປີນີ້ປູກເຂົ້ານາແຊງ ຈັກເຮັກຕາ | | ຜົນຜະລິດຈັກກະສອບ | | ໄດ້ຂາຍຈັກກະສອບ/ໂຕນ | |
| ເຮັດສວນປູກຜັກບໍ ຈັກຕາແມັດ | | ມີຈັກຄົນແຮງງານເຮັດສວນ | | | |
| ມີຜັກຊະນິດໃດແດ່ / ຜັກຊະນິດໃດໄດ້ຂາຍດີ | | | | | |
| ໄປຂາຍຢູ່ໃສ/ມີຜູ້ມາຊື້/ຂາຍຍ່ອຍ ຫຼືຂາຍສົ່ງ | | | | | |
| ໄປຂາຍຈັກຄັ້ງ ຕໍ່ເດືອນ | | ໄດ້ຄັ້ງລະທໍ່ໃດ | | | |
| | | ລວມຍອດຂາຍມາຮອດປະຈຸບັນ | | | |
| **2. ການຈ່າຍເງິນຄ່ານ້ຳຊົລະປະທານ** | | | | | |
| ນາປີຜ່ານມາ(ຕ້ານແລ້ງ)ໄດ້ຈ່າຍເງິນຄ່າຊົນລະປະທານບໍ | | ຈຳນວນທໍ່ໃດ | | ຍັງຄ້າງທໍ່ໃດ | |
| ນາແຊງປີນີ້ຈ່າຍເງິນຄ່ານ້ຳຊົນລະປະທານບໍ | | ຈຳນວນທໍ່ໃດ | | ຍັງຄ້າງທໍ່ໃດ | |
| ໜີ້ຄ້າງຈ່າຍຜ່ານມາມີບໍ / ມີປີໃດແດ່ | | ຈຳນວນທໍ່ໃດ | | | |
| ຈ່າຍໃຫ້ໃຜ | | | | | |
| ມີໃບບິນບໍ/ຂໍເບິ່ງເປັນຫລັກຖານ | | | | | |
| **3. ດ້ານລາຍຈ່າຍຂອງຄອບຄົວ** | | | | | |
| ຈຳນວນໃນເຮືອນມີຈັກຄົນ | | ຄ່າໃຊ້ຈ່າຍສະເລ່ຍ/ເດືອນ | | ພຽງພໍ/ບໍ່ພຽງພໍ | |
| ຮຽນໜັງສືຈັກຄົນ | | | | | |
| ປະຖົມ | | ຄ່າໃຊ້ຈ່າຍສະເລ່ຍ/ເດືອນ | | | |
| ມັດທະຍົມ | | ຄ່າໃຊ້ຈ່າຍສະເລ່ຍ/ເດືອນ | | | |
| ມະຫາວິທະຍາໄລ/ວິທະຍາໄລ | | ຄ່າໃຊ້ຈ່າຍສະເລ່ຍ/ເດືອນ | | | |
| **4. ການສ້າງລາຍຮັບນອກການຜະລິດກະສິກຳ** | | | | | |
| ໃນຄອບຄົວມີຄົນໄປເຮັດວຽກນອກບໍ | | ເຮັດວຽກຍັງ/ເຄີຍໄປເຮັດເລື້ອຍໆບໍ | | ໄດ້ລາຍຮັບສະເລ່ຍ/ເດືອນ | |
| ໄປເຮັດວຽກຕ່າງປະເທດຈັກຄົນ | | | | | |
| ໄປເຮັດວຽກຕ່າງແຂວງຈັກຄົນ | | | | | |
| ໄປເຮັດວຽກຕ່າງເມືອງຈັກຄົນ | | | | | |
| ໄປເຮັດວຽກພາຍໃນບ້ານມີຈັກຄົນ | | | | | |
| ວຽກຫຍັງທີ່ສາມາດສ້າງລາຍຮັບໄດ້ຫຼາຍກວ່າໝູ່ | | | | | |
| ນອກຈາກວຽກນີ້ແລ້ວ ມີວຽກອື່ນໆບໍ | | | | | |
| **5. ຄວາມກະຕືລືລົ້ນ ຫຼື ຄວາມສົນໃຈອື່ນໆ** | | | | | |
| ແຕ່ກ່ອນມີພະນັກງານລັດ/ບໍລິສັດເຂົ້າມາຝຶກອົບຮົມບໍ | ຫົວຂໍ | | | ມີຈັກຄັ້ງ | |
| ປີໃດ | ຊື່ໂຄງການ | | | ຜູ້ໃຫ້ທຶນ | |
| ການຝຶກອົບຮົມໂຄງການນີ້...ມີຄວາມສົນໃຈແນວໃດ | | | | | |
| ຫົວຂໍ້/ເນື້ອໃນ/ວິທີການອົບຮົມ ແທດເໝາະກັບພວກເຮົາບໍ | | | | | |
| ໄດ້ນຳຄວາມຮູ້ໄປນຳໃຊ້ໃນຕົວຈິງບໍ | | | | | |
| ຜົນໄດ້ຮັບ/ມີການປ່ຽນແປງແນວໃດ | | | | | |
| ຄອບຄົວອື່ນໆ ໃກ້ຄຽງມີຄວາມສົນໃຈແນວໃດບໍ | | | | | |
| | | | | | |

* ແບບສອບຖາມນີ້ ເປັນພຽງຄຳຖາມ ທີ່ໃຊ້ຖາມທົ່ວໄປ, ຖ້າຜູ້ສຳພາດ ຢາກເໜັ້ນໄປຍັງຈຸດໃດໜຶ່ງ ແມ່ນສາມາດ ຖາມນອກຄຳຖາມທີ່ຕຽມມາໄດ້ ຂຶ້ນກັບສະຖານະການ.

## 4 ສະຫຼຸບຜົນການຕິດຕາມ ແລະ ປະເມີນຜົນ

| |
|---|
| 1) ທີມຕິດຕາມ ແລະ ປະເມີນຜົນ ສັງລວມຂໍ້ມູນທີ່ໄດ້ມາທັງໝົດ ພ້ອມສະຫຼຸບ.<br>2) ເພື່ອຕື່ມຂໍ້ມູນລົງໃສ່ ແບບຟອມກວດສອບ ແລະ ສ້າງຊາສເພື່ອປຽບທຽບ ດ້ານປະລິມານ ເຊັ່ນ: ການເພີ່ມຂຶ້ນຂອງສະມັດຕະພາບເຂົ້າ, ການເພີ່ມຂຶ້ນຂອງເນື້ອທີ່ ເຮັດການຜະລິດ ແລະ ປະລິມານ ການຂາຍຜົນຜະລິດ.<br>3) ທີມຕິດຕາມ ແລະ ປະເມີນ ການສ້າງບົດລາຍງານ ໂຄງການຕົວແບບ ເພື່ອເຜີຍແຜ່ຮູບແບບການປະຕິບັດຂອງໂຄງການ PAD |

(ອະທິບາຍ)

1) ເພື່ອສະຫຼຸບຂໍ້ມູນທັງໝົດ

ຂໍ້ມູນທີ່ໄດ້ມາທັງໝົດ ຈາກການຕິດຕາມພາກສະໜາມ ແລະ ການສຳພາດ ມີດັ່ງລຸ່ມນີ້:

ຜົນໄດ້ຮັບທາງກົງໃນດ້ານຕ່າງໆ:

1) ດ້ານຊົນລະປະທານ / ເນື້ອທີ່ຮັບນ້ຳຊົນລະປະທານເພີ້ມຂຶ້ນ ແລະ ຈຳນວນຄອບຄົວເຮັດນາແຊງເພີ້ມຂຶ້ນ.
2) ດ້ານການປູກເຂົ້າ / ສະມັດຖະພາບເຂົ້າເພີ້ມຂຶ້ນ.
3) ດ້ານການຕະຫຼາດ / ລາຍຮັບຈາກການຂາຍຜັກເພີ້ມຂຶ້ນ ແລະ ຈຳນວນຄອບຄົວປູກຜັກເພີ້ມຂຶ້ນ.
4) ດ້ານການຄຸ້ມຄອງບໍລິຫານກຸ່ມນຳໃຊ້ນ້ຳ / ກອງທຶນຊົນລະປະທານເພີ້ມຂຶ້ນ ສາມາດຊຳລະຄ່າກະແສໄຟຟ້າໄດ້ໃນແຕ່ລະປີ.

ຜົນໄດ້ຮັບທາງອ້ອມ:

ແມ່ນພະນັກງານ ແລະ ຊາວກະສິກອນ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ, ທັດທະນະສຶກສາ ແລະ ປະຕິບັດຕົວຈິງ ແລ້ວເກີດ ຄວາມຊຳນິຊຳນານ; ຜົນໄດ້ຮັບທາງອ້ອມນີ້ແມ່ນມີຄວາມສຳຄັນຫລາຍ ຕໍ່ຜົນໄດ້ຮັບທາງກົງ, ຜົນໄດ້ຮັບທາງກົງແມ່ນໝາກຜົນຂອງພະນັກງານທີ່ໄດ້ເຄື່ອນໄຫວໂດຍນຳໃຊ້ຜົນໄດ້ຮັບທາງອ້ອມ ຈຶ່ງສາມາດບັນລຸຜົນສຳເລັດໄດ້ໃນແຕ່ລະດ້ານ ທີ່ມີຄຸນນະພາບ ແລະ ປະລິມານໃນລະດັບໃດໜຶ່ງ (ເບິ່ງແບບຟອມຕິດຕາມ ເລກທີ 3)

2) ເພື່ອຕື່ມຂໍ້ມູນລົງໃສ່ ແບບຟອມກວດສອບ ແລະ ສ້າງຊາສເພື່ອປຽບທຽບດ້ານປະລິມານ

ທີມຕິດຕາມ ແລະ ປະເມີນຜົນ ຕື່ມຂໍ້ມູນລົງໃສ່ແບບຟອມ ເພື່ອກວດສອບເຖິງຜົນຜົນເລັດ ຂອງໂຄງການ ລວມທັງສ້າງເປັນຊາສ ຂໍ້ມູນທຽບປະລິມານ ເພື່ອໃຊ້ໃນການ ລາຍງານ.



ສະຫຼຸບຂໍ້ມູນ ແລະ ສ້າງຊາສທຽບປະລິມານ



ສ້າງຊາສເພື່ອປຽບທຽບ ດ້ານປະລິມານ

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI)*

## ແບບຟອມຕິດຕາມ ແລະ ປະເມີນ ຜົນສຳເລັດ

| ຕາຕະລາງ ບັນທຶກຜົນສຳເລັດຂອງໂຄງການ | | | ໂຄງການເປົ້າໝາຍ: | | | | ຕາຕະລາງ 6 | |
|---|---|---|---|---|---|---|---|---|
| | | | ສຳເລັດ | (ຄວາມຄິດເຫັນ) | ສຳເລັດ ໄດ້ບາງສ່ວນ | (ຄວາມຄິດເຫັນ) | ບໍ່ມີ ກິດຈະກຳ | (ຄວາມຄິດເຫັນ) |
| 1 ດ້ານ ກະສິກຳ (ເຂົ້າ) | | | | | | | | |
| | (1) | ປະລິມານ ຜົນຜະລິດ ເພີ່ມຂຶ້ນຢ່າງ ໜ້ອຍ 10% ນັບຕັ້ງແຕ່ເລີ່ມໂຄງການ. | | | | | | |
| | (2) | 50% ຂອງຄົວເຮືອນ ທີ່ມີຢູ່ ຕ້ອງເຂົ້າຮ່ວມ ປະຊຸມເຜີຍແຜ່ນະໂຍບາຍ ການກູ້ຢືມແນວພັນເຂົ້າແລະປຸ໋ຍ | | | | | | |
| | (3) | 70% ຂອງຄົວເຮືອນ ທີ່ເຂົ້າຮ່ວມ ການຝຶກອົບຮົມ ຕ້ອງນຳໃຊ້ ເຕັກນິກການປູກ ທີ່ຮຽນມາ ເຊັ່ນ: ການກະກຽມດິນ, ຄັດເລືອກເມັດພັນ, ການຄິດໄລ່ປຸ໋ຍ, ການຄວບຄຸມ ພະຍາດ ແລະ ແມງໄມ້, ການເກັບກ່ຽວ ລຽລ | | | | | | |
| 2 ດ້ານ ການຕະຫາດ (ຜັກ) | | | | | | | | |
| | (1) | ລາຍໄດ້ຈາກການຂາຍຜັກ ຂອງຄົວເຮືອນ ທີ່ເຂົ້າຮ່ວມກິດຈະກຳໂຄງການ PAD ເພີ່ມຂຶ້ນຢ່າງ ໜ້ອຍ 25% ຕັ້ງແຕ່ເລີ່ມໂຄງການ. | | | | | | |
| 3 ດ້ານ ຊົນລະປະທານ | | | | | | | | |
| | (1) | ເນື້ອທີ່ ຊົນລະປະທານ ເພີ່ມຂຶ້ນ ຢ່າງໜ້ອຍ 20% ຕັ້ງແຕ່ເລີ່ມໂຄງການ | | | | | | |
| 4 ດ້ານ ການບໍລິຫານກຸ່ມ | | | | | | | | |
| | (1) | ຈັດກອງປະຊຸມ ເພື່ອເຜີຍແຜ່ ໃນໄລຍະການຜະລິດລະດູແລ້ງ (ພະຈິກ - ເມສາ). | | | | | | |
| | (2) | ມີການ ບັນທຶກບັນຊີ ລາຍຮັບ-ລາຍຈ່າຍ ແລະສະຫລຸບ | | | | | | |
| | (3) | ສຳລະເງິນ ຄ່າກະແສໄຟຟ້າໄດ້ 100% | | | | | | |
| | (4) | ເກັບຄ່ານ້ຳ (ບໍລິຫານ,ກອງທຶນ ຊົນລະປະທານ) ຢ່າງໜ້ອຍ 95% | | | | | | |
| | (5) | ຊຳລະໜີ້ເກົ່າ ຄ່າກະແສໄຟຟ້າ ທີ່ມີຢູ່ ນັບຕັ້ງແຕ່ ເລີ່ມໂຄງການ. (ຕາມຫຼັກຖານ ການຕິດໜີ້ ຂອງຊາວກະສິກອນ ຜູ້ທີ່ບໍ່ມາຈ່າຍຄ່ານ້ຳ) | | | | | | |
| | (6) | ເງິນກອງທຶນ ຊົນລະປະທານ ເພີ່ມຂຶ້ນ ນັບຕັ້ງແຕ່ເລີ່ມ ໂຄງການ | | | | | | |
| | (7) | ກຸ່ມນຳໃຊ້ນ້ຳ ວາງແຜນໄລຍະຍາວ ເພື່ອສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ | | | | | | |
| | (8) | ກຸ່ມນຳໃຊ້ນ້ຳ ສາມາດສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ ດ້ວຍກຸ່ມເອງ | | | | | | |
| | (9) | ມີການ ເລືອກຕັ້ງ ຫຼື ປັບປຸງ ຄະນະກຸ່ມ ຕາມກົດລະບຽບຂອງກຸ່ມນຳໃຊ້ນ້ຳ | | | | | | |

## ຕົວຢ່າງ ຂໍ້ມູນ ການເພີ່ມຂຶ້ນຂອງເນື້ອທີ່ ແລະ ສະມັດຕະພາບ ໃນແຕ່ລະປີ









3) ການສ້າງບົດລາຍງານໂຄງການຕົວແບບ

- ທີມຕິດຕາມ ແລະ ປະເມີນ ຮັບຜິດຊອບໃນການ ລວບລວມຂໍ້ມູນທີ່ດີ ຈາກການສໍາພາດ ແລະ ການສໍາຫຼວດພາກສະໜາມ ເພື່ອລາຍງານໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງໄດ້ຮັບຮູ້.
- ໃນການເຜີຍແຜ່ຜົນສໍາເລັດຂອງຮູບແບບການປະຕິບັດ ໂຄງການ PAD ໄປຍັງເຂດອື່ນ, ຜູ້ທີ່ມີສ່ວນກ່ຽວຂ້ອງຈໍາເປັນຕ້ອງເຂົ້າທໍາຄວາມເຂົ້າໃຈການຈັດຕັ້ງປະຕິບັດໂຄງການ, ຖ້າຫາກວ່າ ຮູບແບບຂອງໂຄງການ ໄດ້ຈັດຕັ້ງປະຕິບັດໃນເຂດອື່ນ ພະນັກງານເມືອງ, ກຸ່ມນໍາໃຊ້ນໍ້າ ແລະ ຊາວກະສິກອນ ໃນເຂດນັ້ນຈໍາເປັນຕ້ອງຮູ້ ວິການແລະຮູບແບບຂອງໂຄງການ. ດັ່ງນັ້ນ ທີມຕິດຕາມ ແລະ ປະເມີນ ຈຶ່ງເຮັດບົດລາຍງານໂຄງການຕົວແບບຂຶ້ນມາ ເພື່ອລາຍງານໃຫ້ພວກເຂົາ.

<ຫຼັງຈາກໂຄງການເຂົ້າມາ ພວກເຂົາໄດ້ຮັບການປ່ຽນແປງ ຫຍັງແນ່?>

ໃນການສ້າງບົດລາຍງານໂຄງການຕົວແບບ, ພວກເຮົາບໍ່ໄດ້ເນັ້ນພຽງແຕ່ຕົວເລກຂອງຜົນໄດ້ຮັບ, ແຕ່ຍັງເນັ້ນເລື່ອງການປ່ຽນແປງ ດ້ານຊີວິດການເປັນຢູ່ຂອງຊາວກະສິກອນ, ສະພາບດ້ານເສດຖະກິດຄອບຄົວ, ແລະ ວຽກງານກະສິກໍາຂອງພວກເຂົາ.

ຈຸດປະສົງຫຼັກຂອງໂຄງການ PAD ແມ່ນເພີ່ມລາຍຮັບໃຫ້ແກ່ຊາວກະສິກອນ, ໃນການເພີ່ມລາຍຮັບໃຫ້ແກ່ພວກເຂົານັ້ນ ແມ່ນການສົ່ງເສີມ ການເພີ່ມ ສະມັດຕະພາບເຂົ້າ, ເພີ່ມປະລິມານ ການເກັບກ່ຽວພືດຜັກ ແລະ ການເພີ່ມເນື້ອທີ່ການຜະລິດ.

ດັ່ງນັ້ນ ບົດລາຍງານໂຄງການຕົວແບບ ຈຶ່ງຈໍາເປັນຕ້ອງສະແດງ ຂໍ້ມູນດັ່ງກ່າວ.

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI)*

(ບົດລາຍງານ ໂຄງການຕົວແບບ)

**<ໂຄງການ ຕົວແບບ 1> ໜອງບົວຫຼວງ** (ເນື້ອທີ່ 200 ເຮັກຕາ, 120 ຄົວເຮືອນ)

ລະບົບຊົນລະປະທານ: ຈັກສູບນ້ຳ 2 ເຄື່ອງ (37 kwh), ທໍ່ສົ່ງນ້ຳ ຍາວ L = 2,800m (ກ໊ອກ 21 ຫົວ)
ຈໍານວນຜູ້ທີ່ເຂົ້າຮ່ວມ ກິດຈະກໍາໂຄງການ: 120 ຄົວເຮືອນ (ຊົນລະປະທານ), 50 ຄົວເຮືອນ (ກໍາສິກໍາ (ເຂົ້າ)), 8 ຄົວເຮືອນ(ການຕະຫຼາດ)




ກຸ່ມ ຊົນລະປະທານ

ກິດຈະກໍາ
- ຝຶກອົບຮົມ ການບັນຊີ ແລະ ຕິດຕາມ ການບັນທຶກບັນຊີ.
- ທັດສະນະສຶກສາ ທີ່ໂຄງການຕົ້ນແຫນ ເພື່ອຮຽນຮູ້ ເລື່ອງ ການຈັດການກອງປະຊຸມ.
- ປະຕິບັດການ ກໍ່ສ້າງ ຄອງເໝືອງຂັ້ນສອງ.
- ຝຶກອົບຮົມ ການບໍາລຸງຮັກສາ ແລະ ສ້ອມແປງ ປໍ້າ.


ການກໍ່ສ້າງ ຄອງເໝືອງ


ຝຶກອົບຮົມ ການບັນຊີ


ຝຶກອົບຮົມສ້ອມແປງປໍ້າ

**ຜົນສໍາເລັດ**
- ເນື້ອທີ່ ການຜະລິດ 40 ຮ.ຕ (2017/18) ➡ 105 ຮ.ຕ (2019/20)
- ການເກັບເງິນຄ່ານໍ້າ 45%(2017/18) ➡ 80%(2018/19)
- ການຈ່າຍຄ່າໄຟຟ້າ 50%(2017/18) ➡ 100%(2018/19)
- ມີກອງປະຊຸມປົກກະຕິ
- ມີເງິນກອງທຶນ ຊົນລະປະທານ
- ມີການສ້າງແຜນ ສ້ອມແປງ ແລະ ບໍາລຸງຮັກສາ ໄລຍະຍາວ

## ກຸ່ມ ຜະລິດ ກະສິກຳ

ກິດຈະກຳ

- ການສ້າງຄວາມເຂັ້ມແຂງ ທາງດ້ານເຕັກນິກ ການປູກ (ນະໂຍບາຍ ການຢືມແນວພັນ ແລະ ປຸ໋ຍ).
  **[ຫົວຂໍ້ ການຝຶກອົບຮົມ]**
  ການກະກຽມດິນ, ການຄັດເລືອກ ເມັດພັນ, ການໃສ່ປຸ໋ຍຮອງພື້ນ, ການໃສ່ປຸ໋ຍເລັ່ງ, ການປ້ອງກັນ ພະຍາດ ແລະ ແມງໄມ້, ກ່ອນ ແລະ ຫຼັງ ການເກັບກ່ຽວ.
- ການລົງແນະນຳ ທາງດ້ານ ເຕັກນິກ ວິຊາການ ພາກສະໜາມ (IGF).



ການຝຶກອົບຮົມ



ລົງແນະນຳ ພາກສະໜາມ



ເບື້ອງຊ້າຍ: ນາທີ່ເຂົ້າຮ່ວມໂຄງການ
ເບື້ອງຂວາ: ນາທີ່ບໍ່ເຂົ້າຮ່ວມໂຄງການ

**ຜົນສຳເລັດ**

- ຈຳນວນຜູ້ເຂົ້າຝຶກອົບຮົມ ** ຄອບຄົວ (ນາແຊງ ປີ2018/19, ນາປີ ປີ2019, ນາແຊງ ປີ2019/20)
- ສະມັດຕະພາບເຂົ້າ ຂອງຜູ້ທີ່ເຂົ້າຮ່ວມ 2,020kg/ຮ.ຕ (ນາແຊງ2017/18) ➡ 2,882kg/ຮ.ຕ (ນາແຊງ 2018/19)

ຊີວິດການເປັນຢູ່ ຂອງຊາວກະສິກອນ ມີການປ່ຽນແປງຫຍັງແນ່? (ຈາກການສຳພາດ ເຫັນວ່າ)

- ❖ ພວກເຂົາມີ ລາຍໄດ້ເພີ່ມຂື້ນ ເນື່ອງຈາກວ່າ ສະມັດຕະພາບເຂົ້າສູງຂື້ນ, ຈຶ່ງສາມາດ ແບ່ງຂາຍໄດ້.
- ❖ ລາຍຮັບພວກເຂົາສາມາດສົ່ງເສີມຄອບຄົວໄດ້.
- ❖ ພວກເຂົາມີຄວາມເຊື່ອ ແລະ ແຮງຈູງໃຈ ໃນການປະຕິບັດຕາມເຕັກນິກຂອງໂຄງການ.
- ❖ ພວກເຂົາມີຄວາມພໍໃຈ ໃນຄູ່ຮ່ວມງານໂຄງການ ທີ່ລົງໄປ ສົ່ງເສີມທາງດ້ານເຕັກນິກ ແລະ ແນະນຳ ພາກສະໜາມ.

## ກຸ່ມ ການຕະຫຼາດ

ກິດຈະກຳ

- ປະຊຸມກັບຊາວບ້ານເພື່ອປະກາດ ການເຂົ້າຮ່ວມ ກິດຈະກຳ ການຕະຫຼາດ ແລະ ການປູກຜັກ.
- ຝຶກອົບຮົມ ໃຫ້ຊາວກະສິກອນ ຫົວຂໍ້:
  ການທົບທວນ ສະຖານະການ ການເງິນໃນປະຈຸບັນ, ການເລືອກພືດປູກ ຕາມການສຳຫຼວດຕະຫຼາດ ຂອງຊາວກະສິກອນ, ຈັດຝຶກອົບຮົມ ເຕັກນິກການປູກຂັ້ນພື້ນຖານ (ການເຮັດຝຸ່ນໝັກ, ການເຮັດນ້ຳໝັກ ຊີວະພາບ, ການກະກຽມດິນ ແລະ ອື່ນໆ.), ການສ້າງແຜນ ການປູກ, ການທັດສະນະສຶກສາ, ການລົງສົ່ງເສີມທາງດ້ານເຕັກນິກ ແລະ ພາກສະໜາມ.
- ການສົ່ງເສີມການຂາຍ ຜ່ານ (Facebook, ການໂຄສະນາ ທາງໂທລະພາບ, ການລົງຢ້ຽມຢາມ ຮ້ານອາຫານ...)
- ແນະນາ ການສ້າງເຮືອນຮົ່ມ ເພື່ອປູກພືດໃນລະດູຝົນ.



ຝຶກອົບຮົມ (ສ້າງແຜນການປູກ)



ຝຶກອົບຮົມ ການເຮັດຝຸ່ນໝັກ



ສ້າງທຸລະກິດ ໃນການປູກພືດ



ການສ້າງເຮືອນຮົ່ມ ເພື່ອປູກພືດໃນລະດູຝົນ.

**ຜົນສຳເລັດ**

ຊີວິດການເປັນຢູ່ ຂອງຊາວກະສິກອນ ມີການປ່ຽນແປງຫຍັງແນ່? (ຈາກການສຳພາດ ເຫັນວ່າ)

- ❖ ລາຍຮັບເພີ່ມຂຶ້ນ ຈາກການຂາຍຜັກ, ເສດຖະກິດ ຄອບຄົວ ແມ່ນດີຂຶ້ນກວ່າແຕ່ກ່ອນ.
- ❖ ຊາວນາລົງທຶນ ໃນການຊື້ຈັກສູບນ້ຳ ເພື່ອຕອບສະໜອງການປູກພືດຜັກໃຫ້ຫຼາຍຂຶ້ນ (ກ່ອນໜ້ານີ້ ພວກເຂົາໃຊ້ບົວໃນການຫົດຜັກ)
- ❖ ແຮງຈູງໃຈ ຂອງຊາວກະສິກອນແມ່ນສູງ ເພາະໄດ້ຮັບການສົ່ງເສີມທາງດ້ານເຕກນິກ ແລະ ພາກສະໜາມ ຈາກຄູ່ຮ່ວມງານ.
- ❖ ຊາວກະສິກອນ ຕ້ອງການຂະຫຍາຍເຮືອນຮົ່ມ ເພີ່ມລາຍຮັບ ຈາກການປູກຜັກໃຫ້ຫຼາຍຂຶ້ນ.

## 5 ການພິຈາລະນາ ແລະ ການຢຸດຕິການສົ່ງເສີມກິດຈະກໍາທີ່ສໍາເລັດ

1) ໂຄງການ PAD ແມ່ນເປັນໂຄງການທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນ, ຖ້າຊາວກະສິກອນມີຄວາມເຂັ້ມແຂງໃນກິດຈະກໍາໃດໜຶ່ງ ທີມຕິດຕາມ ແລະ ປະເມີນ ຈໍາເປັນຕ້ອງພິຈາລະນາ ເຖິງການຢຸດຕິການສົ່ງເສີມກິດຈະກໍາທີ່ສໍາເລັດຜົນ ແລະ ລາຍງານໃຫ້ກອງປະຊຸມ PAPC ເພື່ອຂໍຄວາມເປັນເອກະພາບໄປນໍາກັນ.

(ອະທິບາຍ)

1) ເພື່ອພິຈາລະນາ ປະສິດທິຜົນການນໍາໃຊ້ງົບປະມານຂອງໂຄງການ ແລະ ປະໂຫຍດຂອງກິດຈະກໍາ ທີ່ຈັດຕັ້ງປະຕິບັດ.

- ງົບປະມານຂອງໂຄງການທີ່ໃຊ້ໃນການຈັດຕັ້ງປະຕິບັດກິດຈະກໍາໃດໜຶ່ງ ຖ້າຜົນອັດຕາສ່ວນ ອອກມາ ຕໍ່າກວ່າ ຫຼື ທຽບເທົ່າ 100% ສະແດງວ່າການນໍາໃຊ້ງົບປະມານໃນກິດຈະກໍານັ້ນ ບໍ່ມີປະສິດທິຜົນ ຈໍາເປັນຕ້ອງຢຸດການປະຕິບັດກິດຈະກໍານັ້ນ, ຖ້າຜົນອັດຕາສ່ວນອອກມາ ສູງກວ່າ 100% ຖືວ່າມີປະສິດທິຜົນ ແລະ ສາມາດສືບຕໍ່ກິດຈະກໍານັ້ນໄດ້.
- ຫຼັງຈາກທີ່ ທີມຕິດຕາມ ແລະ ປະເມີນຜົນ ລວບລວມຂໍ້ມູນ ການນໍາໃຊ້ງົບປະມານຂອງໂຄງການ ແລະ ປະໂຫຍດຂອງກິດຈະກໍາ ທີ່ຈັດຕັ້ງປະຕິບັດ ຈາກນັ້ນ ພວກເຂົາເອົາມາຄິດໄລ່ ເພື່ອເບິ່ງປະສິດທິຜົນ.

  * **ປະໂຫຍດຂອງກິດຈະກໍາ**: ແມ່ນການທຽບ ລາຍຮັບຈາກການຂາຍເຂົ້າ ແລະ ຜັກ ທີ່ເພີ່ມຂຶ້ນ ໃນລະຫວ່າງທີ່ໂຄງການສົ່ງເສີມ

  * **ງົບປະມານຂອງໂຄງການ**: ແມ່ນງົບປະມານ ທີ່ພະນັກງານ ຂັ້ນແຂວງ ແລະ ຂັ້ນເມືອງນໍາໃຊ້ໃນການ ປະຕິບັດກິດຈະກໍາ ພາຍໃນໂຄງການເປົ້າໝາຍ.

  * **ອັດຕາສ່ວນ** = ປະໂຫຍດຂອງກິດຈະກໍາ / ງົບປະມານຂອງໂຄງການ

2) ເພື່ອລາຍງານໃຫ້ ກອງປະຊຸມ PAPC ແລະ ສ້າງຄວາມເຫັນດີເຫັນພ້ອມ ໃນການຢຸດຕິການສົ່ງເສີມກິດຈະກໍາ ທີ່ສໍາເລັດຜົນ

- ທີມຕິດຕາມ ແລະ ປະເມີນ ພິຈາລະນາ ການຢຸດຕິການສົ່ງເສີມກິດຈະກໍາ ຕາມແບບຟອມກວດສອບ, ຖ້າຜົນອອກມາສໍາເລັດທັງໝົດ ຕາມທີ່ລະບຸໄວ້ ໂຄງການເປົ້າໝາຍດັ່ງກ່າວ ຈຶ່ງຈໍາເປັນຕ້ອງຢຸດຕິການສົ່ງເສີມ ນັ້ນໝາຍຄວາມວ່າ ພະນັກງານເມືອງ, ກຸ່ມນໍາໃຊ້ນໍ້າ ແລະ ຊາວກະສິກອນ ມີຄວາມເຂັ້ມແຂງແລ້ວ ພວກເຂົາສາມາດ ດໍາເນີນກິດຈະກໍາໄດ້ເອງ ໂດຍບໍ່ມີ ໂຄງການສົ່ງເສີມ.
- ທີມຕິດຕາມ ແລະ ປະເມີນ ເຮັດບົດລາຍງານ ເພື່ອລາຍງານ ໃຫ້ຄະນະ PAPC.
- ທີມງານຕິດຕາມປະເມີນຜົນ ຕ້ອງໄດ້ຮ່າງບົດສະຫຼຸບກ່ຽວກັບການຕິດຕາມປະເມີນຜົນ ໃນແຕ່ລະໄລຍະ ແຕ່ລະໂຄງການ ເພື່ອລາຍງານຜ່ານກອງປະຊຸມ ແລະ ລາຍງານພາກສ່ວນກ່ຽວຂ້ອງໄດ້ຮັບຊາບປັນທາງການ ແລະ ມີທິດຊີ້ນໍາໃນຕໍ່ໄປ

*ຜູ້(ຜູ້ຈັດຕັ້ງປະຕິບັດ: PAFO, DPI)*

(ຕົວຢ່າງ ທີ່ໃຊ້ລາຍງານໃນກອງປະຊຸມ PAPC)

ແກ້ງກອກເໜືອ (KKN)

## ໂຄງການ ແກ້ງກອກເໜືອ

ເນື້ອທີ່: 105 ເຮັກຕາ, ຈຳນວນ ຄົວເຮືອນ: 59 ຄົວເຮືອນ
ລະບົບຊົນລະປະທານ:
- ຄອງເໝືອງແມ່ ຍາວ L= 2000m (ຄອງເປຕົງ 300m, ຄອງດິນ 1700m)
- ຄອງຂັ້ນສອງ ຍາວ L=2000m
- ສະຖານີ ຈັກສູບນ້ຳ (ມີ 2 ເຄື່ອງ, 75 kwh)







ແກ້ງກອກເໜືອ (KKN)

1. ດ້ານ ອົງກອນ ຜູ້ນຳໃຊ້ນ້ຳ ແລະ ຊາວກະສິກອນ
   1) ໄດ້ຈັດຝຶກອົບຮົມ ເຕັກນິກ ການປູກເຂົ້າ (ຜູ້ເຂົ້າຮ່ວມ: 9 ທ່ານ, ຫົວຂໍ້ ການຝຶກອົບຮົມ: ເຕັກນິກການກະກຽມດິນ, ຄັດເລືອກເມັດພັນ, ການໃສ່ປຸ໋ຍ, ການຄວບຄຸມ ພະຍາດ ແລະ ແມງໄມ້, ການເກັບກ່ຽວ ລຽລ
   2) ໄດ້ຈັດຝຶກອົບຮົມ ການສ້ອມແປງ ແລະ ບຳລຸງຮັກສາຄອງ ລວມທັງ ການບັນຊີ(ຜູ້ເຂົ້າຮ່ວມ:ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານເມືອງ, ຫົວຂໍ້ ການຝຶກອົບຮົມ: ການບັນທຶກບັນຊີ, ການເຮັດແຜນ ຟື້ນຟູ ໄລຍະຍາວ)
   3) ໄດ້ໄປທັດສະນະ ສຶກສາ ແລກປ່ຽນບົດຮຽນ ດ້ານບັນຊີ ກັບກຸ່ມຕົ້ນແບບ (ຜູ້ເຂົ້າຮ່ວມ: ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານເມືອງ)
   4) ໄດ້ຈັດຝຶກອົບຮົມ ການສ້ອມແປງປໍ້າ (ຜູ້ເຂົ້າຮ່ວມ: ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານ ເມືອງ, ຫົວຂໍ້ ການຝຶກອົບຮົມ: ການກວດສອບ ປະຈຳວັນ ແລະ ການບຳລຸງຮັກສາປໍ້າ, ການຖຽນປໍ້າ)

2. ການສ້າງຄວາມອາດສາມາດ ໃຫ້ແກ່ ຄູ່ຮ່ວມງານ
   1) ໄດ້ຈັດຝຶກອົບຮົມ ການສ້ອມແປງ ແລະ ບຳລຸງຮັກສາຄອງ ລວມທັງ ການບັນຊີ (ຜູ້ເຂົ້າຮ່ວມ:ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານເມືອງ)
   2) ໄດ້ໄປທັດສະນະ ສຶກສາ ແລກປ່ຽນບົດຮຽນ ດ້ານບັນຊີ ກັບກຸ່ມຕົ້ນແບບ (ຜູ້ເຂົ້າຮ່ວມ: ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານ ເມືອງ)
   3) ໄດ້ຈັດຝຶກອົບຮົມ ການສ້ອມແປງປໍ້າ (ຜູ້ເຂົ້າຮ່ວມ: ກຸ່ມຜູ້ນຳໃຊ້ນ້ຳ ແລະ ພະນັກງານ ເມືອງ)
   4) ໄດ້ຈັດຝຶກອົບຮົມ ເມຕະ (ຜູ້ເຂົ້າຮ່ວມ: ພະນັກງານເມືອງ 3 ທ່ານ)
   5) ໄດ້ຈັດຝຶກອົບຮົມ ດ້ານຕະຫຼາດ ກະສິກຳ (ຜູ້ເຂົ້າຮ່ວມ: ພະນັກງານເມືອງ, ຫົວຂໍ້ ການຝຶກອົບຮົມ: ການວິເຄາະ ແລະ ສຳຫຼວດຕະຫຼາດ, ການເລືອກພືດປູກ, ການສົ່ງເສີມ ການຂາຍ)

3. ຄ່າໃຊ້ຈ່າຍ ໃນການສົ່ງເສີມກິດຈະກຳ
   1) ການຜະລິດລະດູແລ້ງ ປີ 2017/18: 5,024,250 ກີບ
   2) ການຜະລິດລະດູແລ້ງ ປີ 2018/19: 5,195,000 ກີບ

## ແບບຟອມ ການກວດສອບ ຜົນສຳເລັດຂອງໂຄງການ

**ແກ້ງກອກເໜືອ (KKN)**

| 1 ດ້ານ ກະສິກຳ (ເຂົ້າ) | | ສຳເລັດ | ສຳເລັດ ໄດ້ບາງສ່ວນ | ບໍ່ມີ ກິດຈະກຳ |
|---|---|---|---|---|
| (1) | ປະລິມານ ຜົນຜະລິດ ເພີ່ມຂຶ້ນ ຢ່າງ ໜ້ອຍ 10% ນັບຕັ້ງແຕ່ ມື້ເລີ່ມໂຄງການ. | | * ເພີ່ມຂຶ້ນ 5.5% ກ່ອນໂຄງການ 4,000 ກິໂລ/ເຮັກຕາ -> ປັດຈຸບັນ 4,220 ກິໂລ/ເຮັກຕາ | |
| (2) | 50% ຂອງຄົວເຮືອນ ທີ່ມີຢູ່ ຕ້ອງເຂົ້າຮ່ວມ ການຝຶກອົບຮົມ ນະໂຍບາຍ ການຍືມແນວພັນ | | * ຄົວເຮືອນ ທີ່ເຂົ້າຮ່ວມ ຝຶກອົບຮົມ ມີພຽງແຕ່ 15% (9ຄົວເຮືອນ/59ຄົວເຮືອນ) | |
| (3) | 70% ຂອງຄົວເຮືອນ ທີ່ເຂົ້າຮ່ວມ ການຝຶກອົບຮົມ ຕ້ອງນຳໃຊ້ ເຕັກນິກການປູກ ທີ່ຮຽນມາ ເຊັ່ນ: ເຕັກນິກການ ກະກຽມດິນ, ຄັດເລືອກເມັດພັນ, ການໃສ່ປຸ໋ຍ, ການຄວບຄຸມ ພະຍາດ ແລະ ແມງໄມ້, ການເກັບກ່ຽວ ລຽງ | | * 56% ຂອງຄົວເຮືອນ ທີ່ເຂົ້າຮ່ວມ ໄດ້ນຳໃຊ້ ເຕັກນິກ ຂອງໂຄງການ (5ຄົວເຮືອນ/9ຄົວເຮືອນ) | |
| **2 ດ້ານ ການຕະຫຼາດ (ຜັກ)** | | | | |
| (1) | ລາຍໄດ້ຈາກການຂາຍຜັກ ຂອງຄົວເຮືອນ ທີ່ເຂົ້າຮ່ວມໂຄງການ PAD ເພີ່ມຂຶ້ນຢ່າງ ໜ້ອຍ 25% ຕັ້ງແຕ່ ມື້ເລີ່ມໂຄງການ. | | | * ຊາວກະສິກອນ ເຂດນີ້ ບໍ່ສົນໃຈ ທີ່ຈະເຂົ້າຮ່ວມ ກິດຈະກຳ ການປູກຜັກ ຕາມແນວທາງ ຂອງ ໂຄງການ PAD |
| **3 ດ້ານ ຊົນລະປະທານ** | | | | |
| (1) | ເນື້ອທີ່ ຊົນລະປະທານ ເພີ່ມຂຶ້ນ ຢ່າງໜ້ອຍ 20% ຕັ້ງແຕ່ ມື້ເລີ່ມ ໂຄງການ | | * ປີທີ 1 ແລະ 2 ແມ່ນເນື້ອທີ່ ຫຼຸດລົງ, ແຕ່ຄາດວ່າ ໃນປີນີ້ ຈະເພີ່ມຂຶ້ນ | |

**ແກ້ງກອກເໜືອ (KKN)**

| 4 ດ້ານ ອົງກອນ ຜູ້ນຳໃຊ້ນ້ຳ | | ສຳເລັດ | ສຳເລັດ ໄດ້ບາງສ່ວນ | ບໍ່ມີ ກິດຈະກຳ |
|---|---|---|---|---|
| (1) | ຈັດກອງປະຊຸມ ເພື່ອເຜີຍແຜ່ ໃນຊ່ວງການຜະລິດລະດູແລ້ງ (ພະຈິກ - ເມສາ). | | * ໄດ້ຈັດຂຶ້ນ ໃນເດືອນ ພະຈິກ 2019 ເທົ່ານັ້ນ. | |
| (2) | ມີການ ບັນທຶກ ບັນຊີ ລະອຽດ | * ກຸ່ມຜູ້ນຳໃຊ້ນ້ຳ ໄດ້ມີການບັນທຶກບັນຊີ ລະອຽດ | | |
| (3) | ຈ່າຍເງິນ ຄ່າກະແສໄຟຟ້າ ໄດ້ 100% | * ຄ່າກະແສໄຟຟ້າ ປີ 2018/19 ແມ່ນຈ່າຍແລ້ວ 100%. | | |
| (4) | ຄ່ານ້ຳ (ບໍລິຫານ,ກອງທຶນ ຊົນລະປະທານ) ເກັບໄດ້ ຢ່າງໜ້ອຍ 95% ຕາມແຜນ | * ການເກັບເງິນຄ່ານ້ຳ ແມ່ນໄດ້ 100%. | | |
| (5) | ຈ່າຍ ໜີ້ເກົ່າ ຄ່າກະແສໄຟຟ້າ ທີ່ມີຢູ່ ນັບຕັ້ງແຕ່ເລີ່ມໂຄງການ. (ຕາມຫຼັກຖານ ການຕິດໜີ້ຂອງຊາວກະສິກອນ ຜູ້ທີ່ບໍ່ມາຈ່າຍຄ່ານ້ຳ) | | * ກຸ່ມຜູ້ນຳໃຊ້ນ້ຳ ໄດ້ທະຍອຍ ຈ່າຍໜີ້ເກົ່າ ຄ່າກະແສ ໄຟຟ້າ | |
| (6) | ເງິນກອງທຶນ ຊົນລະປະທານ ເພີ່ມຂຶ້ນ ນັບຕັ້ງແຕ່ມື້ເລີ່ມ ໂຄງການ | | * ເພິ່ງໄດ້ ເລີ່ມມີເງິນກອງທຶນ (3,000,000ກີບ, ໃນປັດຈຸບັນ) | |
| (7) | ກຸ່ມຜູ້ນຳໃຊ້ນ້ຳ ກະກຽມແຜນ ໄລຍະຍາວ ເພື່ອສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ | * ສຳເລັດແລ້ວ | | |
| (8) | ກຸ່ມຜູ້ນຳໃຊ້ນ້ຳ ສາມາດສ້ອມແປງ ແລະ ບຳລຸງຮັກສາ ລະບົບຊົນລະປະທານ ດ້ວຍຕົນເອງ | * ໃນການຜະລິດ ລະດູແລ້ງ ປີ 2019/20 ໄດ້ນຳໃຊ້ ຈັກສູບນ້ຳ ສອງເຄື່ອງ ແລະ ໄດ້ມີການຂະຫຍາຍຄອງ | | |
| (9) | ມີການ ເລືອກຕັ້ງ ຫຼື ປັບປຸງ ຄະນະກຸ່ມ ຕາມກົດລະບຽບ | * ໄດ້ປະຕິບັດ ສຳເລັດໃນປີ 2019 | | |

**ສະຫຼຸບໃນແຕ່ລະດ້ານ**

1. ດ້ານ ກະສິກໍາ
   1) ຜົນຜະລິດເຂົ້າ ແມ່ນເພີ່ມຂຶ້ນ 5.5% ຖ້າທຽບໃສ່ ກ່ອນໂຄງການ.
   2) ການເຂົ້າຮ່ວມນະໂຍບາຍກູ້ຢືມແນວພັນ ແລະ ການນໍາໃຊ້ເຕັກນິກການປູກ ເຊັ່ນ: ການກຽມດິນ, ການຄັດເລືອກແນວພັນ, ການໃສ່ຝຸ່ນ, ການຄວບຄຸມພະຍາດ ແລະ ແມງໄມ້, ການເກັບກ່ຽວ ແລ້ ອື່ນໆ ຍັງເຮັດບໍ່ທັນໄດ້ດີຜູ້ເຂົ້າຮ່ວມມີພຽງ 15% ເທົ່ານັ້ນ.

2. ດ້ານ ຊົນລະປະທານ ແລະ ກຸ່ມຜູ້ນໍາໃຊ້ນໍ້າ
   1) ເນື້ອທີ່ການຜະລິດ ບໍ່ໄດ້ເພີ່ມຂຶ້ນໃນປີ 1 ແລະ 2 ເນື້ອທີ່ຫຼຸດລົງ.
   2) ກຸ່ມຜູ້ນໍາໃຊ້ນໍ້າ ບໍ່ໄດ້ຈັດກອງປະຊຸມເຜີຍແຜ່ ເປັນປົກະຕິ,
   3) ການເກັບເງິນ ຄ່ານໍ້າ ແລະ ຈ່າຍຄ່າໄຟ ແມ່ນສໍາເລັດ 100% ໃນປີຜ່ານມາ.
   4) ກຸ່ມຜູ້ນໍາໃຊ້ນໍ້າຈ່າຍໜີ້ເກົ່າ ຄ່າກະແສໄຟຟ້າ.
   5) ເງິນກອງທຶນກຸ່ມມີເລັກໜ້ອຍ ບໍ່ໄດ້ຕາມແຜນ.
   6) ກຸ່ມມີແຜນສ້ອມແປງໄລຍະຍາວ ແລະ ບໍາລຸງຮັກສາ ແລະ ສ້ອມແປງດ້ວຍຕົນເອງ.
   7) ສໍາເລັດການເລືອກຕັ້ງຄະນະກຸ່ມໃໝ່ ໃນປີ 2019.

**ສະຫຼຸບລວມ**

ຈາກການປະເມີນຜົນສໍາເລັດເຫັນວ່າ ບັນລຸໄດ້ບາງສ່ວນ. ແຕ່ລະທີມງານ ຕ້ອງໄດ້ປັບປຸງກິດຈະກໍາຂອງພວກເຂົາ ເພື່ອເຮັດໃຫ້ໂຄງການນີ້ ໄດ້ບັນລຸຜົນ, ຫຼັງຈາກການເກັບກ່ຽວນາແຊງ ປີນີ້ ທີມປະເມີນຈະໄດ້ລົງຕິດຕາມອີກຄັ້ງ

Attachment

1 Rice cultivation training materials

(1) Training 1

(Timing of training--- For dry season: November, For rainy season: June)

(2) Training 2

(Timing of training--- For dry season: December-January, For rainy season: July-August)

Training 3

(Timing of training--- For dry season: January-February, For rainy season: August-September)

(3) Training 4

(Timing of training--- For dry season: March, For rainy season: September)

(Training 1)

Slide 1

**ວິທີການໂດຍລວມກ່ຽວກັບການປູກເຂົ້າ**



ຮຽບຮຽງໂດຍ: ທ່ານ ຈີນລະຄອນ
ທ່ານ ພອນສັກ
ໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ
(Savan PAD/JICA)

Slide 2

**ສາລະບານ**

1. ປະຕິທິນການປູກເຂົ້າໂດຍລວມ
2. ການຄັດເລືອກເມັດພັນດ້ວຍນ້ຳເກືອ
3. ການແຊ່ ແລະ ການອົບເຂົ້າປູກ
4. ການກະກຽມຕາກ້າ ແລະ ການຫວ່ານກ້າ
5. ການເຮັດນາຫວ່ານ ແລະ ປັກດຳ
6. ການຄິດໄລ່ຊ່ວງເວລາ ແລະ ປະລິມານໃນການໃສ່ປຸ໋ຍ

Slide 3

## 1. ປະຕິທິນການປູກເຂົ້າໂດຍລວມ

1.1 ປະຕິທິນການປູກເຂົ້ານາດຳ



(Training 1)

Slide 4




Slide 5

## 2. ວິທີຄັດເລືອກເມັດພັນໂດຍໃຊ້ນ້ຳເກືອ

- ເອົານ້ຳເກືອປະສົມໃສ່ນ້ຳໃນຖຸໃຫ້ມີຄວາມຖ່ວງຈຳເພາະປະມານ 1.06.
- ເກືອ 2 ກິໂລ, ນ້ຳ 30 ລິດປະສົມໃຫ້ເຂົ້າກັນລະອຽດເພື່ອກວດເບິ່ງຄວາມດຸ່ນ ດ່ຽງຂອງໄຂ່ດິບທີ່ເຮົາເຫັນດັ່ງໃນຮູບທີ່ 01 ຂ້າງລຸ່ມ:
- ເມື່ອສັງເກດເຫັນໄຂ່ມີລັກສະນະແນວນອນສະແດງວ່າຢູ່ໃນນ້ຳບໍ່ມີເກືອປະສົມ (1.00)
- ເມື່ອສັງເກດເຫັນໄຂ່ມີລັກສະນະແນວຕັ້ງ(1.08)ສະແດງວ່າຄວາມເຂັ້ມຂຸ້ນຂອງເກືອຢູ່ໃນປະລິມານສູງໂພດ, ບໍ່ເໝາະສົມໃນການຄັດເລືອກເມັດພັນເຂົ້າໜຽວ.
- ເມື່ອສັງເກດເຫັນໄຂ່ມີລັກສະນະທ່າອ່ຽງ(1.06)ສະແດງວ່າຄວາມເຂັ້ມຂຸ້ນຂອງເກືອຢູ່ໃນປະລິມານທີ່ເໝາະສົມສຳລັບການຄັດເລືອກເມັດພັນເຂົ້າໜຽວ.

Slide 6



(Training 1)

Slide 7




Slide 8




Slide 9



(Training 1)

Slide 10

### 3. ການແຊ່ ແລະ ການອີບເຂົ້າປູກ

3.1 ການແຊ່

- ບັນຈຸແນວພັນເຂົ້າໃສ່ກະສອບ(ກະສອບທວຽດຫຼືກະສອບປ່ານ)ມັດປາກກະສອບໃຫ້ແໜ້ນ ແລ້ວເອົາລົງແຊ່ນ້ຳປະມານ 24 ຊົ່ວໂມງ(1ມື້ກັບ1ຄືນ)



Slide 11

3.2 ການອີບເຂົ້າປູກ

- ກຽມສະຖານທີ່ອີບ ຄວນປູເຟືອງໜາ 10 ຊມ
- ເອົາກະສອບເຂົ້າປູກທີ່ແຊ່ຂຶ້ນຈາກນ້ຳ ແລ້ວວາງລົງທາງນອນ, ຫຼັງຈາກນັ້ນກໍ່ເອົາເຟືອງມາປົກ. ໃນຊ່ວງອີບໃຫ້ກວດກາ ເຊົ້າ-ແລງ ຖ້າເຫັນວ່າເຂົ້າປູກແຫ້ງໃຫ້ຫົດນ້ຳກະສອບ.
- ໃນການຫົດແຕ່ລະຄັ້ງໃຫ້ປີ້ນກະສອບ ເພື່ອຮັກສາຄວາມຊຸ່ມ ແລະ ອຸ່ນະພູມໃຫ້ສະໝໍ່າສະເໝີ
- ໃນກໍລະນີທີ່ແຊ່ໃນໜອງທີ່ມີນ້ຳຂຸ້ນຄວນລ້າງເຂົ້າປູກໃຫ້ສະອາດກ່ອນຈຶ່ງອີບ.
- ປະໄວ້36ຊົ່ວໂມງ ຫຼື1ມື້ເຄິ່ງ ແລະກວດເບິ່ງວ່າເຂົ້າງອກດີ ຫຼັງຈາກນັ້ນກໍ່ນຳໄປຫວ່ານໄດ້ເລີຍ.



Slide 12

### 4. ການກຽມຕາກ້າ ແລະ ການຫວ່ານກ້າ

4.1 ການກະກຽມຕາກ້າ

- ເນື້ອທີ່ຕາກ້າປະມານ 600 ຫາ 1,000ຕາແມັດ ສາມາດຫວ່ານເຂົ້າປູກ 60 ກລ,
- ຄວນເລືອກໄຮ່ນາທີ່ຢູ່ໃກ້ກັບແຫຼ່ງນ້ຳ,ສາມາດລະບາຍນ້ຳເຂົ້າ-ອອກໄດ້ດີ
- ຄວນເລືອກໄຮ່ນາທີ່ເປັນດິນທີ່ອຸດົມສົມບູນ (ເພາະຖ້າກ້າງາມ ເຂົ້າກໍ່ມີເປີເຊັນງາມສູງ)
- ຄວນໄຖສອງຄັ້ງ ຄືໄຖຮຸດ ແລະໄຖຄົ້ນ



(Training 1)

Slide 13

- ຫຼັງຈາກໄຖຄົ້ນແລ້ວ ຄາດໃຫ້ລະອຽດ 2-3 ຄັ້ງ ແລະປັບໜ້າດິນໃຫ້ຮາບພຽງດີ,
- ແບ່ງໄຮ່ນາເປັນໜານຂະໜາດລວງກວ້າງ 2 ແມັດ ສ່ວນລວງຍາວຕາມຄວາມຍາວຂອງໄຮ່ນາ
- ເຮັດຮ່ອງລະບາຍນ້ຳລະຫວ່າງໜານກວ້າງປະມານ 40 – 50 ຊມ
- ກ່ອນຈະຫວ່ານກ້າຕ້ອງລະບາຍນ້ຳອອກໃຫ້ໝົດ





Slide 14

### 4.2 ການຫວ່ານກ້າ

- ອັດຕາແນວພັນເຂົ້າ80ຫາ100ກຣາມຕໍ່1ຕາແມັດ,
- ຫວ່ານໃຫ້ສະໝ່ຳສະເໝີໃຫ້ແນວພັນເຂົ້າຝັງດິນປະມານ 2ສ່ວນ 3ຂອງເມັດ
- ບໍ່ຄວນໃຫ້ເມັດເຂົ້າຫຼົບຕົມໂພດຈະເຮັດໃຫ້ຕົ້ນກ້າຝັງດິນເລິກ ເວລາຫຼົກກ້າຈະເຮັດໃຫ້ກ້າໂປດ

❖ ການບົວບັດຮັກສາກ້າ

- ຫຼັງຈາກຫວ່ານກ້າໄດ້ 5 ມື້ໃຫ້ຮັກສາລະດັບນ້ຳໃນຕາກ້າປະມານ 1 ຊມ
- ຫຼັງຈາກນັ້ນໃຫ້ຮັງນ້ຳຕິດຕໍ່ກັນໃນລະດັບຄວາມເລິກປະມານ 2 ຂໍ້ມື (ຂຶ້ນກັບຄວາມສູງຂອງຕົ້ນກ້າ) ເພື່ອຄວບຄຸມຫຍ້າ
- ຫຼັງຈາກຫວ່ານກ້າໄດ້ 7 ຫາ 10 ມື້,ໃສ່ປຸ໋ຍຊູດ 46-00-00 ໃນອັດຕາ 0.5 ກິໂລ/100ຕາແມັດ
- ຖ້າວ່າຕາກ້າບໍ່ມີນ້ຳ ຫ້າມຫວ່ານປຸ໋ຍເພາະຈະເຮັດໃຫ້ກ້າຕາຍ
- ອາຍຸກ້າທີ່ດີທີ່ສຸດສຳລັບປັກດຳແມ່ນອາຍຸລະຫວ່າງ 20 ຫາ 25 ມື້(ສຳລັບນາແຊງ) ຕ້ອງຂຶ້ນກັບສະພາບອາກາດຂອງແຕ່ລະທ້ອງຖິ່ນ





Slide 15

## 5. ການເຮັດນາຫວ່ານ ແລະ ການປັກດຳ

### 5.1 ນາຫວ່ານ

- ຂໍ້ດີ: ຜົນຜະລິດທຽບເທົ່າກັບນາດຳ ແຕ່ຫຼຸດຜ່ອນແຮງງານ, ການເຮັດນາຫວ່ານແມ່ນບໍ່ໄດ້ເສຍເວລາຕົກກ້າ ແລະ ປັກດຳ,ຕົ້ນເຂົ້າບໍ່ບອບຊ້ຳຈາກການຫຼົກກ້າມາປັກດຳ, ສາມາດເກັບກ່ຽວໄດ້ໄວກວ່ານາດຳປະມານ 7 ຫາ 10 ວັນ.
- ຂໍ້ເສຍ: ໃນການເຮັດນາຫວ່ານຈະຕ້ອງເສຍເວລາໃນການປັບພື້ນທີ່ໃຫ້ຮາບພຽງ,ການຄວບຄຸມວັດສະພືດຕ້ອງເອົາໃຈໃສ່ເປັນພິເສດ (ໄຖ 2-3 ຄັ້ງ).



(Training 1)

Slide 16

❖ ການກຽມດິນ

- ຄວນເຮັດນາຫວ່ານໃນຂອບເຂດທີ່ສາມາດຄວບຄຸມນໍ້າໄດ້
- ຕ້ອງປັບພື້ນທີ່ນາໃຫ້ສະໝໍ່າສະເໝີເພື່ອຄວບຄຸມລະດັບນໍ້າໄດ້ດີ
- ໄຖດິນຕາກໄວ້ປະມານ 5 -10 ວັນ(ຖ້າມີນໍ້າກໍປ່ອຍອອກ) ເພື່ອໃຫ້ເມັດຫຍ້າເກີດຂຶ້ນ, ແລ້ວຈຶ່ງໄຖກັບຄືນອີກຄັ້ງ 1 ເພື່ອເຮັດໃຫ້ຫຍ້າຕາຍ ແລ້ວປະໄວ້ອີກ 4-5 ວັນຈຶ່ງໄຖ ແລະ ຫວ່ານເລີຍ (ໄຖ 3 ຄັ້ງ).

ການປັບພື້ນແມ່ນມີຄວາມສໍາຄັນທີ່ສຸດ ໃນການຄວບຄຸມຫຍ້າ ແລະ ບັນຫາໜຶ່ງຄວນເຮັດ ເປັນແປງຫ່າງກັນ 5 ແມັດ ຍາວໄປຕາມໄຮ່ນາ ວິທີນີ້ແມ່ນສະດວກໃນການບົວລະບັດຮັກສາ ທີ່ເປັນປັດໃຈສໍາຄັນໃນການເຮັດນາຫວ່ານ.

Slide 17

❖ ການກຽມເມັດພັນ

- ຫຼັງຈາກເຮັດເປັນແປງແລ້ວຄວນສັງເກດເບິ່ງດິນບໍ່ຄວນໃຫ້ແຂງຫຼືແຫຼວເກີນໄປ,ກ່ອນຈະຫວ່ານໃຫ້ຫວ່ານເຂົ້າ 1 ເມັດທົດສອບເບິ່ງກ່ອນ, ດີທີ່ສຸດຄວນໃຫ້ເມັດພັນເຂົ້າລຸບລົງເຄິ່ງເມັດ. ການແຕກງອກຈະໄດ້ຮັບຜົນດີສໍາລັບເມັດເຂົ້າທີ່ແຊ່ໄວ້12ຊົ່ວໂມງ ແລະ ບົ່ມປະໄວ້ 24-36 ຊົ່ວໂມງເມັດເຂົ້າເກີດມີຕຸ່ມຕາ,ຮາກຍາວປະມານ 1-2 ມີລີແມັດ,ຈຶ່ງນໍາໄປຫວ່ານໄດ້

❖ ການບົວລະບັດຮັກສາ

- ເມື່ອຫວ່ານເຂົ້າລົງໄປແລ້ວຄວນລະບາຍນໍ້າອອກໃຫ້ໝົດແລ້ວຈຶ່ງສັງເກດເບິ່ງ
- ຫຼັງຈາກຫວ່ານເຂົ້າໄດ້ 7-15 ວັນ, ໃຫ້ປ່ອຍນໍ້າເຂົ້າປະມານ 2-3 ຊມ ເພື່ອຄວບຄຸມວັດສະພືດ (ຫຍ້າ).



Slide 18

5.2 ການປັກດໍາ

- ໃສ່ປະມານ 3-4 ກົບ ຕໍ່ 1 ສຸມ
- ໄລຍະຫ່າງ: ຖ້າໃຫ້ດີສຸດແມ່ນ ປັກດໍາເປັນຮູບຈະຕຸລັດ
- ປັກດໍາໃນໄລຍະຫ່າງ 20x 20 ຊມ
- ສະເລ່ຍ: ປະມານ 20 – 25 ສຸມ ຕໍ່ 1 ຕາແມັດ



(Training 1)

Slide 19

## 6. ການຄິດໄລ່ຊ່ວງເວລາ ແລະ ປະລິມານໃນການໃສ່ປຸ່ຍ

### 6.1 ວິທີໃສ່ປຸ່ຍຮອງພື້ນ.

- ໄຖຮຸດ, ໄຖຄື້ນ, ຄາດປັບໜ້າດິນໃຫ້ສະໝ່ຳສະເໝີທົ່ວທັງໄຮ່ນາ
- ໃສ່ປຸ່ຍຮອງພື້ນກ່ອນຄາດຮອບສຸດທ້າຍ.
- ກ່ອນຫວ່ານປຸ່ຍຄວນແບ່ງຈຳນວນປຸ່ຍທີ່ຈະໃສ່ໃຫ້ຖືກກັບເນື້ອທີ່ນາແຕ່ລະໄຮ່
- ຖ້າເປັນນາໄຮ່ໃຫຍ່ຄວນແບ່ງອອກເປັນລ່ອງກວ້າງ 4-6 ແມັດ, ແລ້ວແບ່ງຈຳນວນປຸ່ຍໃຫ້ຖືກກັບເນື້ອທີ່ນາແຕ່ລະລ່ອງ, ຫວ່ານໃຫ້ສະເໝີກັນທົ່ວໄຮ່ນາ.

❖ ສູດປຸ່ຍທີ່ນິຍົມໃຊ້ຮອງພື້ນແມ່ນ:

- ສູດປຸ່ຍ 16. 20.00 ໃຊ້ກັບປະເພດນາດິນຊາຍ ແກມຕົມ.
- ສູດປຸ່ຍ 15.15.15 ໃຊ້ສຳລັບນາດິນຊາຍ.
- ສຳລັບປຸ່ຍທັງສອງສູດແມ່ນໃສ່ໃນອັດຕາ 150 ກິໂລ/ເຮັກຕາ (ນີ້ແມ່ນຈຳນວນຂັ້ນຕ່ຳ, ຂຶ້ນກັບດິນແຕ່ລະເຂດ, ບາງເຂດສາມາດເພີ່ມຈຳນວນຂຶ້ນຫຼາຍກວ່ານີ້ກໍ່ໄດ້)

Slide 20

### 6.2 ວິທີໃຊ້ປຸ່ຍເລັ່ງ

- ໃສ່ປຸ່ຍເລັ່ງຄັ້ງທີ 1 ສູດ 46.00.00 ຫຼັງປັກດຳ 20 – 25 ວັນ, ໃນອັດຕາ 30 ກລ/ຮຕ
- ໃສ່ປຸ່ຍເລັ່ງຄັ້ງທີ 2 ສູດ 46.00.00 ຫຼັງປັກດຳ 40 - 45 ວັນ, ໃນອັດຕາ 30 ກລ/ຮຕ
- ລວມປຸ່ຍເລັ່ງ 2 ຄັ້ງແມ່ນ 60 ກລ/ຮຕ (ນີ້ແມ່ນຈຳນວນຂັ້ນຕ່ຳ, ຂຶ້ນກັບດິນແຕ່ລະເຂດ, ບາງເຂດສາມາດເພີ່ມຈຳນວນຂຶ້ນຫຼາຍກວ່ານີ້ກໍ່ໄດ້)
- ອາຍຸເຂົ້າໄດ້ 75 ວັນຂຶ້ນໄປບໍ່ຄວນໃຊ້ປຸ່ຍເພາະຈະເຮັດໃຫ້ເຂົ້າບໍ່ກົ້ມ

Slide 21

### 6.3 ການຄິດໄລ່ຈຳນວນປຸ່ຍຕໍ່ໄຮ່ນາ 1 ໄຮ່

ການຄິດໄລ່ຈຳນວນການໃສ່ປຸ່ຍຕໍ່ໄຮ່ນາ 1 ໄຮ່

| ຫ້ອງທີ | 1 | 2 | 3 | 4 | 5 | 6 | 7 | 8 | ອັດຕາ |
|---|---|---|---|---|---|---|---|---|---|
| ເນື້ອທີ່ໄຮ່ນາ ($ມ^2$) | 50 | 100 | 200 | 300 | 400 | 500 | 1,000 | 5,000 | |
| ປຸ່ຍຮອງພື້ນ | 7.5 ຂີດ | 1.5 ກລ | 3 ກລ | 4.5 ກລ | 6 ກລ | 7.5 ກລ | 15 ກລ | 75 ກລ | 150/ຮຕ |
| ປຸ່ຍເລັ່ງຄັ້ງທີ 1 | 1.5 ຂີດ | 3 ຂີດ | 6 ຂີດ | 9 ຂີດ | 1.2 ກລ | 1.5 ກລ | 3 ກລ | 15 ກລ | 30/ຮຕ |
| ປຸ່ຍເລັ່ງຄັ້ງທີ 2 | 1.5 ຂີດ | 3 ຂີດ | 6 ຂີດ | 9 ຂີດ | 1.2 ກລ | 1.5 ກລ | 3 ກລ | 15 ກລ | 30/ຮຕ |

ຕົວຢ່າງ: ໄຮ່ນາທ້າວ ສີ ມີເນື້ອທີ່ 250 $m^2$ ຈະໃສ່ປຸ່ຍຮອງພື້ນເທົ່າໃດ ?

ແກ້: **ເອົາຫ້ອງ 3 + ຫ້ອງ1** = 3 kg + 7 ຂີດ = **3.7 kg**

(Training 2, Training3)

Slide 1

## ການບົວລະບັດຮັກສາ ແລະ ການໃສ່ປຸ໋ຍ ນາເຂົ້າ

(ການຝຶກອົບຮົມຄັ້ງທີ 2)



ຮຽບຮຽງໂດຍ: ທ່ານ ຈັນລະຄອນ
ທ່ານ ພອນສັກ
ພະແນກກະສິກຳ ແລະ ປ່າໄມ້ ຮ່ວມກັບໂຄງການພັດທະນາກະສິກຳແບບມີສ່ວນຮ່ວມ
(Savan PAD/JICA)

1

Slide 2

### ສາລະບານ

1. ທົບທວນການຝຶກອົບຮົມຄັ້ງກ່ອນ
2. ປະຕິທິນການປູກເຂົ້າ
   2.1 ໄລຍະ ແລະ ອັດຕາການໃສ່ປຸ໋ຍເລັ່ງຄັ້ງທີ 1
   2.2 ການຄິດໄລ່ຈຳນວນການໃສ່ປຸ໋ຍ
3. ພະຍາດ ແລະ ສັດຕູພືດທີ່ມັກເກີດໃນນາເຂົ້າ

Slide 3

### 1. ທົບທວນການຝຶກອົບຮົມຈາກຄັ້ງກ່ອນ

- ການຕື່ມຂໍ້ມູນ ແລະ ການໃຊ້ປະຕິທິນການປູກເຂົ້າ?
- ການຄັດເລືອກເມັດພັນດ້ວຍນ້ຳເກືອ?
- ການແຊ່ ແລະ ການອົບເຂົ້າປູກ?
- ການກະກຽມດິນ ແລະ ການຕົກກ້າ?
- ການຫວ່ານ/ຢອດ ແລະ ປັກດຳ?
- ການໃສ່ປຸ໋ຍ ແລະ ເນື້ອທີ່ນາ?

(Training 2, Training3)

Slide 4




Slide 5




Slide 6

## 2.1 ໄລຍະ ແລະ ອັດຕາການໃສ່ປຸ່ຍເລັ່ງຄັ້ງທີ 1

❖ ຄຳແນະນຳ:

- ການດູແລຮັກສານໍ້າບໍ່ໃຫ້ຫຼາຍໂພດປະມານ 5-7ຊມ ແຕ່ບໍ່ຄວນໃຫ້ນໍ້າຂາດໃນໄຮ່ນາ.
- ກ່ອນຈະໃສ່ປຸ່ຍເລັ່ງແຕ່ລະຄັ້ງຕ້ອງໄດ້ກຳຈັດວັດສະພືດກ່ອນເປັນປະຈຳເພື່ອບໍ່ໃຫ້ຫຍ້າຕ່າງໆຍາດແຍງທາດອາຫານ,ອາກາດແລະ ແສງແດດ ແລະເປັນແຫຼ່ງນຳເຊື້ອພະຍາດຫຼືເປັນທີ່ຢູ່ອາໃສຂອງແມງໄມ້ສັດຕູພືດຕ່າງໆ.
- ສູດປຸ່ຍເລັ່ງທີ່ນິຍົມໃຊ້ແມ່ນ: 46-00-00
-

(Training 2, Training3)

Slide 7

## 2.2 ການຄິດໄລ່ຈຳນວນການໃສ່ປຸ໋ຍເລັ່ງ

- ໃສ່ປຸ໋ຍເລັ່ງຄັ້ງທີ 1 ສູດ 46.00.00 ຫຼັງປັກດຳ 20 – 25 ວັນ, ໃນອັດຕາ 30 ກລ/ຮຕ (ຫຼື 50 ກລ/ຮຕ ສຳລັບບ່ອນທີ່ເຄີຍໃສ່ຫຼາຍ)
- ໃສ່ປຸ໋ຍເລັ່ງຄັ້ງທີ 2 ສູດ 46.00.00 ຫຼັງປັກດຳ 40 - 45 ວັນ, ໃນອັດຕາ 30 ກລ/ຮຕ (ຫຼື 50 ກລ/ຮຕ ສຳລັບບ່ອນທີ່ເຄີຍໃສ່ຫຼາຍ)
- ລວມປຸ໋ຍເລັ່ງ 2 ຄັ້ງແມ່ນ 60 ກລ/ຮຕ (ຫຼື 100 ກລ/ຮຕ ສຳລັບບ່ອນທີ່ເຄີຍໃສ່ຫຼາຍ)
- ອາຍຸເຂົ້າໄດ້ 75 ວັນຂຶ້ນໄປບໍ່ຄວນໃຊ້ປຸ໋ຍເພາະຈະເຮັດໃຫ້ເຂົ້າບໍ່ກົ້ມ

Slide 8

## ❖ ການຄິດໄລ່ຈຳນວນປຸ໋ຍຕໍ່ໄຮ່ນາ 1 ໄຮ່

ການຄິດໄລ່ຈຳນວນການໃສ່ປຸ໋ຍຕໍ່ໄຮ່ນາ 1 ໄຮ່

| ຕ່ອງທີ | 1 | 2 | 3 | 4 | 5 | 6 | 7 | 8 | ອັດຕາ |
|---|---|---|---|---|---|---|---|---|---|
| ເນື້ອທີ່ໃສ່ນາ ($ມ^2$) | 50 | 100 | 200 | 300 | 400 | 500 | 1,000 | 5,000 | |
| ປຸ໋ຍເລັ່ງຄັ້ງທີ 1 | 1.5 ກິ | 3 ກິ | 6 ກິ | 9 ກິ | 1.2 ກລ | 1.5 ກລ | 3 ກລ | 15 ກລ | 30ກລ/ຮຕ |
| ປຸ໋ຍເລັ່ງຄັ້ງທີ 2 | 1.5 ກິ | 3 ກິ | 6 ກິ | 9 ກິ | 1.2 ກລ | 1.5 ກລ | 3 ກລ | 15 ກລ | 30ກລ/ຮຕ |

ຕົວຢ່າງ 1: ໄຮ່ນາ ທ້າວ ສີ ມີເນື້ອທີ່ 250 ມ2 ຈະໃສ່ປຸ໋ຍເລັ່ງຈັກກິໂລ ?
ແກ້: ເອົາ**ຕ່ອງທີ 3 + ຕ່ອງ 1 ກໍ່ຄື 200 + 50 =** 6 ກິ + 1.5 ກິ = **(7.5 ກິ)**

ຕົວຢ່າງ 1: ໄຮ່ນາ ທ້າວ ສີ ມີເນື້ອທີ່ 650 ມ2 ຈະໃສ່ປຸ໋ຍເລັ່ງຈັກກິໂລ ?
ແກ້: ເອົາ**ຕ່ອງທີ 6 + ຕ່ອງ 2 + ຕ່ອງ 1 ກໍ່ຄື 500 + 100+ 50 =** 1.5 ກລ + 3 ກິ + 1.5 ກິ = **(1.95 ກລ)**

ໝາຍເຫດ: ຖ້າໄຮ່ນາ 40 ຕາແມັດ ໃຫ້ປັດເປັນ 50, 60 ຕາແມັດກໍ່ປັດເປັນ 50, ຖ້າ 90 ຕາແມັດ ກໍ່ປັດເປັນ 100 ຕາແມັດ

Slide 9



(Training 2, Training3)

Slide 10




Slide 11




Slide 12



(Training 2, Training3)

Slide 13




Slide 14

**ການປ້ອງກັນ ແລະ ກຳຈັດ**

**1. ການປ້ອງກັນ:**

- ອະນຸລັກແມງໄມ້ເປັນປະໂຫຍດ, ແມງມ້າ,ແມງມຸມ,ຕັກແຕນໜວດຍາວ,ແຕນບຽນທີ່ລີໃນມັດ....
- ປູກພືດໝູນວຽນເພື່ອຕັດວົງຈອນຊີວິດຂອງດ້ວງກໍເຂົ້າ
- ບໍ່ຄວນໃສ່ປຸຍເລັ້ງຫຼາຍເກີນໄປ ເພາະຈະເຮັດໃຫ້ເຂົ້າງາມດ້ວງກໍມັກວາງໄຂ່

**2. ການກຳຈັດ:**

- ເຜົາຕໍເຟືອງຫຼັງການເກັບກ່ຽວ, ເປັ່ງນໍ້າຖ້ວມ ແລະ ໄຖດິນ ເພື່ອທຳລາຍ ໜອນ ແລະ ດັກແດ້ຂອງດ້ວງກໍເຂົ້າທີ່ຢູ່ຕາມຕໍເຟືອງ
- ໃຊ້ກັບດັກແສງໄຟລໍ້ໂຕແກ່ ແລະ ທຳລາຍຖິ້ມ ເມື່ອມີການລະບາດຮຸນແຮງ
- ນຳໃຊ້ສັດຕູທຳມະຊາດພວກແຕນບຽນໄຂ່ໂກເດີມາທຳລາຍໄຂ່ດ້ວງກໍ ແລະ ສາມາດຄວບຄຸມປະຊາກອນດ້ວງກໍໄດ້ຢ່າງມີປະສິດທິພາບ

Slide 15



(Training 2, Training3)

Slide 16

❖ ວົງຈອນຊີວິດ

ເປັນແມງຈຳພວກປາກດູດ ມີຂະໜາດນ້ອຍປະມານ 1-2 ມມ ມີທັງຊະນິດມີປີກ ແລະ ບໍ່ມີປີກ,ໂຕແກ່ມີສີດຳ, ໂຕແກ່ເປັນສີເຫຼືອງອ່ອນ, ໂຕແກ່ວາງໄຂ່ໃນເນື້ອເຍື່ອຂອງໃບເຂົ້າ, ໂຕອ່ອນມີ 2 ໄລຍະຄື: ໄລຍະເວລາໂຕອ່ອນຫາໂຕແກ່ປະມານ 15 ວັນ





1 – 2 ມມ.

Slide 17

❖ ລັກສະນະການທຳລາຍ

- ເພັ້ຍໄຟ ໂຕອ່ອນ ແລະ ໂຕແກ່ ທຳລາຍເຂົ້າໂດຍການດູດກິນນ້ຳລ້ຽງຈາກໃບເຂົ້າທີ່ຍັງອ່ອນ, ເງື່ອນໄຂເໝາະສົມໃນການລະບາດເ ມີຝົນຂາດຊ່ວງ ອາການຮ້ອນອົບເອົ້າ, ໃບທີ່ຖືກທຳລາຍ ຈະມ້ວນເຂົ້າ ໃບແຫ້ງຕາຍ



a: ໂຕແກ່; b: ໃບທີ່ຖືກທຳລາຍ;

Slide 18

❖ ການປ້ອງກັນ ແລະ ກຳຈັດ

**ການປ້ອງກັນ**:

1) ບໍ່ຄວນໃຫ້ຂາດນ້ຳພາຍຫຼັງປັກດຳ ຫຼືຫວ່ານ ໄດ້ 7 ວັນ

2) ເມື່ອກວດພົບເພັ້ຍໄຟ 1-3 ໂຕ ໃຫ້ປ່ອຍນ້ຳເຂົ້າໃຫ້ຖ້ວມຍອດ ປະໄວ້ 1-2 ວັນ, ເລັ່ງການຈະເລີນ ເຕີບໂຕ ຂອງເຂົ້າ ຫຼັງຈາກເຂົ້າມີ ອາຍຸໄດ້ 10 ວັນ ໂດຍ ການໃສ່ປຸ໋ຍ ຢູເລຍ ອັດຕາ 10 ກລ/ໄລ່

3 ຖ້າມີເງື່ອນໄຂສະດວກ ໃຊ້ກັບດັກແມງໄມ້ດ້ວຍແສງໄຟ ກຳຈັດໂຕແກ່ ຫຼຸດຜ່ອນ ປະຊາກອນ ຂອງສັດຕູພືດ

**ການກຳຈັດ**: ໃຊ້ສະໜຸນໄພສົດ

(Training 2, Training3)

Slide 19

## 3.4 ເພ້ຍຈັກຈັ່ນສີນ້ຳຕານ (Brown planthopper, BPH)



Slide 20

### ❖ ລັກສະນະການທຳລາຍ

- ເພ້ຍຈັກຈັ່ນ ສີນ້ຳຕານ ທັງໂຕອ່ອນ ແລະ ໂຕແກ່ ທຳລາຍເຂົ້າ ໂດຍການດູດກິນນ້ຳລ້ຽງຈາກເຊວທໍ່ນ້ຳທໍ່ອາຫານບໍລິເວນເທິງລະດັບສູງກວ່າໜ້ານ້ຳເຮັດໃຫ້ເຂົ້າມີອາການໃບເຫຼືອງແຫ້ງລັກສະນະຄ້າຍຄືຖືກນ້ຳຮ້ອນລວກແຫ້ງຕາຍເປັນຍ່ອມໆ ເອີ້ນວ່າ: ອາການໄໝ້ (hopperburn)
- ໂດຍທົ່ວໄປພົບອາການໄໝ້ໃນຊ່ວງໄລຍະເຂົ້າແຕກກໍ ເຖິງໄລຍະອອກຮວງ
- ເພ້ຍຈັກຈັ່ນຍັງເປັນ ພາຫະນຳເຊື້ອໄວລັສ ເຊັ່ນ: ພະຍາດໃບງິກ (rice raggedstunt) ເຮັດໃຫ້ເຂົ້າມີອາການຂອດ, ຕົ້ນເຕ້ຍ, ໃບແຄບ ແລະ ສັ້ນ, ໃບບິດເປັນກຽວ



ການລະບາດຮຸນແຮງ ອາການໄໝ້ (hopperburn)

Slide 21

### ❖ ສະພາບເງື່ອນໄຂທີ່ມີການລະບາດ

- ການປູກເຂົ້າໜາແໜ້ນເກີນໄປເຮັດໃຫ້ອຸນຫະພູມ ແລະ ຄວາມຊຸ່ມເໝາະສົມຕໍ່ການຈະເລີນເຕີບໂຕຂອງເພ້ຍຈັກຈັ່ນ
- ການໃສ່ປຸຍເລັ່ງໃບປະລິມານຫຼາຍ ເຮັດໃຫ້ເພີ່ມຈຳນວນເພ້ຍຈັກຈັ່ນມີແນວໂນ້ມຫຼາຍຂຶ້ນເນື່ອງຈາກປຸ່ຍເຮັດໃຫ້ເຂົ້າງາມ ແລະ ເໝາະສົມຕໍ່ການເຂົ້າທຳລາຍ ແລະ ການຂະຫຍາຍພັນ
- ໃນນາມີນ້ຳຂັງຕະຫຼອດເຮັດໃຫ້ເພ້ຍຈັກຈັ່ນສາມາດເພີ່ມຈຳນວນໄດ້ຫຼາຍກວ່າ ສະພາບທີ່ມີການລະບາຍນ້ຳອອກບາງຄັ້ງຄາວ ເພາະມີຄວາມຊຸ່ມສູງ ເປັນເງື່ອນໄຂເໝາະສົມຕໍ່ການຈະເລີນເຕີບໂຕຂອງເພ້ຍຈັກຈັ່ນ
- ການໃຊ້ຢາຂ້າແມງໄມ້

(Training 2, Training3)

Slide 22




Slide 23




Slide 24

❖ ***ລັກສະນະອາການ:***

ໄລຍະຕົ້ນກ້າໃບມີຈຸດສີນ້ຳຕານຄ້າຍຄືຮູບຕາ, ມີສີເທົາຢູ່ກາງ ມີຂະໜາດແຕກຕ່າງກັນ ຄວາມກ້ວາງລະຫ່ວາງ 2-5 ມມ ແລະ ຄວາມຍາວປະມານ 10-15 ມມ ແລະ ບາດແຜຈະສາມາດລວມກັນທົ່ວບໍລິເວນໃບ, ໃນກໍລະນີເປັນພະຍາດທີ່ຮຸນແຮງຕົ້ນກ້າຈະແຫ້ງ ແລະ ຫຍຸບຕາຍ ອາການຄ້າຍຄືໄຟໄໝ້.

ໄລຍະແຕກກໍອາການຂອງພະຍາດຈະພົບຢູ່ໃບ, ກາບໃບ, ຂໍ້ຕໍ່ຂອງໃບ ແລະ ຂໍ້ຕໍ່ຂອງລຳຕົ້ນຂະໜາດຂອງບາດແຜຈະໃຫຍ່ກວ່າໄລຍະກ້າ,ບາດແຜຈະລຸກລາມຕິດຕໍ່ກັນຢູ່ບໍລິເວນຂໍ້ຕໍ່ , ໃບມີລັກສະນະສີນ້ຳຕານດຳ ແລະ ໃບຈະຫຼຸດອອກຈາກກາບໃບ.

ໄລຍະເຂົ້າອອກຮວງເມື່ອເຊື້ອພະຍາດເຂົ້າທຳລາຍຊ່ວງເຂົ້າເລີ່ມອອກຮວງ ເມັດຈະລີບ ແຕ່ຖ້າເປັນພະຍາດຊ່ວງຮວງເຂົ້າແກ່ໃກ້ຈະເກັບກ່ຽວ ຄໍຮວງຈະປະກົດມີຈຸດຊ້ຳສີນ້ຳຕານເຮັດໃຫ້ຮວງເຂົ້າຫັກງ່າຍ.

(Training 2, Training3)

Slide 25




Slide 26




Slide 27



(Training 4)

Slide 1




Slide 2



Slide 3

- - ຄວາມໝາຍແລະຄວາມສຳຄັນຂອງວິທະຍາການຫັລງເກັບກ່ຽວ
- - ການສູນເສຍທາງດ້ານປະລິມານແລະຄຸນນະພາບເຂົ້ານັບແຕ່ເຂົ້າເປັນ
  ໝາກຈົນເຖິງການເກັບກ່ຽວແລະເກັບຮັກສາ
- - ວິທີການປ້ອງກັນການສູນເສຍກ່ອນການເກັບກ່ຽວ
- - ວິທີການປ້ອງກັນການສູນເສຍຊ່ວງເກັບກ່ຽວເຂົ້າ
- - ວິທີການປ້ອງກັນການສູນເສຍຫລັງເກັບກ່ຽວ

(Training 4)

Slide 4




Slide 5




Slide 6



(Training 4)

Slide 7




Slide 8




Slide 9



(Training 4)

Slide 10




Slide 11




Slide 12



(Training 4)

Slide 13

